ADB

# ຍຸດທະສາດ 2030

## ການບັນລຸເປົ້າໝາຍໃຫ້ ພາກພື້ນອາຊີ ແລະ ປາຊີຟິກ ມີຄວາມຈະເລີນຮຸ່ງເຮືອງ ທົ່ວເຖິງ ພ້ອມຮັບກັບການປ່ຽນແປງ ແລະ ຍືນຍົງ

ກໍລະກົດ 2018

# ຍຸດທະສາດ 2030

## ຈະເລີນຮຸ່ງເຮືອງ
## ທົ່ວເຖິງ
## ພ້ອມຮັບການປ່ຽນແປງ
## ຍືນຍົງ

ໃນພາກພື້ນອາຊີ ແລະ ປາຊີຟິກ

# ຍຸດທະສາດ 2030

## ການບັນລຸເປົ້າໝາຍໃຫ້ ພາກພື້ນອາຊີ ແລະ ປາຊີຟິກ ມີຄວາມຈະເລີນຮຸ່ງເຮືອງ ທົ່ວເຖິງ ພ້ອມຮັບກັບການປ່ຽນແປງ ແລະ ຍືນຍົງ

ກໍລະກົດ 2018

ASIAN DEVELOPMENT BANK

© 2018 ທະນາຄານພັດທະນາອາຊີ
ຖະໜົນ 6 ເອດີບີ, ເມືອງ ມັນດາລູຢົງ, 1550 ເມໂທຣ ນະຄອນມະນີລາ, ປະເທດຟີລິປິນ
ໂທລະສັບ +63 2 632 4444; ແຟັກ +63 2 636 2444
www.adb.org

ສະຫງວນລິຂະສິດ. ພິມໃນປີ 2018.

ISBN 978-92-9261-780-0 (ພິມ), 978-92-9261-709-7 (ອີເລັກໂຕຼນິກ)
ເລກທີ່ເກັບມ້ຽນເອກະສານ TCS190160-3
DOI: http://dx.doi.org/10.22617/TCS190160-3

ADB ບໍ່ຮັບປະກັນຄວາມຖືກຕ້ອງຂອງຂໍ້ມູນທີ່ປະກອບຢູ່ໃນສິ່ງພິມເຫຼັ້ມນີ້ ແລະ ບໍ່ຮັບຜິດຊອບໃດໆຕໍ່ກັບຜົນຕາມມາຂອງການນຳໃຊ້ຂໍ້ມູນດັ່ງກ່າວ. ການກ່າວເຖິງບໍລິສັດໃດໜຶ່ງ ຫຼື ສິນຄ້າຂອງຜູ້ຜະລິດ ບໍ່ໄດ້ໝາຍຄວາມວ່າພວກມັນໄດ້ຖືກຮັບຮອງ ຫຼື ແນະນຳໂດຍ ADB ວ່າດີກວ່າບໍລິສັດອື່ນ ຫຼື ສິນຄ້າຕົວອື່ນທີ່ບໍ່ໄດ້ກ່າວເຖິງ.

ໂດຍການລະບຸເຖິງ ຫຼື ອ້າງອີງເຖິງເຂດແດນໃດໜຶ່ງສະເພາະ ຫຼື ພື້ນທີ່ທາງພູມມີສາດ ຫຼື ການນຳໃຊ້ຄຳວ່າ “ປະເທດ” ຢູ່ໃນງພິມເຫຼັ້ມນີ້, ADB ບໍ່ມີເຈດຕະນາເພື່ອໃຊ້ໃນການຕັດສິນທາງກົດໝາຍໃດໆ ຫຼື ສະຖານະພາບອື່ນໆ ຕໍ່ກັບເຂດແດນ ຫຼື ເຂດພື້ນທີ່ໃດໜຶ່ງທັງສິ້ນ.

ADB ສົ່ງເສີມການຈັດພິມ ຫຼື ອັດສຳເນົາຂໍ້ມູນ ສະເພາະໃນກໍລະນີເພື່ອການ ນຳໃຊ້ສ່ວນບຸກຄົນ, ໃຊ້ເພື່ອການສຶກສາ ແລະ ບໍ່ແມ່ນທາງການຄ້າ ໂດຍໄດ້ຮັບອະນຸຍາດຢ່າງຖືກຕ້ອງຈາກ ADB. ຫ້າມບໍ່ໃຫ້ຜູ້ທີ່ນຳໃຊ້ ຈຳໜ່າຍ, ຈັດພິມຊ້ຳ ຫຼື ດຳເນີນການເພື່ອການຄ້າໂດຍບໍ່ໄດ້ຮັບອະນຸຍາດຈາກ ADB. ກະລຸນາຕິດຕໍ່ pubsmarketing@adb.org ຖ້າທ່ານມີຄຳຖາມ ຫຼື ຄຳຄິດເຫັນທີ່ກ່ຽວກັບເນື້ອໃນ ຫຼື ຖ້າຫາກທ່ານປະສົງຢາກຈະຂໍອະນຸຍາດ ຂໍສິດທິໃນການອັດສຳເນົາ.

ໝາຍເຫດ:
ໃນສິ່ງພິມເຫຼັ້ມນີ້, ສັນຍາລັກ “$” ໝາຍເຖິງໂດລາສະຫະລັດ.
ADB ຮັບຮູ້ວ່າ “ຈີນ” ເປັນປະເທດສາທາລະນະລັດປະຊາຊົນຈີນ ແລະ “ເກົາຫລີ” ເປັນສາທາລະນະລັດເກົາຫລີ.
ລາຍການແກ້ຄຳຜິດໃນເອກະສານຂອງ ADB ແມ່ນເບິ່ງໄດ້ທີ່ http://www.adb.org/publications/corrigenda.

ພິມໃສ່ເຈ້ຍທີ່ນຳກັບມາໃຊ້ຄືນໃໝ່

**ກ່ຽວກັບໜ້າປົກ: ລຳດັບຟີໂບນັກຊີ**

ຟີໂບນັກຊີ ເປັນນັກຄະນິດສາດໃນຍຸກກາງ ຊຶ່ງເປັນຜູ້ນຳສະເໜີລຳດັບຕົວເລກ ທີ່ແຕ່ລະພົດເທົ່າຜົນບວກຂອງສອງພົດກ່ອນໜ້າເຊັ່ນ: 0, 1, 1, 2, 3, 5, 8, 13, ແລະ ຕໍ່ໆໄປ. ລຳດັບເລກນີ້ເຫັນໄດ້ໃນຕົວມັນເອງຕາມທຳມະຊາດເຊັ່ນ: ການຈັດລຽງຂອງໃບໄມ້ອ້ອມລຳຕົ້ນ.

ແນວຄິດການອອກແບບຍຸດທະສາດ 2030 ແມ່ນອີງໃສ່ ທິດສະດີລຳດັບຟີໂບນັກຊີ. ມັນໃຫ້ເຫັນເຖິງທິດທາງໃຫມ່ທີ່ມີຄວາມຮອບຄອບເຕັມໄປດ້ວຍພະລັງສ້າງສັນ ທີ່ຍຸດທະສາດ 2030 ໄດ້ກຳນົດແນວທາງໃຫ້ ADB.

# I. ສາລະບານ


ຕົວຫຍໍ້ iv

ບົດສະຫຼຸບໂດຍສັງເຂບ v

I. ພາກສະເໜີ 1

II. ການປ່ຽນແປງພາກພື້ນ ແລະ ສິ່ງທ້າທາຍ 3

III. ວິໄສທັດ ແລະການເພີ່ມຄຸນຄ່າຂອງ ADB 10

IV. ຫຼັກການຊີ້ນໍາສໍາລັບການດໍາເນີນງານຂອງ ADB 13

V. ການໃຊ້ວິທີການທີ່ແຕກຕ່າງຕໍ່ກຸ່ມປະເທດ 15

VI. ດໍາເນີນງານ 18

VII. ຂະຫຍາຍການດໍາເນີນງານກັບພາກເອກະຊົນ 25

VIII. ການກະຕຸກຊຸກຍູ້ ແລະ ການລະດົມແຫລ່ງທຶນເພື່ອການພັດທະນາ 28

IX. ການສ້າງຄວາມເຂັ້ມແຂງໃຫ້ແກ່ການບໍລິການດ້ານຄວາມຮູ້ 31

X. ການສົ່ງມອບຜົນການດໍາເນີນງານຜ່ານADB ທີ່ມີຄວາມເຂັ້ມແຂງຂຶ້ນ ດີຂຶ້ນ ແລະ ໄວຂຶ້ນ 33

XI. ໜຶ່ງ ADB 36

ເອກະສານຊ້ອນທ້າຍ: ການເກັບຂໍ້ມູນການດໍາເນີນງານຂອງ ADB ແລະ ບົດສະຫຼຸບການປຶກສາຫາລື 37

# ຕົວຫຍໍ້

| | |
|---|---|
| ADB | ທະນາຄານພັດທະນາອາຊີ |
| ADF | ກອງທຶນພັດທະນາອາຊີ |
| ASEAN | ສະມາຄົມປະຊາຊາດແຫ່ງອາຊີຕາເວັນອອກສຽງໃຕ້ |
| CPS | ຍຸດທະສາດເພື່ອການຮ່ວມມືກັບປະເທດ |
| CSO | ອົງການຈັດຕັ້ງທາງສັງຄົມລວມທັງອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ |
| DEfR | ການທົບທວນປະສິດທິຜົນຂອງການພັດທະນາ |
| DMC | ປະເທດສະມາຊິກທີ່ກຳລັງພັດທະນາ |
| FAO | ອົງການອາຫານ ແລະ ການກະເສດຂອງສະຫະປະຊາຊາດ |
| FCAS | ປະເທດທີ່ມີສະຖານະການອ່ອນໄຫວ ແລະ ໄດ້ຮັບຜົນກະທົບຈາກຄວາມຂັດແຍ່ງ |
| GHG | ອາຍພິດເຮືອນແກ້ວ |
| ICT | ເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການສື່ສານ |
| IED | ກົມປະເມີນຜົນອິດສະຫຼະ |
| Lao PDR | ສປປ ລາວ |
| OCR | ແຫຼ່ງທຶນປົກກະຕິ |
| PBL | ການປ່ອຍກູ້ທີ່ອີງໃສ່ນະໂຍບາຍ |
| PPP | ການຮ່ວມມືລະຫວ່າງພາກລັດ ແລະ ພາກເອກະຊົນ |
| PRC | ສາທາລະນະລັດປະຊາຊົນ ຈີນ |
| RCI | ການຮ່ວມມື ແລະ ການເຊື່ອມໂຍງພາກພື້ນ |
| SDG | ເປົ້າໝາຍການພັດທະນາແບບຍືນຍົງ |
| SIDS | ລັດທີ່ເປັນເກາະນ້ອຍທີ່ກຳລັງພັດທະນາ |
| SMEs | ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ |
| SOE | ລັດວິສາຫະກິດ |
| TA | ທຶນຊ່ວຍເຫຼືອທາງດ້ານວິຊາການ |
| UMIC | ປະເທດທີ່ມີລາຍຮັບປານກາງລະດັບສູງ |
| UNICEF | ກອງທຶນເດັກນ້ອຍຂອງສະຫະປະຊາຊາດ |
| WFP | ອົງການອາຫານໂລກ |
| WHO | ອົງການອະນາໄມໂລກ |

# ບົດສະຫຼຸບ ໂດຍສັງເຂບ

ໃນຕະຫຼອດໄລຍະ 50 ປີທີ່ຜ່ານມາ, **ພາກພື້ນອາຊີ ແລະ ປາຊີຟິກ** ໄດ້ມີບາດກ້າວກະໂດດຢ່າງໃຫຍ່ຫລວງ ໃນການຫຼຸດຜ່ອນຄວາມທຸກຍາກ ແລະ ການຂະຫຍາຍຕົວທາງດ້ານເສດຖະກິດ. ເຖິງຢ່າງໃດກໍ່ຕາມ, ຍັງມີຫລາຍວາລະຂອງການພັດທະນາທີ່ຍັງບໍ່ທັນບັນລຸໄດ້. ບັນຫາຄ້າງຄາທີ່ຕ້ອງແກ້ໄຂມີຄື: ຄວາມທຸກຍາກ ແລະ ຄວາມອ່ອນແອ, ຄວາມບໍ່ເທົ່າທຽມກັນທີ່ເພີ່ມຂຶ້ນ, ການປ່ຽນແປງດິນຟ້າອາກາດ, ບັນຫາສິ່ງແວດລ້ອມທີ່ເພີ່ມຂຶ້ນ ແລະ ການຂາດແຄນພື້ນຖານໂຄງລ່າງ. ແນວໂນ້ມປະກົດຂຶ້ນໃໝ່ເຊັ່ນ: ຄວາມກ້າວໜ້າທາງດ້ານເຕັກໂນໂລຊີ, ການຂະຫຍາຍຂອງຕົວເມືອງ ແລະ ການປ່ຽນແປງທາງດ້ານປະຊາກອນ, ຊຶ່ງເຫັນໄດ້ທັງໂອກາດ ແລະ ສິ່ງທ້າທາຍ.

ເມື່ອພິຈາລະນາເຖິງຂະໜາດຂອງພາກພື້ນ ອາຊີ ແລະ ປາຊີຟິກ, ການບັນລຸຄໍາໝັ້ນສັນຍາໂລກທີ່ສໍາຄັນຕ່າງໆ ຈະຂຶ້ນຢູ່ກັບຜົນສໍາເລັດຂອງພາກພື້ນເປັນຕົ້ນແມ່ນການບັນລຸເປົ້າໝາຍການພັດທະນາແບບຍືນຍົງ, ການສະໜອງທຶນທີ່ສອດຄ່ອງກັບວາລະຂອງການພັດທະນາ, ສັນຍາປາຣີວ່າດ້ວຍການປ່ຽນແປງດິນຟ້າອາກາດ ແລະ ຂອບວຽກເຊັນໄດ ເພື່ອການຫລຸດຄວາມສ່ຽງຈາກໄພພິບັດ.

ຍຸດທະສາດ 2030 ກໍານົດ ແນວທາງການດໍາເນີນງານໃຫ້ແກ່ທະນາຄານພັດທະນາອາຊີ (ADB) ເພື່ອຈະຕອບສະໜອງຢ່າງມີປະສິດທິພາບ ຕໍ່ກັບຄວາມຕ້ອງການທີ່ມີການປ່ຽນແປງຂອງພາກພື້ນ. ພາຍໃຕ້ຍຸດທະສາດ 2030, ADB ຈະສືບຕໍ່ຄວາມພະຍາຍາມຂອງຕົນໃນການລຶບລ້າງຄວາມທຸກຍາກ ແລະ ຂະຫຍາຍວິໄສທັດຂອງຕົນ ເພື່ອບັນລຸເປົ້າໝາຍໃຫ້ພາກພື້ນອາຊີ ແລະ ປາຊີຟິກມີຄວາມຈະເລີນຮຸ່ງເຮືອງ ທົ່ວເຖິງ ພ້ອມຮັບການປ່ຽນແປງ ແລະ ຍືນຍົງ. ຄວາມມຸ່ງມາດປາດຖະໜາຂອງ ADB ແມ່ນສອດຄ່ອງກັບບັນດາຄໍາຫມັ້ນສັນຍາໂລກເປັນສ່ວນໃຫຍ່.

ADB ຈະທໍາໜ້າທີ່ບົດບາດສໍາຄັນ ໃນການສະໜັບສະໜູນວາລະຂອງການພັດທະນາພື້ນຖານໂຄງລ່າງໂລກ ເພື່ອເປັນແຮງພັກດັນໃຫ້ເສດຖະກິດໂລກຂະຫຍາຍຕົວ. ພື້ນຖານໂຄງລ່າງຈະຍັງຄົງເປັນຂະແໜງບຸລິມະສິດອັນຕົ້ນຕໍ ເພື່ອສົ່ງເສີມການພັດທະນາເສດຖະກິດ ແລະ ສັງຄົມ. ADB ຈະສົ່ງເສີມການລົງທຶນສ້າງພື້ນຖານໂຄງລ່າງທີ່ມີຄຸນນະພາບໃຫ້ໄປຕາມທິດສີຂຽວ, ຍືນຍົງ, ພ້ອມຮັບການປ່ຽນແປງ ແລະ ທົ່ວເຖິງ. ພ້ອມດຽວກັນນັ້ນ, ກໍ່ຈະຂະຫຍາຍການດໍາເນີນງານເຂົ້າໃນຂະແໜງສັງຄົມ ເຊັ່ນ: ສຶກສາ, ສາທາ ແລະ ການປົກປ້ອງສັງຄົມ. ADB ຍັງຈະຫາວິທີທາງທີ່ຈະປະສົມປະສານຄວາມຮູ້ຄວາມຊໍານານໃນ ທຸກຂະແໜງການແລະ ທຸກດ້ານ ຂອງຕົນເຂົ້າດ້ວຍກັນ ເພື່ອແກ້ໄຂສິ່ງທ້າທາຍຂອງການພັດທະນາທີ່ສັບຊ້ອນເພີ່ມຂຶ້ນ.

ໃນຖານະເປັນຄູ່ຮ່ວມພັດທະນາທີ່ໜ້າເຊື່ອຖື, ADB ຈະເພີ່ມຄຸນຄ່າໃຫ້ແກ່ ບັນດາປະເທດສະມາຊິກທີ່ກໍາລັງພັດທະນາ (DMCs) ຂອງຕົນ ໂດຍຖືເອົາການສົມ ທົບທຶນ, ຄວາມຮູ້, ແລະ ການຮ່ວມມືໄປພ້ອມກັນ. ADB ຈະສືບຕໍ່ເປັນຜູ້ໃຫ້ທຶນຫລັກ ແລະ ເປັນຜູ້ກະຕຸກຊຸກຍູ້ດ້ານການເງິນທີ່ເຊື່ອຖືໄດ້. ໃນຖານະເປັນຜູ້ສະໜອງຄວາມຮູ້, ADB ຈະເນັ້ນໃສ່ຄຸນຄ່າ ທີ່ໃຊ້ໄດ້ຈິງ ຊຶ່ງເໝາະສົມກັບເງື່ອນໄຂ ຂອງທ້ອງຖິ່ນ,ການໄຈ້ແຍກບົດຮຽນ ແລະ ໝູນໃຊ້ວິທີປະຕິບັດອັນທີ່ໄດ້ຮັບຜົນດີໃນທົ່ວພາກພື້ນ ແລະ ນອກພາກພື້ນ. ໃນຖານະເປັນຜູ້ປະສານດ້ານການຮ່ວມມື, ADB ຈະສົ່ງເສີມການສົນທະນາປຶກສາຫາລື ແລະ ການປະສານສົມທົບ ລະຫວ່າງ ບັນດາຄູ່ຮ່ວມມື ແລະ ຫຼາຍພາກສ່ວນທີ່ກ່ຽວຂ້ອງ ແລະ ຫາທາງທີ່ຈະເຮັດໃຫ້ເກີດຜົນກະທົບສູງສຸດ ຈາກລະບົບສະຖາບັນການເງິນສາກົນທັງໝົດ. ADB ຍັງຈະເພີ່ມໜ້າທີ່ຂອງຕົນໃນຖານະເປັນນັກພັດທະນາໂຄງການ.

ວາລະຂອງການພັດທະນາໂລກທີ່ຕັ້ງເປົ້າໄວ້ສູງ ຕ້ອງໄດ້ຮັບການດັດປັບໃຫ້ເຂົ້າກັບ ສະຖານະການສະເພາະຂອງທ້ອງຖິ່ນ. ADB ຈະເສີມສ້າງແນວທາງຂອງຕົນໂດຍວິທີການຖືເອົາປະເທດເປັນຈຸດສຸມໃຫ້ເຂັ້ມແຂງດ້ວຍການນໍາໃຊ້ຍຸດທະສາດເພື່ອການຮ່ວມມືກັບລະຫວ່າງປະເທດ ເປັນພື້ນຖານ ໃນການກໍານົດຂອບເຂດການຊ່ວຍເຫຼືອ, ສົ່ງເສີມການນໍາໃຊ້ເຕັກໂນໂລຊີທີ່ປະດິດຄິດສ້າງໃໝ່ ແລະ ນໍາສະເໜີທາງອອກທີ່ປະສົມປະສານດ້ວຍການລວບລວມເອົາຄວາມຮູ້ ຄວາມຊໍານານທຸກດ້ານ ແລະ ທຸກຂະແໜງການເຂົ້າດ້ວຍກັນ ແລະ ຜ່ານການຮວມເຂົ້າກັນລະຫວ່າງ ການດໍາເນີນງານກັບພາກລັດ ແລະ ກັບພາກເອກະຊົນ. ADB ຈະເລືອກເຟັ້ນໃນລະດັບປະເທດ ໂດຍອີງໃສ່ການສ້າງຄວາມໄດ້ປຽບໃນເຊີງປຽບທຽບ ລະຫວ່າງຄວາມຕ້ອງການສະເພາະຂອງປະເທດ ແລະ ທ່າແຮງໃນການເພີ່ມຄຸນຄ່າໂດຍຄໍານຶງເຖິງຄວາມອາດສາມາດ ແລະ ຊັບພະຍາກອນພາຍໃນຂອງ ADB.

ເມື່ອພິຈາລະນາເຖິງຄວາມຫລາກຫລາຍທີ່ພົ້ນເດັ່ນຂອງບັນດາປະເທດຕ່າງໆ, ADB ຈະດັດປັບໃຊ້ວິທີການທີ່ຕ່າງກັນ ຕໍ່ກັບບັນດາກຸ່ມປະເທດ. ADB ຈະວາງບຸລິມະສິດໃຫ້ການຊ່ວຍເຫຼືອແກ່ບັນດາປະເທດທີ່ທຸກຍາກ ແລະ ອ່ອນແອທີ່ສຸດໃນພາກພື້ນ, ລວມທັງ ປະເທດທີ່ມີສະຖານະການອ່ອນໄຫວ ແລະ ໄດ້ຮັບຜົນກະທົບຈາກຄວາມຂັດແຍ່ງ ແລະ ບັນດາລັດທີ່ເປັນເກາະນ້ອຍ ທີ່ກໍາລັງພັດທະນາ. ADB ຈະດັດປັບຂັ້ນຕອນການດໍາເນີນງານຂອງຕົນໃຫ້ແທດເໝາະ ແລະ ສ້າງຄວາມເຂັ້ມແຂງ

ໃຫ້ແກ່ຊັບພະຍາກອນມະນຸດຂອງຕົນ ພ້ອມທັງ ສຳນັກງານຕາງໜ້າປະຈຳຢູ່ບັນດາປະເທດເຫຼົ່ານີ້. ADB ຈະສະໜອງເງິນທຶນກ້ອນໃຫຍ່ທີ່ສາມາດຄາດການໄດ້ໄລຍະຍາວ ເພື່ອຊ່ວຍເຫຼືອ ປະເທດທີ່ມີລາຍຮັບຕ່ຳ ແລະ ປະເທດທີ່ມີລາຍຮັບປານກາງລະດັບຕ່ຳ. ການຊ່ວຍເຫຼືອຂອງ ADB ແກ່ປະເທດທີ່ມີລາຍຮັບປານກາງ-ລະດັບສູງຈະມີການເລືອກເຟັ້ນໂດຍເນັ້ນໃສ່ຂົງເຂດທີ່ ADB ສາມາດສ້າງຄຸນຄ່າໄດ້ສູງສຸດ. ໃນບັນດາກຸ່ມປະເທດເຫຼົ່ານີ້, ADB ຈະຈັດບຸລິມະສິດຄວາສຳຄັນໃນການສະໜັບສະໜູນແກ່ຂົງເຂດທີ່ຍັງຫຼ້າຫຼັງ ແລະ ຍັງມີຄວາມທຸກຍາກ ແລະ ອ່ອນແອດ້ານລາຍຮັບ.

ADB ຈະສືບຕໍ່ປະຍຸກໃຊ້ນະໂຍບາຍການຫຼຸດພົ້ນທີ່ມີຢູ່ຂອງຕົນ, ໄປພ້ອມກັບການທົບທວນປະສິດທິພາບຂອງນະໂຍບາຍດັ່ງກ່າວ. ການຫຼຸດພົ້ນຈາກການຊ່ວຍເຫຼືອແບບປົກກະຕິຂອງ ADB ຈະຕ້ອງກວມເອົາການປຶກສາຫາລືຢ່າງໃກ້ຊິດກັບປະເທດນັ້ນໆ, ລວມທັງການວິເຄາະ ແລະ ປະເມີນຕີລາຄາເຖິງ ບັນດາອົງປະກອບສຳຄັນຂອງນະໂຍບາຍການຫຼຸດພົ້ນ. ເນື່ອງຈາກເປັນສ່ວນໜຶ່ງຂອງວິທີການທີ່ແຕກຕ່າງກັນຂອງ ADB, ADB ຈະເຮັດການວິເຄາະທີ່ລະອຽດ ແລະ ປຶກສາຫາລືກັບຫຼາຍພາກສ່ວນທີ່ກ່ຽວຂ້ອງເຖິງຄວາມເປັນໄປໄດ້ທີ່ຈະສ້າງເງື່ອນໄຂໃນການສະໜອງທຶນທີ່ເປັນຜະລິດຕະພັນ ແລະ ເຄື່ອງມືຂອງຕົນ ໃຫ້ມີຄວາມຫຼາກຫຼາຍ. ADB ຈະສະໜອງເງິນກູ້ທີ່ມີເງື່ອນໄຂແບບຜ່ອນຜັນຂອງຕົນໂດຍກົງ ເພື່ອຊ່ວຍເຫຼືອປະເທດສະມາຊິກທີ່ທຸກຍາກ ແລະ ອ່ອນແອທີ່ສຸດ ແລະ ຈະພິຈາລະນາໃຫ້ການຊ່ວຍເຫຼືອເພີ່ມຕື່ມແກ່ບັນດາປະເທດທີ່ຫຼຸດພົ້ນຈາກການຊ່ວຍເຫຼືອທີ່ມີເງື່ອນໄຂຜ່ອນຜັນ.

ການຊ່ວຍເຫຼືອຂອງ ADB (ກວມເອົາການປະຕິບັດງານກັບພາກລັດ ແລະ ກັບພາກເອກະຊົນ, ການບໍລິການໃຫ້ຄຳປຶກສາ, ແລະ ຄວາມຮູ້) ຈະເນັ້ນໃສ່ບັນດາບຸລິມະສິດທີ່ສຳຄັນດັ່ງຕໍ່ໄປນີ້.

i. **ການແກ້ໄຂບັນຫາຄວາມທຸກຍາກທີ່ຍັງມີຢູ່ ແລະ ການຫຼຸດຄວາມບໍ່ເທົ່າທຽມ.** ADB ຈະເພີ່ມທະວີການເນັ້ນໜັກໃສ່ການພັດທະນາຊັບພະຍາກອນມະນຸດ ແລະ ການເປັນສ່ວນໜຶ່ງຂອງສັງຄົມ ເພື່ອແກ້ໄຂບັນຫາໃນດ້ານຕ່າງໆທີ່ບໍ່ສ້າງລາຍຮັບດ້ານຄວາມທຸກຍາກ. ADB ຈະຊ່ວຍສ້າງຄວາມສະດວກໃຫ້ແກ່ການສ້າງວຽກເຮັດງານທຳທີ່ມີຄຸນນະພາບ, ລວມທັງທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ແລະ ບັນດາທຸລະກິດຊຸມຊົນແບບທົ່ວເຖິງ. ADB ຈະຊ່ວຍເຫຼືອສະມາຊິກທີ່ເປັນປະເທດກຳລັງພັດທະນາ ໃນການຍົກສູງຜົນໄດ້ຮັບທາງດ້ານການສຶກສາ ແລະ ການຝຶກອົບຮົມ, ບັນລຸໄດ້ການບໍລິການດ້ານສາທາລະນະສຸກທີ່ດີຂຶ້ນ ເພື່ອໝົດທຸກຄົນ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບການປົກປ້ອງສັງຄົມຕ່າງໆ ແລະ ພ້ອມທັງ ໃຫ້ການບໍລິການສຳລັບຜູ້ທີ່ມີຄວາມຈຳເປັນ.

ii. **ການເລັ່ງບາດກ້າວໃນດ້ານຄວາມສະເໝີພາບລະຫວ່າງຍິງ-ຊາຍ.** ADB ຈະສົ່ງເສີມການດຳເນີນງານທີ່ມີເປົ້າໝາຍເພື່ອສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ ແລະ ເດັກຍິງ, ການເຊື່ອມສານຄວາມສະເໝີພາບລະຫວ່າງຍິງ-ຊາຍ ທີ່ແນ່ໃສ່ຫຼຸດຄວາມແຕກໂຕນລະຫວ່າງເພດ ແລະ ການດຳເນີນງານກ່ຽວກັບບາງອົງປະກອບທາງດ້ານຄວາມສະເໝີພາບລະຫວ່າງຍິງ-ຊາຍ ເຊິ່ງຈະໄດ້ເອົາບັນຈຸເຂົ້າຢູ່ໃນການປະຕິບັດງານດ້ານຄວາມສະເໝີພາບ ລະຫວ່າງຍິງ-ຊາຍ ໃນການອອກແບບ ແລະ ການຈັດຕັ້ງປະຕິບັດໂຄງການຂອງ ADB. ຢ່າງໜ້ອຍ 75% ຂອງຈຳນວນການດຳເນີນງານຂອງ ADB ທີ່ໄດ້ໃຫ້ຄຳໝັ້ນສັນຍາ (ຈຳນວນໂຄງການສະເລ່ຍສຳລັບໄລຍະທຸກໆ3 ປີ, ລວມທັງ ໂຄງການພາກລັດ ແລະ ໂຄງການພາກເອກະຊົນ) ຈະສົ່ງເສີມຄວາມສະເໝີພາບ ລະຫວ່າງຍິງ-ຊາຍໃຫ້ບັນລຸພາຍໃນປີ 2030.

iii. **ການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ, ສ້າງຄວາມພ້ອມຮັບມືກັບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດ ແລະ ການເພີ່ມທະວີຄວາມຍືນຍົງທາງດ້ານສິ່ງແວດລ້ອມ.** ADB ຈະເພີ່ມການຊ່ວຍເຫຼືອໃນຂົງເຂດເຫຼົ່ານີ້. ADB ຈະຮັບປະກັນວ່າ 75% ຂອງຈຳນວນການດຳເນີນງານຂອງ ADB (ຈຳນວນໂຄງການສະເລ່ຍສຳລັບໄລຍະທຸກໆ 3 ປີ, ລວມທັງ ໂຄງການພາກລັດ ແລະ ໂຄງການພາກເອກະຊົນ) ຈະສົ່ງເສີມການບັນເທົາ ແລະ ການປັບຕົວຕໍ່ການປ່ຽນແປງດິນຟ້າອາກາດພາຍໃນປີ 2030. ງົບປະມານສະໜັບສະໜູນດ້ານດິນຟ້າອາກາດຂອງ ADB ຈະມີມູນຄ່າສູງເຖິງ $80 ຕື້ ສຳລັບໄລຍະແຕ່ປີ 2019 ເຖິງ 2030.

iv. **ການເຮັດໃຫ້ຕົວເມືອງໜ້າຢູ່ຍິ່ງຂຶ້ນ.** ADB ຈະສະໜອງທັນທາງແກ້ໄຂບັນຫາແບບປະສົມປະສານ ເພື່ອຊ່ວຍສ້າງຕົວເມືອງໃຫ້ເປັນຕົວເມືອງທີ່ໜ້າຢູ່, ເປັນຕົວເມືອງທີ່ມີສິ່ງແວດລ້ອມດີ, ມີຄວາມສາມາດແຂ່ງຂັນ, ພ້ອມຮັບການປ່ຽນແປງ ແລະ ທົ່ວເຖິງ. ADB ຈະພັກດັນໂຄງການ ທີ່ກວມເອົາຫຼາຍດ້ານເພື່ອສົ່ງເສີມສຸຂະພາບຂອງຄົນໃນຕົວເມືອງ, ການຂົນສົ່ງໃນຕົວເມືອງ, ຄວາມສະເໝີພາບ ລະຫວ່າງຍິງ-ຊາຍ ແລະ ຄວາມຍືນຍົງດ້ານສິ່ງແວດລ້ອມ. ADB ຈະຊ່ວຍຕົວເມືອງ ສຳຫຼວດຫາແຫຼ່ງທຶນໃໝ່ ແລະ ຂະຫຍາຍແຫຼ່ງທຶນທີ່ມີຢູ່, ສົ່ງເສີມການອອກແບບຜັງເມືອງແບບມີສ່ວນຮ່ວມ ແລະ ທົ່ວເຖິງ ແລະ ປະສານສົມທົບຄວາມພ້ອມຮັບມືກັບການປ່ຽນແປງດິນຟ້າອາກາດ ແລະ ການພິຈາລະນາການຈັດການຄວາມສ່ຽງຈາກໄພພິບັດເຂົ້າໃນຂະບວນການວາງຜັງເມືອງ.

v. **ການສົ່ງເສີມການພັດທະນາຊົນນະບົດ ແລະ ການຮັບປະກັນດ້ານສະບຽງອາຫານ.** ADB ຈະສະໜັບສະໜູນຄວາມພະຍາຍາມ ເພື່ອຈະປັບປຸງການເຊື່ອມຈອດກັບຕະຫຼາດ ແລະ ການເຊື່ອມຕໍ່ຂອງຕ່ອງໂສ້ມູນຄ່າຂອງການຜະລິດ

ສິນຄ້າກະສິກຳ. ADB ຈະຊ່ວຍ ບັນດາສະມາຊິກທີ່ເປັນປະເທດກຳລັງພັດທະນາ ເພີ່ມຜະລິດຕະພາບໃຫ້ແກ່ສິນຄ້າກະສິກຳ ແລະ ເພີ່ມຄວາມໝັ້ນຄົງດ້ານສະບຽງອາຫານ ດ້ວຍການສົ່ງເສີມການສ້າງລາຍຮັບຈາກການຜະລິດກະສິກຳ ແລະ ຈາກກິດຈະກຳອື່ນໆ ທີ່ນອກເໜືອຈາກການຜະລິດກະສິກຳ, ສົ່ງເສີມການໝູນໃຊ້ເຕັກໂນໂລຊີທີ່ກ້າວໜ້າ ແລະ ການເຮັດກະເສດທີ່ສາມາດຮັບມືໄດ້ທັນກັບການປ່ຽນແປງດິນຟ້າອາກາດ ແລະ ສົ່ງເສີມການປັບປຸງມາດຕະຖານການຈັດການຊັບພະຍາກອນທຳມະຊາດ. ADB ຍັງຈະຊ່ວຍເຫຼືອປະເທດສະມາຊິກ ທີ່ກຳລັງພັດທະນາໃນການຍົກລະດັບຄວາມປອດໄພຂອງອາຫານ.

vi. **ການສ້າງຄວາມເຂັ້ມແຂງໃນການປົກຄອງບໍລິຫານ ແລະ ຄວາມອາດສາມາດດ້ານສະຖາບັນ.** ADB ຈະສົ່ງເສີມການປະຕິຮູບລະບົບການຄຸ້ມຄອງລັດ ເພື່ອຊ່ວຍປະເທດສະມາຊິກ ທີ່ກຳລັງພັດທະນາ ປັບປຸງວຽກງານຄຸ້ມຄອງ ແລະ ສ້າງເງື່ອນໄຂເພື່ອໃຫ້ເສດຖະກິດຂະຫຍາຍຕົວແບບຍືນຍົງ. ADB ຈະຊ່ວຍປະເທດຕ່າງໆສ້າງຄວາມພ້ອມຮັບມື ແລະ ຕອບໂຕ້ກັບວິກິດການທາງດ້ານເສດຖະກິດ, ສ້າງຄວາມເຂັ້ມແຂງໃນດ້ານການໃຫ້ບໍລິການແລະ ເພີ່ມຂີດຄວາມສາມາດ ແລະ ມາດຕະຖານ. ADB ຈະຍຶດຖືການປົກປ້ອງສັງຄົມ ແລະ ສິ່ງແວດລ້ອມ, ຍຶດໝັ້ນຕໍ່ມາດຕະຖານຄວາມໄວ້ວາງໃຈ ແລະ ຈັດຕັ້ງປະຕິບັດມາດຕະການຕໍ່ຕ້ານການສໍ້ລາດບັງຫຼວງໃນທຸກໆໂຄງການ ແລະ ໂຄງການແຜນງານຂອງຕົນ.

vii. **ການພັດແພັນການຮ່ວມມື ແລະ ການເຊື່ອມໂຍງພາກພື້ນ.** ADB ຈະຍົກລະດັບການເຊື່ອມຈອດໃນພາກພື້ນ ແລະ ຄວາມສາມາດແຂ່ງຂັນຂອງສະມາຊິກທີ່ເປັນປະເທດກຳລັງພັດທະນາ. ADB ຈະເພີ່ມການຊ່ວຍເຫຼືອດ້ານສາທາລະນຸປະໂພກພາກພື້ນ ແລະ ການປະຕິບັດການຮ່ວມກັນ ເພື່ອຫຼຸດຄວາມສ່ຽງຂ້າມຊາຍແດນ ເຊັ່ນ: ການປ່ຽນແປງດິນຟ້າອາກາດ, ມົນລະພິດ, ພະລັງງານ ແລະ ຄວາມໝັ້ນຄົງດ້ານນ້ຳ ແລະ ເຊື້ອພະຍາດຕິດຕໍ່ ແລະ ພະຍາດຊຶມເຊື້ອຕ່າງໆ. ADB ຍັງຈະຍົກລະດັບການຮ່ວມມືໃນຂະແໜງການເງິນແລະສ້າງຄວາມເຂັ້ມແຂງໃຫ້ຄວາມຄິດລິເລີ່ມຂອງອະນຸພາກພື້ນລວມທັງຜ່ານການສ້າງຄວາມສະດວກໃຫ້ແກ່ການຮ່ວມມື ແລະ ການແລກປ່ຽນຄວາມຮູ້ ແລະ ພ້ອມທັງ ການດຳເນີນວຽກຕາມບັນດາຄວາມຄິດລິເລີ່ມໃໝ່.

ADB ຈະຂະຫຍາຍການດຳເນີນງານກັບພາກເອກະຊົນຂອງຕົນ ເພື່ອໃຫ້ບັນລຸໜຶ່ງສ່ວນສາມຂອງຈຳນວນການດຳເນີນງານທັງໝົດພາຍໃນປີ 2024. ADB ຈະສູ້ຊົນໃຫ້ເກີດຜົນກະທົບຈາກການພັດທະນາ ໃຫ້ເປັນຈຸດປະສົງຫຼັກຂອງການດຳເນີນງານກັບພາກເອກະຊົນຂອງຕົນ. ADB ຍັງຈະຮັບປະກັນໃຫ້ມີຜົນກຳໄລ ແລະ ມີຄວາມຍືນຍົງທາງການຄ້າ. ADB ຈະຂະຫຍາຍ ແລະ ເພີ່ມຄວາມຫຼາກຫຼາຍໃຫ້ແກ່ການດຳເນີນງານກັບພາກເອກະຊົນໃນຕະຫຼາດໃໝ່ ແລະ ຕະຫຼາດທີ່ເປັນແຖວໜ້າເຊັ່ນ: ປະເທດທີ່ມີສະຖານະການອ່ອນໄຫວ ແລະ ໄດ້ຮັບຜົນກະທົບຈາກຄວາມຂັດແຍ່ງ ແລະ ບັນດາລັດທີ່ເປັນເກາະນ້ອຍທີ່ກຳລັງພັດທະນາ. ADB ຈະນຳໃຊ້ກອງທຶນເອກະຊົນ (Private Equity Funds) ເພື່ອຜັນຂະຫຍາຍການເຂົ້າເຖິງ ແລະ ເພີ່ມທະວີການສະໜັບສະໜູນຂອງຕົນ ສຳລັບການຮ່ວມມື ລະຫວ່າງ ພາກລັດ ແລະ ພາກເອກະຊົນ. ADB ຈະເພີ່ມຈຳນວນພະນັກງານຮັບຜິດຊອບວຽກກ່ຽວກັບການດຳເນີນງານກັບພາກເອກະຊົນຂອງຕົນຢູ່ໃນບັນດາສຳນັກງານປະຈຳປະເທດ.

ADB ຈະກະຕຸກຊຸກຍູ້ ແລະ ລະດົມທຶນຈາກແຫຼ່ງທຶນຕ່າງໆ ເພື່ອການພັດທະນາ. ADB ຈະສ້າງຄວາມເຂັ້ມແຂງໃນການປະສານສົມທົບກັບບັນດາຄູ່ຮ່ວມພັດທະນາພະຫຸພາຄີ ທະວິພາຄີ ແລະ ພາກເອກະຊົນ. ADB ຈະ ຊອກຫາທຶນຈາກແຫຼ່ງທຶນເພື່ອການຄ້າ ແລະ ມີເງື່ອນໄຂແບບຜ່ອນຜັນ. ADB ຈະຕັ້ງເປົ້າໃຫ້ມີການເພີ່ມຂຶ້ນໃນການສະໜອງທຶນສົມທົບໃນໄລຍະຍາວໃຫ້ປະກົດຜົນເປັນຈິງພາຍໃນປີ 2030, ໂດຍທຸກໆ $1 ຂອງການດຳເນີນງານກັບພາກເອກະຊົນຂອງຕົນ ຈະຕ້ອງໄດ້ຮັບການສົມທົບຈາກການຮ່ວມທຶນໄລຍະຍາວ $2,50. ເພື່ອຊຸກຍູ້ການລົງທຶນ, ADB ຈະນຳໃຊ້ຮູບແບບການຮ່ວມລົງທຶນ ລະຫວ່າງພາກລັດ ແລະ ພາກເອກະຊົນ, ປັບປຸງແວດລ້ອມຂອງການດຳເນີນທຸລະກິດໃນບັນດາປະເທດສະມາຊິກທີ່ກຳລັງພັດທະນາ ສົ່ງເສີມການລະດົມຊັບພະຍາກອນ ຈາກພາຍໃນປະເທດຂອງປະເທດສະມາຊິກທີ່ກຳລັງພັດທະນາເອງ.

ADB ຈະເສີມຂະຫຍາຍບົດບາດຂອງຕົນໃນຖານະຜູ້ສະໜອງຄວາມຮູ້. ADB ຈະເຮັດວຽກຢ່າງໃກ້ຊິດ ກັບບັນດາປະເທດສະມາຊິກທີ່ກຳລັງພັດທະນາ ເພື່ອຮູ້ໄດ້ເຖິງຄວາມຕ້ອງການຂອງພວກເຂົາ ແລະ ສ້າງຜະລິດຕະພັນຄວາມຮູ້ ແລະ ການບໍລິການດ້ານຄວາມຮູ້ທີ່ແທດເໝາະທີ່ສຸດ. ADB ຈະສ້າງແຮງຈູງໃຈໃຫ້ພະນັກງານ ເພື່ອປະສົມປະສານຄວາມຮູ້ດີສຸດທີ່ມີຢູ່ກັບການສະໜອງທຶນ ແລະ ເພີ່ມຄວາມອາດສາມາດດ້ານສະຖາບັນ ຕະຫລອດເຖິງຮອບວຽນຂອງການດຳເນີນງານ. ADB ຈະເຂົ້າຮ່ວມຢ່າງຕັ້ງໜ້າໃນການສຶກສາວິໄຈ ໃຫ້ຄຳແນະນຳທີ່ມີຄຸນນະພາບສູງ ແລະ ສ້າງຂີດຄວາມສາມາດໃຫ້ແກ່ສະຖາບັນຂອງບັນດາປະເທດສະມາຊິກທີ່ກຳລັງພັດທະນາ ໃນການແກ້ໄຂບັນຫາການພັດທະນາ ແລະ ການດຳເນີນງານໂຄງການ ແລະ ພ້ອມທັງຂະຫຍາຍການຮ່ວມມືດ້ານຄວາມຮູ້ຂອງຕົນ. ADB ຈະສົ່ງເສີມການສ້າງຜະລິດຕະພັນຄວາມຮູ້ ແລະ ການເຜີຍແຜ່ໃນທົ່ວທັງອົງກອນ ແລະ ພາກພື້ນ.

ADB ຈະສືບຕໍ່ຄວາມພະຍາຍາມ ທີ່ຈະສ້າງຕົນເອງໃຫ້ເຂັ້ມແຂງຂຶ້ນ, ດີຂຶ້ນ ແລະ ໄວຂຶ້ນກວ່າເກົ່າ. ADB ຈະຮັບປະກັນຖານຊັບພະຍາກອນ ໃຫ້ມີສະພາບທີ່ໝັ້ນຄົງ ເພື່ອສະໜັບສະໜູນການດໍາເນີນງານຂອງຕົນໃນອະນາຄົດ. ADB ຈະເພີ່ມຊັບພະຍາກອນມະນຸດຂອງຕົນ ແລະ ຮັກສາການດໍາເນີນງານຜ່ານສໍານັກງານປະຈໍາປະເທດ. ADB ຈະປັບປຸງຜະລິດຕະພັນ ແລະ ເຄື່ອງມືຂອງຕົນ. ADB ຈະສູ້ຊົນປັບປຸງຂັ້ນຕອນການດໍາເນີນກິດຈະການຂອງຕົນໃຫ້ທັນສະໃໝຢ່າງເປັນຮູບປະທໍາ (ລວມເອົາການຈັດຊື້-ຈັດຈ້າງທີ່ທັນເວລາແລະ ຄຸ້ມຄ່າກັບເງິນລົງທຶນທີ່ສຸດ ແລະ ນໍາໃຊ້ລະບົບຂອງປະເທດໃຫ້ຫຼາຍຂຶ້ນ) ແລະ ເລັ່ງການຫັນປ່ຽນການດໍາເນີນງານຂອງຕົນໃຫ້ເປັນແບບດີຈີຕ້ອນ. ADB ຈະເພີ່ມການປະສານສົມທົບກັບອົງການຈັດຕັ້ງທາງສັງຄົມລວມທັງອົງການທີ່ບໍ່ສັງກັດລັດຖະບານໃຫ້ຫຼາຍຂຶ້ນໃນ ການອອກແບບ, ການຈັດຕັ້ງປະຕິບັດ ແລະ ການຕິດຕາມກວດກາໂຄງການຕ່າງໆ.

ເພື່ອດໍາເນີນງານຕາມແຜນຍຸດທະສາດ, ADB ຈະສ້າງແຜນດໍາເນີນງານໃນ 7 ຂົງເຂດບຸລິມະສິດ ເພື່ອກໍານົດຈຸດສຸມຍຸດທະສາດຢ່າງຖືກຕ້ອງ, ຂົງເຂດສະເພາະໃນການກໍານົດຂໍ້ສັນຍາ, ວິທີການ ແລະ ຂໍ້ກໍານົດຄວາມຕ້ອງການດ້ານທັກສະຄວາມຊໍານານແບບຄອບຄຸມ. ຍຸດທະສາດເພື່ອການຮ່ວມມືກັບປະເທດ ຈະກັ່ນຕອງບຸລິມະສິດຂອງການດໍາເນີນງານໃນລະດັບປະ ເທດ. ການຈັດທໍາແຜນງານໂຄງການ ແລະ ຂອບງົບປະມານຈະໄດ້ຮັບການສ້າງຄວາມເຂັ້ມແຂງ ແລະ ຖືກນໍາໃຊ້ໃຫ້ເປັນໄປຕາມແຜນວຽກປະຈໍາປີ ແລະ ການຈັດສັນຊັບພະຍາກອນທີ່ສອດຄ່ອງກັບບຸລິມະສິດຂອງການດໍາເນີນງານ. ຂອບວັດຜົນການດໍາເນີນງານຂອງອົງກອນ ຈະໄດ້ຮັບການສ້າງຂຶ້ນມາໃໝ່ ແລະ ຈະໄດ້ຮັບການປັບປຸງເປັນປະຈໍາ ເພື່ອຕິດຕາມກວດກາ ແລະ ຕີລາຄາຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ. ADB ຈະສືບຕໍ່ລາຍງານຜົນການດໍາເນີນງານປະຈໍາປີ ໂດຍໃຊ້ຂອບວັດຜົນການດໍາເນີນງານ.

ADB ກໍານົດໃຫ້ “ໜຶ່ງ ADB” ເປັນແນວທາງໃນການນໍາເອົາຄວາມຮູ້ ແລະຄວາມຊໍານານຈາກທົ່ວທັງອົງກອນ ເຂົ້າໃນການຈັດຕັ້ງປະຕິບັດແຜນຍຸດທະສາດ 2030 ໃຫ້ເກີດປະສິດທິຜົນ.

# I. ພາກສະເໜີ

1. ໃນໄລຍະ 50 ປີທີ່ຜ່ານມາ, ພາກພື້ນອາຊີ ແລະ ປາຊີຟິກ ໄດ້ກ້າວກະໂດດຢ່າງໃຫຍ່ຫລວງ ໃນການຫຼຸດຜ່ອນຄວາມ ທຸກຍາກ ແລະ ການຂະຫຍາຍຕົວທາງດ້ານເສດຖະກິດ.[1] ພາກພື້ນດັ່ງກ່າວ ມີຄວາມປາດຖະໜາທີ່ຈະກ້າວກະໂດດໄປຂ້າງໜ້າ. ທະນາຄານພັດທະນາອາຊີ (ADB) ໄດ້ເປັນຄູ່ຮ່ວມພັດທະນາໜຶ່ງທີ່ສຳຄັນຕໍ່ການປ່ຽນແປງພາກພື້ນ ແລະ ມີຄວາມມຸ່ງໝັ້ນທີ່ຈະສືບຕໍ່ຮັບໃຊ້ພາກພື້ນດັ່ງກ່າວ ໃນການພັດທະນາຂອງພາກພື້ນນີ້ໄລຍະຕໍ່ໄປ.

2. ຍຸດທະສາດໄລຍະຍາວອັນໃໝ່ຂອງອົງກອນຮອດປີ 2030 ກໍ່ຄືຍຸດທະສາດ 2030 ໄດ້ກຳນົດແນວທາງການດຳເນີນງານໃຫ້ແກ່ຄວາມພະຍາຍາມຂອງ ADB ທີ່ຈະຕອບສະໜອງຕໍ່ຄວາມ ຕ້ອງການທີ່ມີການປ່ຽນແປງ ຂອງພາກພື້ນ. ຍຸດທະສາດນີ້ ແມ່ນອີງໃສ່ການປະເມີນຜົນ ການດຳເນີນງານຂອງ ADB, ເຊິ່ງກວມເອົາບົດທົບທວນກາງສະໄໝຂອງຍຸດທະສາດ 2020, ບົດທົບທວນປະສິດທິຜົນຂອງການພັດທະນາ ແລະ ບົດຄົ້ນຄວ້າວິໄຈຂອງກົມປະເມີນຜົນອິດສະຫລະ .

3. **ບົດທົບທວນກາງສະໄໝຂອງຍຸດທະສາດ 2020.** ບົດທົບທວນກາງສະໃໝທີ່ສ້າງຂຶ້ນໃນປີ 2014 ໄດ້ຖອດຖອນບົດຮຽນຈາກການຈັດຕັ້ງປະຕິບັດຍຸດທະສາດ 2020 ແລະ ໄດ້ສະເໜີ 10 ຫົວຂໍ້ແຜນງານ ເພື່ອຄັດເກົາ ແລະ ປັບທິດທາງຍຸດທະສາດ ADB ໃນອະນາຄົດໃຫ້ແຫຼມຄົມ ແລະ ສົມດຸນ ແລະ ເພີ່ມຄວາມສາມາດໃນການຕອບສະໜອງຂອງຕົນ.[2] ແຜນງານດັ່ງກ່າວແມ່ນແນໃສ່ເພີ່ມທະວີຄວາມພະຍາຍາມໃນການຫຼຸດຜ່ອນຄວາມທຸກຍາກ, ການຂະຫຍາຍຕົວທາງດ້ານເສດຖະກິດແບບທົ່ວເຖິງ, ສິ່ງແວດລ້ອມ ແລະ ການປ່ຽນແປງດິນຟ້າອາກາດ, ການຮ່ວມມື ແລະ ການເຊື່ອມໂຍງພາກພື້ນການພັດທະນາພື້ນຖານໂຄງລ່າງ, ປະເທດທີ່ມີລາຍຮັບປານກາງ, ການພັດທະນາ ແລະ ການດຳເນີນງານກັບພາກເອກກະຊົນ ແລະ ການແກ້ບັນຫາດ້ວຍຄວາມຮູ້. ແຜນງານດັ່ງກ່າວຍັງກວມເອົາການປະຕິບັດງານເພື່ອເພີ່ມຂີດຄວາມສາມາດ, ປະສິດທິພາບ ແລະ ປະສິດທິຜົນຂອງ ADB ໃນດ້ານຕ່າງໆເຊັ່ນ: ແຫຼ່ງເງິນທຶນ ແລະ ການເປັນຄູ່ຮ່ວມມື, ຂັ້ນຕອນການດຳເນີນກິດຈະການ, ທັກສະຂອງພະນັກງານ, ແຮງຈູງໃຈ ແລະ ການຈັດວາງດ້ານສະຖາບັນ.

4. **ການປະເມີນຜົນການດຳເນີນງານຂອງ ADB.** ຜົນຈາກການທົບທວນປະສິດທິຜົນຂອງການພັດທະນາ, ເຊິ່ງເກັບກຳເອົາປະເດັນຕ່າງໆຂອງຜົນການດຳເນີນງານຂອງ ADB ໄປປຽບທຽບກັບຂອບວັດຜົນການດຳເນີນງານຂອງອົງກອນໃນທຸກປີ ແລະ ການປະເມີນຜົນຂອງກົມປະເມີນຜົນອິດສະຫລະໄດ້ເພີ່ມແຮງສະໜັບສະໜູນຕໍ່ຜົນຈາກ ການທົບທວນ ຍຸດທະສາດກາງສະໃໝ. ຜົນຈາກການທົບທວນ ແລະ ປະເມີນດັ່ງກ່າວ ໄດ້ໃຫ້ເຫັນວ່າ ADB ໄດ້ດຳເນີນງານສອດຄ່ອງກັບຂົງເຂດບຸລິມະສິດຂອງຍຸດທະສາດ 2020 ແລະ ກໍ່ໃຫ້ເກີດຜົນໃນທາງບວກໃນດ້ານຕ່າງໆເຊັ່ນ: ພື້ນຖານໂຄງລ່າງ, ການປ່ຽນແປງດິນຟ້າອາກາດ ແລະ ຄວາມສະເໝີພາບລະຫວ່າງຍິງ-ຊາຍ. ເຖິງຢ່າງໃດກໍ່ຕາມ, ຜົນຈາກການທົບທວນ ແລະ ປະເມີນຜົນ ຍັງຊີ້ໃຫ້ເຫັນວ່າ ADB ຄວນປັບແຜນງານໂຄງການຊ່ວຍເຫຼືອຂອງຕົນ ໃຫ້ສົມດຸນຂຶ້ນຕື່ມໜ້ອຍໜຶ່ງ ແລະ ເພີ່ມນ້ຳໜັກໃສ່ຂະແໜງສັງຄົມຕ່າງໆ ເພື່ອເພີ່ມກຳລັງການ

ຍຸດທະສາດໄລຍະຍາວອັນໃໝ່ຂອງອົງກອນຮອດປີ 2030 ກໍ່ຄືຍຸດທະສາດ 2030 ໄດ້ກຳນົດແນວທາງການດຳເນີນງານໃຫ້ແກ່ຄວາມພະຍາຍາມຂອງ ADB ທີ່ຈະຕອບສະໜອງ ຕໍ່ຄວາມຕ້ອງການທີ່ມີການປ່ຽນແປງ ຂອງພາກພື້ນ.

[1] "ອາຊີ ແລະ ປາຊີຟິກ" ຫມາຍເຖິງ ເສດຖະກິດ 48 ປະເທດ ໃນພາກພື້ນອາຊີ ແລະ ປາຊີຟິກ ທີ່ເປັນສະມາຊິກຂອງທະນາຄານພັດທະນາອາຊີ (ADB). ປະເທດເສດຖະກິດເຫຼົ່ານີ້ໄດ້ຖືກແບ່ງອອກເປັນສອງກຸ່ມໃຫຍ່ຄື ກຸ່ມປະເທດສະມາຊິກທີ່ກຳລັງພັດທະນາ ແລະ ກຸ່ມປະເທດສະມາຊິກທີ່ພັດທະນາແລ້ວ. ຄຳວ່າ "ປະເທດສະມາຊິກທີ່ພັດທະນາແລ້ວ" ຫມາຍເຖິງ ອົດສະຕາລີ, ຍີ່ປຸ່ນ ແລະ ນິວຊີແລນ. ທີ່ເຫຼືອ 45 ປະເທດແມ່ນ ປະເທດສະມາຊິກທີ່ກຳລັງພັດທະນາ ເຊິ່ງຖືກເອີ້ນວ່າ "ບັນດາປະເທດອາຊີທີ່ກຳລັງພັດທະນາ".

[2] ADB. 2014. *ບົດທົບທວນກາງສະໄໝຍຸດທະສາດ 2020: ການປະເຊີນກັບສິ່ງທ້າທາຍຂອງການປ່ຽນແປງໃນພາກພື້ນອາຊີ ແລະ ປາຊີຟິກ ມະນີລາ.*

ຍຸດທະສາດ 2030 ໄດ້ສະທ້ອນໃຫ້ເຫັນເຖິງທັດສະນະ ແລະ ຄຳຄິດເຫັນຈາກຫຼາຍພາກສ່ວນທີ່ມີສ່ວນກ່ຽວຂ້ອງ, ລວມທັງ ຜູ້ສ້າງນະໂຍບາຍທັງໃນບັນດາປະເທດທີ່ກຳລັງພັດທະນາ ແລະ ປະເທດທີ່ພັດທະນາແລ້ວ ແລະ ອົງການຈັດຕັ້ງທາງສັງຄົມ ລວມທັງອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານພ້ອມທັງບັນດາສະມາຊິກສະພາບໍລິຫານ ແລະ ພະນັກງານຂອງ ADB.

ຊ່ວຍເຫຼືອຂອງຕົນເຂົ້າໃນການຫຼຸດຜ່ອນຄວາມທຸກຍາກ ແລະ ການຂະຫຍາຍຕົວຂອງເສດຖະກິດ ຢ່າງທົ່ວເຖິງ. ຜົນການທົບທວນ ແລະ ປະເມີນຍັງໄດ້ແນະນຳໃຫ້ ADB ຄວນເນັ້ນຫນັກໃສ່ການດຳເນີນງານກັບພາກເອກະຊົນ ໃຫ້ຫຼາຍຍິ່ງຂຶ້ນ ເພື່ອຕອບສະຫນອງຕໍ່ຄວາມຕ້ອງການ ຂອງພາກພື້ນທີ່ມີການປ່ຽນແປງ ລວມທັງການລະດົມແຫຼ່ງທຶນເພີ່ມຕື່ມ. ກົມປະເມີນຜົນອິດສະຫລະ ໄດ້ຮຽກຮ້ອງໃຫ້ ADB ສູ້ຊົນເຮັດໃຫ້ການຈະເລີນເຕີບໂຕ ທີ່ມີຄຸນນະພາບດີຍິ່ງຂຶ້ນ (ບໍ່ຄວນເນັ້ນແຕ່ຂະໜາດຂອງການເຕີບໂຕ) ຜ່ານສາມວາລະທີ່ສົ່ງຜົນຕໍ່ກັນ ແລະ ກັນຄື: ຄວາມທົ່ວເຖິງທາງດ້ານສັງຄົມ ແລະ ທາງພູມສາດ, ຄວາມຍືນຍົງທາງດ້ານສິ່ງແວດລ້ອມ ແລະ ການຮ່ວມມື ແລະ ການເຊື່ອມໂຍງພາກພື້ນ. ພາຍໃຕ້ຍຸດທະສາດ 2030, ກົມປະເມີນຜົນອິດສະຫລະ ຍັງໄດ້ສະເໜີໃຫ້ ADB ປະສົມປະສານຄວາມຮູ້ຄວາມຊຳນານທຸກດ້ານ ແລະ ທຸກຂະແໜງການເຂົ້າດ້ວຍກັນ ເພື່ອແກ້ໄຂ ສິ່ງທ້າທາຍ ຂອງການພັດທະນາທີ່ສັບຊ້ອນຂຶ້ນກວ່າເກົ່າ.

5. **ຄຳຄິດເຫັນຈາກການປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງ** ຍຸດທະສາດ 2030 ໄດ້ນຳເອົາບັນດາຄຳຄິດເຫັນ ແລະ ທັດສະນະຈາກຫຼາກຫຼາຍພາກສ່ວນ ທີ່ມີສ່ວນກ່ຽວຂ້ອງ, ໃນນັ້ນລວມທັງ ຜູ້ສ້າງນະໂຍບາຍທັງໃນບັນດາປະເທດທີ່ກຳລັງພັດທະນາ ແລະ ປະເທດທີ່ພັດທະນາແລ້ວ, ນັກວິຊາການຈາກບັນດາສະຖາບັນການສຶກສາຕ່າງໆ ແລະ ອົງການຈັດຕັ້ງທາງສັງຄົມລວມທັງອົງການທີ່ບໍ່ສັງກັດລັດຖະບານພ້ອມທັງບັນດາສະມາຊິກສະພາບໍລິຫານ ແລະ ພະນັກງານຂອງ ADB. ນອກຈາກການຈັດກອງປະຊຸມປຶກສາຫາລືໃນລະດັບປະເທດໃນທົ່ວພາກພື້ນແລ້ວ, ຍັງໄດ້ມີການຈັດກອງປະຊຸມໂຕະມົນຂຶ້ນເຖິງສີ່ຄັ້ງ ເພື່ອປຶກສາຫາກັບບັນດານັກປັນຍາຊົນດ້ານການພັດທະນາທີ່ມີຊື່ສຽງທີ່ນະຄອນຫຼວງ ລອນດອນ, ມະນີລາ, ໂຕກຽວ ແລະ ວໍຊິງຕັນ ດີຊີ. ບັນດາພາກສ່ວນທີ່ກ່ຽວຂ້ອງໄດ້ເນັ້ນໃຫ້ ADB ສືບຕໍ່ມີບົດບາດສຳຄັນໃນພາກພື້ນອາຊີ ແລະ ປາຊີຟິກ ເຖິງແມ່ນວ່າ ບັນດາປະເທດສະມາຊິກ ທີ່ກຳລັງພັດທະນາຂອງຕົນ ສ່ວນໃຫຍ່ ໄດ້ກາຍເປັນປະເທດ ທີ່ມີລາຍຮັບປານກາງໄປແລ້ວກໍ່ຕາມ. ບັນດາປະເທດສະມາຊິກທີ່ກຳລັງພັດທະນາຫລາຍປະເທດ ຍັງຄົງປະເຊີນກັບສິ່ງທ້າທາຍທີ່ເກີດຈາກຄວາມທຸກຍາກ ແລະ ຄວາມອ່ອນແອ, ວິກິດການເສດຖະກິດໂລກ, ຄວາມບໍ່ເທົ່າທຽມກັນ, ການປ່ຽນແປງດິນຟ້າອາກາດ ແລະ ສິ່ງແວດລ້ອມ ທີ່ເຊື່ອມໂຊມ, ການຂະຫຍາຍຂອງຕົວເມືອງ ແລະ ຈຳນວນປະຊາກອນຜູ້ສູງອາຍຸ. ເພື່ອຊ່ວຍບັນດາປະເທດສະມາຊິກທີ່ກຳລັງພັດທະນາແກ້ໄຂສິ່ງທ້າທາຍເຫຼົ່ານີ້, ADB ຄວນຕັ້ງຕົນບົນປັດໃຈເງື່ອນໄຂທີ່ຕົນມີທ່າແຮງໃນດ້ານ ການສະໜອງທຶນໃສ່ການສ້າງພື້ນຖານໂຄງລ່າງ ແລະ ການຮ່ວມມື ແລະ ການເຊື່ອມໂຍງພາກພື້ນ; ການເພີ່ມຂີດຄວາມສາມາດໃນບັນດາຂະແໜງການສັງຄົມ; ແລະ ຂະຫຍາຍການດຳເນີນງານກັບພາກເອກະຊົນຂອງຕົນ, ລວມທັງ ການຮ່ວມມືໃນຮູບແບບການຮ່ວມມືລະຫວ່າງພາກລັດ ແລະ ພາກເອກະຊົນ. ນອກຈາກນັ້ນ, ADB ຄວນສ້າງຄວາມເຂັ້ມແຂງໃນວຽກບໍລິການດ້ານຄວາມຮູ້ຂອງຕົນ, ສ້າງຄວາມສະດວກໃຫ້ແກ່ ການແລກປ່ຽນຄວາມຮູ້ໃນທົ່ວທຸກປະເທດ ແລະ ການປັບປຸງຄວາມມີປະສິດທິພາບຂອງຂັ້ນຕອນການດຳເນີນກິດຈະການ.[3]

[3] ຜົນຈາກການປະເມີນຜົນເຫຼົ່ານີ້ ແລະ ບົດສະຫຼຸບຫຍໍ້ກ່ຽວກັບກອງປະຊຸມປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງ ແມ່ນມີຢູ່ໃນເອກະສານຊ້ອນທ້າຍ.

# II. ການປ່ຽນແປງພາກພື້ນ ແລະ ສິ່ງທ້າທາຍ

6. **ການຫັນປ່ຽນສູນກາງທາງເສດຖະກິດສູ່ພາກພື້ນອາຊີ ແລະ ປາຊີຟິກ.** ໃນຖານະເປັນພາກພື້ນທີ່ເສດຖະກິດຂະຫຍາຍໂຕໄວທີ່ສຸດ ຕະຫຼອດຫຼາຍທົດສະວັດທີ່ຜ່ານມາ, ສັດສ່ວຂອງລວມຍອດຜະລິດຕະພັນພາຍໃນຂອງພາກພື້ນອາຊີ ແລະ ປາຊີຟິກ ໄດ້ເພີ່ມຂຶ້ນຈາກ 25% in 2000 ຫາ 33% in 2016 (ຮູບ 1). ມີການຄາດການວ່າ ພາກພື້ນນີ້ຈະຖືຄອງສັດສ່ວນເກີນເຄິ່ງໜຶ່ງຂອງການຜະລິດຂອງໂລກພາຍໃນປີ 2050.[4] ປະຈຸບັນ ສາທາລະນະລັດປະຊາຊົນຈີນ ແລະ ອິນເດຍ ເປັນປະເທດໃນບັນດາປະເທດທີ່ມີເສດຖະກິດຂະໜາດໃຫຍ່ຂອງໂລກ. ສອງປະເທດນີ້ບວກກັບບັນດາປະເທດທີ່ນອນໃນສະມາຄົມປະຊາຊາດແຫ່ງອາຊີຕາເວັນອອກສຽງໃຕ້ (ອາຊຽນ),[5] ຊຶ່ງມີຈຳນວນປະຊາກອນລວມກັນເກືອບເທົ່າ 640 ລ້ານຄົນ ໄດ້ກາຍເປັນປະເທດເສດຖະກິດ ຕະຫຼາດເກີດຂຶ້ນໃໝ່ທີ່ມີຄວາມສຳຄັນ. ການຂະຫຍາຍຕົວຢ່າງເຂັ້ມແຂງໄດ້ເຮັດໃຫ້ຄວາມທຸກຍາກຫລຸດລົງຫລາຍ ແລະ ມາດຕະຖານການດຳລົງຊີວິດດີຂຶ້ນ. ໂດຍຖືເອົາກຳລັງຊື້ $1,90 ຕໍ່ມື້ຂອງປີ 2011 ເປັນຈຸດປຽບທຽບ, ຄວາມທຸກຍາກທີ່ສຸດໄດ້ຫຼຸດລົງຢ່າງຫຼວງຫຼາຍ ໃນບັນດາປະເທດອາຊີທີ່ກຳລັງພັດທະນາຈາກ 53% ໃນປີ 1990 ລົງມາຮອດ 9% ໃນປີ 2013 ຂອງຈຳນວນປະຊາກອນທັງໝົດ.[6] ໃນຂະນະທີ່ ແນວໂນ້ມທີ່ອຽງໄປຕາມທິດທາງທີ່ດີເຫຼົ່ານີ້ຄາດວ່າຈະສືບຕໍ່, ແຕ່ຄວາມທຸກຍາກກໍ່ຍັງຈະບໍ່ໝົດໄປ. ພາກພື້ນນີ້ ຍັງປະເຊີນຫນ້າກັບສະພາບການພັດທະນາທີ່ມີລັກສະນະປ່ຽນແປງຕະຫຼອດເວລາ ແລະ ມີຄວາມສັບຊ້ອນເພີ່ມຂຶ້ນ ເຊິ່ງມີສາເຫດເກີດຈາກ ບັນດາເຫດການຂອງໂລກ ແລະ ສິ່ງທ້າທາຍຕໍ່ພາກພື້ນທີ່ເກີດຂຶ້ນໃໝ່.

7. **ຄວາມທຸກຍາກ ແລະ ຄວາມອ່ອນໄຫວທີ່ຍັງມີຢູ່.** ການຫຼຸດຜ່ອນຄວາມທຸກຍາກໃນພາກພື້ນອາຊີ ແລະ ປາຊີຟິກ ແມ່ນແຕ່ໃນຫລາຍປະເທດທີ່ມີລາຍຮັບຕໍ່ຫົວຄົນສູງ ກໍ່ຍັງຄົງເປັນວາລະທີ່ຍັງບໍ່ທັນສິ້ນສຸດ. ເຖິງວ່າຈະມີຄວາມຄືບຫນ້າເປັນສ່ວນໃຫຍ່ກໍ່ຕາມ, ແຕ່ພາກພື້ນນີ້ຍັງມີ 326 ລ້ານຄົນທີ່ຍັງທຸກຍາກທີ່ສຸດ

ຮູບພາບ 1: ສັດສ່ວນຂອງລວມຍອດຜະລິດຕະພັນພາຍໃນຂອງພາກພື້ນອາຊີ ແລະ ປາຊີຟິກ, ປີ 2000 ແລະ 2016




ADB = ທະນາຄານພັດທະນາອາຊີ, GDP = ລວມຍອດຜະລິດຕະພັນພາຍໃນ, PRC = ສາທາລະນະລັດ ປະຊາຊົນຈີນ.

ໝາຍເຫດ: ອາຊີ ແລະ ປາຊີຟິກປະກອບມີບັນດາປະເທດທີ່ກຳລັງພັດທະນາ ແລະ ປະເທດທີ່ພັດທະນາເສດຖະກິດຂອງ ADB, ຍົກເວັ້ນຫມູ່ເກາະຄຸກ ແລະ ໄທເປ, ຈີນ, ບ່ອນທີ່ບໍ່ມີຂໍ້ມູນ. ຕົວເລກເງິນໂດລາສໍາລັບຍອດລວມຜະລິດຕະພັນພາຍໃນ ແມ່ນປ່ຽນຈາກສະກຸນເງິນພາຍໃນ ໂດຍໃຊ້ອັດຕາແລກປ່ຽນອັດຕາແລກປ່ຽນຢ່າງເປັນທາງການໃນໜຶ່ງປີ.

ແຫຼ່ງຂໍ້ມູນ: ທະນາຄານໂລກ. ຕົວຊີ້ວັດການພັດທະນາໂລກ. http://databank.worldbank.org/data/reports.aspx?source=world-development-indicators (ໄດ້ເຂົ້າເບິ່ງວັນທີ່ 5 ມີນາ 2018).

---

[4] ADB. 2011. *ອາຊີ 2050: ການທຳໃຫ້ສັດຕະວັດຂອງອາຊີປະກົດຜົນເປັນຈິງ.* ສິງກະໂປ.

[5] 10 ປະເທດສະມາຊິກອາຊຽນປະກອບມີ ບູໄນດາຣູຊາລາມ, ກຳປູເຈຍ, ອິນໂດເນເຊຍ, ສປປ ລາວ, ມາເລເຊຍ, ມຽນມາ, ຟີລິບປິນ, ສິງກະໂປ, ໄທ ແລະ ຫວຽດນາມ .

[6] ທະນາຄານໂລກ. PovcalNet http://iresearch.worldbank.org/PovcalNet/home.aspx (ເຂົ້າເບິ່ງວັນທີ່ 11 ຕຸລາ 2017). ຕົວເລກຄາດຄະເນຄວາມທຸກຍາກໃນພາກພື້ນ ສໍາລັບເຫຼົ່າປະເທດອາຊີທີ່ກຳລັງພັດທະນາ ໄດ້ຮັບການຄິດໄລ່ສະເພາະ 34 ປະເທດສະມາຊິກທີ່ກຳລັງພັດທະນາ ທີ່ມີຂໍ້ມູນພຽງພໍເຊັ່ນ: ອາເມເນຍ, ອາເຊີໄບຈານ, ບັງກະລາເທດ, ພູຖານ, ສະຫະພັນທະລັດໄມໂຄຼເນເຊຍ, ຟີຈີ, ຈໍເຈຍ, ອິນເດຍ, ອິນໂດເນເຊຍ, ຄາຊັກສະຖານ, ກີລິບາຕີ, ສາທາລະນະລັດເກົາຫຼີ, ສປປ ລາວ, ມາເລເຊຍ, ມານດິບ, ມົງໂກນ, ມຽນມາ, ເນປານ, ປາກີສະຖານ, ປາປົວນິວກີນີ, ຟີລິບປິນ, ສປ ຈີນ, ຊາມົວ, ຫມູ່ເກາະໂຊໂລມອນ, ສີລັງກາ, ທາຈີກິດສະຖານ, ໄທ, ຕີມໍເລສເຕ, ຕົງກາ, ເຕີກເມນິດສະຖານ, ຕູວາລູ, ອຸດເບກິດສະຖານ, ວັນນົວຕູ ແລະ ຫວຽດນາມ..

**ຮູບພາບ 2: ຄວາມທຸກຍາກ ແລະ ຄວາມອ່ອນແອໃນບັນດາປະເທດສະມາຊິກທີ່ກໍາລັງພັດທະນາຂອງ ADB**




ADB = ທະນາຄານພັດທະນາອາຊີ.

ໝາຍເຫດ: ປີອ້າງອີງຫຼ້າສຸດສໍາລັບການຄາດຄະເນຄວາມທຸກຍາກແມ່ນປີ 2013. ເສັ້ນແບ່ງຄວາມທຸກຍາກ ແມ່ນສະແດງໃນປີ 2011 ຄວາມເທົ່າທຽມກັນຂອງກໍາລັງຊື້. ບາງຕົວເລກອາດຈະບໍ່ເພີ່ມຂຶ້ນຍ້ອນການປັດເປັນຈໍານວນຖ້ວນ.

ຫຼ່ງຂໍ້ມູນ: ທະນາຄານໂລກ. PovcalNet http://iresearch.worldbank.org/PovcalNet/home.aspx (ໄດ້ເຂົ້າເບິ່ງວັນທີ່ 11 ຕຸລາ 2017).

(ຫຼືຢູ່ລະດັບຕໍ່າກວ່າເສັ້ນແບ່ງຄວາມທຸກຍາກ $1,90 ຕໍ່ວັນ) ໃນປີ 2013 (ຮູບ 2). ມີອີກ 915 ລ້ານຄົນທີ່ດໍາລົງຊີບດ້ວຍລາຍຮັບເກີນ $1,90 ຕໍ່ວັນ ແຕ່ຕໍ່າກວ່າ $3,20 ຕໍ່ວັນ. ຄົນເຫຼົ່ານີ້ ຍັງມີຄວາມສ່ຽງຢ່າງຕໍ່ເນື່ອງ ທີ່ຈະຫວນກັບໄປຫາຄວາມທຸກຍາກທີ່ສຸດໃນຊ່ວງທີ່ເສດຖະກິດຕົກຕໍ່າ ແລະ ມີເຫດການກະທົບຢ່າງກະທັນຫັນຈາກພາຍນອກ. ຈໍານວນປະຊາກາກອນທີ່ຂາດອາຫານ ຍັງມີສັດສ່ວນສູງ: 64% ຂອງປະຊາກອນທີ່ຂາດສານອາຫານໃນໂລກ (ເກືອບ 520 ລ້ານຄົນ)ອາໄສຢູ່ໃນພາກພື້ນອາຊີໃນປີ 2016.[7]

8. **ການເພີ່ມຂຶ້ນຂອງຄວາມບໍ່ເທົ່າທຽມ.** ຄວາມບໍ່ເທົ່າທຽມດ້ານລາຍຮັບ ໄດ້ເພີ່ມຂຶ້ນໃນບາງປະເທດ ແລະ ຄວາມແຕກໂຕນທາງສັງຄົມກໍ່ຍັງຄົງມີຢູ່. ເກືອບ 80% ຂອງປະຊາກອນຂອງພາກພື້ນນີ້ ອາໃສໃນປະເທດທີ່ມີຄວາມບໍ່ເທົ່າທຽມເພີ່ມຂຶ້ນ (ວັດແທກດ້ວຍດັດຊະນີ Gini) ແຕ່ ຊຸມປີ 1990 ຫາ ຊຸມປີ 2000.[8] ອັດຕາຄວາມທຸກຍາກໃນເຂດຊົນນະບົດຍັງສູງກວ່າເຂດຕົວເມືອງ ແລະ ຄວາມແຕກໂຕນຍັງມີຢູ່ຢ່າງເຫັນໄດ້ຊັດເຈນ ໃນດ້ານອັດຕາການເຂົ້າໂຮງຮຽນ ແລະ ຄວາມສໍາເລັດທາງດ້ານການສຶກສາ ແລະ ການເຂົ້າເຖິງໄຟຟ້າໃຊ້, ນໍ້າໃຊ້ ແລະ ສຸຂະພິບານ.[9] ຊ່ອງຫວ່າງລະຫວ່າງຍິງ-ຊາຍ ໃນລະບົບ

---

[7] ອົງການອາຫານ ແລະ ການກະເສດ ຂອງສະຫະປະຊາຊາດ (FAO), ກອງທຶນການພັດທະນາກະສິກໍາສາກົນ, ກອງທຶນເດັກນ້ອຍຂອງສະຫະປະຊາຊາດ (UNICEF), ອົງການອາຫານໂລກ (WFP) ແລະ ອົງການອະນາໄມໂລກ (WHO). 2017. *ສະພາບການຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການຂອງໂລກປະຈໍາປີ 2017: ການສ້າງຄວາມພ້ອມ ເພື່ອຄວາມສະຫງົບ ແລະ ຄວາມໝັ້ນຄົງດ້ານສະບຽງອາຫານ.* ໂຣມ: ອົງການອາຫານ ແລະ ການກະເສດຂອງສະຫະປະຊາຊາດ. ການຂາດສານອາຫານ ໝາຍເຖິງ ສະພາບການບໍລິໂພກອາຫານຕາມຄວາມເຄີຍຊິນປະຈໍາຂອງບຸກຄົນ ທີ່ໄດ້ຮັບພະລັງງານບໍ່ພຽງພໍ ສໍາລັບການມີຊີວິດທີ່ປົກກະຕິ ແຂງແຮງແລະສຸຂະພາບດີ. ຕົວເລກຄາດຄະເນສໍາລັບອາຊີແມ່ນອີງໃສ່ ການແບ່ງປະເພດ ຕາມອົງການອາຫານ ແລະ ກະເສດຂອງສະຫະປະຊາຊາດ.

[8] ທະນາຄານໂລກ. ຕົວຊີ້ວັດການພັດທະນາໂລກ. http://databank.worldbank.org/data/reports.aspx?source=world-development-indicators (ເຂົ້າເຖິງໄດ້ 15 ກຸມພາ 2018). ໃນບັນດາ 22 ປະເທດທີ່ມີຂໍ້ມູນທີ່ສາມາດປຽບທຽບໄດ້, ມີ 8 ປະເທດ (ອິນເດຍ, ອິນໂດເນເຊຍ, ສປປລາວ, ມົງໂກລີ, ສ.ປປ ລາວ, ສີລັງກາ, ທາຈິກິດສະຖານ ແລະຫວຽດນາມ) - ກວມເອົາປະມານ 79% ຂອງປະຊາກອນອາຊີທີ່ກໍາລັງພັດທະນາ ໃນປີ 2015- ໄດ້ປະສົບກັບການເພີ່ມຂຶ້ນຂອງດັດສະນີ ຈີນີ Gini ລະຫວ່າງຊຸມປີ 1990 ແລະ 2000.

[9] ADB. 2017. *ຕົວຊີ້ວັດຫຼັກສໍາລັບອາຊີແລະປາຊີຟິກ 2017.* ມະນີລາ. ໃນ 19 ປະເທດເສດຖະກິດທີ່ແບ່ງແຍກ ຕົວເລກຄວາມທຸກຍາກ ໃນຕົວເມືອງກັບຊົນນະບົດ (ອີງໃສ່ການສໍາຫຼວດລາຍໄດ້ແລະຄ່າໃຊ້ຈ່າຍໃນຄົວເຮືອນ 2010-2016), ອັດຕາສ່ວນຂອງປະຊາກອນທີ່ຢູ່ຕໍ່າກວ່າເສັ້ນຄວາມທຸກຍາກຂອງປະເທດແມ່ນສູງຂຶ້ນໃນເຂດຊົນນະບົດ ຫຼາຍກ່ວາໃນຕົວເມືອງ.

ການຜະລິດ, ຄ່າແຮງ ແລະ ຄວາມທຸກຍາກດ້ານລາຍຮັບ ຍັງສືບຕໍ່ ໂດຍສະເພາະແມ່ນໃນຄອບຄົວທີ່ມີຜູ້ຍິງເປັນຫົວໜ້າຄອບຄົວ. ຄວາມບໍ່ເທົ່າທຽມກັນທີ່ເພີ່ມຂຶ້ນ ສາມາດບັ່ນທອນຄວາມເປັນປຶກແຜ່ນໃນທົ່ວສັງຄົມ, ຄຸກຄາມຄວາມໝັ້ນຄົງທາງສັງຄົມ ແລະ ການເມືອງ ແລະ ກົດໜ່ວງຖ່ວງດຶງໂອກາດທາງເສດຖະກິດຂອງພາກພື້ນ.

9. **ຄວາມກ້າວໜ້າດ້ານເຕັກໂນໂລຊີ.** ຄວາມກ້າວໜ້າໃນສາຂາທີ່ຫລາກຫລາຍ ລວມມີ ເຕັກໂນໂລຊີມືຖື ແລະ ດີຈີຕ້ອນ, ຫຸ່ນຍົນ, ປັນຍາປະດິດ, ກ່ຽວກັບອິນເຕີເນັດ, ພິມ 3-D ຈະໄປປ່ຽນວິທີຜະລິດ, ຈຳໜ່າຍ, ຈັດສົ່ງ ແລະ ບໍລິໂພກສິນຄ້າ ແລະ ການບໍລິການຢ່າງສິ້ນເຊີງ. ເຕັກໂນໂລຊີເຫຼົ່ານີ້ ສາມາດກໍ່ໃຫ້ເກີດອຸດສາຫະກຳໃໝ່ ແລະ ປັບປຸງຊີວິດການເປັນຢູ່ຂອງຄົນໄດ້. ໃນນັ້ນ, ພວກມັນສາມາດເຮັດໃຫ້ເກີດມີການປັບປຸງໃນການອອກແບບ ແລະ ການບໍລິຫານຈັດການດ້ານພື້ນຖານໂຄງລ່າງ, ການຮັກສາສຸຂະພາບ, ການສຶກສາ, ການສະໜອງເງິນທຶນທີ່ທົ່ວເຖິງ, ຄວາມຮັບຜິດຊອບຂອງລັດຖະບານ ແລະ ການເຂົ້າມາມີສ່ວນຮ່ວມຂອງປະຊາຊົນ ແລະ ການຈັດຕັ້ງທາງສັງຄົມຕ່າງໆ. ຢ່າງໃດກໍ່ຕາມ, ມີຄວາມເປັນຫ່ວງເຖິງຂະໜາດຂອງຜົນກະທົບ ຂອງເຕັກໂນໂລຊີຕໍ່ສັງຄົມ ລວມທັງຄວາມເປັນໄປໄດ້ຂອງການເຂົ້າມາແທນທີ່ແຮງງານຄົນ (ເບິ່ງກ່ອງຂໍ້ມູນ). ເພື່ອກະກຽມຮັບມືກັບຜົນກະທົບທາງລົບ ທີ່ອາດເປັນໄປໄດ້, ບັນດາ ລັດຖະບານປະເທດຕ່າງໆ ຕ້ອງໄດ້ດັດປັບການສຶກສາ, ການຝຶກອົບຮົມ ແລະ ລະບົບການປົກປ້ອງສັງຄົມຂອງພວກເຂົາ.

10. **ການປ່ຽນແປງດິນຟ້າອາກາດ ແລະ ຄວາມສ່ຽງຈາກໄພພິບັດ.** ການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດ ໄດ້ຄຸກຄາມຄວາມຍືນຍົງຂອງການພັດທະນາໃນໄລຍະຍາວໃນພາກພື້ນ. ໃນຫລາຍທົດສະວັດມໍ່ໆມານີ້, ພາກພື້ນອາຊີ ແລະ ປາຊີຟິກໄດ້ປະສົບພົບພໍ້ກັບເຫດການທີ່ເກີດຈາກສະພາບອາກາດທີ່ຮ້າຍແຮງຖີ່ຂຶ້ນ ແລະ ມີຜົນກະທົບຮຸນແຮງຂຶ້ນກວ່າເກົ່າເຊັ່ນ: ພາຍຸລະດູຮ້ອນ, ໄພນ້ຳຖ້ວມ, ໄພແຫ້ງແລ້ງ ແລະ ຄື້ນຄວາມຮ້ອນ. ອັນຕະລາຍທີ່ເກີດທາງທຳລະນີ ເປັນຕົ້ນແມ່ນ ແຜ່ນດິນໄຫວ ແລະ ເຫດການ ສຶນາມິ ຊຶ່ງເປັນເຫດໃຫ້ເກີດການສູນເສຍຊີວິດ ແລະ ເສດຖະກິດຢ່າງຫຼວງຫຼາຍ. ເຈັດ ໃນ 10 ປະເທດທົ່ວໂລກ ທີ່ມີຄວາມສ່ຽງໄພພິບັດສູງສຸດ ແມ່ນນອນໃນບັນດາປະເທດສະມາຊິກທີ່ກຳລັງພັດທະນາຂອງ ADB.[10] ພາກພື້ນປາຊີຟິກ ໂດຍສະເພາະແມ່ນມີຄວາມອ່ອນໄຫວ, ເນື່ອງຈາກວ່າລະດັບນ້ຳທະເລທີ່ຄາດວ່າຈະເພີ່ມສູງຂຶ້ນຈະຄຸກຄາມຄວາມສາມາດ ມີຊີວິດຢູ່ ແລະ ການຈະເລີນເຕີບໂຕໄດ້ໃນໄລຍະຍາວໃນຫຼາຍໆເກາະ.[11] **ຄວາມກົດດັນດ້ານສິ່ງແວດລ້ອມທີ່ມີເພີ່ມຂຶ້ນ.** ບັນຫາສິ່ງແວດລ້ອມຕົ້ນຕໍ ທີ່ພາກພື້ນນີ້ປະສົບຢູ່ລວມມີ ມົນລະພິດທາງອາກາດ, ມົນລະພິດທາງນ້ຳ, ການຖິ້ມຂີ້ເຫຍື້ອລົງທະເລ ລຽບແຄມທະເລ ແລະ ຕາມພື້ນທີ່ແຄມຝັ່ງທະເລ, ການຈັດການກັບຂີ້ເຫຍື້ອທີ່ບໍ່ດີພໍ, ການຕັດໄມ້ທຳລາຍປ່າ,

### ອາຊີ ແລະ ການພັດທະນາດ້ານເຕັກໂນໂລຊີ

ການພັດທະນາດ້ານເຕັກໂນໂລຊີ ໄດ້ເປີດໂອກາດຢ່າງຫຼວງຫຼາຍໃຫ້ກັບປະຊາຊົນໃນການເຊື່ອມຕໍ່, ການຄ້າ ແລະ ການເຂົ້າເຖິງການບໍລິການຊຶ່ງປະຈຸບັນທີ່ບໍ່ທັນມີ. ເຕັກໂນໂລຊີໃຫມ່ ໄດ້ຂະຫຍາຍຊ່ອງທາງໃຫ້ແກ່ການສຶກສາ (ຜ່ານຫຼັກສູດອອນລາຍ ແລະ ຫ້ອງຮຽນຈຳລອງທີ່ເໝືອນຈິງ) ແລະ ການເບິ່ງແຍງສຸຂະພາບ (ເຊັ່ນ: ລະບົບ telemedicine). ຕະຫຼາດດີຈີຕ້ອນ ແລະ ການບໍລິການຜ່ານທາງອອນລາຍໄດ້ສ້າງກົນໄກການຄ້າໃນຮູບແບບໃຫມ່ ສຳລັບທຸລະກິດຂະຫນາດນ້ອຍ ແລະ ຂະຫນາດກາງ, ໃນຂະນະທີ່ເຕັກໂນໂລຊີເຊັ່ນ: ລະບົບໂຄງຂ່າຍໃນການເກັບບັນຊີທຸລະກຳອອນລາຍ (blockchain) ສາມາດປະຕິວັດການຈ່າຍເງິນ ແລະ ການຂົນສົ່ງຄ່ຽນຖ່າຍສິນຄ້າ ແລະ ສາມາດປະກອບສ່ວນເຮັດໃຫ້ການສະໜອງທາງດ້ານການເງິນໄດ້ຢ່າງທົ່ວເຖິງ. ຄວາມກ້າວຫນ້າທາງເຕັກໂນໂລຊີໃນໄລຍະມໍ່ໆມານີ້ ໄດ້ເຮັດໃຫ້ພະລັງງານທົດແທນ ສາມາດແຂ່ງຂັນໄດ້ຫຼາຍຂຶ້ນກວ່າພະລັງງານເຊື້ອໄຟຈາກຟອດຊິນ ແລະ ສາຍສົ່ງພະລັງງານທົດແທນຂະໜາດນ້ອຍໃນທ້ອງຖິ່ນ ໄດ້ຂະຫຍາຍການເຂົ້າເຖິງໄຟຟ້າ. ການສື່ສານທີ່ທັນສະໄຫມ ສາມາດໄປເຖິງເຂດຫ່າງໄກສອກຫລີກທີ່ມີຄ່າໃຊ້ຈ່າຍຕ່ຳ.

ການປ່ຽນແປງທາງດ້ານເຕັກໂນໂລຊີ ໄດ້ຂັບເຄື່ອນການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ປັບປຸງມາດຕະຖານການດຳລົງຊີວິດ. ເຖິງຢ່າງໃດກໍ່ຕາມ, ຍັງມີຄວາມກັງວົນວ່າ ຍັງມີຫຼາຍອາຊີບ ແມ່ນຕົກຢູ່ໃນຄວາມສ່ຽງ ເນື່ອງຈາກ ຫຸ່ນຍົນ ແລະ ປັນຍາປະດິດ ມີຄວາມລ້ຳ ສະໄຫມເພີ່ມຂຶ້ນ. ໃນຂະນະທີ່ເຕັກໂນໂລຊີໃຫມ່ ຈະນຳໄປສູ່ການສ້າງວຽກໃຫມ່, ລວມທັງການສ້າງອຸດສາຫະກຳໃຫມ່, ຊຶ່ງວຽກເຫຼົ່ານີ້ອາດຈະຕ້ອງໃຊ້ທັກສະທີ່ແຮງງານຈຳນວນຫຼາຍບໍ່ທັນມີ, ເຊິ່ງກໍ່ໃຫ້ເກີດຄວາມເປັນໄປໄດ້ຂອງການວ່າງງານ ແລະ/ຫຼື ຄ່າແຮງງານມີການເຕີບໂຕໃນລະດັບຕ່ຳສຳລັບແຮງງານທີ່ບໍ່ມີທັກສະ. ສິ່ງທ້າທາຍສຳລັບພາກພື້ນ ແມ່ນການໃຊ້ປະໂຫຍດຈາກໂອກາດຕ່າງໆທີ່ເຕັກໂນໂລຊີໄດ້ນຳມາໄປພ້ອມກັບການກຽມການເພື່ອຫຼຸດຜ່ອນຄວາມສ່ຽງຕ່າງໆ.

ແຫຼ່ງຂໍ້ມູນ: ທະນາຄານພັດທະນາອາຊີ. 2018. *ທະນາຄານພັດທະນາອາຊີ, 2018.* ມະນີລາ.

---

[10] ເຫຼົ່ານີ້ແມ່ນປະເທດບັງກະລາເທດ, ກຳປູເຈຍ, ຟີລິບປິນ, ຫມູ່ເກາະໂຊໂລມອນ, ຕີມໍ, ຕົງກາ ແລະ ວັນນົວຕູ. L Kirch et al 2017. *ບົດລາຍງານຄວາມສ່ຽງໂລກ: ການວິເຄາະແລະຄາດຄະເນ 2017.* ເບີລິນ: Bndnis Entwicklung Hilft

[11] ADB. 2013. *ເສດຖະກິດຂອງການປ່ຽນແປງສະພາບດິນຟ້າອາກາດໃນປາຊີຟິກ.* ມະນີລາ.

ຮູບພາບ 3: ການປ່ອຍອາຍພິດອາຍກາກໂບນິກ ໂດຍພາກພື້ນ




ໝາຍເຫດ: ໝາຍເຖິງການປ່ອຍອາຍກາກໂບນິກຈາກການບໍລິໂພກນ້ຳມັນ ອາຍແກັສ ແລະ ຖ່ານຫີນສຳລັບກິດຈະກຳທີ່ກ່ຽວຂ້ອງກັບການເຜົາໄໝ້

ແຫຼ່ງຂໍ້ມູນ: BP. *ຂໍ້ມູນສະຖິຕິຂອງ BP ຂອງພະລັງງານຂອງໂລກ 2017*. ລອນດອນ.

ດິນເຊື່ອມສະພາບ ແລະ ການສູນເສຍຊີວະນາໆພັນ. ຄວາມກົດດັນດ້ານສິ່ງແວດລ້ອມທີ່ມີເພີ່ມຂຶ້ນ ເປັນສິ່ງທ້າທາຍຕໍ່ຄວາມຍືນຍົງ ແລະ ຊ້ຳເຕີມຄວາມອ່ອນແອຂອງບັນດາຄົນທຸກຍາກ ເຊິ່ງເປັນຜູ້ທີ່ອາໃສລະບົບນິເວດເພື່ອຄ້ຳຈຸນການດຳລົງຊີບ ແລະ ຄວາມໝັ້ນຄົງທາງດ້ານສະບຽງອາຫານໃຫ້ແກ່ພວກເຂົາ. ພາກພື້ນນີ້ຍັງປະເຊີນກັບການຂາດແຄນນ້ຳເນື່ອງຈາກວ່າການປ່ຽນແປງດິນຟ້າອາກາດ ແລະ ຄວາມຕ້ອງການນ້ຳໃຊ້ທີ່ເພີ່ມສູງຂຶ້ນ ຍ້ອນປະຊາກອນມີຈຳນວນທີ່ເພີ່ມຂຶ້ນ ແລະ ເສດຖະກິດມີການຂະຫຍາຍຕົວຢ່າງໄວວາ. ຄວາມເຂົ້າໃຈກ່ຽວກັບການເຊື່ອມໂຍງລະຫວ່າງ ຄວາມໝັ້ນຄົງລະຫວ່າງ ນ້ຳ-ອາຫານ-ພະລັງງານ ແມ່ນມີສຳຄັນຍິ່ງ. ປະມານ 70% ຂອງຊັບພະຍາກອນນ້ຳໃນພາກພື້ນອາຊີຖືກນຳໃຊ້ເພື່ອປູກພືດເປັນອາຫານ ແລະ ມີການໃຊ້ນ້ຳໃນການຜະລິດພະລັງງານໄຟຟ້າ. ການອະນຸລັກ ແລະ ການປະຢັດຊັບພະຍາກອນ ໂດຍໝູນໃຊ້ເຕັກໂນໂລຊີ ແລະ ນະໂຍບາຍຂອງລັດ ແມ່ນມີຄວາມສຳຄັນຢ່າງຍິ່ງ.

11. **ເປົ້າໝາຍຂອງການພັດທະນາທີ່ຕັ້ງໄວ້ສູງ.** ເປົ້າໝາຍການພັດທະນາແບບຍືນຍົງ (SDGs), ສັນຍາປາຣີ ວ່າດ້ວຍການປ່ຽນແປງດິນຟ້າອາກາດ, ຂອບວຽກເຊັນໄດ ເພື່ອຫລຸດຄວາມສ່ຽງຈາກໄພພິບັດ ແລະ ວາລະອາດິສອາບາບາ (ມຸ້ງເນັ້ນການໃຊ້ເງິນຕື້ເພື່ອລະດົມເອົາເງິນພັນຕື້) ປະກອບເປັນວາລະຂອງການພັດທະນາສາກົນ. ເປົ້າໝາຍການພັດທະນາແບບຍືນຍົງ ຍັງໄດ້ຮຽກຮ້ອງໃຫ້ຫຼາຍປະເທດ ຮີບຮ້ອນຢຸດຕິຄວາມທຸກຍາກ, ປົກປ້ອງໂລກ ແລະ ຮັບປະກັນໃຫ້ທຸກຄົນມ່ວນຊື່ນກັບຄວາມສະຫງົບສຸກ ແລະ ຄວາມຈະເລີນຮຸ່ງເຮືອງ.[12] ສັນຍາປາຣີ ໄດ້ວາງແຜນງານການຮັກສາພາວະໂລກຮ້ອນໃຫ້ຕ່ຳກ່ວາ 2 ອົງສາ.[13] ເມື່ອພິຈາລະນາຈາກຂະໜາດປະຊາກອນຂອງພາກພື້ນ, ການບັນລຸເປົ້າໝາຍການພັດທະນາແບບຍືນ

[12] ສະຫະປະຊາຊາດ. ເປົ້າໝາຍການພັດທະນາແບບຍືນຍົງ. http://www.un.org/sustainabledevelopment/sustainable-development-goals.
[13] ໄດ້ຮັບຮອງເອົາໃນກອງປະຊຸມສະຫະປະຊາຊາດເລື່ອງການປ່ຽນແປງສະພາບດິນຟ້າອາກາດ ວາລະທີ 21 ຂອງການປະຊຸມຫຼາຍຝ່າຍ (COP21) ໃນປາຣີ, ຝລັ່ງ, ໃນເດືອນທັນວາ 2015.

> ເມື່ອພິຈາລະນາຈາກຂະໜາດປະຊາກອນຂອງພາກພື້ນ, ການບັນລຸເປົ້າໝາຍການພັດທະນາແບບຍືນຍົງ ວ່າດ້ວຍຄວາມທຸກຍາກ, ຄວາມອຶດຫິວ ແລະ ການຂາດແຄນການເຂົ້າເຖິງການບໍລິການທາງດ້ານສັງຄົມຕ່າງໆ ຈະຂຶ້ນຢູ່ກັບຜົນສຳເລັດຂອງພາກພື້ນອາຊີ ແລະ ປາຊີຟິກຢ່າງຫຼີກລ້ຽງບໍ່ໄດ້. ພາກພື້ນນີ້ ຍັງມີໂອກາດໃນການກຳນົດຄວາມພະຍາຍາມຂອງໂລກ ເພື່ອຫຼຸດການປ່ອຍອາຍພິດເຮືອນແກ້ວ, ເພາະພາກພື້ນນີ້ເປັນແຫຼ່ງທີ່ປ່ອຍອາຍພິດເຮືອນແກ້ວ ໃນອັດຕາການທີ່ເພີ່ມຂຶ້ນໄວທີ່ສຸດ.

ຍົງ ວ່າດ້ວຍຄວາມທຸກຍາກ, ຄວາມອຶດຫິວ ແລະ ການຂາດແຄນການເຂົ້າເຖິງການບໍລິການທາງດ້ານສັງຄົມຕ່າງໆ ຈະຂຶ້ນຢູ່ກັບຜົນສຳເລັດຂອງພາກພື້ນອາຊີ ແລະ ປາຊີຟິກຢ່າງຫຼີກລ້ຽງບໍ່ໄດ້.[14] ພາກພື້ນນີ້ ຍັງມີໂອກາດໃນການປະກອບສ່ວນຕໍ່ການກຳນົດຄວາມພະຍາຍາມຂອງໂລກ ເພື່ອຫຼຸດການປ່ອຍອາຍພິດເຮືອນແກ້ວ ເພາະວ່າພາກພື້ນນີ້ເປັນແຫຼ່ງທີ່ປ່ອຍອາຍພິດເຮືອນແກ້ວທີ່ຂະຫຍາຍຕົວໄວທີ່ສູດ ຊຶ່ງກວມເອົາ 48% ຂອງການປ່ອຍອາຍກາກໂບນິກຂອງໂລກໃນຂະແໜງພະລັງງານໃນປີ 2016 (ຮູບ 3).15

12. **ການກຳເນີດຂຶ້ນຂອງຄູ່ຮ່ວມພັດທະນາໜ້າໃໝ່.** ຈຳນວນອົງກອນດ້ານການພັດທະນາລະດັບພາກພື້ນ ແລະ ລະດັບໂລກ ທີ່ພວມດຳເນີນງານຢູ່ໃນພາກພື້ນອາຊີ ແລະ ປາຊີຟິກ ໄດ້ເພີ່ມຂຶ້ນຢ່າງຫລວງຫຼາຍໃນທົດສະວັດທີ່ຜ່ານມາ. ນີ້ລວມ

ຮູບພາບ 4: ຄວາມຕ້ອງການການລົງທຶນໃນພື້ນຖານໂຄງລາງ ທີ່ຄາດຄະເນໂດຍຂະແໜງການ, 2016-2030 (ລາຄາໃນປີ 2015)




ໝາຍເຫດ: ຄວາມຕ້ອງການທີ່ຄາດຄະເນສຳລັບ 45 ປະເທດທີ່ກຳລັງພັດທະນາ.

ແຫຼ່ງຂໍ້ມູນ: ທະນາຄານພັດທະນາອາຊີ. 2017. *ການຕອບສະໜອງຄວາມຕ້ອງການພື້ນຖານໂຄງລ່າງຂອງອາຊີ*. ມະນີລາ.

[14] ທະນາຄານໂລກ. PovcalNet http://iresearch.worldbank.org/PovcalNet/home.aspx (ເຂົ້າໄດ້ 11 ຕຸລາ 2017).ຄະນະເສດຖະກິດ ແລະ ສັງຄົມສຳລັບອາຊີແລະປາຊີຟິກ, ໂຄງການສົ່ງເສີມສິ່ງແວດລ້ອມຂອງສະຫະປະຊາຊາດ ແລະ ອື່ນໆ. 2016. *ການປູ່ໂສມໜ້າ ວຽກງານພັດທະນາແບບຍືນຍົງ: ການສົ່ງເສີມຄວາມຍືນຍົງດ້ານສິ່ງແວດລ້ອມໃນອາຊີ ແລະ ປາຊີຟິກ*. http://www.unescap.org/sites/default/files/Full%20report.pdf ແລະ FAO, ກອງທຶນພັດທະນາກະສິກຳສາກົນ, UNICEF, WFP, ແລະ WHO. 2017. *ສະພາບການຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການຂອງໂລກປະຈຳປີ 2017: ການສ້າງຄວາມພ້ອມ ເພື່ອຄວາມສະຫງົບ ແລະ ຄວາມໝັ້ນຄົງດ້ານສະບຽງອາຫານ*. ໂຣມ: ອົງການອາຫານ ແລະ ການກະເສດຂອງສະຫະປະຊາຊາດ. ອີງຕາມການຄາດຄະເນຫລ້າສຸດ, ພາກພື້ນອາຊີ ແລະ ປາຊີຟິກ ເປັນແຫຼ່ງອາໃສຂອງຄົນ 43% ຂອງປະຊາກອນທີ່ທຸກຍາກທີ່ສຸດຈາກບັນດາປະເທດທີ່ກຳລັງພັດທະນາໃນທົ່ວໂລກ (ນຳໃຊ້ການຈັດລະດັບປະເທດ $1,90/ມື້ ຄວາມສະເໝີພາບຂອງກຳລັງຊື້ໃນປີ 2011; ບັນດາປະເທດທີ່ກຳລັງພັດທະນາໃນທົ່ວໂລກ ໝາຍເຖິງ ທຸກໆປະເທດລາຍຮັບຕ່ຳ ແລະ ປານກາງ ໃນຖານຂໍ້ມູນ PovcalNet ເຊິ່ງຂຶ້ນກັບການຈັດແບ່ງຂອງທະນາຄານໂລກ), 64% ຂອງປະຊາກອນທົ່ວໂລກທີ່ຂາດແຄນສະບຽງອາຫານ, 35% ຂອງປະຊາກອນທົ່ວໂລກທີ່ບໍ່ມີໄຟຟ້າ, 42% ຂອງປະຊາກອນທົ່ວໂລກບໍ່ມີນ້ຳສະອາດ ແລະ 63% ຂອງປະຊາກອນທົ່ວໂລກທີ່ບໍ່ມີສຸຂະອະນາໄມພື້ນຖານ.

ເຖິງການກຳເນີດຂຶ້ນຂອງອົງການຈັດຕັ້ງທາງສັງຄົມລວມທັງອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ແລະ ຜູ້ໃຫ້ທຶນໜ້າໃໝ່ ເຊັ່ນ: ອົງກອນບໍລິຈາກ ແລະ ການກຸສົນ; ການສ້າງຕັ້ງທະນາຄານພັດທະນາຫຼາຍຝ່າຍຂຶ້ນໃໝ່ເຊັ່ນ ທະນາຄານລົງທຶນເພື່ອພັດທະນາພື້ນຖານໂຄງລ່າງ ອາຊີ ແລະ ທະນາຄານພັດທະນາໃໝ່. ເນື່ອງຈາກການໄຫຼເຂົ້າມາຂອງເງິນທຶນຈາກພາກເອກະຊົນ ມີຄວາມສຳຄັນເພີ່ມຂຶ້ນເລື້ອຍໆ, ຕ້ອງມີການສົ່ງເສີມພາກເອກະຊົນໃຫ້ມີບົດບາດສູງຂຶ້ນກວ່າເກົ່າໃນວຽກງານການພັດທະນາ. ການປະສານງານ ແລະ ການເພີ່ມຜົນທາງການເງິນຜ່ານການຮ່ວມມືໃນທົ່ວປະເທດ, ທົ່ວອົງກອນ, ແລະ ທົ່ວຂອບເຂດວຽກການຮ່ວມມືລະຫວ່າງ ພາກລັດ ແລະ ພາກເອກະຊົນແມ່ນມີຄວາມສຳຄັນເປັນຢ່າງຍິ່ງ.

13. **ຜົນກະທົບຈາກໂລກາພິວັດ.** ພາກພື້ນໄດ້ຮັບຜົນປະໂຫຍດຈາກການເຊື່ອມໂຍງຢ່າງ ໃກ້ຊິດກັບຕະຫຼາດໂລກຜ່ານການສົ່ງເສີມການຄ້າ ແລະ ການລົງທຶນຈາກພາຍນອກ. ຕ່ອງໂສ້ມູນຄ່າການຜະລິດຂອງໂລກ ທີ່ສັບຊ້ອນໄດ້ເກີດຂຶ້ນໃໝ່, ເຊິ່ງໄດ້ສ້າງເຄືອຂ່າຍການຜະລິດຂ້າມຊາຍແດນ ຂອງປະເທດຕ່າງໆ. ຍ້ອນໄດ້ຮັບການສົ່ງເສີມຈາກການຫັນເປັນເສດຖະກິດຕະຫລາດ ແລະ ຄວາມໝັ້ນຄົງຂອງເສດຖະກິດມະຫາພາກ, ເຄືອຂ່າຍການຜະລິດທີ່ກ່າວມານີ້ ເປັນແຮງຂັບເຄື່ອນທີ່ສຳຄັນທີ່ສຸດອີກແຮງໜຶ່ງໃນພາກພື້ນ. ເຖິງຢ່າງໃດກໍ່ຕາມ, ການເຊື່ອມໂຍງກັບເຄືອຂ່າຍການຜະລິດຂອງໂລກ ເຮັດໃຫ້ເສດຖະກິດ ບໍ່ສາມາດຫຼີກລ້ຽງໄດ້ ຈາກເຫດການກະທົບຢ່າງກະທັນຫັນຈາກພາຍນອກ. ຜົນຂ້າງຄຽງຈາກເຫດການຕະຫລາດຮຸ້ນຕົກຕ່ຳ ແລະ ຜັນຜວນ ຈະແຜ່ລາມກວ້າງອອກໄປຕື່ມອີກ. ວິກິດການດ້ານການເງິນໂລກໃນປີ 2007-2009 ໄດ້ໃຫ້ເຫັນເຖິງຄວາມສ່ຽງ ຂອງກະແສເງິນທຶນຂະໜາດໃຫຍ່ໃນຍຸກຂອງຕະຫຼາດການເງິນທີ່ເຊື່ອມໂຍງກັນຢ່າງແໜ້ນໜາ. ໂລກາພິວັດ ແລະ ເຕັກໂນໂລຊີ ຍັງກ່ຽວໂຍງເຮັດໃຫ້ຄວາມບໍ່ເທົ່າທຽມກັນ ມີເພີ່ມຂຶ້ນໃນຫລາຍໆປະເທດ.

14. **ການຂາດແຄນພື້ນຖານໂຄງລ່າງ.** ພາກພື້ນຍັງຕ້ອງການເງິນທຶນຈຳນວນຫລາຍ ເພື່ອກໍ່ສ້າງພື້ນຖານໂຄງລ່າງ ໂດຍສະເພາະໃນເຂດທີ່ມີຄວາມຫຼ້າຫລັງ. ຄົນອາຊີ 400 ກວ່າລ້ານຄົນຂາດແຄນໄຟຟ້າ,[15] ປະມານ 300 ລ້ານຄົນບໍ່ມີນ້ຳດື່ມທີ່ປອດໄພ ແລະ 1,5 ຕື້ຄົນ ຂາດສຸຂະອະນາໄມຂັ້ນພື້ນຖານ.[16] ພື້ນຖານໂຄງລ່າງທີ່ມີຄຸນນະພາບຕ່ຳ ຕ້ອງໄດ້ຮັບການໃສ່ໃຈອັນຮີບດ່ວນ. ໃນຫຼາຍໆປະເທດ, ໄຟຟ້າທີ່ມາບໍ່ປົກກະຕິ ໄດ້ຖ່ວງດຶງການຂະຫຍາຍຕົວຂອງເສດຖະກິດ ແລະ ເຄືອຂ່າຍການຂົນສົ່ງທີ່ດ້ອຍພັດທະນາຊຶ່ງຈຳກັດການຈໍລະຈອນຂອງຄົນ, ສິນຄ້າ ແລະ ການບໍລິການຕ່າງໆ. ການຟື້ນຟູ ພ້ອມທັງການຄຸ້ມຄອງ ແລະ ການບຳລຸງຮັກສາຊັບສິນດ້ານພື້ນຖານໂຄງລ່າງທີ່ດີຂຶ້ນ ແມ່ນມີຄວາມຈຳເປັນຢ່າງຍິ່ງ. ອີງຕາມການຄາດຄະເນຫຼ້າສຸດຂອງ ADB, ພາກພື້ນອາຊີ ແລະ ປາຊີຟິກຈະຕ້ອງລົງທຶນມູນຄ່າ $26,2 ພັນຕື້ ແຕ່ປີ 2016-2030 ຫຼື $1,7 ພັນຕື້/ປີ ສຳລັບພື້ນຖານໂຄງລ່າງ, ເພື່ອຮັກສາບັນຍາກາດການຂະຫຍາຍຕົວຂອງເສດຖະກິດທີ່ພວມດຳເນີນຢູ່, ລຶບລ້າງຄວາມທຸກຍາກ ແລະ ຕອບໂຕ້ຕໍ່ການປ່ຽນແປງ ດິນຟ້າອາກາດ (ຮູບ 4). ພາກເອກະຊົນຈະເປັນແຫຼ່ງເງິນທຶນທີ່ສຳຄັນ.

15. **ການຂະຫຍາຍຂອງຕົວເມືອງຢ່າງວ່ອງໄວ.** ສັດສ່ວນຂອງປະຊາກອນຂອງຕົວເມືອງ ໃນພາກພື້ນ ໄດ້ເພີ່ມຂຶ້ນຈາກ 20% ໃນຊຸມປີ 1950 ມາເປັນ 48% ໃນປີ 2018. ພາຍໃນປີ 2030, ຄາດວ່າສັດສ່ວນນີ້ຈະເພີ່ມຂຶ້ນເປັນ 55% ຫຼື ປະມານ 2,5 ຕື້ ຄົນ ທີ່ອາໄສຢູ່ໃນເຂດຕົວເມືອງ.[17] ການຂະຫຍາຍຂອງຕົວເມືອງຢ່າງວ່ອງໄວ ໄດ້ນຳມາທັງໂອກາດ ແລະ ສິ່ງທ້າທາຍ. ການເຄື່ອນຍ້າຍຂອງປະຊາກອນຈາກຊົນນະບົດສູ່ຕົວເມືອງສ່ວນຫລາຍແມ່ນເພື່ອຫາໂອກາດທາງດ້ານເສດຖະກິດ, ເພື່ອໄດ້ຮັບການບໍລິການດ້ານສາທາລະນະສຸກ ແລະ ການສຶກສາທີ່ດີກວ່າ ແລະ ເພື່ອມີເງື່ອນໄຂການດຳລົງຊີວິດທີ່ດີຂຶ້ນ. ເຖິງຢ່າງໃດກໍ່ຕາມ, ບັນດາຕົວເມືອງໃນພາກພື້ນອາຊີ ແລະ ປາຊີຟິກ ໄດ້ຂະຫຍາຍຕົວໃຫຍ່ຂຶ້ນ ແລະ ການຄຸ້ມຄອງບໍລິຫານກໍ່ເລີ່ມຍາກຂຶ້ນກວ່າເກົ່າ. ການເຊື່ອມໂຊມຂອງສິ່ງແວດລ້ອມ ແລະ ການຂາດແຄນພື້ນຖານໂຄງລ່າງໃນຕົວເມືອງ ຈຳຕ້ອງໄດ້ຮັບການແກ້ໄຂ. ບັນດາປະເທດອາຊີທີ່ກຳລັງພັດທະນາມີຄົນ 431 ລ້ານ ອາໄສໃນຊຸມຊົນແອອັດໃນປີ 2014 ເຊິ່ງເທົ່າກັບ 58% ຂອງປະຊາກອນໂລກທັງໝົດທີ່ອາໄສໃນຊຸມຊົນແອອັດ.[18] ມີຫຼາຍຕົວເມືອງ, ໂດຍສະເພາະຢູ່ບ່ອນຕ່ຳລຽບແຄມທະເລ, ມີຄວາມອ່ອນໄຫວຫລາຍຂຶ້ນຕໍ່ກັບໄພທຳມະຊາດອັນຮ້າຍແຮງ.

16. **ການປ່ຽນແປງຂອງປະຊາກອນ.** ດ້ວຍອາຍຸໄຂທີ່ຍືນຂຶ້ນ ແລະ ອັດຕາການເກີດທີ່ຫລຸດລົງ, ຫລາຍປະເທດສະມາຊິກທີ່ເປັນປະເທດກຳລັງພັດທະນາ ມີຈຳນວນປະຊາກອນຜູ້ສູງອາຍຸເພີ່ມສູງຂຶ້ນ. ອົງການສະຫະປະຊາຊາດຄາດການໄວ້ວ່າ ຜູ້ສູງອາຍຸ (ຄົນທີ່ມີອາຍຸ 65 ປີຫລື ສູງກວ່າ) ໃນພາກພື້ນອາຊີ ແລະ ປາຊີຟິກ ຈະເພີ່ມຂຶ້ນຈາກ 334 ລ້ານຄົນໃນປີ 2016 ເຖິງປະມານ 870 ລ້ານຄົນໃນປີ 2050. ໃນລະຫວ່າງຊ່ວງເວລາ

---

[15] ຄະນະເສດຖະກິດ ແລະ ສັງຄົມປະຈຳພາກພື້ນອາຊີ ແລະ ປາຊີຟິກ, ແຜນງານພັດທະນາຂອງ ADB ແລະ ຂອງອົງການສະຫະປະຊາຊາດ. 2017. *ການລຶບລ້າງຄວາມທຸກຍາກ ແລະ ສົ່ງເສີມຄວາມຈະເລີນຮຸ່ງເຮືອງໃນພາກພື້ນອາຊີ - ປາຊີຟິກທີ່ກຳລັງປ່ຽນແປງ.* ບາງກອກ.

[16] UNICEF and WHO. 2015. *ຄວາມຄືບໜ້າກ່ຽວກັບສຸຂະອະນາໄມ ແລະ ນ້ຳດື່ມ: ການປັບປຸງ ແລະ ການປະເມີນ ເປົ້າໝາຍສະຫັດສະວັດການພັດທະນາ (MDG) ປີ 2015.* ເຈນີວາ.

[17] ພະແນກເສດຖະກິດ ແລະ ສັງຄົມຂອງອົງການສະຫະປະຊາຊາດ, ໜ່ວຍງານດ້ານປະຊາກອນ 2018. *ການຄາດຄະເນການຂະຫຍາຍຕົວເມືອງຂອງໂລກ: ບົດທວນຄືນ 2018.* ນິວຢອກ.

[18] ທະນາຄານໂລກ. ຕົວຊີ້ວັດການພັດທະນາໂລກ. http://databank.worldbank.org/data/reports.aspx?source=world-development-indicators (ເຂົ້າເຖິງໄດ້ 19 ກຸມພາ 2018).

ນີ້, ອັດຕາສ່ວນຂອງຜູ້ສູງອາຍຸ ເມື່ອທຽບໃສ່ປະຊາກອນທັງໝົດ ຈະເພີ່ມຂຶ້ນຈາກ 8,1% ມາເປັນ 18,1%.[19] ຍ້ອນຈຳນວນປະຊາກອນຜູ້ສູງອາຍຸຫລາຍຂຶ້ນທຽບກັບປະຊາກອນໃນໄວເຮັດວຽກ, ລັດຖະບານປະສົບກັບຄວາມຫຍຸ້ງຍາກ ທາງດ້ານງົບປະມານການເງິນເຊັ່ນ: ລາຍຮັບຈາກພາສີຫລຸດລົງ ແລະ ລາຍຈ່າຍດ້ານການຮັກສາສຸຂະພາບເພີ່ມຂຶ້ນ. ປະຊາຊົນຜູ້ສູງອາຍຸໃນປະເທດສະມາຊິກທີ່ກຳລັງພັດທະນາຂອງ ADB ມັກຈະບໍ່ມີເງິນບຳນານ ຫລື ປະກັນສຸຂະພາບ, ໂດຍສະເພາະແມ່ນແມ່ຍິງ. ໃນທາງກົງກັນຂ້າມ, ບາງປະເທດສະມາຊິກທີ່ກຳລັງພັດທະນາ ມີຈຳນວນປະຊາກອນໄວໜຸ່ມທີ່ເພີ່ມຂຶ້ນ. ມີ 2 ຕື້ຄົນທີ່ມີອາຍຸຕ່ຳກວ່າ 30 ປີ ອາໃສຢູ່ໃນພາກພື້ນອາຊີ ແລະ ປາຊີຟິກ, ເຊິ່ງຖືສັດສ່ວນ 54% ຂອງປະຊາກອນໂລກ.[20] ຂໍ້ໄດ້ປຽບດ້ານປະຊາກອນ ຫລື ທ່າແຮງດ້ານເສດຖະກິດ ຈາກປະຊາກອນໃນໄວເຮັດວຽກ ຈະມີຄວາມສຳພັນຢ່າງແໜ້ນແຟ້ນກັບການພັດທະນາເສດຖະກິດ ແລະ ສັງຄົມ, ແຕ່ວ່າ ມັນກໍ່ຍັງຂຶ້ນກັບຄວາມສາມາດ ຂອງປະເທດສະມາຊິກທີ່ກຳລັງພັດທະນາ ໃນການຈັດຫາວຽກທີ່ມີຄຸນນະພາບ ແລະ ການເພີ່ມຜະລິດຕະພາບຂອງຜູ້ອອກແຮງງານໃຫ້ໄດ້ສູງສຸດ.[21]

17. **ຂີດຄວາມສາມາດດ້ານການປົກຄອງບໍລິຫານ ແລະ ດ້ານອົງກອນ.** ການຈັດການກັບສິ່ງທ້າທາຍ ແລະ ໂອກາດທີ່ມາພ້ອມກັບບໍລິບົດທີ່ປ່ຽນໄປຂອງພາກພື້ນ ແມ່ນຕ້ອງມີການປົກຄອງບໍລິຫານທີ່ມີປະສິດທິພາບ. ແຕ່ວ່າ ຫລາຍປະເທດໃນພາກພື້ນຍັງປະເຊີນກັບບັນຫາການປົກຄອງບໍລິຫານ, ລວມທັງການບໍລິການສາທາລະນະທີ່ດ້ອຍຄຸນນະພາບ, ອົງກອນລັດຖະບານທີ່ອ່ອນແອ ແລະ ການສໍ້ລາດບັງຫຼວງ. ການປະຕິຮູບດ້ານການປົກຄອງບໍລິຫານ ເພື່ອຕໍ່ຕ້ານການສໍ້ລາດບັງຫຼວງ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ການບໍລິການຂອງພາກລັດ, ຄຸນນະພາບຂອງລະບຽບການຕ່າງໆ ແລະ ການປົກຄອງດ້ວຍຫຼັກນິຕິທຳແມ່ນມີຄວາມຈຳເປັນ ເພື່ອທີ່ຈະຮັກສາບັນຍາກາດຂອງການພັດທະນາ ແລະ ເພື່ອຮັບປະກັນໃຫ້ຜົນປະໂຫຍດທີ່ໄດ້ຮັບຈາກການຂະຫຍາຍຕົວທາງເສດຖະກິດໄດ້ກະຈາຍຢ່າງເທົ່າທຽມ ແລະ ທົ່ວເຖິງ.

---

[19] ພະແນກເສດຖະກິດ ແລະ ສັງຄົມຂອງອົງການສະຫະປະຊາຊາດ, ໜ່ວຍງານດ້ານປະຊາກອນ 2017. *ການຄາດຄະເນກ່ຽວກັບປະຊາກອນໂລກ: ບົດທວນຄືນ 2017.* ນິວຢອກ.

[20] ພະແນກເສດຖະກິດ ແລະ ສັງຄົມຂອງອົງການສະຫະປະຊາຊາດ, ໜ່ວຍງານດ້ານປະຊາກອນ 2017. *ການຄາດຄະເນກ່ຽວກັບປະຊາກອນໂລກ: ບົດທວນຄືນ 2017.* ນິວຢອກ.

[21] D. Park, SH. Lee, ແລະ A Mason, eds. 2011. *ຜູ້ສູງອາຍຸ, ການຂະຫຍາຍຂອງເສດຖະກິດ ແລະ ຄວາມໝັ້ນຄົງດ້ານລາຍຮັບຂອງຜູ້ສູງອາຍຸໃນອາຊີ.* ມະນີລາ: ADB / ເຊວເຕັນແຮມ, ອັງກິດ; ແລະ ນໍແທັມຕັນ, ມາຊາຈູເຊັດ, ສະຫະລັດອາເມລິກາ: ເອັດເວີດ ເອວກາ ການພິມ.

# III. ວິໄສທັດ ແລະການເພີ່ມຄຸນຄ່າຂອງ ADB

18. **ວິໄສທັດຂອງ ADB ສຳລັບພາກພື້ນອາຊີ ແລະ ປາຊີຟິກ.** ຍ້ອນພາກພື້ນໄດ້ປ່ຽນໂສມໜ້າ ແລະ ຄວາມຕ້ອງການ ແລະ ສິ່ງທ້າທາຍຂອງປະເທດສະມາຊິກທີ່ກຳລັງພັດທະນາມີການປ່ຽນແປງ, ADB ກໍ່ຕ້ອງປ່ຽນເຊັ່ນກັນ. ພາຍໃຕ້ຍຸດທະສາດ 2030, ADB ຈະສານຕໍ່ຄວາມພະຍາຍາມລຶບລ້າງຄວາມທຸກຍາກ, ໂດຍອີງໃສ່ວາລະດ້ານຄວາມທຸກຍາກທີ່ຍັງບໍ່ສຳເລັດ ແລະ ການຂະຫຍາຍວິໄສທັດ ຂອງຕົນເພື່ອເຮັດໃຫ້ພາກພື້ນອາຊີ ແລະ ປາຊີຟິກຈະເລີນຮຸ່ງເຮືອງ, ທົ່ວເຖິງ, ພ້ອມຮັບການປ່ຽນແປງ ແລະ ຍືນຍົງ. ADB ຈະຊ່ວຍພາກພື້ນໃຫ້ຈະເລີນຮຸ່ງເຮືອງ ໂດຍການຮັກສາການຂະຫຍາຍຕົວທາງດ້ານເສດຖະກິດທີ່ມີຄຸນນະພາບ ແລະ ການສ້າງໂອກາດໃນການມີວຽກເຮັດງານທຳ. ADB ຈະສົ່ງເສີມການກະຈາຍຜົນປະໂຫຍດໃຫ້ທົ່ວເຖິງ ເພື່ອຮັບປະກັນໃຫ້ປະໂຫຍດດ້ານເສດຖະກິດໄປຮອດມືທຸກຄົນ. ADB ຈະສົ່ງເສີມຄວາມພ້ອມຮັບການປ່ຽນແປງ ແລະ ຄວາມຍືນຍົງຂອງປະເທດຕ່າງໆ ໂດຍສະເພາະໃນກຸ່ມປະຊາກອນທີ່ອ່ອນແອ ແລະ ສົ່ງເສີມການຮ່ວມມື ແລະ ເຊື່ອມໂຍງພາກພື້ນ (ຮູບທີ 5). ADB ຈະສືບຕໍ່ໃຫ້ບຸລິມະສິດຊ່ວຍເຫຼືອປະເທດທີ່ທຸກຍາກທີ່ສຸດ ແລະ ອ່ອນແອທີ່ສຸດ.

> ADB ຈະຮັກສາຄວາມພະຍາຍາມຂອງຕົນໃນການລຶບລ້າງຄວາມທຸກຍາກ, ໂດຍມີວາລະດ້ານຄວາມທຸກຍາກທີ່ຍັງເຮັດບໍ່ສຳເລັດຂອງພາກພື້ນ, ແລະ ການຂະຫຍາຍວິໄສທັດຂອງຕົນເພື່ອບັນລຸໃຫ້ພາກພື້ນອາຊີ ແລະ ປາຊີຟິກຈະເລີນຮຸ່ງເຮືອງ, ທົ່ວເຖິງ, ພ້ອມຮັບການປ່ຽນແປງ ແລະ ຍືນຍົງ. ADB ຈະສືບຕໍ່ໃຫ້ບຸລິມະສິດຊ່ວຍເຫຼືອປະເທດທີ່ທຸກຍາກທີ່ສຸດ ແລະ ອ່ອນແອທີ່ສຸດ.

19. **ການບັນລຸຄຳໜັ້ນສັນຍາຂອງໂລກ.** ຄວາມມຸ່ງມາດປາດຖະໜາຂອງ ADB ສຳລັບພາກພື້ນອາຊີ ແລະ ປາຊີຟິກ ແມ່ນສອດຄ່ອງກັບບັນດາຄຳໝັ້ນສັນຍາ ທີ່ສຳຄັນຂອງໂລກ ຊຶ່ງທັງປະເທດສະມາຊິກທີ່ກຳລັງພັດທະນາ ແລະ ADB ໄດ້ໃຫ້ສັນຍາໄວ້ວ່າ ຈະໃຫ້ການສະໜັບສະໜູນເຊັ່ນ: ເປົ້າໝາຍການພັດທະນາແບບຍືນຍົງ ແລະ ການສະໜອງທຶນທີ່ກ່ຽວຂ້ອງກັບວາລະການພັດທະນາ, ສັນຍາປາຣີວ່າດ້ວຍການປ່ຽນແປງດິນຟ້າອາກາດ ແລະ ຂອບວຽກເຊັນໄດສຳລັບການຫລຸດຜ່ອນຄວາມສ່ຽງຈາກໄພພິບັດ. ການດຳເນີນງານໃນອະນາຄົດຂອງ ADB ຈະຖືກອອກແບບມາເພື່ອຊ່ວຍໃຫ້ບັນລຸບັນດາເປົ້າໝາຍ ແລະ ວັດຖຸປະສົງເຫຼົ່ານັ້ນ.[22] ADB ຈະທຳໜ້າທີ່ອັນສຳຄັນໃນການສະໜັບສະໜູນວາລະຂອງ G20 ໃນດ້ານການພັດທະນາພື້ນຖານໂຄງລ່າງ ເພື່ອເປັນກຳລັງແຮງພັກດັນໃຫ້ເສດຖະກິດໂລກຂະຫຍາຍໂຕ.

20. **ການສົ່ງເສີມການພັດທະນາແບບຍືນຍົງຜ່ານການຍື່ນມືເຂົ້າມີສ່ວນຮ່ວມໃນຂະແໜງສັງຄົມ ແລະ ພື້ນຖານໂຄງລ່າງ.** ໃນຂະນະທີ່ ADB ຍື່ນມືເຂົ້າມີສ່ວນຮ່ວມໃນຂະແໜງສັງຄົມເປັນຕົ້ນແມ່ນ ຂະແໜງການສຶກສາ, ຂະແໜງສາທາ ແລະ ການປົກປ້ອງສັງຄົມ, ວຽກງານພື້ນຖານໂຄງລ່າງ ກໍ່ຈະຍັງເປັນບຸລິມະສິດອັນຕົ້ນຕໍ ໃຫ້ແກ່ການປະຕິບັດງານຂອງ ADB. ພື້ນຖານໂຄງລ່າງມີບົດບາດສຳຄັນໃນການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ການພັດທະນາສັງຄົມ. ການລົງທຶນໃນພື້ນຖານໂຄງລ່າງແບບຍືນຍົງ ຈະເປັນໃຈກາງອັນສຳຄັນເພື່ອການບັນລຸບັນດາຄຳໝັ້ນສັນຍາໂລກ ໃນການແກ້ໄຂບັນ

[22] ວິໄສທັດຂອງ ADB ວ່າດ້ວຍ ອາຊີ ແລະ ປາຊີຟິກມີຄວາມຈະເລີນຮຸ່ງເຮືອງ, ທົ່ວເຖິງ, ພ້ອມຮັບການປ່ຽນແປງ ແລະ ຍືນຍົງ ແມ່ນສອດຄ່ອງກັບເປົ້າໝາຍການພັດທະນາແບບຍືນຍົງ ແລະ ວາລະຍຸດທະສາດ 2030 ສຳລັບການພັດທະນາ. ເປົ້າຫມາຍຕົ້ນຕໍສຳລັບການດຳເນີນງານຂອງ ADB ລວມມີ ເຮັດໃຫ້ຄວາມທຸກຍາກໝົດໄປ (SDG 1); ຄວາມສະເໝີພາບ ລະຫວ່າງຍິງ-ຊາຍ (SDG 5); ພະລັງງານທີ່ມີລາຄາຖືກ ແລະ ສະອາດ (SDG 7); ການມີວຽກເຮັດທີ່ດີ ແລະ ເສດຖະກິດຂະຫຍາຍຕົວ (SDG 8); ອຸດສາຫະກຳ, ນະວັດຕະກຳ ແລະ ພື້ນຖານໂຄງລ່າງ (SDG 9); ຄວາມບໍ່ເທົ່າທຽມຫຼຸດລົງ (SDG 10); ແລະ ປະຕິບັດການເລື່ອງດິນຟ້າອາກາດ (SDG 13). ການດຳເນີນງານຂອງ ADB ຈະປະກອບສ່ວນເຂົ້າໃນການຂະຈັດຄວາມອຶດຫິວໃຫ້ໝົດໄປ(SDG 2), ມີສຸຂະພາບ ແລະ ການເປັນຢູ່ທີ່ດີ (SDG 3), ການສຶກສາທີ່ມີຄຸນນະພາບ (SDG 4), ນ້ຳສະອາດ ແລະ ສຸຂະພິບານ (SDG 6), ຕົວເມືອງ ແລະ ຊຸມຊົນທີ່ຍືນຍົງ (SDG 11) ການບໍລິໂພກແບບຍືນຍົງ (SDG 12), ແລະ ຄວາມສະຫງົບ ແລະ ຍຸຕິທຳ, ອົງກອນມີຄວາມເຂັ້ມແຂງ (SDG 16). ການສົ່ງເສີມຂອງ ADB ສຳລັບການອະນຸລັກ ແລະ ການຟື້ນຟູຕົ້ນທຶນຊັບພະຍາກອນທຳມະຊາດ (ວັກ. ຈະປະກອບສ່ວນໃຫ້ຊີວິດແກ່ສິ່ງມີຊີວິດໃຕ້ນ້ຳ (SDG 14) ແລະ ຊີວິດສັດເທິງບົກ (SDG 15). ການດຳເນີນງານຂອງ ADB ຍັງຈະມີບົດບາດສຳຄັນໃນການຊຸກຍູ້ການຮ່ວມມືເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງ (SDG 17).

ຫາການປ່ຽນແປງດິນຟ້າອາກາດ ແລະ ເພີ່ມທະວີການຄຸ້ມຄອງຄວາມສ່ຽງຈາກໄພພິບັດ.[23] ພື້ນຖານໂຄງລ່າງຍັງຊ່ວຍເຮັດໃຫ້ບັນລຸເປົ້າໝາຍຄວາມຕ້ອງການທີ່ມີເພີ່ມຂຶ້ນ ຕໍ່ກັບການສຶກສາ, ສາທາ ແລະ ການບໍລິການທາງດ້ານສັງຄົມອື່ນໆ ທີ່ມີຄຸນນະພາບສູງ; ການແກ້ໄຂສິ່ງທ້າທາຍທີ່ເກີດຂຶ້ນມາໃໝ່ເຊັ່ນ: ບັນຫາປະຊາກອນອາຍຸຍືນ; ແລະ ສ້າງທັກສະຄວາມຊຳນານເພື່ອປັບຕົວເຂົ້າກັບເຕັກໂນໂລຊີໃໝ່. ADB ຈະສົ່ງເສີມການລົງທຶນສ້າງພື້ນຖານໂຄງລ່າງທີ່ມີຄຸນນະພາບ ໃຫ້ໄປຕາມທິດສີຂຽວ, ຍືນຍົງ, ພ້ອມຮັບການປ່ຽນແປງ ແລະ ທົ່ວເຖິງ. ADB ຈະສົ່ງເສີມການລົງທຶນສ້າງພື້ນຖານໂຄງລ່າງທີ່ມີຄຸນນະພາບເປັນມິດກັບສິ່ງແວດລ້ອມ, ຍືນຍົງ, ພ້ອມຮັບການປ່ຽນແປງ ແລະ ທົ່ວເຖິງ. ຜ່ານການດຳເນີນງານຂະແໜງພື້ນຖານໂຄງລ່າງ, ADB ຈະຫາຫົນທາງໃຫ້ກຸ່ມຄົນທຸກຍາກ, ຜູ້ຍິງ ແລະ ກຸ່ມທີ່ມີຄວາມສ່ຽງ (ລວມທັງຜູ້ສູງອາຍຸ ແລະ ຄົນພິການ) ໄດ້ເຂົ້າເຖິງຂັ້ນພື້ນຖານທາງດ້ານ ພະລັງງານ, ການຂົນສົ່ງ, ນ້ຳສະອາດ ແລະ ການບໍລິການສຸຂະພິບານຕ່າງໆ. ADB ຈະສົ່ງເສີມການເຊື່ອມຈອດລະຫວ່າງບັນດາປະເທດຕ່າງໆ ເພື່ອກະຕຸ້ນການຂະຫຍາຍຕົວຂອງເສດຖະກິດ ແລະ ຫຼຸດຜ່ອນຄວາມທຸກຍາກຕໍ່ໄປ.

21. **ການເພີ່ມຄຸນຄ່າຂອງ ADB.** ADB ຈະຍັງຄົງເປັນຄູ່ຮ່ວມພັດທະນາທີ່ໜ້າເຊື່ອຖື, ຊຶ່ງໃຫ້ຜົນການດຳເນີນງານທີ່ມີຄຸນນະພາບສູງສຸດ. ADB ໃຫ້ທັດສະນະກ່ຽວກັບພາກພື້ນທີ່ມີເອກະລັກ ປະກອບກັບການມີສຳນັກງານປະຈຳປະເທດທີ່ມີຄວາມເຂັ້ມແຂງ ແລະ ສາຍພົວພັນການຮ່ວມມືກັບຄູ່ຮ່ວມມືທີ່ມີມາຍາວນານ. ການຊ່ວຍເຫຼືອຂອງ ADB ຈະສົມທົບດ້ານການເງິນ, ຄວາມຮູ້ ແລະ ການຮ່ວມມືເຂົ້າດ້ວຍກັນ ເພື່ອເຮັດໃຫ້ການພັດທະນາເກີດໝາກຜົນສູງສຸດແກ່ລູກຄ້າຂອງຕົນ. ໃນຖານະທີ່ເປັນຜູ້ໃຫ້ທຶນ ແລະ ຜູ້ກະຕຸກຊຸກຍູ້ທາງການເງິນທີ່ໜ້າເຊື່ອຖື, ADB ຈະສະໜອງເງິນທຶນຂອງຕົນ ພ້ອມນັ້ນກໍ່ຈະລະດົມເງິນທຶນ ແລະ ກະຕຸກຊຸກຍູ້ທຶນຈາກແຫຼ່ງອື່ນ.ໃນຖານະເປັນຜູ້ສະໜອງຄວາມຮູ້, ADB ຈະເນັ້ນໃນການສ້າງຄຸນຄ່າທີ່ໃຫ້ຜົນເໝາະສົມກັບເງື່ອນໄຂຂອງທ້ອງຖິ່ນ,ກຳໄດ້ບົດຮຽນ ແລະ ໝູນໃຊ້ບັນດາວິທີປະຕິບັດ ທີ່ໄດ້ຮັບຜົນດີ (ລວມມີການຖ່າຍທອດເຕັກໂນໂລຊີ, ການປົກປ້ອງສິ່ງແວດລ້ອມ ແລະ ສັງຄົມ ແລະ ມາດຕະຖານທີ່ໄດ້ຮັບຄວາມໄວ້ວາງໃຈ) ໃນທົ່ວພາກພື້ນ ແລະ ນອກພາກພື້ນ. ໃນຖານະເປັນຜູ້ປະສານງານດ້ານການຮ່ວມມື, ADB ຈະສົ່ງເສີມການປຶກສາຫາລື ແລະ ການປະສານສົມທົບໃນລະຫວ່າງບັນດາຄູ່ຮ່ວມມື ແລະ ພາກສ່ວນທີ່ມີສ່ວນກ່ຽວຂ້ອງທີ່ມີຫລາກຫລາຍ ເຊິ່ງລວມມີ ສະຖາບັນການເງິນສາກົນ, ຄູ່ຮ່ວມພັດທະນາແບບທະວິພາຄີ, ອົງການຊ່ວຍເຫຼືອຫລ້າ ແລະ ການກຸສົນ, ອົງການຈັດຕັ້ງທາງສັງຄົມລວມທັງອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ແລະ ພາກເອກະຊົນ. ເພື່ອໃຫ້ສອດຄ່ອງໄປຕາມຄວາມພະຍາຍາມຂອງກຸ່ມ G20 ທີ່ຈະເພີ່ມທະວີຄວາມເຂັ້ມແຂງໃຫ້ແກ່ການປົກຄອງບໍລິຫານການເງິນໂລກ, ການປະສານສົມທົບກັບກອງທຶນການເງິນສາກົນ ແລະ ທະນາຄານພັດທະນາແຫ່ງອື່ນໆຈະພະຍາຍາມຫາທາງເພີ່ມຜົນກະທົບຂອງລະບົບສະຖາບັນການເງິນສາກົນໂດຍລວມໃຫ້ ໄດ້ສູງສຸດ. ADB ຍັງຈະເພີ່ມໜ້າທີ່ຂອງຕົນໃນຖານະເປັນນັກພັດທະນາໂຄງການ.

[23] ພື້ນຖານໂຄງລ່າງທີ່ຍືນຍົງແມ່ນພື້ນຖານໂຄງລ່າງທີ່ໄດ້ຮັບການອອກແບບ, ກໍ່ສ້າງ ແລະ ໃຊ້ງານໃຫ້ມີຄວາມທົນທານ, ມີຄວາມສະເໝີພາບທາງດ້ານສັງຄົມ ແລະ ຄຸ້ມທຶນທາງດ້ານເສດຖະກິດ ແລະ ສິ່ງແວດລ້ອມ. ADB. 2018. *ບົດລາຍງານປະຈຳປີ 2017.* ມະນີລາ.

ຮູບພາບ 5: ວິໄສທັດ, ຄຸນຄ່າເພີ່ມ ແລະ ຫຼັກການຊີ້ນຳຂອງ ADB




ADB = ທະນາຄານພັດທະນາອາຊີ.
ແຫຼ່ງຂໍ້ມູນ: ທະນາຄານພັດທະນາອາຊີ.

# IV. ຫຼັກການຊີ້ນຳສຳລັບການດຳເນີນງານຂອງ ADB

22. **ການໃຊ້ວິທີການໂດຍເອົາປະເທດເປັນຈຸດສຸມ.** ວາລະຂອງການພັດທະນາໂລກທີ່ຕັ້ງເປົ້າໄວ້ສູງ ຕ້ອງໄດ້ຮັບການດັດປັບໃຫ້ເຂົ້າກັບ ສະຖານະການສະເພາະຂອງທ້ອງຖິ່ນ. ປະເທດສະມາຊິກທີ່ກຳລັງພັດທະນາ ມີຄວາມຕ້ອງການທີ່ແຕກຕ່າງກັນຫຼາຍ, ຄວາມເຂັ້ມແຂງຂອງອົງກອນ ແລະ ການມີຊັບພະຍາກອນທີ່ຕ່າງກັນ, ນັບທັງບັນດາປະເທດທີ່ມີລາຍຮັບຕໍ່ຫົວຄົນທີ່ໃກ້ຄຽງກັນ ກໍ່ຍັງແຕກຕ່າງກັນ. ADB ຈະປັບປຸງວິທີການຂອງຕົນ ເພື່ອຕອບສະໜອງຄວາມຕ້ອງການທີ່ຫລາກຫຼາຍຂອງປະເທດສະມາຊິກ. ພາຍໃຕ້ຍຸດທະສາດ 2030, ADB ຈະຍົກສູງການປຶກສາຫາລືດ້ານນະໂຍບາຍ ແລະ ການວິເຄາະ ລວມທັງ ສູ້ຊົນໃຫ້ບັນລຸເປົ້າໝາຍຂອງປະເທດ ຕໍ່ກັບເປົ້າໝາຍການພັດທະນາແບບຍືນຍົງ ແລະ ສັນຍາປາຣີ. ຍຸດທະສາດເພື່ອການຮ່ວມມືກັບປະເທດ ຈະສືບຕໍ່ເປັນແປ້ນຢັ້ນຫລັກໃຫ້ວຽກງານຈຸດສຸມຂອງ ADB ໃນປະເທດໃດໜຶ່ງ, ເຊິ່ງຖືເອົາປະເທດສະມາຊິກທີ່ກຳລັງພັດທະນາໃຫ້ເປັນແຮງຂັບເຄື່ອນ ແກ່ຕົນເອງ ແລະ ມີ ADB ເປັນຄູ່ຮ່ວມມືຢູ່ຄຽງຂ້າງ ຄອຍແນະນຳທາງອອກຕໍ່ກັບຄວາມຕ້ອງການ ແລະ ສິ່ງທ້າທາຍຂອງການພັດທະນາ. ADB ທຳການເລືອກເຟັ້ນໃນລະດັບປະເທດ ເພື່ອຮັບປະກັນໃຫ້ຊັບພະຍາກອນຂອງຕົນກະຈາຍຢ່າງພຽງພໍ ໄປພ້ອມກັບການດຳລົງໄວ້ຊຶ່ງຂອບເຂດຂອງຄວາມຍືດຫຍຸ່ນ. ການຍື່ນມືເຂົ້າໄປມີສ່ວນປະກອບຂອງ ADB ໃນດ້ານ ຫຼື ຂະແໜງການສະເພາະໃນປະເທດໃດໜຶ່ງ ຈະຕ້ອງອີງໃສ່ ຂໍ້ໄດ້ປຽບ ທຽບກັບຄູ່ຮ່ວມພັດທະນາອື່ນໆ, ຄວາມຕ້ອງການສະເພາະຂອງປະເທດ ແລະ ທ່າແຮງເພື່ອເພີ່ມຄຸນຄ່າ ໂດຍຄຳນຶງເຖິງຄວາມອາດສາມາດ ແລະ ຊັບພະຍາກອນຂອງ ADB ເອງ. ໂດຍອີງໃສ່ປະຫວັດການຮ່ວມມືອັນສະໜິດແໜ້ນ, ADB ຈະສືບຕໍ່ເພີ່ມທະວີການຮ່ວມມື ແລະ ຮ່ວມທຶນກັບບັນດາສະຖາບັນການເງິນສາກົນ, ຄູ່ຮ່ວມມືທະວິພາຄີ, ອົງການຈັດຕັ້ງທາງສັງຄົມລວມທັງອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ແລະ ພາກເອກະຊົນໃນລະດັບປະເທດ.

ປະເທດສະມາຊິກທີ່ກຳລັງພັດທະນາມີຄວາມຕ້ອງການທີ່ແຕກຕ່າງກັນຫຼາຍ, ຄວາມເຂັ້ມແຂງຂອງອົງກອນ ແລະ ການມີຊັບພະຍາກອນທີ່ຕ່າງກັນ, ນັບທັງ ບັນດາປະເທດທີ່ມີລາຍຮັບຕໍ່ຫົວຄົນທີ່ໃກ້ຄຽງກັນ ກໍ່ຍັງແຕກຕ່າງກັນ. ADB ຈະປັບປຸງວິທີການຂອງຕົນ ເພື່ອຕອບສະໜອງຄວາມຕ້ອງການທີ່ຫຼາກຫຼາຍຂອງປະເທດສະມາຊິກ.

23. **ການສົ່ງເສີມເຕັກໂນໂລຊີນະວັດຕະກຳ.** ADB ຈະຊອກຫາຫຼາຍວິທີທາງຢ່າງຕັ້ງໜ້າ ເພື່ອສົ່ງເສີມການນຳໃຊ້ເຕັກໂນໂລຊີທີ່ກ້າວໜ້າ ໃນທົ່ວທຸກການດຳເນີນງານຂອງຕົນ ແລະ ສະໜັບສະໜູນການສ້າງຂີດຄວາມສາມາດໃຫ້ແກ່ປະເທດສະມາຊິກທີ່ກຳລັງພັດທະນາ. ADB ຈະສະໜັບສະໜູນຫຼາຍປະເທດໃນການສ້າງນະໂຍບາຍ ແລະ ການປັບປຸງແວດລ້ອມດ້ານລະບຽບການເພື່ອຮອງຮັບເສດຖະກິດດີຈີຕ້ອນ, ການເຊື່ອມຕໍ່ອິນເຕີເນັດ ແລະ ລົງທຶນທັງໃນດ້ານຮາດແວ ແລະ ຊອບແວ. ໃນການດຳເນີນງານດ້ານພື້ນຖານໂຄງລ່າງ, ADB ຈະສົ່ງເສີມການນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ ເພື່ອຫຼຸດຄ່າໃຊ້ຈ່າຍໃນວົງຈອນການໃຊ້ງານ ແລະ ເພີ່ມຄວາມທົນທານ, ປັບປຸງປະສິດທິຜົນ ແລະ ຄຸນນະພາບຂອງການບໍລິການ ແລະ ພ້ອມທັງ ຫຼຸດຜ່ອນຜົນກະທົບທາງລົບຕໍ່ສິ່ງແວດລ້ອມ ແລະ ສັງຄົມໃຫ້ມີໜ້ອຍລົງທີ່ສຸດ. ADB ຈະຖືເອົາການນຳໃຊ້ເຕັກໂນໂລຊີທີ່ກ້າວໜ້າ ໃຫ້ເປັນໂຕບຸກເບີກ ດ້ວຍການທົດລອງນຳໃຊ້, ການເພີ່ມຄວາມເຂັ້ມແຂງໃຫ້ການອອກແບບໂຄງການ, ການເນັ້ນໃສ່ຄຸນນະພາບໃນການຈັດຊື້-ຈັດຈ້າງ ແລະ ການລະດົມເອົາຜູ້ຊ່ຽວຊານສະເພາະດ້ານເຂົ້າມາ. **ການສະໜອງທົນທາງແກ້ໄຂບັນຫາແບບປະສົມປະສານ.** ADB ຈະໃຫ້ແນວທາງແກ້ໄຂບັນຫາແບບປະສົມປະສານ ດ້ວຍການລວມເອົາຄວາມຮູ້ຄວາມຊຳນານໃນທົ່ວທຸກຂະແໜງການ ແລະ ດ້ານຕ່າງໆເຂົ້າດ້ວຍກັນ. ວິທີແກ້ໄຂບັນຫາເຫຼົ່ານີ້ ຈະໄດ້ຮັບການນຳໃຊ້ຜ່ານການລວມເຂົ້າກັນຢ່າງເໝາະສົມຂອງການປະຕິບັດງານການຮ່ວມມື ລະຫວ່າງ ພາກລັດ ແລະພາກເອກກະຊົນ ທີ່ເຫັນວ່າເໝາະສົມທີ່ສຸດກັບຄວາມຕ້ອງການສະເພາະໃນສະຖານະການຕົວຈິງ. ADB ຈະເສີມຂະຫຍາຍແນວທາງ ໜຶ່ງ ADB (One ADB) ເຊິ່ງພະນັກງານທີ່ຮັບຜິດຊອບວຽກໃນຂະແໜງການຮ່ວມມື ລະຫວ່າງພາກລັດ ແລະ ພາກເອກະຊົນ ຈະທຳການປະເມີນ ສັກກະຍາພາບ ສຳລັບທາງອອກຂອງພາກເອກະຊົນຢ່າງເປັນລະບົບ ທັງໃນແງ່ການສະໜອງບໍລິ

ການ ແລະ ການສະໜອງທຶນ ແລະ ຈະນຳໃຊ້ທາງອອກດັ່ງກ່າວກັບທຸກບ່ອນທີ່ສາມາດເປັນໄປໄດ້. ຍຸດທະສາດເພື່ອການຮ່ວມມືກັບປະເທດ ຈະເປັນແປ້ນຍັນຫລັກ ໃນການສົ່ງເສີມຂອງການ ນຳໃຊ້ວິທີແກ້ໄຂບັນຫາແບບປະສົມປະສານເຫຼົ່ານີ້ຜ່ານການລົງໄປເຮັດວຽກຢ່າງເລິກເຊິ່ງກັບປະເທດ ແລະ ຜ່ານສຳນັກງານປະຈຳປະເທດທີ່ມີຄວາມເຂັ້ມແຂງ.

# V. ການໃຊ້ວິທີການທີ່ແຕກຕ່າງຕໍ່ກຸ່ມປະເທດ

24. **ປະເທດທີ່ມີສະຖານະການອ່ອນໄຫວ ແລະ ໄດ້ຮັບຜົນກະທົບຈາກຄວາມຂັດແຍ່ງ.** ປະເທດທີ່ມີສະຖານະການອ່ອນໄຫວ ແລະ ໄດ້ຮັບຜົນກະທົບຈາກຄວາມຂັດແຍ່ງ ປະສົບກັບສະຖານະການອ່ອນໄຫວທີ່ສຸດ ແລະ ພິຈາລະນາວ່າມີຄວາມຈຳເປັນຕ້ອງສ້າງຄວາມເຂັ້ມແຂງທາງດ້ານສະຖາບັນ.[24] ໃນບັນດາປະເທດທີ່ກຳນົດໃຫ້ເປັນປະເທດທີ່ມີສະຖານະການອ່ອນໄຫວ ແລະ ໄດ້ຮັບຜົນກະທົບຈາກຄວາມຂັດແຍ່ງ, ການຊ່ວຍເຫຼືອຂອງ ADB ຈະສຸມໃສ່ການປັບປຸງສະຖາບັນ ແລະ ການປະຕິຮູບການປົກຄອງບໍລິຫານ, ພື້ນຖານໂຄງລ່າງທີ່ຈຳເປັນ ແລະ ການບໍລິການດ້ານສັງຄົມຕ່າງໆ ແລະ ການຊ່ວຍເຫຼືອທາງດ້ານສັງຄົມທີ່ໄດ້ຕັ້ງເປົ້າໄວ້. ADB ຈະສະໜັບສະໜູນຄວາມພະຍາຍາມ ເພື່ອສ້າງຄວາມພ້ອມໃນການຮັບມືກັບສາເຫດຕົ້ນຕໍຂອງຄວາມຂັດແຍ່ງ ແລະ ການສົ່ງເສີມຄວາມປອງດອງກັນ ແລະ ການບູລະນະຟື້ນຟູ. ADB ຈະເພີ່ມທະວີທັກສະຄວາມສາມາດຕ່າງໆ ຂອງພະນັກງານ, ດັດປັບຂັ້ນຕອນການຈັດຕັ້ງປະຕິບັດຂອງຕົນໃຫ້ແທດເໝາະກັບຄວາມເປັນຈິງໃນພື້ນທີ່ ແລະ ເພີ່ມທະວີການປະສານສົມທົບກັບຄູ່ຮ່ວມພັດທະນາອື່ນໆ ແລະ ອົງການຈັດຕັ້ງທາງສັງຄົມ ລວມທັງອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ເພື່ອເຮັດໃຫ້ຍຸດທະສາດເພື່ອການຮ່ວມມືກັບປະເທດ ແລະ ການດຳເນີນງານຂອງ ADB ທີ່ກ່ຽວກັບຄວາມອ່ອນໄຫວ ແລະ ຄວາມຂັດແຍ່ງໃຫ້ໄດ້ຮັບໝາກຜົນ. ADB ຈະເພີ່ມພູນຊັບພະຍາກອນ ເພື່ອຮອງຮັບກັບຄ່າໃຊ້ຈ່າຍທີ່ເພີ່ມຂຶ້ນຈາກຂະບວນການດຳເນີນງານ ແລະ ການຄວບຄຸມງານ ດ້ວຍເຫດຜົນດ້ານຄວາມໝັ້ນຄົງປອດໄພ ແລະ ຄວາມຈຳເປັນອື່ນໆ ແລະ ເພື່ອຮັບປະກັນໃຫ້ປະເທດເຫຼົ່ານັ້ນ ສາມາດຂ້າມຜ່ານຄວາມຂັດແຍ່ງ ແລະ ຄວາມອ່ອນໄຫວໄດ້ ໂດຍບໍ່ຫວນກັບຄືນໄປສູ່ສະພາບເຫຼົ່ານັ້ນອີກ.

25. **ບັນດາລັດທີ່ເປັນເກາະນ້ອຍທີ່ກຳລັງພັດທະນາ.** ກົດບັດຂອງ ADB ໃຫ້ຄວາມໃສ່ໃຈເປັນພິເສດ ຕໍ່ຄວາມຕ້ອງການຂອງບັນດາປະເທດສະມາຊິກທີ່ມີຂະໜາດນ້ອຍ ຫລື ດ້ອຍພັດທະນາໃນພາກພື້ນ.[25] ບັນດາລັດທີ່ເປັນເກາະນ້ອຍທີ່ກຳລັງພັດທະນາ ແມ່ນມີຄວາມສ່ຽງເປັນພິເສດ ຕໍ່ການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດຕ່າງໆທີ່ເກີດຂຶ້ນຢ່າງກະທັນຫັນ. ຄວາມຫຼາກຫຼາຍຂອງຊີວະນາໆພັນ ແລະ ເຂດລຽບແຄມຝັ່ງທີ່ອຸດົມສົມບູນຂອງພວກເຂົາ ແມ່ນມີຄວາມສ່ຽງເລື່ອງສິ່ງແວດລ້ອມເຊື່ອມໂຊມ. ເສດຖະກິດຂອງພວກເຂົາ ມັກຈະຖືກກົດໜ່ວງໂດຍ ຕະຫຼາດພາຍໃນທີ່ມີຂະໜາດນ້ອຍ, ຄ່າໃຊ້ຈ່າຍໃນການດຳເນີນທຸລະກິດສູງ ແລະ ຂໍ້ຫຍຸ້ງຍາກໃນການເຊື່ອມຈອດກັບຕະຫຼາດພາກພື້ນ ແລະ ສາກົນ. ບັນດາລັດທີ່ເປັນເກາະນ້ອຍທີ່ກຳລັງພັດທະນາ ແມ່ນປະເຊີນກັບຂໍ້ຈຳກັດດ້ານຂີດຄວາມສາມາດດ້ານການຜະລິດຢ່າງຮຸນແຮງເຊັ່ນດຽວກັບປະເທດທີ່ມີສະຖານະການອ່ອນໄຫວ ແລະ ໄດ້ຮັບຜົນກະທົບຈາກຄວາມຂັດແຍ່ງ. ດ້ວຍເຫດນີ້, ຫຼາຍປະເທດສະມາຊິກທີ່ກຳລັງພັດທະນາຂອງ ADB ທີ່ຖືກຈັດເປັນປະເທດທີ່ມີສະຖານະການອ່ອນໄຫວ ແລະ ໄດ້ຮັບຜົນກະທົບຈາກຄວາມຂັດແຍ່ງ ແມ່ນມາຈາກ ບັນດາປະເທດທີ່ເປັນເກາະນ້ອຍ ເຖິງວ່າ ພວກເຂົາບໍ່ໄດ້ມີຄວາມຂັດແຍ່ງທີ່ຮຸນແຮງເລີຍກໍ່ຕາມ.[26] ພວກເຂົາຍັງຄົງປະເຊີນກັບຄວາມບໍ່ໝັ້ນຄົງໃນລະດັບສູງຈາກຜົນກະທົບຢ່າງກະທັນຫັນ ທາງດ້ານເສດຖະກິດ, ເຊິ່ງສາມາດເພີ່ມຂະໜາດຄວາມຄວາມຮຸນແຮງໄດ້ຕື່ມອີກ ເນື່ອງຈາກວ່າ ພວກເຂົາມີຖານເສດຖະກິດທີ່ນ້ອຍ, ການສົ່ງອອກຈຳກັດ, ແລະ ການເອື່ອຍອີງການນຳເຂົ້າສິນຄ້າທີ່ຈຳເປັນ ແລະ ບໍລິການຈາກຕ່າງປະເທດເປັນຫລັກ. ພາຍໃຕ້ຍຸດທະສາດ 2030, ADB ຈະຂະຫຍາຍຈຸດສຸມຂອງຕົນໃສ່ ບັນດາລັດທີ່ເປັນເກາະນ້ອຍທີ່ກຳລັງພັດທະນາ (ລວມທັງ ບັນດາລັດທີ່ເປັນເກາະນ້ອຍທີ່ກຳລັງພັດທະນາທີ່ບໍ່ໄດ້ຖືກຈັດເຂົ້າກຸ່ມປະເທດທີ່ມີສະຖານະການອ່ອນໄຫວ ແລະ ໄດ້ຮັບຜົນກະທົບຈາກຄວາມຂັດແຍ່ງ).[27] ການຊ່ວຍເຫຼືອຂອງ ADB ຈະເນັ້ນໃສ່ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ, ຄວາມຍືນຍົງດ້ານສິ່ງແວດລ້ອມ ແລະ ການຈັດການຄວາມສ່ຽງທາງໄພພິບັດ. ADB ຈະສືບຕໍ່ສ້າງຄວາມເຂັ້ມແຂງ ໃນການເຊື່ອມຕໍ່ ແລະ ການເຂົ້າເຖິງໃນດ້ານເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການສື່ສານ (ICT)

---

[24] ADB ຈະຈັດປະເທດໃດໜຶ່ງເປັນປະເທດທີ່ມີສະຖານະການອ່ອນໄຫວ ແລະ ໄດ້ຮັບຜົນກະທົບຈາກຄວາມຂັດແຍ່ງ ໂດຍນຳໃຊ້ ແນວທາງປອງດອງທີ່ຖືກໃຊ້ຮ່ວມກັນລະຫວ່າງ ທະນາຄານພັດທະນາອາຟລິກາ, ADB ແລະ ທະນາຄານໂລກ. ແຜນການດຳເນີນງານຂອງ ADB ກ່ຽວກັບ ປະເທດທີ່ມີສະຖານະການອ່ອນໄຫວ ແລະ ໄດ້ຮັບຜົນກະທົບຈາກຄວາມຂັດແຍ່ງ ຍັງໄດ້ກວມເອົາ ຫລາຍປະເທດທີ່ມີຄວາມອ່ອນໄຫວທີ່ຄ້າຍຄືກັນ ຫຼື ມີຄວາມຂັດແຍ່ງຕາມພື້ນທີ່ຕ່າງໆຂອງປະເທດ ແລະ ຈະປຶກສາຫາລືກັບປະເທດນັ້ນ. ມາຮອດເດືອນມິຖຸນາປີ 2018, ຍັງບໍ່ມີປະເທດໃດຖືກຈັດເປັນປະເທດທີ່ມີສະຖານະການອ່ອນໄຫວ ແລະ ໄດ້ຮັບຜົນກະທົບຈາກຄວາມຂັດແຍ່ງ ເພີ່ມຕື່ມໂດຍຜ່ານຂະບວນການນີ້. ADB. 2013. *ແຜນການດຳເນີນງານເພື່ອປັບປຸງປະສິດທິພາບຂອງ ADB ໃນປະເທດທີ່ມີສະຖານະການອ່ອນໄຫວ ແລະ ໄດ້ຮັບຜົນກະທົບຈາກຄວາມຂັດແຍ່ງ.* ມະນິລາ.

[25] ADB. 1966. *ສັນຍາສ້າງຕັ້ງທະນາຄານພັດທະນາອາຊີ.* ມະນິລາ.

[26] ອົງການສະຫະປະຊາຊາດໄດ້ຈັດປະເພດບັນດາລັດທີ່ເປັນເກາະນ້ອຍທີ່ກຳລັງພັດທະນາ. ໃນເດືອນ ພຶດສະພາ ປີ 2018, ໃນເກົ້າ ມີເຈັດລັດທີ່ເປັນເກາະນ້ອຍທີ່ກຳລັງພັດທະນາ ທີເປັນປະເທດສະມາຊິກທີ່ກຳລັງພັດທະນາຂອງ ADB ໄດ້ຖືກຈັດເປັນປະເທດທີ່ມີສະຖານະການອ່ອນໄຫວ ແລະ ໄດ້ຮັບຜົນກະທົບຈາກຄວາມຂັດແຍ່ງ. ADB ຈະທົບທວນ ແລະ ປັບປຸງຄຳນິຍາມຂອງປະເທດທີ່ມີສະຖານະການອ່ອນໄຫວ ແລະ ໄດ້ຮັບຜົນກະທົບຈາກຄວາມຂັດແຍ່ງ ແລະ ຄຳນິຍາມກ່ຽວກັບ ລັດທີ່ເປັນເກາະນ້ອຍທີ່ກຳລັງພັດທະນາ ໃຫ້ສອດຄ່ອງກັບຄຳນິຍາມຂອງຄູ່ຮ່ວມພັດທະນາອື່ນໆ.

[27] ບັນດາລັດທີ່ເປັນເກາະນ້ອຍທີ່ກຳລັງພັດທະນາ ທີ່ບໍ່ໄດ້ຈັດເປັນປະເທດທີ່ມີສະຖານະການອ່ອນໄຫວ ແລະ ໄດ້ຮັບຜົນກະທົບຈາກຄວາມຂັດແຍ່ງແມ່ນ ເກາະຄູກ (Cook Island), ຟີຈິ, ມານດີບ, ປາເລົາ, ຊາມົວ, ຕີມໍເລັດສເຕ, ຕົງກາ ແລະ ວັນນູອາຕູ.

> ເຊັ່ນດຽວກັນກັບວິໄສທັດຂອງຕົນທີ່ຈະສົ່ງເສີມຄວາມທົ່ວເຖິງ, ADB ຈະໃຫ້ບຸລິມະສິດການຊ່ວຍເຫຼືອສໍາລັບປະເທດທີ່ທຸກຍາກທີ່ສຸດ ແລະ ທີ່ອ່ອນໄຫວທີ່ສຸດໃນທົ່ວປະເທດສະມາຊິກທີ່ກໍາລັງພັດທະນາໃນພາກພື້ນ, ລວມທັງ ປະເທດທີ່ມີລາຍຮັບປານກາງລະດັບສູງ.

ເປັນຕົ້ນ, ການຂົນສົ່ງທາງທະເລ ແລະ ທາງອາກາດ; ແລະ ເນັ້ນໃສ່ຄວາມເຂັ້ມແຂງຂອງສະຖາບັນ ເພື່ອຊ່ວຍໃນການຈັດການຄວາມສ່ຽງດ້ານການເງິນ ແລະ ເສດຖະກິດຂອງປະເທດ. ADB ຈະຊ່ວຍບັນດາລັດທີ່ເປັນເກາະນ້ອຍທີ່ກໍາລັງພັດທະນາ ປັບປຸງສະພາບແວດລ້ອມຂອງການດໍາເນີນທຸລະກິດ, ປະຕິຮູບລັດວິສາຫະກິດ (SOEs), ເພີ່ມທະວີຮູບແບບການຮ່ວມມືລະຫວ່າງ ພາກລັດ ແລະ ພາກເອກະຊົນ (PPPs) ເພື່ອຫຼຸດຜ່ອນຄ່າໃຊ້ຈ່າຍໃນການດໍາເນີນທຸລະກິດ, ເພີ່ມທະວີຄຸນນະພາບການໃຫ້ບໍລິການສາທາລະນະ ແລະ ສົ່ງເສີມ ການຖືເອົາພາກເອກະຊົນເປັນປາຍແຫຼມນໍາໜ້າໃຫ້ແກ່ການເຕີບໂຕ. ADB ຈະສືບຕໍ່ດັດສົມຂັ້ນຕອນການດໍາເນີນກິດຈະການຂອງຕົນ ເພື່ອໃຫ້ຕອບສະໜອງກັບຄວາມຕ້ອງການ ແລະ ແກ້ໄຂຂໍ້ຈໍາກັດໃນບັນດາປະເທດທີ່ເປັນເກາະນ້ອຍ, ສົ່ງເສີມການສ້າງຂີດຄວາມສາມາດດ້ານເຕັກນິກທີ່ນໍາໃຊ້ໄດ້ຈິງ ແລະ ການຈັດຕັ້ງປະຕິບັດການຊ່ວຍເຫຼືອທີ່ຄ້າຍຄືກັນກັບສິ່ງທີ່ໄດ້ດໍາເນີນການພາຍໃຕ້ ແຜນປະຕິບັດງານການປັບປຸງໂຄງການປາຊີຟິກ ແລະ ສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ແກ່ສໍານັກງານຕາງໜ້າປະຈໍາປະເທດຂອງຕົນ.[28]

26. **ບັນດາປະເທດທີ່ມີລາຍຮັບຕໍ່າ ແລະ ລາຍຮັບປານກາງລະດັບຕໍ່າ.** ບັນດາປະເທດທີ່ມີລາຍຮັບຕໍ່າ ແລະ ລາຍຮັບປານກາງລະດັບຕໍ່າ ປະເຊີນໜ້າກັບສິ່ງ ທ້າທາຍຫຼາຍດ້ານ ໃນການຮັກສາແລະເລັ່ງລັດຄວາມຄືບໜ້າຂອງການພັດທະນາ. ADB ຈະສະໜອງທຶນ ຕາມທີ່ສາມາດຄາດການໄດ້ ແລະ ເປັນໄລຍະຍາວ ເພື່ອຊ່ວຍເຫຼືອປະເທດທີ່ມີລາຍຮັບຕໍ່າ ແລະ ລາຍຮັບປານກາງ-ລະດັບຕໍ່າ ແລະ ຈະເປັນຄູ່ຮ່ວມມືທີ່ໄວ້ວາງໃຈໄດ້ ໃນການສົ່ງເສີມການປະຕິຮູບດ້ານໂຄງສ້າງ ແລະ ລະບົບ. ວຽກຈຸດສຸມຂອງ ADB ຈະລວມເອົາ ການກໍ່ສ້າງພື້ນຖານໂຄງລ່າງຕາມທິດສີຂຽວ ແລະ ທົ່ວເຖິງ, ການບໍລິການທາງດ້ານສັງຄົມ ແລະ ການປົກປ້ອງສັງຄົມ, ການຂະຫຍາຍຕົວເມືອງແບບຍືນຍົງ, ການປະຕິຮູບດ້ານໂຄງສ້າງເພື່ອເພີ່ມອັດຕາການຜະລິດ ແລະ ຄວາມສາມາດແຂ່ງຂັນ, ການປະຕິຮູບພາກລັດ, ການພັດທະນາພາກເອກະຊົນ ແລະ ການລະດົມຊັບພະຍາກອນພາຍໃນ. ພ້ອມກັນນັ້ນ, ADB ຍັງຈະສົ່ງເສີມ ການປະຕິຮູບລັດວິສາຫະກິດ ແລະ ເພີ່ມການດໍາເນີນງານຂອງພາກເອກະຊົນ ໂດຍການດຶງດູດນັກລົງທຶນເອກະຊົນ ແລະ ດຶງເອົາຜູ້ຮ່ວມທຶນທາງທຸລະກິດ ເຂົ້າມາຮ່ວມ. ຈະພິຈາລະນາເປັນພິເສດຕໍ່ ບັນດາປະເທດທີ່ປະສົບກັບຄວາມອ່ອນໄຫວ ດ້ວຍເຫດຜົນທາງພູມສາດເຊັ່ນ: ມີສະພາບເປັນເປີ້ນພູ ແລະ ພູ. ບັນດາປະເທດເຫຼົ່ານີ້ ປະສົບກັບຫຼາຍບັນຫາຢ່າງກະທັນຫັນ ຍ້ອນການປ່ຽນແປງດິນຟ້າອາກາດ.

27. **ປະເທດທີ່ມີລາຍຮັບປານກາງລະດັບສູງ.** ຫຼາຍປະເທດທີ່ມີລາຍຮັບປານກາງລະດັບສູງ ໄດ້ປັບປຸງມາດຕະຖານການດໍາລົງຊີວິດຂອງຕົນເອງ, ແຕ່ປະເທດທີ່ແຕກຕ່າງກັນໃນການພັດທະນາເສດຖະກິດ, ສິ່ງທ້າທາຍດ້ານສັງຄົມ, ການເຂົ້າເຖິງຕະຫຼາດທຶນ ແລະ ຄວາມເຂັ້ມແຂງຂອງສະຖາບັນ. ADB ຈະເນັ້ນໜັກ ໃນຂົງເຂດທີ່ຕົວເອງສາມາດເພີ່ມຄຸນຄ່າໄດ້ດີທີ່ສຸດ ດ້ວຍການຊ່ວຍເຫຼືອປະເທດຕ່າງໆ ໃຫ້ສາມາດເຂົ້າເຖິງຕະຫຼາດທຶນ, ສ້າງຄວາມເຂັ້ມແຂງດ້ານສະຖາບັນ ແລະ ສ້າງໂຄງການຕົວແບບ. ADB ຈະຂະຫຍາຍການດໍາເນີນງານ ກັບພາກເອກະຊົນ ລວມທັງ ຮູບແບບການຮ່ວມມື ລະຫວ່າງພາກລັດ ແລະ ພາກເອກະຊົນ, ໃຫ້ການຊ່ວຍເຫຼືອຕາມເປົ້າໝາຍສໍາລັບການປະຕິຮູບໃນຂະແໜງການເງິນແລະ ລັດວິສາຫະກິດ ແລະ ສົ່ງເສີມຄວາມພ້ອມຮັບມືກັບບັນດາວິກິດການທີ່ເກີດຂຶ້ນຢ່າງກະທັນຫັນຂອງ ປະເທດເຫຼົ່ານີ້. ການແລກປ່ຽນປະສົບການ, ວິທີປະຕິບັດວຽກທີ່ດີທີ່ສຸດ ແລະ ນະວັດຕະກໍາ ຈະເປັນອົງປະກອບທີ່ມີຄວາມສໍາຄັນເພີ່ມຂຶ້ນ ໃນການພົວພັນຂອງ ADB ກັບປະເທດທີ່ມີລາຍຮັບປານກາງລະດັບສູງ ຫລາຍກວ່າປະລິມານເງິນກູ້ ໂດຍສະເພາະໃນຂົງເຂດທີ່ສໍາຄັນເຊັ່ນ: ສາທາລະນຸປະໂພກ, ການປ່ຽນແປງດິນຟ້າອາກາດ, ການຂະຫຍາຍຂອງຕົວເມືອງ, ການຮ່ວມມື ແລະ ການເຊື່ອມໂຍງພາກພື້ນ ແລະ ບັນຫາທາງສັງຄົມທີ່ປະກົດຂຶ້ນມາໃໝ່ເປັນຕົ້ນແມ່ນ ບັນຫາປະຊາກອນອາຍຸສູງ. ADB ຈະສ້າງຄວາມສະດວກໃຫ້ແກ່ການຮ່ວມມືລະຫວ່າງ ປະເທດສະມາຊິກທີ່ກໍາລັງພັດທະນາດ້ວຍກັນ ເພື່ອແບ່ງປັນຄວາມຮູ້ດັ່ງກ່າວ.

28. **ປັດໃຈຂອງຄວາມທຸກຍາກ ແລະ ຄວາມອ່ອນໄຫວໃນລະດັບທ້ອງຖິ່ນ.** ເຊັ່ນດຽວກັນກັບວິໄສທັດຂອງຕົນທີ່ຈະສົ່ງເສີມຄວາມທົ່ວເຖິງ, ADB ຈະໃຫ້ບຸລິມະສິດການຊ່ວຍເຫຼືອສໍາລັບເຂດພື້ນທີ່ທີ່ຍັງຫຼ້າຫຼັງ ແລະ ພື້ນທີ່ ທີ່ທຸກຍາກດ້ານລາຍຮັບ ໃນບັນດາປະເທດສະມາຊິກທີ່ກໍາລັງພັດທະນາ, ລວມທັງ ປະເທດທີ່ມີລາຍຮັບປານກາງລະດັບສູງ. ພື້ນທີ່ເຫຼົ່ານີ້ ຫຼື ກຸ່ມປະຊາກອນດັ່ງກ່າວ ຍັງສືບຕໍ່ປະສົບກັບຄວາມທຸກຍາກຢ່າງຕໍ່ເນື່ອງເຊິ່ງເກີດມາຈາກຄວາມອ່ອນໄຫວ ແລະ ຄວາມຂັດແຍ່ງໃນທ້ອງຖິ່ນ. ADB ຈະນໍາໃຊ້ວິທີການຕັ້ງເປົ້າໝາຍ ເພື່ອສະໜອງ

[28] ADB. 2016. *ວິທີການປາຊີຟິກ, 2016-2020.* ມະນີລາ.

ຕໍ່ຄວາມຕ້ອງການທີ່ແຕກຕ່າງກັນຢ່າງຊັດເຈນໃນຂົງເຂດເຫຼົ່ານີ້ ລວມທັງຜ່ານການຊ່ວຍເຫຼືອທາງດ້ານວິຊາການເພີ່ມຕື່ມ ແລະ ຂັ້ນຕອນການດໍາເນີນທຸລະກິດທີ່ງ່າຍດາຍ.

29. **ການຫຼຸດພົ້ນ.** ADB ຈະສືບຕໍ່ປະຍຸກໃຊ້ນະໂຍບາຍການຫຼຸດພົ້ນທີ່ມີຢູ່ຂອງຕົນ, ໄປພ້ອມກັບການທົບທວນປະສິດທິພາບຂອງນະໂຍບາຍດັ່ງກ່າວ.[29] ການຫຼຸດພົ້ນຈາກການຊ່ວຍເຫຼືອແບບປົກກະຕິຂອງ ADB ຈະຕ້ອງກວມເອົາການປຶກສາຫາລືຢ່າງໃກ້ຊິດກັບປະເທດນັ້ນໆ, ລວມທັງການວິເຄາະ ແລະ ປະເມີນຕີລາຄາເຖິງ ບັນດາອົງປະກອບສໍາຄັນຂອງນະໂຍບາຍການຫຼຸດພົ້ນ. ໃນຊ່ວງຂ້າມຜ່ານ, ການຊ່ວຍເຫຼືອຂອງ ADB ໂດຍພື້ນຖານ ຈະເປັນການສ້າງຄວາມເຂັ້ມແຂງໃຫ້ບັນດານະໂຍບາຍ ແລະ ສະຖາບັນຕ່າງໆທີ່ຮຽກຮ້ອງ ສໍາລັບການຫຼຸດພົ້ນທີ່ຍືນຍົງ, ການຊ່ວຍເຫຼືອທາງດ້ານສາທາລະນຸປະໂພກພາກພື້ນ ແລະ ໂລກ ແລະ ການສ້າງອົງຄວາມຮູ້. ບູລິມະສິດເຫຼົ່ານີ້ ຈະສະທ້ອນໃຫ້ເຫັນຢູ່ໃນຍຸດທະສາດເພື່ອການຮ່ວມມືກັບປະເທດ.

30. **ການສ້າງຄວາມຫຼາກຫຼາຍດ້ານເງື່ອນໄຂ ຂອງຜະລິດຕະພັນ ແລະ ເຄື່ອງມື.** ADB ຈະດໍາເນີນການວິເຄາະຢ່າງລະອຽດ ແລະ ປຶກສາຫາລືກັບບັນດາຜູ້ມີສ່ວນກ່ຽວຂ້ອງ ກ່ຽວກັບຄວາມເປັນໄປໄດ້ ສໍາລັບ ການກໍານົດເງື່ອນໄຂເງິນກູ້ຂອງຕົນໃຫ້ມີຄວາມຫຼາກຫຼາຍເພີ່ມຂຶ້ນ. ADB ຈະພິຈາລະນາໃນການນໍາໃຊ້ເງື່ອນໄຂກໍານົດເງິນກູ້ທີ່ຫຼາກຫຼາຍ ເພື່ອຈັດຕັ້ງປະຕິບັດບັນດາວິທີການທີ່ຕ່າງກັນ ແລະ ຊ່ວຍໃຫ້ບັນລຸພາລະກິດ ແລະ ເຮັດໃຫ້ເກີດໝາກຜົນໃນການພັດທະນາໃຫ້ສູງສຸດ.

31. **ເງິນກູ້ທີ່ມີເງື່ອນໄຂແບບຜ່ອນຜັນ.** ADB ຈະອັດສີດເງິນກູ້ທີ່ມີເງື່ອນໄຂແບບຜ່ອນຜັນຈາກສອງແຫຼ່ງຄື ເງິນກູ້ປົກກະຕິທີ່ມີເງື່ອນໄຂຜ່ອນຜັນ (OCR) ແລະ ກອງທຶນພັດທະນາອາຊີ (ADF) ເພື່ອຊ່ວຍເຫຼືອປະເທດສະມາຊິກທີ່ກໍາລັງພັດທະນາທີ່ທຸກຍາກທີ່ສຸດ ແລະ ທີ່ອ່ອນໄຫວທີ່ສຸດ.ຫຼາຍປະເທດທີ່ມີສະຖານະການອ່ອນໄຫວ ແລະ ໄດ້ຮັບຜົນກະທົບຈາກຄວາມຂັດແຍ່ງ ແລະ ບັນດາລັດທີ່ເປັນເກາະນ້ອຍທີ່ກໍາລັງພັດທະນາຈະມີສິດໄດ້ຮັບການຊ່ວຍເຫຼືອທີ່ມີເງື່ອນໄຂແບບຜ່ອນຜັນ. ADB ຍັງຈະພິຈາລະນາການຊ່ວຍເຫຼືອເພີ່ມເຕີມ ສໍາລັບບັນດາປະເທດທີ່ຫລຸດພົ້ນຈາກການຊ່ວຍເຫຼືອທາງການທີ່ມີເງື່ອນໄຂແບບຜ່ອນຜັນ. ການນໍາໃຊ້ເງິນທຶນຈາກກອງທຶນພັດທະນາອາຊີ ຢ່າງມີປະສິດທະພາບ ໃນອະນາຄົດ ຈະໄດ້ຮັບການທົບທວນຄືນຜ່ານການປຶກສາຫາລືກັບຜູ້ໃຫ້ທຶນແກ່ກອງທຶນດັ່ງກ່າວນີ້. ADB ຍັງຈະສືບຕໍ່ລະດົມທຶນຈາກແຫຼ່ງທີ່ມີເງື່ອນໄຂແບບຜ່ອນຜັນຈາກພາຍນອກຜ່ານກອງທຶນທີ່ ADB ຄຸ້ມຄອງ ແລະ ການສະໜອງທຶນສົມທົບກັບຄູ່ຮ່ວມ ທັງແບບທະວິພາຄີ ແລະ ພະຫຸພາຄີ (ວັກ 87 ແລະ 89).

---

[29] ADB. 1998. *ນະໂຍບາຍການຫຼຸດພົ້ນ ສໍາລັບບັນດາປະເທດສະມາຊິກທີ່ກໍາລັງພັດທະນາຂອງ ADB* . ມະນີລາ; ແລະ ເອດີບີ. 2008. *ບົດທົບທວນຂອງນະໂຍບາຍການຫຼຸດພົ້ນ ຂອງທະນາຄານພັດທະນາອາຊີ ປີ 1998.* ມະນີລາ. ນະໂຍບາຍການຫລຸດພົ້ນ ໄດ້ສະເໜີຂອບວຽກສໍາລັບການຈັດກຸ່ມປະເທດໂດຍອີງໃສ່ລາຍຮັບ, ຄວາມພ້ອມຂອງການໄຫຼວຽນຂອງເງິນທຶນທາງການຄ້າໃນເງື່ອນໄຂທີ່ສົມເຫດສົມຜົນ, ແລະ ລະດັບຂອງການພັດທະນາ ຂອງສະຖາບັນທາງເສດຖະກິດ ແລະ ສັງຄົມທີ່ສໍາຄັນ.

# VI. ບູລິມະສິດ ການດຳເນີນງານ

32. ເພື່ອບັນລຸເປົ້າໝາຍຍຸດທະສາດ 2030, ADB ຈະສຸມໃສ່ເຈັດຂົງເຂດບູລິມະສິດຂອງການດຳເນີນງານ ດັ່ງທີ່ອະທິບາຍໄວ້ໃນວັກ 35-67. ໃນຂົງເຂດບູລິມະສິດເຫຼົ່ານີ້ ຈະໄດ້ຖືກຍົກໃຫ້ເປັນບູລິມະສິດດຽວ ຫລື ຮ່ວມກັບບູລິມະສິດອື່ນ. ຕົວຢ່າງເຊັ່ນ: ການຫຼຸດຜ່ອນຄວາມທຸກຍາກ, ຄວາມທົ່ວເຖິງມີຍິ່ງຂຶ້ນ, ຄວາມສະເໝີພາບລະຫວ່າງ ຍິງ-ຊາຍ ແລະ ການປົກຄອງບໍລິຫານ ຈະໄດ້ຮັບການປະສົມປະສານເຂົ້າໃນທຸກການດຳເນີນງານຂອງ ADB ຕາມຄວາມເໝາະສົມ. ການສະໜັບສະໜູນຂອງ ADB ໃນຂົງເຂດເຫຼົ່ານີ້ ຈະໄດ້ຮັບການສະໜອງຜ່ານການດຳເນີນງານທັງກັບພາກລັດ ແລະ ກັບພາກເອກະຊົນ, ການບໍລິການໃຫ້ຄຳປຶກສາ ແລະ ການສະໜັບສະໜູນດ້ານຄວາມຮູ້.

## A. ການແກ້ໄຂບັນຫາຄວາມທຸກຍາກທີ່ຍັງມີຢູ່ ແລະ ການຫຼຸດຄວາມບໍ່ເທົ່າທຽມ

33. **ການເພີ່ມຄວາມສຳຄັນຕໍ່ການພັດທະນາ ຊັບພະຍາກອນມະນຸດ ແລະ ການເປັນສ່ວນໜຶ່ງຂອງສັງຄົມ.** ຄວາມທຸກຍາກເປັນສິ່ງທ້າທາຍທີ່ມີຫລາຍແງ່ມູມ. ໃນຂະນະທີ່ພາກພື້ນອາຊີ ແລະ ປາຊີຟິກ ໄດ້ມີຄວາມຄືບໜ້າຢ່າງໃຫຍ່ຫລວງ ໃນການຫຼຸດຜ່ອນຄວາມທຸກຍາກດ້ານລາຍຮັບ, ແຕ່ຍັງມີຫຼາຍໆສິ່ງທີ່ຈະຕ້ອງໄດ້ເຮັດ ເພື່ອແກ້ໄຂບັນຫາຄວາມທຸກຍາກ ດ້ານໂອກາດ ແລະ ຄວາມດ້ອຍໂອກາດຂອງຄົນໃນເຂດຕົວເມືອງ ແລະ ເຂດຊົນນະບົດ; ສົ່ງເສີມການເປັນສ່ວນໜຶ່ງຂອງສັງຄົມ ແລະ ການພັດທະນາ, ໂດຍສະເພາະແມ່ນກຸ່ມຄົນທີ່ດ້ອຍໂອກາດ; ແລະ ການສ້າງຄວາມພ້ອມເພື່ອຮັບການປ່ຽນແປງ. ເພື່ອຮັບປະກັນໃຫ້ສະມາຊິກທຸກຄົນຂອງສັງຄົມ ສາມາດເຂົ້າຮ່ວມ ແລະ ໄດ້ປະໂຫຍດຈາກການຂະຫຍາຍຕົວ, ADB ຈະຊ່ວຍ (i) ຫຼຸດຜ່ອນຄວາມບໍ່ເທົ່າທຽມກັນໃນການເຂົ້າເຖິງໂອກາດ; (ii) ສ້າງຄວາມສະດວກແກ່ການສ້າງວຽກເຮັດງານທຳທີ່ມີຄຸນນະພາບ; ແລະ (iii) ຂະຫຍາຍການຊ່ວຍເຫຼືອຂອງຕົນສຳລັບ ການສຶກສາ, ການເບິ່ງແຍງສຸຂະພາບ ແລະ ການປົກປ້ອງສັງຄົມ.

34. **ການສ້າງວຽກເຮັດງານທຳທີ່ມີຄຸນນະພາບ.** ADB ຈະຊ່ວຍສ້າງວຽກເຮັດງານທຳທີ່ມີຄຸນຄ່າ ແລະ ມີຜະປະສິດທິຜົນ ເພື່ອສົ່ງເສີມການຂະຫຍາຍຕົວ ແບບທົ່ວເຖິງສຳລັບທຸກຄົນ. ການທີ່ພາກເອກະຊົນ ໂດຍພື້ນຖານແລ້ວເປັນຜູ້ສ້າງວຽກເຮັດງານທຳ, ADB ຈະຊ່ວຍປະເທດຕ່າງໆ ໃນການປັບປຸງສະພາບແວດລ້ອມຂອງການດຳເນີນທຸລະກິດໃຫ້ແກ່ຜູ້ປະກອບການ ແລະ ບັນດາບໍລິສັດ, ລວມທັງທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ (SMEs) ແລະ ທຸລະກິດຊຸມຊົນແບບມີສ່ວນຮ່ວມ. ADB ຈະສືບຕໍ່ຊ່ວຍປັບປຸງການບໍລິການດ້ານການພັດທະນາທຸລະກິດ ແລະ ສ້າງຄວາມເຂັ້ມແຂງໃຫ້ຂະແໜງການເງິນ ລວມທັງການເງິນເພື່ອໝົດທຸກຄົນ. ADB ຍັງຈະຊ່ວຍປັບປຸງສະພາບແວດລ້ອມບ່ອນເຮັດວຽກ ດ້ວຍການສົ່ງເສີມບັນດາລະບຽບມາດຕະຖານແຮງງານທີ່ເປັນແກນຫລັກ.

35. **ການປັບປຸງການສຶກສາແລະການຝຶກອົບຮົມ.** ADB ຈະສືບຕໍ່ສະໜັບສະໜູນການສຶກສາໃຫ້ກາຍເປັນປັດໃຈພື້ນຖານຂອງ

### ເຈັດບູລິມະສິດການດຳເນີນງານຂອງຍຸດທະສາດ 2030

- ການແກ້ໄຂຄວາມທຸກຍາກທີ່ຍັງຫຼົງເຫລືອຢູ່ ແລະ ການຫລຸດຜ່ອນຄວາມບໍ່ເທົ່າທຽມກັນ
- ການເລັ່ງບາດກ້າວໃນດ້ານຄວາມສະເໝີພາບລະຫວ່າງຍິງ-ຊາຍ
- ການຈັດການແກ້ໄຂບັນຫາການປ່ຽນແປງຂອງດິນຟ້າອາກາດ, ການສ້າງຄວາມພ້ອມຮັບມືກັບສະພາບອາກາດແລະໄພພິບັດ, ແລະ ການເພີ່ມທະວີຄວາມຍືນຍົງດ້ານສິ່ງແວດລ້ອມ
- ການສ້າງຕົວເມືອງໃຫ້ໜ້າຢູ່ຫລາຍຂຶ້ນ
- ການສົ່ງເສີມການພັດທະນາຊົນນະບົດ ແລະ ຄວາມໝັ້ນຄົງດ້ານສະບຽງອາຫານ
- ການສ້າງຄວາມເຂັ້ມແຂງໃຫ້ແກ່ການປົກຄອງ ບໍລິຫານແລະຄວາມອາດສາມາດຂອງສະຖາບັນ
- ການຫັດແໜ້ນການຮ່ວມມືແລະການເຊື່ອມໂຍງພາກພື້ນ

ຜູ້ຄົນ. ADB ຈະຊ່ວຍສະມາຊິກທີ່ເປັນປະເທດກໍາລັງພັດທະນາ ໃນການປັບປຸງຄຸນນະພາບການສຶກສາສໍາລັບທຸກຄົນ, ເພີ່ມທະວີການສ້າງຄວາມຊໍານານງານໃນວຽກ ແລະ ຄວາມພ້ອມໃນການເຮັດວຽກຂອງນັກສຶກສາທີ່ຈົບໃໝ່, ແລະ ພ້ອມທັງການສ້າງໂອກາດໃນການຮຽນຮູ້ ແລະ ການຝຶກອົບຮົມຕະຫລອດຊີບ. ADB ຈະຊ່ວຍເຫຼືອໃນການນໍາໃຊ້ ເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການສື່ສານ (ICT) ເຂົ້າໃນການແກ້ບັນຫາ ເພື່ອສະໜອງການສຶກສາ ແລະ ການຝຶກອົບຮົມທີ່ມີຄຸນນະພາບໃຫ້ແກ່ທຸກຄົນ, ທຸກທີ່ ແລະ ທຸກເວລາ. ADB ຈະຊ່ວຍສ້າງຄວາມເຂັ້ມແຂງ ດ້ານທັກສະພື້ນຖານໃຫ້ນັກຮຽນ, ເຊິ່ງລວມມີຄວາມຮູ້ດ້ານດິຈິຕ້ອນ ພ້ອມທັງ ທັກສະການນໍາໃຊ້ ແລະ ການສຶກສາ ແລະພ້ອມທັງ ການຝຶກອົບຮົມທາງດ້ານເຕັກນິກວິຊາຊີບ. ADB ຈະຊ່ວຍປັບປຸງການສຶກສາລະດັບມັດທະຍົມ ແລະ ລະດັບມະຫາວິທະຍາໄລ ໂດຍເນັ້ນໜັກເລື່ອງ ວິທະຍາສາດ, ເຕັກໂນໂລຊີ, ວິສະວະກໍາ ແລະ ຄະນິດສາດ ເຊິ່ງຈະແນ່ໃສ່ ນັກຮຽນຍິງເປັນພິເສດ. ADB ຈະສົ່ງເສີມການຮຽນທີ່ເຊື່ອມຕໍ່ກັບພາກອຸດສາຫະກໍາ ແລະ ຊຸກຍູ້ການຮຽນຮູ້ຕະຫລອດຊີບ ແລະ ໂຄງການເພີ່ມທັກສະຊຸດໃໝ່ ເພື່ອຮັບປະກັນໃຫ້ ບັນດາຜູ້ອອກແຮງງານທີ່ເຮັດວຽກມາເຄິ່ງອາຍຸການເຮັດວຽກ ແລະ ທີ່ເຮັດວຽກມາດົນກ່ວາ ຈະສາມາດຢູ່ສືບຕໍ່ເຮັດວຽກໄດ້ຢ່າງມີປະສິດທິພາບ.

36. **ການບັນລຸເປົ້າໝາຍເຮັດໃຫ້ທຸກຄົນມີສຸຂະພາບດີຂຶ້ນ.** ADB ຈະສືບຕໍ່ ຊ່ວຍເຫຼືອປະເທດສະມາຊິກທີ່ກໍາລັງພັດທະນາໃນການພັກດັນການບໍລິການດ້ານສຸຂະພາບທຸກທົ່ວໜ້າ ດ້ວຍການປັບປຸງຄຸນນະພາບ ແລະ ການຄອບຄຸມຂອງການໃຫ້ບໍລິການດ້ານສາທາລະນະສຸກທັງຂອງພາກລັດ ແລະ ພາກເອກະຊົນ. ADB ຈະສົ່ງເສີມການປະຕິຮູບດ້ານກອງທຶນສຸຂະພາບ ເປັນຕົ້ນແມ່ນ ລະບົບປະກັນສຸຂະພາບ ເພື່ອປັບປຸງການເຂົ້າເຖິງການບໍລິການເບິ່ງແຍງສຸຂະພາບທີ່ໄດ້ຄຸນນະພາບ ແລະ ເພື່ອຫລຸດຄ່າໃຊ້ຈ່າຍຂອງຜູ້ທຸກຍາກ. ADB ຈະຫາຫົນທາງໃນການສ້າງຄຸນປະໂຫຍດທາງດ້ານສາທາໂດຍທາງອ້ອມໃຫ້ໄດ້ສູງສຸດ ດ້ວຍການປະສົມປະສານໜ້າວຽກດັ່ງກ່າວເຂົ້າໃນບັນດາໂຄງການທີ່ ADB ສະໜັບສະໜູນເປັນຕົ້ນໃນຂະແໜງ ການຂົນສົ່ງ (ຄວາມປອດໄພເທິງຖະໜົນ), ການພັດທະນາຕົວເມືອງ (ຕົວເມືອງທີ່ຄົນມີສຸຂະພາບດີ), ນໍ້າ (ນໍ້າປອດໄພ) ສຸຂະອະນາໄມ (ປອດພະຍາດຕິດແປດ) ແລະ ພະລັງງານ (ມົນລະພິດຕໍ່າ). ADB ຈະຊ່ວຍເຫຼືປະເທດສະມາຊິກທີ່ກໍາລັງພັດທະນາໃນການຈັດການກັບພາລະທີ່ເພີ່ມຂຶ້ນຈາກພະຍາດທີ່ບໍ່ຕິດແປດ ແລະ ການເບິ່ງແຍງຜູ້ສູງອາຍຸຢ່າງຄຸ້ມຄ່າ ແລະ ມີລັກສະນະຍືນຍົງ. ADB ຍັງຈະສົ່ງເສີມການນໍາໃຊ້ລະບົບໃຫ້ບໍລິການສຸະພາບທີ່ມີນະວັດຕະກໍາຢ່າງຊານສະຫຼາດໃຫ້ຫລາຍຂຶ້ນຕື່ມ.

37. **ຮັບປະກັນການປົກປ້ອງສັງຄົມສໍາລັບຜູ້ທີ່ມີຄວາມຈໍາເປັນ.** ADB ຈະສືບຕໍ່ເຮັດວຽກກັບບັນດາປະເທດສະມາຊິກທີ່ກໍາລັງພັດທະນາ ເພື່ອສ້າງລະບົບການປົກປ້ອງສັງຄົມ ແລະ ການໃຫ້ບໍລິການໃຫ້ແຂງແຮງ. ADB ຈະເນັ້ນໜັກໃສ່ການຊ່ວຍເຫຼືອສັງຄົມ ດ້ວຍການປັບປຸງຮູບແບບ ແລະ ການສະໜອງແຜນງານໂອນຖ່າຍທາງສັງຄົມເຊັ່ນ: ການໂອນເງິນສົດແບບມີເງື່ອນໄຂ, ການປະກັນສັງຄົມເຊັ່ນ: ເບ້ຍບໍານານ ແລະ ການປະກັນສຸຂະພາບ ແລະ ໂຄງການຕະຫຼາດແຮງງານ ເພື່ອສະໜັບສະໜູນການສ້າງທັກສະທີ່ເໝາະສົມກັບວຽກ ແລະ ການຝຶກອົບຮົມຄືນແກ່ຜູ້ອອກແຮງງານ. ອົງປະກອບດ້ານການປົກປ້ອງສັງຄົມ ຈະໄດ້ເອົາລວມເຂົ້າກັບບັນດາໂຄງການຕ່າງໆໃນຂະແໜງສຶກສາ (ທຶນການສຶກສາ ລວມທັງສໍາລັບເດັກຍິງ; ໂຄງການອາຫານໃນໂຮງຮຽນ ແລະ ການຝຶກອົບຮົມທັກສະຕ່າງໆ); ຂະແໜງການເງິນ ແລະ ການບໍລິຫານພາກລັດ (ການປະກັນສັງຄົມ ແລະ ເບ້ຍບໍານານ); ຂະແໜງສາທາ (ການປະກັນສຸຂະພາບ); ແລະ ຂະແໜງພັດທະນາຕົວເມືອງ (ອາຍຸ, ເພດ ແລະ ພື້ນຖານໂຄງລ່າງທີ່ເອື້ອເຝື້ອຕໍ່ຄົນພິການ).

## B. ການເລັ່ງພັກດັນຄວາມກ້າວໜ້າດ້ານຄວາມສະເໝີພາບລະຫວ່າງຍິງ-ຊາຍ

38. **ການເພີ່ມການສະໜັບສະໜູນດ້ານຄວາມສະເໝີພາບລະຫວ່າງຍິງ-ຊາຍ.** ADB ຈະຊ່ວຍເລັ່ງພັກດັນບາດກ້າວດ້ານຄວາມສະເໝີພາບລະຫວ່າງຍິງ-ຊາຍ ໃນບັນດາປະເທດສະມາຊິກທີ່ກໍາລັງພັດທະນາຜ່ານ (i) ການດໍາເນີນງານທີ່ມີເປົ້າໝາຍເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ແລະ ເດັກຍິງໃນຂົງເຂດການສຶກສາ, ສາທາ, ການເຂົ້າເຖິງດ້ານເງິນທຶນເພື່ອໝົດທຸກຄົນ ແລະ ການສ້າງວຽກເຮັດງານທໍາ; (ii) ການເຊື່ອມສານວຽກງານບົດບາດຍິງ-ຊາຍ ໂດຍສະເພາະ ເພື່ອແນ່ໃສ່ການຫຼຸດຊ່ອງຫວ່າງບົດບາດລະຫວ່າງຍິງ-ຊາຍ ຫລື ການສ້າງປະໂຫຍດໃຫ້ແກ່ແມ່ຍິງ ແລະ ເດັກຍິງ; ຕົວຢ່າງເຊັ່ນ: ໃນໂຄງການກໍ່ສ້າງທາງຊຸມຊົນ ທີ່ໃຫ້ແມ່ຍິງໄດ້ເຂົ້າເຖິງໂອກາດໃນການສ້າງລາຍຮັບ ປະກອບກັບ ການສ້າງຂີດຄວາມສາມາດ ເພື່ອຊ່ວຍປັບປຸງທັກສະຂອງພວກເຂົາ; ແລະ (iii) ການດໍາເນີນງານທີ່ມີອົງປະກອບດ້ານບົດບາດລະຫວ່າງຍິງ-ຊາຍ ເຊິ່ງກວມເອົາບາງກິດຈະກໍາເຂົ້າໃນການອອກແບບ ແລະ ການຈັດຕັ້ງປະຕິບັດຂອງບັນດາໂຄງການ ແລະ ໂຄງການແຜນງານຂອງ ADB ເປັນຕົ້ນ ເພື່ອເພີ່ມໂອກາດໃນການຈ້າງງານ ສໍາລັບແມ່ຍິງໃນລະຫວ່າງການກໍ່ສ້າງ, ການນໍາໃຊ້ງານ ແລະ ການບໍາລຸງຮັກສາ. ADB ຮູ້ດີວ່າ ເຖິງວ່າບັນດາໂຄງການທີ່ບໍ່ໄດ້ຮັບການຈັດເຂົ້າໃນໝວດ (i) - (iii) ກໍ່ຕາມແຕ່ບັນໂຄງການດັ່ງກ່າວກໍ່ຍັງມີຜົນກະທົບທາງບວກ ຕໍ່ກັບຊີວິດຂອງແມ່ຍິງ ແລະ ເດັກຍິງ. ຕົວຢ່າງ, ໂຄງການກໍ່ສ້າງໂຮງໄຟຟ້າ ອາດຈະບໍ່ໄດ້ມີເປົ້າໝາຍເຈາະຈົງເພື່ອຫຼຸດຊ່ອງຫວ່າງບົດບາດລະຫວ່າງຍິງ-ຊາຍ ຍ້ອນເປັນພຽງການຜະລິດ ແລະ ປ້ອນກະແສໄຟຟ້າເຂົ້າສາຍສົ່ງ; ເຖິງຢ່າງໃດກໍ່ຕາມ, ແມ່ຍິງຈະໄດ້ຮັບຜົນປະໂຫຍດຈາກການນໍາໃຊ້ໄຟຟ້າ ໃນແງ່ການຫຼຸດຜ່ອນຊ່ວງເວລາຂອງຄວາມທຸກຍາກ ແລະ ການເຂົ້າເຖິງໂອກາດໃນການມີວຽກເຮັດທີ່ດີຂຶ້ນ.

39. **ເປົ້າຫມາຍຄວາມສະເໝີພາບລະຫວ່າງຍິງ-ຊາຍ.** ພາຍໃນປີ 2030, ຢ່າງຫນ້ອຍ 75% ຂອງຈໍານວນການດໍາເນີນ

ງານຂອງ ADB (ໂຄງການສະເລ່ຍໄລຍະທຸກໆ 3 ປີ, ລວມທັງ ການປະຕິບັດງານກັບພາກລັດ ແລະ ກັບພາກເອກະຊົນ) ຈະສົ່ງເສີມຄວາມສະເໝີພາບລະຫວ່າງຍິງ - ຊາຍ.[30]

40. **ຂົງເຂດທີ່ເປັນຈຸດສຸມ.** ການຊ່ວຍເຫຼືອຂອງ ADB ຈະສຸມໃສ່ ຫ້າຂົງເຂດເຊັ່ນ: ການສ້າງຄວາມເຂັ້ມແຂງທາງເສດຖະກິດໃຫ້ແກ່ແມ່ຍິງ, ຄວາມສະເໝີພາບລະຫວ່າງຍິງ-ຊາຍ ໃນການພັດທະນາຊັບພະຍາກອນມະນຸດ, ຄວາມສະເໝີພາບລະຫວ່າງຍິງ-ຊາຍ ໃນການຕັດສິນໃຈ ແລະ ຄວາມເປັນຜູ້ນໍາ, ຊ່ວງເວລາທຸກຍາກຂອງແມ່ຍິງຫຼຸດລົງ ແລະ ຄວາມພ້ອມຮັບມືຂອງແມ່ຍິງຕໍ່ກັບສະພາບການທີ່ໄດ້ຮັບຜົນກະທົບຢ່າງກະທັນຫັນຈາກພາຍນອກ.

41. **ຂົງເຂດທີ່ເປັນຈຸດສຸມ.** ການຊ່ວຍເຫຼືອຂອງ ADB ຈະສຸມໃສ່ ຫ້າຂົງເຂດເຊັ່ນ: ການສ້າງຄວາມເຂັ້ມແຂງທາງເສດຖະກິດໃຫ້ແກ່ແມ່ຍິງ, ຄວາມສະເໝີພາບລະຫວ່າງຍິງ-ຊາຍ ໃນການພັດທະນາຊັບພະຍາກອນມະນຸດ, ຄວາມສະເໝີພາບລະຫວ່າງຍິງ-ຊາຍ ໃນການຕັດສິນໃຈ ແລະ ຄວາມເປັນຜູ້ນໍາ, ຊ່ວງເວລາທຸກຍາກຂອງແມ່ຍິງຫຼຸດລົງ ແລະ ຄວາມພ້ອມຮັບມືຂອງແມ່ຍິງຕໍ່ກັບສະພາບການທີ່ໄດ້ຮັບຜົນກະທົບຢ່າງກະທັນຫັນຈາກພາຍນອກ.

42. **ການສົ່ງເສີມການໃຫ້ອໍານາດທາງເສດຖະກິດໃຫ້ແກ່ແມ່ຍິງ.** ADB ຈະໃຫ້ຄວາມເອົາໃຈເພີ່ມຂຶ້ນ ໃນການສ້າງວຽກເຮັດງານທໍາ ແລະ ສ້າງໂອກາດໃຫ້ແມ່ຍິງໄດ້ເປັນເຈົ້າຂອງທຸລະກິດ. ໂຄງການພື້ນຖານໂຄງລ່າງ ຈະຊ່ວຍໃຫ້ແມ່ຍິງເຂົ້າເຖິງຕະຫລາດ ແລະ ໂອກາດສໍາລັບວຽກທີ່ໃຊ້ສີມືໃຫ້ໄດ້ສູງສຸດ. ຜ່ານໂຄງການອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ, ADB ຈະຊ່ວຍໃຫ້ແມ່ຍິງສາມາດເຂົ້າເຖິງວຽກທີ່ມີຄຸນນະພາບໃນສາຂາ ໃໝ່ທີ່ບໍ່ແມ່ນວຽກແບບດັ້ງເດີມທີ່ເຄີຍເຮັດ ແລະ ມີຄ່າຈ້າງທີ່ສູງຂຶ້ນ. ADB ຈະເພີ່ມການຊ່ວຍເຫຼືອແບບປະສົມປະສານ ແກ່ຜູ້ປະກອບການເພດຍິງ ແລະ ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງທີ່ແມ່ຍິງເປັນຜູ້ນໍາຜ່ານການເຂົ້າເຖິງເງິນທຶນໄດ້ດີຍິ່ງຂຶ້ນ, ມີຄວາມສາມາດນໍາໃຊ້ເຕັກໂນໂລຊີໃໝ່ໆ, ແລະ ການປະຕິຮູບດ້ານນະໂຍບາຍແລະດ້ານອົງກອນ.

43. **ການສູ້ຊົນໃຫ້ມີຄວາມສະເໝີພາບລະຫວ່າງຍິງ-ຊາຍ ໃນການ ພັດທະນາຊັບພະຍາກອນມະນຸດ.** ໂຄງການສຶກສາ ຈະໄດ້ຮັບການອອກແບບເພື່ອປັບປຸງຄວາມສະເໝີພາບລະຫວ່າງຍິງ-ຊາຍ ຊຶ່ງຈະໃຫ້ເຫັນຜົນໃນອັດຕາຈົບການສຶກສາ, ຜົນໄດ້ຮັບຂອງການຮຽນ ແລະ ການປ່ຽນຜ່ານຈາກໂຮງຮຽນໄປສູ່ການເຮັດວຽກ. ADB ຈະສົ່ງເສີມແມ່ຍິງໃຫ້ສຶກສາໃນສາຂາວິທະຍາສາດ, ເຕັກໂນໂລຊີ, ວິສະວະກໍາ ແລະ ຄະນິດສາດ. ການດໍາເນີນງານດ້ານສາທາ ແລະ ການປົກປ້ອງສັງຄົມ ຈະແກ້ໄຂບັນຫາສຸຂະພາບໄວຈະເລີນພັນ ທີ່ຍັງບໍ່ທັນບັນລຸໄດ້ ແລະ ບັນຫາສຸຂະພາບອື່ນໆທີ່ຈໍາເປັນຂອງແມ່ຍິງ ແລະ ເດັກຍິງ ແລະ ຄວາມຮຸນແຮງທາງເພດ. ການບໍລິການເບິ່ງແຍງຜູ້ສູງອາຍຸ ຈະໄດ້ຮັບການອອກແບບເພື່ອບັນເທົາຄວາມຮັບຜິດຊອບຂອງແມ່ຍິງໃນ ຄອບຄົວ ແລະ ຕອບສະໜອງໄດ້ຄວາມຕ້ອງການ ທີ່ຫຼາກຫຼາຍຂອງແມ່ຍິງຜູ້ສູງອາຍຸ.

44. **ການສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ ໃນການຕັດສິນໃຈ ແລະ ຄວາມເປັນຜູ້ນໍາ.** ການດໍາເນີນງານຂອງ ADB ໃນການສະໜັບສະໜູນການປະຕິຮູບທາງດ້ານກົດໝາຍ, ອົງກອນ ແລະ ການປົກຄອງບໍລິຫານ ຈະຄົ້ນຫາມາດຕະການ ທີ່ຈະລຶບລ້າງການຈໍາແນກຕໍ່ເພດຍິງ, ເພີ່ມທະວີການເຂົ້າຮ່ວມຂອງແມ່ຍິງໃນການຈັດສັນຊັບພະຍາກອນສາທາລະນະ ພ້ອມທັງການຕັດສິນໃຈ ແລະ ສົ່ງເສີມຄວາມເປັນຜູ້ນໍາໃນທຸກລະດັບ.

45. **ການຫລຸດຜ່ອນເວລາຂອງການເຮັດວຽກທີ່ບໍ່ມີຄ່າຈ້າງຂອງແມ່ຍິງ.** ADB ຈະລົງທຶນໃນການບໍລິການສ້າງພື້ນຖານໂຄງລ່າງເຊັ່ນ: ນໍ້າໃຊ້ ແລະ ສຸຂະພິບານ, ໄຟຟ້າໃນຊົນນະບົດ, ເສັ້ນທາງໃນຊົນນະບົດ, ເຕົາໄຟພະລັງງານສະອາດ ແລະ ແກັດຊີວະພາບທີ່ສະອາດ ລວມເຖິງເຕັກໂນໂລຊີຂອງການຜະລິດພືດຜົນ ແລະ ອາຫານ ເພື່ອຊ່ວຍຫລຸດພາລະ ແລະ ເວລາທີ່ໃຊ້ເຮັດວຽກເຮືອນໃນຊີວິດປະຈໍາວັນຂອງແມ່ຍິງ. ຄວາມປອດໄພ ແລະ ການສ້າງຄວາມສະດວກສໍາລັບແມ່ຍິງຈະໄດ້ຮັບການພິຈາລະນາເຂົ້າໃນການອອກແບບພື້ນຖານໂຄງລ່າງໃນຕົວເມືອງ ແລະ ຊົນນະບົດ.

46. **ການສ້າງຄວາມເຂັ້ມແຂງແກ່ແມ່ຍິງໃຫ້ພ້ອມຮັບສະພາບການ ປ່ຽນແປງທີ່ໄດ້ຮັບຜົນກະທົບຢ່າງກະທັນຫັນຈາກພາຍນອກ.** ADB ຈະຊ່ວຍປະເທດສະມາຊິກທີ່ກໍາລັງພັດທະນາໃນການເຊື່ອມສານວຽກບົດບາດ ຍິງ-ຊາຍ ເຂົ້າໃນການດໍາເນີນງານຄຸ້ມຄອງການປ່ຽນແປງດິນຟ້າອາກາດ ແລະ ຄວາມສ່ຽງຈາກໄພພິບັດ ແລະ ສົ່ງເສີມແມ່ຍິງເຂົ້າສູ່ວຽກທີ່ເປັນມິດກັບສິ່ງແວດລ້ອມ, ເຕັກໂນໂລຊີທີ່ຮູ້ທັນການປ່ຽນແປງດິນຟ້າອາກາດ ແລະ ມີສ່ວນຮ່ວມໃນການຕັດສິນໃຈໃນເລື່ອງການປ່ຽນແປງດິນຟ້າອາກາດ. ເພື່ອປົກປ້ອງແມ່ຍິງໃນຄົວເຮືອນທີ່ມີລາຍຮັບຕໍ່າ ແລະ ດ້ອຍໂອກາດທາງດ້ານເສດຖະກິດ, ອາຫານ ແລະ ບັນຫາອື່ນໆ, ADB ຈະສືບຕໍ່ພັກດັນການຊ່ວຍເຫຼືອທາງດ້ານສັງຄົມ ແລະ ປັບງົບປະມານເພື່ອໃຫ້ຕອບສະໜອງກັບວຽກບົດບາດຍິງ-ຊາຍ.

## C. ການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ, ການສ້າງຄວາມພ້ອມຮັບມືກັບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດ ແລະ ການເພີ່ມທະວີຄວາມຍືນຍົງທາງດ້ານສິ່ງແວດລ້ອມ

[30] ການດໍາເນີນງານທີ່ຖືກຈັດເຂົ້າໃນໝວດ (i) ແລະ (ii) ໃນວັກ 40 ຈະມີຢ່າງໜ້ອຍ 55% ຂອງຈໍານວນການດໍາເນີນງານທັງໝົດຂອງ ADB (ໂຄງການໄລຍະສະເລ່ຍທຸກໆ 3 ປີ, ລວມທັງ ການປະຕິບັດງານກັບພາກລັດ ແລະ ການປະຕິບັດງານກັບພາກເອກະຊົນ).

47. **ການເພີ່ມການສະໜັບສະໜູນເພື່ອແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ, ຄວາມສ່ຽງຈາກໄພພິບັດ ແລະ ສິ່ງແວດລ້ອມທີ່ເສື່ອມໂຊມ.** ADB ຈະຮັບປະກັນວ່າ ການປ່ຽນແປງດິນຟ້າອາກາດ, ຄວາມສ່ຽງຈາກໄພພິບັດ ແລະ ການໃສ່ໃຈຕໍ່ສິ່ງແວດລ້ອມ ຈະໄດ້ຖືກນຳມາເຊື່ອມສານຢ່າງເຕັມສ່ວນເຂົ້າໃນບັນດາຍຸດທະສາດການດຳເນີນງານຂອງຕົນ; ການວາງແຜນດຳເນີນໂຄງການໃນປະເທດ; ແລະ ບັນດາເອກະສານໂຄງການກ່ຽວກັບ ການອອກແບບ, ການຈັດຕັ້ງປະຕິບັດ, ການຕິດຕາມກວດກາ ແລະ ການປະເມີນຜົນ. ADB ຈະສ້າງຄວາມສະດວກແກ່ ປະເທດສະມາຊິກທີ່ກຳລັງພັດທະນາໃຫ້ສາມາດເຂົ້າເຖິງເຕັກໂນໂລຊີທີ່ສະອາດ ແລະ ສະຫຼາດກ່ວາເກົ່າ, ກະຕຸ້ນການຂະຫຍາຍຕົວຂອງເສດຖະກິດທີ່ເປັນມິດກັບສິ່ງແວດລ້ອມ ແລະ ສືບຕໍ່ກັ່ນຕອງໂຄງການຂອງຕົນຢ່າງລະອຽດ ຕໍ່ກັບຄວາມສ່ຽງທີ່ເກີດຈາກສະພາບດິນຟ້າອາກາດ ແລະ ໄພພິບັດ.

48. **ເປົ້າໝາຍການດຳເນີນງານກ່ຽວກັບດິນຟ້າອາກາດ.** ໂດຍອີງໃສ່ຜົນການດຳເນີນງານທີ່ໂດດເດັ່ນ ໃນການປະສົມປະສານການບັນເທົາ ແລະ ການປັບຕົວຕໍ່ກັບການປ່ຽນແປງດິນຟ້າອາກາດເຂົ້າໃນ ການອອກແບບໂຄງການ, 75% ຂອງຈຳນວນການດຳເນີນງານຂອງ ADB (ການດຳເນີນງານໄລຍະສະເລ່ຍທຸກໆ 3 ປີ, ລວມທັງ ການດຳເນີນງານກັບພາກລັດ ແລະ ກັບພາກເອກະຊົນ) ຈະສະໜັບສະໜູນການບັນເທົາ ແລະ ປັບຕົວຕໍ່ການປ່ຽນແປງດິນຟ້າອາກາດພາຍໃນປີ 2030. ງົບປະມານສະໜັບສະໜູນດ້ານດິນຟ້າອາກາດຂອງ ADB ຈະມີມູນຄ່າສູງເຖິງ $80 ຕື້ ສຳລັບໄລຍະແຕ່ປີ 2019 ເຖິງ 2030.[31]

49. **ການເລັ່ງມືໃນການພັດທະນາທີ່ປ່ອຍອາຍພິດເຮືອນແກ້ວໃນລະດັບຕ່ຳ.** ADB ຈະເພີ່ມທະວີການສະໜັບສະໜູນຂອງຕົນຜ ເຂົ້າ ໃນວຽກສົ່ງເສີມເພື່ອຫຼຸດຜ່ອນການປ່ຽນແປງດິນຟ້າອາກາດ ໂດຍໃຫ້ບູລິມະສິດການລົງທຶນດ້ານພະລັງງານທີ່ປ່ອຍອາຍພິດເຮືອນແກ້ວໃນລະດັບຕ່ຳ, ການຈັດຕັ້ງປະຕິບັດຍຸດທະສາດການຂົນສົ່ງທີ່ຍືນຍົງ ແລະ ຍຸດທະສາດການຂົນສົ່ງໃນຕົວເມືອງ ແລະ ຊຸກຍູ້ໃຫ້ປະເທດສະມາຊິກທີ່ກຳລັງພັດທະນາ ຫັນໄປສູ່ທິດທາງ ການພັດທະນາທີ່ປ່ອຍອາຍພິດເຮືອນແກ້ວໃນລະດັບຕ່ຳ ຕາມແນວທາງການມີສ່ວນຮ່ວມທີ່ກຳນົດໃນລະດັບຊາດຢ່າງຕັ້ງໜ້າພາຍໃຕ້ສັນຍາປາຣີ. ADB ຈະພັກດັນການດຳເນີນການໃນເລື່ອງນີ້ ໂດຍເລືອກໃຊ້ເງິນກູ້ທີ່ມີເງື່ອນໄຂແບບຜ່ອນຜັນ, ເພີ່ມການຮ່ວມມືກັບພາກເອກະຊົນ ແລະ ສົ່ງເສີມຮູບແບບການຮ່ວມມືລະຫວ່າງ ພາກລັດ ແລະ ພາກເອກະຊົນທີ່ມີນະວັດຕະກຳ. ADB ຍັງຈະສ້າງຄວາມສະດວກໃນການເຂົ້າເຖິງກອງທຶນຄາບອນ ໂດຍຜ່ານຕະຫລາດຄາບອນພາຍໃນ ແລະ/ຫລື ສາກົນ ເພື່ອຊຸກຍູ້ການລົງທຶນເພື່ອຫຼຸດຜ່ອນການປ່ຽນແປງດິນຟ້າອາກາດ.

50. **ການຮັບປະກັນວິທີການປະຕິບັດແບບຄອບຄຸມ ເພື່ອສ້າງຄວາມພ້ອມໃນການຮັບກັບການປ່ຽນແປງ ດິນຟ້າອາກາດ ແລະ ໄພພິບັດ.** ADB ຈະສະໜັບສະໜູນປະເທດສະມາຊິກທີ່ກຳລັງພັດທະນາ ໃນການສ້າງວິທີການທີ່ປະສົມປະສານ ເພື່ອປັບຕົວຕໍ່ການປ່ຽນແປງ ດິນຟ້າອາກາດ ແລະ ປັບປຸງຄວາມພ້ອມຮັບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດ. ມາດຕະການເຫຼົ່ານັ້ນຈະປະກອບມີ ການຄຸ້ມຄອງການນຳໃຊ້ທີ່ດິນທີ່ມີຄວາມສ່ຽງຕໍ່ຄວາມອ່ອນໄຫວ, ການຄຸ້ມຄອງຄວາມສ່ຽງຈາກໄພນ້ຳຖ້ວມແບບປະສົມປະສານ, ການອອກແບບພື້ນຖານໂຄງລ່າງທີ່ທົນທານຕໍ່ການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດ, ການເພີ່ມຄວາມຫລາກຫລາຍໃນການດຳລົງຊີບຕໍ່ກັບປັດໃຈໃນການປ່ຽນແປງດິນຟ້າອາກາດໃນໄລຍະຍາວ, ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບເຕືອນໄພລ່ວງໜ້າ. ADB ຈະສະໜອງການຊ່ວຍເຫຼືອ ສຳລັບການຮັບມືກັບໄພພິບັດ ເຊິ່ງລວມເອົາການຊ່ວຍກໍ່ສ້າງຄືນໃຫ້ດີກວ່າເກົ່າ. ADB ຈະເພີ່ມຄວາມເຂັ້ມແຂງໃຫ້ແກ່ຄວາມພ້ອມດ້ານການເງິນຂອງປະເທດສະມາຊິກທີ່ກຳລັງພັດທະນາ ເພື່ອຕອບສະໜອງ ຕໍ່ກັບໄພພິບັດຜ່ານເຄື່ອງມືດັ່ງກ່າວໃນຮູບແບບເງິນກູ້ສຸກເສີນອີງຕາມນະໂຍບາຍ ແລະ ການປະກັນໄພພິບັດ.[32] ADB ຍັງຈະສະຫນັບສະຫນູນການປະສົມປະສານການປັບຕົວຕໍ່ສະພາບອາກາດ ແລະ ການຄຸ້ມຄອງຄວາມສ່ຽງຈາກໄພພິບັດ ເຂົ້າໃນແຜນການ ແລະ ງົບປະມານການພັດທະນາຂອງປະເທດສະມາຊິກທີ່ກຳລັງພັດທະນາ, ການພັດທະນາຂີດຄວາມສາມາດທີ່ກ່ຽວຂ້ອງ, ແລະ ການເຂົ້າເຖິງແຫຼ່ງຄວາມຮູ້.

51. **ການຮັບປະກັນຄວາມຍືນຍົງດ້ານສິ່ງແວດລ້ອມ.** ADB ຈະ (i) ຊ່ວຍປະເທດສະມາຊິກທີ່ກຳລັງພັດທະນາ ໃນການປັບປຸງການຄຸ້ມຄອງດ້ານສິ່ງແວດລ້ອມ, ລວມທັງຄວາມພະຍາຍາມເພື່ອປັບປຸງຄຸນນະພາບອາກາດ ແລະ ນ້ຳ; ແລະ (ii) ລົງທຶນໃນການອະນຸລັກ ແລະ ການຟື້ນຟູຊັບພະຍາກອນທຳມະຊາດ. ADB ຈະສ້າງຄວາມເຂັ້ມແຂງໃຫ້ແກ່ການວາງແຜນໂຄງການ ແລະ ການອອກແບບ ໂຄງການທີ່ເປັນມິດກັບລະບົບນິເວດ ເພື່ອປ້ອງກັນການເສື່ອມໂຊມຂອງລະບົບນິເວດ ແລະ ເພື່ອບັນເທົາຜົນກະທົບຈາກມົນລະພິດ. ADB ຈະດຳເນີນການກັບບັນຫານີ້ຜ່ານວິທີການທີ່ຫລາກຫລາຍລວມມີ ການນຳໃຊ້ການຊຳລະເງິນສຳລັບການບໍລິການລະບົບນິເວດ, ທາງແກ້ທີ່ອີງໃສ່ທຳມະຊາດ (ເຊັ່ນ: ການປູກປ່າແຄມທະເລເພື່ອຕ້ານກັບຄື້ນສູງຈາກພາຍຸ ແລະ ລະດັບນ້ຳທະເລທີ່ສູງຂຶ້ນ) ແລະ ວິທີການທີ່ນຳພາໂດຍຊຸມຊົນ.

---

31 ເປົ້າໝາຍເຫຼົ່ານີ້ແມ່ນອີງໃສ່ຄຳນິຍາມແລະວິທີການທີ່ໄດ້ຕົກລົງກັນລະຫວ່າງບັນດາທະນາຄານພັດທະນາຫຼາຍຝ່າຍ.

32 ADB ໄດ້ສະໜອງເງິນທຶນໄພພິບັດສຸກເສີນຜ່ານການກູ້ຢືມອີງໃສ່ນະໂຍບາຍ ໃຫ້ແກ່ເກາະຄູກ ໃນປີ 2016 ແລະ ໃຫ້ປະເທດຊາມົວ, ຕົງກາ ແລະ ຕູວາລູ ພາຍໃຕ້ໂຄງການພ້ອມຮັບມືກັບໄພພິບັດພາກພື້ນໃນປີ 2017.

52. **ການໃຫ້ຄວາມສົນໃຈເພີ່ມຂຶ້ນຕໍ່ການເຊື່ອມໂຍງກັນລະຫວ່າງ ຄວາມໝັ້ນຄົງດ້ານ ນ້ຳ-ອາຫານ-ພະລັງງານ.** ADB ຈະຊ່ວຍປະເທດສະມາຊິກທີ່ກຳລັງພັດທະນາ ໃນການຮັບປະກັນຄວາມໝັ້ນຄົງດ້ານນ້ຳ ດ້ວຍຄວາມເຂົ້າໃຈທີ່ເລິກເຊິ່ງເຖິງສາຍສຳພັນແລະການແລກປ່ຽນ ລະຫວ່າງ ຄວາມຕ້ອງການຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ດ້ານພະລັງງານໃນລະດັບ ໂຄງການ, ຂະແໜງການ ແລະ ປະເທດ. ADB ຈະເພີ່ມການຊ່ວຍເຫຼືອໃນການຄຸ້ມຄອງຊັບພະຍາກອນນ້ຳແບບປະສົມປະສານ ເພື່ອຕອບສະໜອງກັບຄວາມຕ້ອງການນ້ຳໃຫ້ມີລັກສະນະທີ່ເທົ່າທຽມກັນ, ມີຄວາມຍືນຍົງ, ແລະ ມີປະສິດທິພາບ. ADB ຍັງຈະຊ່ວຍ (i) ປັບປຸງວິທີການຜະລິດກະສິກຳ, ໂດຍລວມເອົາການນຳໃຊ້ການຈຳລອງສະພາບອາກາດ ແລະ ເຕັກໂນໂລຊີໃນການພະຍາກອນອາກາດທີ່ເຊື່ອຖືໄດ້; (ii) ສົ່ງເສີມພະລັງງານທີ່ໃຊ້ນ້ຳໜ້ອຍເຊັ່ນ: ພະລັງງານແສງຕາເວັນ ແລະ ພະລັງງານລົມ; ແລະ (iii) ສົ່ງເສີມການສະໜອງນ້ຳປະປາ ແລະ ສຸຂະພິບານ ສຸຂະພິບານທີ່ໃຊ້ພະລັງງານໜ້ອຍ.

## D. ການເຮັດໃຫ້ຕົວເມືອງໜ້າຢູ່ຍິ່ງຂຶ້ນ

53. **ການສະໜອງແນວທາງການແກ້ໄຂບັນຫາແບບປະສົມປະສານ.** ເພື່ອຊ່ວຍສ້າງຕົວເມືອງໄປຕາມທິດສີຂຽວ, ມີຄວາມສາມາດແຂ່ງຂັນ, ມີຄວາມພ້ອມຮັບກັບການປ່ຽນແປງ ແລະ ທົ່ວເຖິງ, ADB ຈະສູ້ຊົນດຳເນີນໂຄງການທີ່ກວມຫຼາຍຂະແໜງການ ແລະ ຫຼາຍດ້ານ ເພື່ອສົ່ງເສີມສຸຂະພາບ, ການຂົນສົ່ງ, ຄວາມສະເໝີພາບລະຫວ່າງ ຍິງ-ຊາຍ ແລະ ຄວາມຍືນຍົງດ້ານສິ່ງແວດລ້ອມໃນຕົວເມືອງ. ໂຄງການຂອງ ADB ຈະເພັ່ງໜັກໃສ່ຄວາມໝັ້ນຄົງດ້ານນ້ຳ ແລະ ການອະນຸລັກສິ່ງແວດລ້ອມ ເພື່ອສະໜອງການບໍລິການນ້ຳປະປາ, ສຸຂະພິບານ ແລະ ການບໍລິການເກັບມ້ຽນຂີ້ເຫຍື້ອທີ່ມີລາຄາຖືກ, ປອດໄພ ແລະ ມີປະສິດທິພາບ. ADB ຈະສະໜັບສະໜູນລະບົບຂົນສົ່ງມວນຊົນເຊັ່ນ: ລະບົບລົດໄຟໃຕ້ດິນ ແລະ ລະບົບລົດເມທີ່ເຊື່ອມກັບທາງລົດຖີບແລະທາງຍ່າງ ເພື່ອໃຫ້ປະຊາຊົນ, ລວມທັງຜູ້ສູງອາຍຸ ແລະ ຄົນພິການ ສາມາດປ່ຽນສະຫລັບຮູບແບບການເດີນທາງໄດ້ໂດຍງ່າຍ ແລະ ປອດໄພ. ADB ຈະຊ່ວຍຕົວເມືອງໃນການພັດທະນາອົງກອນ ແລະ ການວາງແຜນນະໂຍບາຍທີ່ຖືກຕ້ອງ ແລະ ຊ່ວຍເຮັດໃຫ້ສະພາບແວດລ້ອມມີຄວາມສາມາດແຂ່ງຂັນ ແລະ ມີປະສິດທິຜົນເພີ່ມຂຶ້ນ. ໂຄງການທີ່ໄດ້ຮັບທຶນຈາກ ADB ຈະແນ່ໃສ່ສົ່ງເສີມການສ້າງສິ່ງແວດລ້ອມໃນຕົວເມືອງທີ່ມີຄວາມປອດໄພ ແລະ ດີຕໍ່ສຸຂະພາບສຳລັບຜູ້ຢູ່ອາໃສທຸກຄົນ.

54. **ການສະໜັບສະໜູນທຶນສຳລັບຕົວເມືອງຕ່າງໆ.** ADB ຈະຊ່ວຍຕົວເມືອງຕ່າງໆສຳຫລວດແຫຼ່ງທຶນໃໝ່ ແລະ ຂະຫຍາຍແຫຼ່ງທຶນທີ່ມີຢູ່ ລວມທັງຜ່ານການເກັບພາສີອະສັງຫາລິມະຊັບ, ຄ່າສາທາລະນຸປະໂພກ ຫລື ຄ່າຄຸ້ມຄອງບໍລິຫານ ແລະ ການໂອນຖ່າຍລະຫວ່າງລັດຖະບານທີ່ສາມາດຄາດຄະເນໄດ້. ADB ຈະຊ່ວຍລັດຖະບານທ້ອງຖິ່ນ ແລະ ໜ່ວຍງານບໍລິການສາທາລະນຸປະໂພກ ໃນການອອກພັນທະບັດເທດສະບານ ຫຼື ພັນທະບັດຂອງໂຄງການ ແລະ ສຳຫຼວດທາຮູບແບບການຮ່ວມມື ລະຫວ່າງ ພາກລັດ ແລະ ພາກເອກະຊົນ.

55. **ເພີ່ມທະວີການວາງຜັງເມືອງແບບ ມີສ່ວນຮ່ວມ ແລະ ເພື່ອໝົດທຸກຄົນ.** ADB ຈະສະໜັບສະໜູນການຄຸ້ມຄອງຕົວເມືອງໃນການຈັດລຳດັບຄວາມສຳຄັນຂອງການລົງທຶນ ແລະ ການພັດທະນາຜັງເມືອງແບບປະສົມປະສານ ໂດຍອີງຕາມຄວາມຕ້ອງການຂອງທ້ອງຖິ່ນ. ADB ຈະພິຈາລະນາຄວາມຕ້ອງການຕ່າງໆຂອງຜູ້ທີ່ດຳລົງຊີວິດ, ເຮັດວຽກ ແລະ ສຶກສາຢູ່ໃນຕົວເມືອງຜ່ານຂະບວນການແບບມີສ່ວນຮ່ວມທີ່ກວມເອົາພາກທຸລະກິດ, ສະຖາບັນການສຶກສາ ແລະ ອົງການຈັດຕັ້ງທາງສັງຄົມ ລວມທັງອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ. ADB ຈະຮ່ວມມືກັບຜູ້ທີ່ມີສ່ວນກ່ຽວຂ້ອງ ແລະ ຜູ້ໃຫ້ບໍລິການ ເພື່ອປັບປຸງ ແຜນຂອງຂະແໜງການ, ຄວາມເຊື່ອໝັ້ນຂອງສະຖາບັນ, ການອອກແບບແລະການສົ່ງມອບໂຄງການ ແລະ ຄວາມຍືນຍົງຂອງການບໍລິການ.

56. **ການເພີ່ມຄວາມພ້ອມຮັບມືກັບສະພາບອາກາດແລະການຄຸ້ມຄອງໄພພິບັດ.** ເພື່ອເພີ່ມຄວາມພ້ອມຮັບມືຂອງຕົວເມືອງ, ADB ຈະຊຸກຍູ້ການພິຈາລະນາເຖິງປັດໃຈການເຊື່ອມໂຍງລະຫວ່າງ ການປ່ຽນແປງດິນຟ້າອາກາດ ແລະ ຄວາມສ່ຽງຈາກໄພພິບັດ ເຂົ້າໃນຂະບວນການວາງແຜນຜັງເມືອງ. ADB ຈະສ້າງຂີດຄວາມສາມາດໃນການກຽມຄວາມພ້ອມຮັບມືກັບໄພພິບັດທີ່ມີປະສິດທິຜົນ ດ້ວຍການປັບປຸງລະບົບການເຕືອນໄພລ່ວງໜ້າ ແລະ ແຜນການຕອບໂຕ້ສຸກເສີນໃຫ້ເຂັ້ມແຂງເພື່ອຫຼີກລ້ຽງການສູນເສຍຊີວິດ.

## E. ການສົ່ງເສີມການພັດທະນາຊົນນະບົດ ແລະ ການຮັບປະກັນດ້ານສະບຽງອາຫານ

57. **ການປັບປຸງການເຊື່ອມຈອດກັບຕະຫຼາດ ແລະ ຕ່ອງໂສ້ມູນຄ່າເພີ່ມຂອງສິນຄ້າກະສິກຳ.** ADB ຈະສຸມໃສ່ການສ້າງເສັ້ນທາງໃນຊົນນະບົດ, ໂຄງສ້າງພື້ນຖານຕະຫລາດ ແລະ ສູນເກັບມ້ຽນຂົນສົ່ງ ແລະ ຈຳໜ່າຍສິນຄ້າກະສິກຳ ເພື່ອຊ່ວຍໃຫ້ຜູ້ຜະລິດ, ຜູ້ເຮັດທຸລະກິດ ແລະ ຜູ້ບໍລິໂພກຜະລິດຕະພັນກະສິກຳ ໃຫ້ສາມາດເຊື່ອມເຂົ້າກັບລະບົບອາຫານ ໃນລະດັບຊາດ, ພາກພື້ນ ແລະ ໂລກ. ການຫຼຸດຜ່ອນການສູນເສຍຜົນຜະລິດພາຍຫຼັງການເກັບກ່ຽວ ແລະ ການສົ່ງເສີມມູນຄ່າເພີ່ມທາງດ້ານກະສິກຳ ຈະຊ່ວຍເພີ່ມລາຍຮັບ ແລະ ເພີ່ມທະວີຄວາມໝັ້ນຄົງທາງດ້ານສະບຽງອາຫານໃນເຂດຊົນນະບົດ. ADB ຍັງຈະຊ່ວຍສະມາຊິກ ທີ່ເປັນປະເທດກຳລັງພັດທະນາປັບປຸງການເຊື່ອມຕໍ່ ແລະ ການຂົນສົ່ງ ລະຫວ່າງ ເຂດຊົນນະບົດ ແລະ ເຂດຕົວເມືອງ.

58. **ການເພີ່ມຜົນຜະລິດທາງດ້ານກະສິກຳ ແລະ ຄວາມໝັ້ນຄົງທາງດ້ານສະບຽງອາຫານ.** ADB ຈະຊ່ວຍບັນດາສະມາຊິກທີ່ເປັນປະເທດກຳລັງພັດທະນາເພີ່ມຜົນຜະລິດ ທາງດ້ານກະ

ສິກຳ ແລະ ຫຼຸດຜ່ອນຄວາມທຸກຍາກດ້ວຍການສົ່ງເສີມການສ້າງລາຍຮັບຈາກການເຮັດຟາມ ແລະ ບໍ່ເຮັດຟາມ. ADB ຈະສົ່ງເສີມການໝູນໃຊ້ເຕັກໂນໂລຊີທີ່ທັນສະໄໝເຊັ່ນ: ດາວທຽມ ແລະ ໂດຣນ ເພື່ອເພີ່ມປະສິດທິຜົນການນຳໃຊ້ຊົນລະປະທານ ແລະ ເພື່ອຮັບປະກັນການນຳໃຊ້ທີ່ດິນ ແລະ ຊັບພະຍາກອນນ້ຳຢ່າງຍືນຍົງ. ADB ຈະສົ່ງເສີມການເຮັດກະເສດແບບຊານສະຫຼາດຮູ້ທັນສະພາບອາກາດ, ລວມທັງແນວພັນພືດ ທີ່ທົນທານຕໍ່ໄພແຫ້ງແລ້ງແລະໄພນ້ຳຖ້ວມແລະ ການທົດນ້ຳແບບຢອດ. ການສະໜັບສະໜູນຂອງ ADB ຈະປັບປຸງມາດຕະຖານການຈັດການຊັບພະຍາກອນທຳມະຊາດ ດ້ວຍການດຳເນີນໂຄງການຄຸ້ມຄອງທີ່ດິນ, ການປູກປ່າ, ແລະ ການຄຸ້ມຄອງແຫຼ່ງນ້ຳ ເພື່ອຫຼຸດຜ່ອນການເຊາະເຈື່ອນຂອງດິນ ແລະ ປັບປຸງຄວາມຫຼາກຫຼາຍທາງຊີວະນາໆພັນ.

59. **ການເພີ່ມຄວາມປອດໄພຂອງອາຫານ.** ADB ຈະຊ່ວຍສະມາຊິກທີ່ເປັນປະເທດກຳລັງພັດທະນາ ໃນການກຳນົດ ແລະ ດຳເນີນນະໂຍບາຍ ແລະ ມາດຕະຖານຄວາມປອດໄພຂອງອາຫານ, ການສ້າງຫ້ອງທົດລອງຄວບຄຸມຄຸນນະພາບ ແລະ ນຳໃຊ້ເຕັກໂນໂລຊີດ້ານຂໍ້ມູນຂ່າວສານ ແລະ ການສື່ສານ ເພື່ອປັບປຸງການກວດສອບອາຫານຍ້ອນຫຼັງ ແລະ ພ້ອມທັງການຕິດຕາມກວດກາ. ADB ຈະຊ່ວຍສະໜັບສະໜູນໃນການຝຶກອົບຮົມ ແລະ ການສຶກສາ, ໂຄງການເຜີຍແຜ່ ແລະ ສ້າງຄວາມເຂົ້າໃຈໃຫ້ກັບຊຸມຊົນ ແລະ ການປະຕິບັດຕາມດ້ວຍຄວາມສະຫມັກໃຈ ຊຶ່ງກວມເອົາຜູ້ທີ່ມີສ່ວນກ່ຽວຂ້ອງໝົດທຸກພາກສ່ວນ ເປັນຕົ້ນແມ່ນ ບັນດາຊາວກະສິກອນ, ຜູ້ຜະລິດອຸດສາຫະກຳ ແລະ ຜູ້ບໍລິໂພກ.

## F. ການສ້າງຄວາມເຂັ້ມແຂງໃນການປົກຄອງບໍລິຫານ ແລະ ຄວາມອາດສາມາດດ້ານສະຖາບັນ

60. **ການສົ່ງເສີມການປະຕິຮູບລະບົບການປົກຄອງບໍລິຫານ ແລະ ຄວາມຍືນຍົງທາງດ້ານການເງິນ.** ການປົກຄອງບໍລິຫານທີ່ມີຄວາມຍຸຕິທຳ ແລະ ຄວາມອາດສາມາດດ້ານສະຖາບັນທີ່ເຂັ້ມແຂງ ແມ່ນພື້ນຖານຂອງການພັດທະນາປະເທດ. ADB ຈະຊ່ວຍສະມາຊິກທີ່ເປັນປະເທດກຳລັງພັດທະນາ ປັບປຸງການປົກຄອງບໍລິຫານ ແລະ ສ້າງສະພາບແວດລ້ອມທີ່ເໝາະສົມສຳລັບການເຕີບໂຕແບບ ຍືນຍົງ ດ້ວຍການເສີມສ້າງຄວາມເຂັ້ມແຂງດ້ານຄຸນນະພາບ ແລະ ຄວາມອາດສາມາດຂອງສະຖາບັນຂອງພາກລັດ ເພື່ອດຳເນີນການປະຕິຮູບບັນດານະໂຍບາຍຕ່າງໆ ແລະ ສົ່ງເສີມການພັດທະນາພາກເອກະຊົນ. ຜ່ານການປ່ອຍກູ້ ທີ່ອີງໃສ່ນະໂຍບາຍ, ການໃຫ້ກູ້ຢືມອີງຕາມຜົນໄດ້ຮັບ, ການໃຫ້ກູ້ຢືມແກ່ໂຄງການ ແລະ ການຊ່ວຍເຫຼືອທາງດ້ານວິຊາການ, ADB ຈະສືບຕໍ່ສະຫນັບສະຫນູນການປະຕິຮູບລາຍຈ່າຍຂອງພາກລັດ; ການເກັບລາຍຮັບ ຊຶ່ງລວມທັງລະບົບພາສີ ແລະ ການບັງຄັບໃຊ້; ແລະ ຕະຫຼາດທຶນ. ADB ຈະສະໜັບສະໜູນຄວາມພະຍາຍາມ ຂອງລັດຖະບານໃນການລົບລ້າງການສໍ້ລາດບັງຫຼວງ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ບັນດາກິດຈະກຳຕ້ານການຟອກເງິນ. ນອກຈາກນີ້, ຍັງຈະຊ່ວຍບັນດາປະເທດຕ່າງໆ ຍຶດໝັ້ນຕາມຄວາມຄິດລິເລີ່ມຂອງສາກົນກ່ຽວກັບຄວາມໂປ່ງໃສດ້ານພາສີ. ADB ຈະຊ່ວຍຫຼາຍປະເທດ ໃນການສ້າງຄວາມພ້ອມຮັບການປ່ຽນແປງ ແລະ ຕອບຮັບຕໍ່ກັບເຫດການກະທົບທາງເສດຖະກິດຢ່າງກະທັນຫັນໃຫ້ທັນເວລາ ພາຍໃຕ້ການຮ່ວມມືຢ່າງໃກ້ຊິດ ກັບຄູ່ຮ່ວມພັດທະນາຕ່າງໆ ເຊັ່ນ ກອງທຶນການເງິນສາກົນເປັນຕົ້ນ.

61. **ການສ້າງຄວາມເຂັ້ມແຂງໃຫ້ແກ່ການບໍລິການ.** ADB ຈະສົ່ງເສີມການບໍລິການຂອງພາກລັດໃຫ້ມີປະສິດທິພາບ, ທັນເວລາ ແລະ ປອດຈາກການສໍ້ລາດບັງຫຼວງ ເພື່ອສົ່ງເສີມໃຫ້ມີຄວາມຮັບຜິດຊອບຫຼາຍຂຶ້ນຕໍ່ກັບການໃຫ້ການບໍລິການຂອງຕົນ. ນອກຈາກນັ້ນ, ADB ຈະນຳໃຊ້ເຕັກໂນໂລຊີ ຂໍ້ມູນຂ່າວສານ ແລະ ການສື່ສານ ໃຫ້ຫຼາຍຂຶ້ນ ເພື່ອປັບປຸງຄຸນນະພາບການໃຫ້ການບໍລິການຂອງພາກລັດ. ADB ຈະສົ່ງເສີມການປະຕິຮູບນະໂຍບາຍ, ລະບຽບຫຼັກການ ແລະ ກ່ຽວກັບຄ່າທຳນຽມຕ່າງໆ ເພື່ອສົ່ງເສີມຄວາມຍືນຍົງທາງດ້ານການເງິນ ແລະ ການດຳເນີນງານທີ່ມີປະສິດທິພາບ ແລະ ພ້ອມທັງການບູລະນະຮັກສາພື້ນຖານໂຄງລ່າງ ແລະ ການບໍລິການອື່ນໆ. ADB ຈະເຮັດວຽກຮ່ວມກັບລັດວິສາຫະກິດ ແລະ ໜ່ວຍງານຍ່ອຍຕ່າງໆທີ່ມີສ່ວນຮັບຜິດຊອບເປັນສ່ວນໃຫຍ່ໃນການໃຫ້ການບໍລິການຂອງພາກລັດ ເພື່ອປັບປຸງຄວາມສາມາດ ໃນການຄຸ້ມຄອງດ້ານການເງິນ ແລະ ການປົກຄອງບໍລິຫານພາຍໃນຂອງພວກເຂົາ ຊຶ່ງຈະເຮັດໃຫ້ພວກເຂົາສາມາດເຂົ້າເຖິງທຶນ ແລະ ການຄ້າໄດ້ຕາມເງື່ອນໄຂທີ່ກຳນົດໄວ້.

62. **ການສ້າງຂີດຄວາມສາມາດ ແລະ ມາດຕະຖານໃຫ້ເຂັ້ມແຂງ.** ADB ຈະຍົກສູງການປົກປ້ອງສິ່ງແວດລ້ອມ ແລະ ສັງຄົມ ໂດຍຍຶດໝັ້ນຕາມມາດຕະຖານ ການຈັດຊື້-ຈັດຈ້າງ ແລະ ການຄຸ້ມຄອງ ການເງິນ, ພ້ອມກັບການຈັດຕັ້ງປະຕິບັດບັນດາມາດຕະການ ຕ້ານການສໍ້ລາດບັງຫຼວງໃນທຸກໆໂຄງການ ແລະ ໂຄງການແຜນງານຂອງ ADB. ADB ຈະປະກອບສ່ວນໃນການຮັກສາ ແລະ ຍົກລະດັບມາດຕະຖານ ທ່າມກາງຊຸມຊົນພັດທະນາຂອງສາກົນ. ADB ຈະຊ່ວຍສະມາຊິກທີ່ເປັນປະເທດກຳລັງພັດທະນາ ໃນການດຳເນີນການປະຕິຮູບ ແລະ ການສ້າງລະບົບຂອງປະເທດໃນຂົງເຂດເຫຼົ່ານີ້. ADB ຈະສືບຕໍ່ຊ່ວຍເຫຼືອໜ່ວຍງານຄຸ້ມຄອງໂຄງການ ແລະ ໜ່ວຍງານຈັດຕັ້ງປະຕິບັດໂຄງການ ໃນການເສີມສ້າງຄວາມອາດສາມາດໃຫ້ແກ່ເຂົາເຈົ້າໃນ ການວາງແຜນ, ການອອກແບບ, ການເງິນ ແລະ ການຈັດຕັ້ງປະຕິບັດໂຄງການຂອງ ADB, ຊຶ່ງລວມເຖິງການນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ, ການຫຼຸດຜ່ອນຄ່າໃຊ້ຈ່າຍໃນວົງຈອນຊີວິດຂອງໂຄງການ, ການຮັບປະກັນໃຫ້ມີທຶນພ້ອມແກ່ການລົງທຶນ ແລະ ການບຳລຸງຮັກສາຊັບສິນທີ່ເປັນພື້ນຖານໂຄງລ່າງ.

## G. ການຫັດແໜ້ນການຮ່ວມມື ແລະ ການເຊື່ອມໂຍງພາກພື້ນ

63. **ການເພີ່ມທະວີການເຊື່ອມຈອດ ແລະ ຄວາມສາມາດແຂ່ງຂັນ.** ADB ຈະປັບປຸງການເຊື່ອມຈອດໃນພາກພື້ນ ແລະ ເພີ່ມທະວີຄວາມສາມາດໃນການແຂ່ງຂັນຂອງ ສະມາຊິກທີ່ເປັນປະເທດກຳລັງພັດທະນາ ດ້ວຍການສະໜອງຕາມຄວາມຕ້ອງການທາງດ້ານພື້ນຖານໂຄງລ່າງ ຜ່ານແດນ. ADB ຈະສະໜັບສະໜູນການປຶກສາຫາລື ທາງດ້ານນະໂຍບາຍ ແລະ ການປະສານງານ ລະຫວ່າງ ບັນດາສະມາຊິກທີ່ເປັນປະເທດກຳລັງພັດທະນາ ເພື່ອຫັນປ່ຽນເສັ້ນທາງການຂົນສົ່ງໃຫ້ເປັນແລວທາງການຄ້າ ແລະ ເສດຖະກິດ. ການເຊື່ອມຕໍ່ຂອງການຂົນສົ່ງໃນຫຼາຍຮູບແບບ ແລະ ການເຊື່ອມຕໍ່ຂອງຂະແໜງພະລັງງານ ຈະໄດ້ຮັບການເສີມສ້າງໃຫ້ເຂັ້ມແຂງຂຶ້ນໃນທົ່ວອະນຸພາກພື້ນ. ຈະໃຫ້ຄວາມເອົາໃຈໃສ່ເປັນພິເສດ ຕໍ່ກັບຄວາມຕ້ອງການຂອງບັນດາປະເທດທີ່ບໍ່ມີຊາຍແດນຕິດຈອດກັບທະເລ ແລະ ປະເທດທີ່ເປັນເກາະ ຊຶ່ງມີຖານເສດຖະກິດຂະໜາດນ້ອຍ. ການສະໜັບສະໜູນຂອງ ADB ຈະສ້າງຄວາມສະດວກໃນການເຂົ້າຮ່ວມຂອງສະມາຊິກທີ່ເປັນປະເທດກຳລັງພັດທະນາ ໃນຕ່ອງໂສ້ມູນຄ່າຂອງພາກພື້ນ ແລະ ໂລກ. ການດຳເນີນງານການຮ່ວມມື ແລະ ການເຊື່ອມໂຍງພາກພື້ນຈະສົ່ງເສີມການຄ້າກະສິກຳ ແລະ ການທ່ອງທ່ຽວໃນລະດັບພາກພື້ນ.

64. **ການສົ່ງເສີມສາທາລະນຸປະໂພກຂອງພາກພື້ນ.** ADB ຈະເພີ່ມການຊ່ວຍເຫຼືອເຂົ້າໃສ່ດ້ານສາທາລະນຸປະໂພກຂອງພາກພື້ນ ແລະ ການດຳເນີນງານຮ່ວມກັນ ເພື່ອຫຼຸດຜ່ອນຄວາມສ່ຽງຜ່ານແດນກ່ຽວກັບ ການປ່ຽນແປງດິນຟ້າອາກາດ, ມົນລະພິດທາງສິ່ງແວດລ້ອມ, ຄວາມໝັ້ນຄົງດ້ານພະລັງງານ ແລະ ນ້ຳ, ແລະ ເຊື້ອພະຍາດຕິດແປດຕ່າງໆ. ສິ່ງນີ້ແມ່ນຮຽກຮ້ອງໃຫ້ມີການຮ່ວມມືໃນລະດັບພາກພື້ນໃຫ້ຫຼາຍຂຶ້ນໃນຫຼາຍຂົງເຂດເຊັ່ນ: ການຈັດຫາເງິນທຶນໃນການຈັດການກັບຄວາມສ່ຽງຈາກໄພພິບັດ, ການພັດທະນາແຫຼ່ງນ້ຳ, ນະໂຍບາຍດ້ານສາທາລະນະສຸກ, ມາດຕະຖານດ້ານສຸຂະອະນາໄມ ແລະ ສຸຂະອະນາໄມພືດ ແລະ ການກັກກັນ.

65. **ການສ້າງຄວາມເຂັ້ມແຂງໃຫ້ແກ່ການຮ່ວມມືໃນຂະແໜງການເງິນ.** ADB ຈະສ້າງຄວາມເຂັ້ມແຂງໃຫ້ແກ່ການຮ່ວມມືໃນດ້ານຂະແໜງການເງິນ ໂດຍການພັດທະນາຕະຫຼາດພັນທະບັດໃນລະດັບພາກພື້ນ, ສ້າງຄວາມສະດວກໃຫ້ແກ່ຂອບວຽກຮ່ວມກັນ ໃນດ້ານລະບຽບການ ແລະ ການຄຸ້ມຄອງທາງດ້ານການເງິນ, ແລະ ສົ່ງເສີມບັນດາມາດຕະການທີ່ຈະປະສານການທຳທຸລະກຳທາງ ດ້ານການເງິນຜ່ານແດນລະຫວ່າງປະເທດ. ADB ຈະສະໜັບສະໜູນແນວທາງປະຕິບັດງານຮ່ວມ ລະຫວ່າງ ບັນດາສະມາຊິກ ທີ່ເປັນປະເທດກຳລັງພັດທະນາດ້ວຍກັນ ເພື່ອສົ່ງເສີມຄວາມໝັ້ນຄົງທາງດ້ານການເງິນ ແລະ ເສດຖະກິດໃນພາກພື້ນ. ສິ່ງນີ້ຈະຊ່ວຍໃຫ້ ສະມາຊິກທີ່ເປັນປະເທດກຳລັງພັດທະນາ ໄດ້ເຂົ້າຮ່ວມໃນກອງປະຊຸມລະດັບພາກພື້ນແລະໂລກກ່ຽວກັບຄວາມໂປ່ງໃສດ້ານພາສີ ແລະ ບັນດາກິດຈະກຳ ຕ້ານການຟອກເງິນ ແລະ ການສະໜອງເງິນທຶນໃຫ້ແກ່ການກໍ່ການຮ້າຍ.

66. **ການເສີມຂະຫຍາຍຄວາມຄິດລິເລີ່ມຂອງອະນຸພາກພື້ນ.** ນັບຕັ້ງແຕ່ຕົ້ນຊຸມປີ 1990 ເປັນຕົ້ນມາ, ADB ໄດ້ສົ່ງເສີມຫຼາຍເວທີຂອງການຮ່ວມມືພາຍໃນອະນຸພາກພື້ນ ເຊັ່ນ: ແຜນງານອະນຸພາກພື້ນແມ່ນ້ຳຂອງ (GMS), ແຜນງານການຮ່ວມມືເສດຖະກິດພາກພື້ນອາຊີກາງ (CAREC) ແລະ ແຜນງານການຮ່ວມມືເສດຖະກິດອະນຸພາກພື້ນອາຊີໃຕ້ (SASEC). ADB ໄດ້ເຂົ້າຮ່ວມປະກອບສ່ວນກອງປະຊຸມບັນດາປະເທດໝູ່ເກາະໃນປາຊີຟິກ ແລະ ອາຊຽນ. ຜ່ານການລິເລີ່ມເຫຼົ່ານີ້, ADB ຈະຂະຫຍາຍການປຶກສາຫາລືທາງດ້ານນະໂຍບາຍໃນຂົງເຂດເຊັ່ນ: ຕ່ອງໂສ້ມູນຄ່າດ້ານກະສິກຳ, ການສຶກສາ, ການພັດທະນາທັກສະ, ຕະຫຼາດແຮງງານ ແລະ ການບໍລິການດ້ານສາທາລະນະສຸກ. ADB ຈະສ້າງຄວາມສະດວກໃຫ້ແກ່ການແລກປ່ຽນຄວາມຮູ້ ແລະ ການຮ່ວມມື ລະຫວ່າງອະນຸພາກພື້ນດ້ວຍກັນ ແລະ ກໍ່ຈະເຮັດວຽກຮ່ວມກັບບັນດາຂໍ້ລິເລີ່ມໃໝ່ຂອງພາກພື້ນແລະສາກົນ.

# VII. ຂະຫຍາຍການດຳເນີນງານກັບພາກເອກະຊົນ

67. **ການເພີ່ມທະວີການດຳເນີນງານກັບພາກເອກະຊົນ ເພື່ອສະໜັບສະໜູນເຈັດບູລິມະສິດຂອງການດຳເນີນງານ.** ADB ຈະຂະຫຍາຍ ແລະ ກະຈາຍການດຳເນີນງານກັບພາກເອກະຊົນຂອງຕົນ ເພື່ອສະໜັບສະໜູນເຈັດບູລິມະສິດຂອງການດຳເນີນງານ. ພາກເອກະຊົນໄດ້ລະດົມຊັບພະຍາກອນ ເພື່ອການພັດທະນາ; ການສ້າງວຽກເຮັດງານທຳ; ການຊ່ວຍຊຸກຍູ້ນະວັດຕະກຳ ແລະ ປະສິດທິຜົນ ໃຫ້ກັບສະມາຊິກທີ່ເປັນປະເທດກຳລັງພັດທະນາ; ແລະ ນຳເອົາກຸ່ມຄົນທຸກຍາກ, ແມ່ຍິງ ແລະ ກຸ່ມທີ່ດ້ອຍໂອກາດ ເຂົ້າສູ່ເສດຖະກິດຫຼັກ. ພາກເອກະຊົນຍັງມີຄວາມສຳຄັນໃນການຊ່ວຍແກ້ໄຂຊ່ອງຫວ່າງຂອງຕະຫຼາດທີ່ມີຂະໜາດໃຫ່ຍທີ່ມີຢູ່ທົ່ວພາກພື້ນອາຊີ ແລະ ປາຊີຟິກ ຈາກການຈັດຫາເງິນທຶນເພື່ອການຄ້າໄລຍະສັ້ນ[33] ຫາການຈັດຫາເງິນທຶນສຳລັບວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນໄລຍະກາງ.[34] ຊັບພະຍາກອນຂອງພາກເອກຊົນ ຍັງເປັນທີ່ຮຽກຮ້ອງຕ້ອງການເພື່ອເຕີມເຕັມຄວາມຕ້ອງການທາງດ້ານການເງິນໄລຍະຍາວ ສຳລັບພື້ນຖານໂຄງລ່າງ ໃນພາກພື້ນ.[35]

68. **ເປົ້າໝາຍການດຳເນີນງານກັບພາກເອກະຊົນ.** ການດຳເນີນງານກັບພາກເອກະຊົນຂອງ ADB ຈະໃຫ້ບັນລຸ ໜຶ່ງສ່ວນສາມຂອງຈຳນວນຕົວເລກການດຳເນີນງານທັງໝົດຂອງ ADB ພາຍໃນປີ 2024.

69. **ການໄດ້ຮັບມອບໝາຍສອງໜ້າທີ່ຂອງ ADB.** ບັນດາການດຳເນີນງານກັບພາກເອກະຊົນຂອງ ADB ຈະຊ່ວຍເຕີມເຕັມຊ່ອງຫວ່າງຂອງຕະຫຼາດໃນພາກພື້ນ ແລະ ປະກອບສ່ວນຊຸກຍູ້ໃຫ້ພາກເອກະຊົນມີກຳລັງເພີ່ມຂຶ້ນໃນການທີ່ເຮັດໃຫ້ຜົນຂອງການພັດທະນາເປັນຮູບປະທຳ. ADB ຈະສູ້ຊົນໃຫ້ເກີດຜົນກະທົບຈາກການພັດທະນາ ໃຫ້ເປັນຈຸດປະສົງຫຼັກຂອງການດຳເນີນງານກັບພາກເອກະຊົນຂອງຕົນ. ນອກນັ້ນ, ADB ກໍ່ຈະຮັບປະກັນໃຫ້ມີຜົນກຳໄລ ແລະ ມີຄວາມຍືນຍົງທາງການຄ້າ ໂດຍຄຳນຶງເຖິງຄວາມສຳເລັດຂອງການຄ້າ ແມ່ນຕ້ອງສອດຄ່ອງກັບຜົນໄດ້ຮັບຂອງການພັດທະນາ.

70. **ປັດໃຈເພີ່ມຕື່ມຕໍ່ການດຳເນີນງານກັບພາກເອກະຊົນຂອງ ADB.** ບັນດາພາກເອກະຊົນ ເລືອກທີ່ຈະເຮັດວຽກກັບສະຖາບັນການເງິນເພື່ອການ ພັດທະນາດັ່ງເຊັ່ນ ADB ຍ້ອນວ່າ ສະຖາບັນເຫຼົ່ານີ້ ສາມາດຊ່ວຍປັບປຸງມາດຕະຖານ ດ້ານສິ່ງແວດລ້ອມ, ສັງຄົມ ແລະ ການປົກຄອງບໍລິຫານ; ການສະໜອງເງິນທຶນ ທີ່ບໍ່ສາມາດຫາໄດ້ຈາກຕະຫຼາດດ້ວຍເງື່ອນໄຂທີ່ສົມເຫດສົມຜົນ; ປັບປຸງການອອກແບບໂຄງການ ແລະ ຍົກລະດັບຜົນໄດ້ຮັບຂອງການພັດທະນາ; ແລະ ຫຼຸດຜ່ອນບັນດາຄວາມສ່ຽງຕ່າງໆທີ່ຮູ້ຈັກກັນດີ.[36] ADB ຈະພະຍາຍາມຫາທາງເພື່ອສືບຕໍ່ໃຊ້ປະໂຫຍດຈາກຂໍ້ໄດ້ປຽບເຫຼົ່ານີ້. ນອກຈາກການສະໜອງເງິນທຶນຂອງຕົນເອງແລ້ວ, ADB ຈະລວບລວມເງິນທຶນຈາກຕະຫຼາດໃຫ້ໄດ້ຈຳນວນຫຼາຍ. ຜ່ານການດຳເນີນງານກັບພາກເອກະຊົນ, ADB ຈະພະຍາຍາມຫາທາງເພື່ອສົ່ງເສີມການພັດທະນາທີ່ຍືນຍົງທາງດ້ານການຄ້າຜ່ານມາດຕະຖານສູງຂອງ ການປົກຄອງບໍລິຫານອົງກອນ, ຄວາມສັດຊື່ສຸດຈະລິດ, ຄວາມໂປ່ງໃສ ແລະ ການປົກປ້ອງສັງຄົມ ແລະ ສິ່ງແວດລ້ອມ; ແລະ ແກ້ໄຂບັນຫາຄວາມລົ້ມເຫລວຂອງຕະຫຼາດໂດຍ ບໍ່ບິດເບືອນຈາກສະພາບຄວາມເປັນຈິງຂອງຕະຫຼາດເຫລົ່ານັ້ນ.

71. **ການກະກຽມຄວາມພ້ອມດ້ານການເງິນໃຫ້ກັບໂຄງການ ພາກການກະກຽມຄວາມພ້ອມດ້ານການເງິນໃຫ້ກັບໂຄງການ**

> ADB ຈະສູ້ຊົນໃຫ້ເກີດຜົນກະທົບຈາກການພັດທະນາ ໃຫ້ເປັນຈຸດປະສົງຫຼັກຂອງການດຳເນີນງານກັບພາກເອກະຊົນຂອງຕົນ. ນອກນັ້ນ, ADB ກໍ່ຈະຮັບປະກັນໃຫ້ມີຜົນກຳໄລ ແລະ ມີຄວາມຍືນຍົງທາງການຄ້າ ໂດຍຄຳນຶງເຖິງ ຄວາມສຳເລັດຂອງການຄ້າ ແມ່ນຕ້ອງສອດຄ່ອງກັບຜົນໄດ້ຮັບຂອງການພັດທະນາ.

---

[33] A Di Caprio, K Kim, and S Beck 2017. ການສຳຫຼວດການຂາດດຸນການຄ້າ, ການຂະຫຍາຍຕົວ ແລະ ການສຳຫຼວດວຽກ. *ບົດສະຫຼຸບ ADB* . ເລກທີ 83. ມະນີລາ: ADB.

[34] P. Vandenberg, P. Chantapacdepong, ແລະ N. Yoshino, eds. 2016. *ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປະເທດທີ່ກຳລັງພັດທະນາໃນອາຊີ: ແນວທາງໃໝ່ເພື່ອເອົາຊະນະຄວາມລົ້ມເຫລວຂອງຕະຫຼາດ.* ໂຕກຽວ. ສະຖາບັນທະນາຄານພັດທະນາອາຊີ.

[35] ADB. 2017. *ການຕອບສະໜອງ ຄວາມຕ້ອງການພື້ນຖານໂຄງລ່າງຂອງອາຊີ.* ມະນີລາ.

[36] ບໍລິສັດເງິນທຶນລະຫວ່າງປະເທດ 2011. *ສະຖາບັນການເງິນສາກົນ ແລະ ການພັດທະນາຜ່ານພາກເອກະຊົນ.* ວໍຊິງຕັນ, ດີຊີ

**ພາກເອກະຊົນ.** ADB ຈະຊ່ວຍໃນການກະກຽມຄວາມພ້ອມດ້ານການເງິນໃຫ້ກັບໂຄງການທີ່ສາມາດ ດຶງດູດການລົງທຶນຈາກພາກເອກະຊົນໄດ້ດ້ວຍ (i) ການດຳເນີນການບົ່ມຄຸນນະພາບ ແລະ ການກະກຽມໂຄງການ; (ii) ການປັບໃຊ້ທຶນໃຫ້ຫຼາຍຂຶ້ນໃນອົງກອນ, ບັນດາໂຄງການ, ແລະ ບັນດາສະຖາບັນການເງິນ; (iii) ການຊ່ວຍບັນດາໂຄງການໃຫ້ດຳເນີນໄປໄດ້ຜ່ານການມີສ່ວນຮ່ວມຂອງ ADB, ການຊ່ວຍເຫຼືອທາງດ້ານວິຊາການ, ການເງິນແບບປະສົມປະສານ (ດ້ວຍກອງທຶນຊ່ວຍເຫຼືອແບບເງື່ອນໄຂຜ່ອນຜັນ ແລະ ກອງທຶນອື່ນໆທີ່ຢູ່ພາຍໃຕ້ການບໍລິຫານຂອງ ADB) ແລະ ເຄື່ອງມືອື່ນໆເຊັ່ນການອຳນວຍຄວາມສະດວກດ້ານການເງິນ ທີ່ເປັນຊ່ອງຫວ່າງໃຫ້ກຽມພ້ອມສາມາດນຳໄປປະຕິບັດໄດ້; (iv) ການທົດສອບວິທີການໃໝ່, ຮູບແບບຈຳລອງໃໝ່ ແລະ ເຕັກໂນໂລຊີໃຫມ່; ແລະ (v) ການປັບປຸງປະຫວັດຄວາມສ່ຽງຂອງໂຄງການ ໂດຍນຳໃຊ້ການປັບປຸງດ້ານສິນເຊື່ອ ແລະ ຜະລິດຕະພັນການຈັດການຄວາມສ່ຽງຂອງ ADB.

72. **ການຂະຫຍາຍຂະແໜງພື້ນຖານໂຄງລ່າງ ແລະ ການກະຈາຍໄປສູ່ຂະແໜງການອື່ນໆ.** ADB ຈະສືບຕໍ່ສົ່ງເສີມການເຂົ້າຮ່ວມຂອງພາກເອກະຊົນໃນການ ສ້າງພື້ນຖານໂຄງລ່າງ ຜ່ານການລົງທຶນຂອງອົງກອນ ແລະ ໂຄງການ. ການດຳເນີນງານກັບພາກເອກະຊົນ ຈະຂະຫຍາຍການສະໜັບສະໜູນສຳລັບ (i) ພະລັງງານທົດແທນ ແລະ ໂຄງລ່າງພື້ນຖານອື່ນໆເປັນຕົ້ນແມ່ນການຂົນສົ່ງ, ໂດຍສະເພາະແມ່ນການຂົນສົ່ງໃນຕົວເມືອງ; (ii) ການສະຫນອງນໍ້າ, ສຸຂະພິບານ ແລະ ການສະໜອງເງິນທຶນໃນການຈັດການກັບສິ່ງເສດເຫຼືອ ເພື່ອສະໜັບສະໜູນເມືອງໃຫ້ໜ້າຢູ່; ແລະ (iii) ເຕັກໂນໂລຊີການສື່ສານໃຫມ່ ທີ່ແນໃສ່ເຂດພື້ນທີ່ຫ່າງໄກສອກຫຼີກ ແລະ ມີພົນລະເມືອງຫຼາຍ. ADB ຈະເພີ່ມການສະໜັບສະໜູນທາງການເງິນຂອງຕົນໃຫ້ແກ່ການຜະລິດກະສິກຳ ເພື່ອການຄ້າ. ADB ຍັງຈະສະໜັບສະໜູນຂະແໜງສັງຄົມເຊັ່ນ: ສາທາ ແລະ ສຶກສາຜ່ານການລົງທຶນຈາກພາກເອກະຊົນທີ່ສຸມໃສ່ຮູບແບບໃຫມ່ ແລະ ແນວທາງແກ້ໄຂທີ່ເຫມາະສົມ.

73. **ການຂະຫຍາຍຂອບເຂດທາງພູມສາດ.** ADB ຈະຂະຫຍາຍການດຳເນີນງານກັບພາກເອກະຊົນຂອງຕົນ ໃນຕະຫຼາດໃຫມ່ແລະນອນໃນແຖວໜ້າ, ເຊິ່ງລວມເຖິງ ຕະຫຼາດທີ່ມີຄວາມທ້າທາຍເຊັ່ນ: ປະເທດທີ່ມີສະຖານະການອ່ອນໄຫວ ແລະ ໄດ້ຮັບຜົນກະທົບຈາກຄວາມຄັດແຍ່ງ ແລະ ບັນດາລັດທີ່ເປັນເກາະນ້ອຍທີ່ກຳລັງພັດທະນາ. ໃນຂະບວນການດັ່ງກ່າວ, ADB ຈະພິຈາລະນາສັນຍາທີ່ມີຂະໜາດນ້ອຍກວ່າເມື່ອທຽບກັບຄວາມສ່ຽງ ແລະ ຜົນກະທົບທາງດ້ານການພັດທະນາທີ່ອາດມີສູງກວ່າ, ລວມທັງຮູບແບບທຸລະກິດແບບທົ່ວເຖິງ.

74. **ການສະໜັບສະໜູນທາງດ້ານການເງິນແບບທົ່ວເຖິງໃຫ້ເພີ່ມຫຼາຍຂຶ້ນ.** ການດຳເນີນງານກັບພາກເອກະຊົນຂອງ ADB ຈະພັດທະນາຂະແໜງການເງິນໃຫ້ກັບ ສະມາຊິກທີ່ເປັນປະເທດກຳລັງພັດທະນາ ເພື່ອບັນລຸເປົ້າຫມາຍການເງິນແບບທົ່ວເຖິງໃຫ້ເພີ່ມຫຼາຍຂຶ້ນ; ຄວາມສະເໝີພາບຍິງ - ຊາຍ; ການສ້າງວຽກເຮັດງານທຳ; ແລະ ການເຂົ້າເຖິງທີ່ພັກອາໃສໃນລາຄາທີ່ເໝາະສົມ, ການປະກັນໄພ ແລະ ການທ້ອນເງິນ. ເພື່ອແກ້ໄຂບັນຫາຊ່ອງຫວ່າງທາງການເງິນໃນໄລຍະສັ້ນ, ADB ຈະເພີ່ມການສະຫນັບສະຫນູນຂອງຕົນໃຫ້ແກ່ບັນດາທະນາຄານ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານໃນບັນດາສະມາຊິກທີ່ເປັນປະເທດກຳລັງພັດທະນາ ເພື່ອຊ່ວຍເພີ່ມທະວີຄວາມສາມາດ, ຄຸນນະພາບ ແລະ ການເຂົ້າເຖິງ ໂດຍສະເພາະແມ່ນປະຊາກອນທີ່ມີລາຍໄດ້ຕໍ່າຂອງບັນດາປະເທດສະມາຊິກເຫຼົ່ານັ້ນ. ADB ຈະຂະຫຍາຍການນຳໃຊ້ ແລະ ການເຂົ້າເຖິງບັນດາໂຄງການຂະແໜງການເງິນຕ່າງໆເຊັ່ນ: ການເງິນເພື່ອການຄ້າ, ການສະໜອງທຶນເພື່ອຕ່ອງໂສ້ການສະໜອງ ແລະ ການເງິນຈຸລະພາກ.

75. **ການສ້າງຄວາມເຂັ້ມແຂງໃຫ້ແກ່ຂະແໜງການເງິນ ແລະ ຕະຫຼາດທຶນ.** ເພື່ອແກ້ໄຂບັນດາຊ່ອງຫວ່າງທາງການເງິນໄລຍະກາງ ຫາ ໄລຍະຍາວ, ADB ຈະຊ່ວຍພັດທະນາຕະຫຼາດພັນທະບັດ ໂດຍສະເພາະແມ່ນພັນທະບັດໂຄງການ ລວມທັງການປັບປຸງການປ່ອຍສິນເຊື່ອໂດຍກົງ ແລະ ການພິຈາລະນາຮັບປະກັນໄພໂດຍຜ່ານການດຳເນີນງານກັບພາກເອກະຊົນ ກໍ່ຄືກັບກັບການປ່ອຍກູ້ທີ່ອີງໃສ່ນະໂຍບາຍ, ທຶນຊ່ວຍເຫຼືອທາງດ້ານວິຊາການ, ການພັດທະນາຄວາມອາດສາມາດ ແລະ ກິດຈະກຳຄວາມຮູ້ຕ່າງໆ. ADB ຈະສືບຕໍ່ການຮ່ວມມືໃຫ້ຫຼາຍຂຶ້ນກັບຫ່ວຍງານເຮັດວຽກກ່ຽວກັບການລິເລີ່ມ ໃນຕະຫຼາດພັນທະບັດອາຊີຂອງກຸ່ມອາຊຽນ + 3 ແລະ ການຄໍ້າປະກັນສິນເຊື່ອ ແລະ ສິ່ງອຳນວຍຄວາມສະດວກດ້ານການລົງທຶນ.[37]

76. **ການນຳໃຊ້ກອງທຶນພາກເອກະຊົນເພື່ອຂະຫຍາຍການເຂົ້າເຖິງ.** ກອງທຶນພາກເອກະຊົນ ເປັນວິທີການທີ່ສຳຄັນສຳລັບການຊ່ວຍເຫຼືອຂອງ ADB ເນື່ອງຈາກການໃຊ້ປະໂຫຍດຢ່າງຫຼວງຫຼາຍ ແລະ ມີຜົນກະທົບຕໍ່ການລະດົມທຶນ. ADB ຈະສຸມໃສ່ພື້ນຖານໂຄງລ່າງ, ຂະແໜງການເງິນ ແລະ ການປ່ຽນແປງດິນຟ້າອາກາດ.

77. **ການເພີ່ມການສະຫນັບສະຫນູນໃນການຮ່ວມມືລະຫວ່າງພາກລັດ - ພາກເອກະຊົນ.** ADB ຈະຂະຫຍາຍການສະຫນັບສະຫນູນຂອງຕົນແກ່ການຮ່ວມມື ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໂດຍ (i) ການຊ່ວຍເຫຼືອສະໜັບສະໜູນດ້ານນະໂຍບາຍ ແລະ ການສ້າງ ຄວາມອາດສາມາດ; (ii) ການຊ່ວຍ ສ້າງສະພາບແວດລ້ອມທີ່ເຫມາະສົມ; (iii) ການ ໃຫ້ບໍລິການຄຳແນະນຳດ້ານການເຮັດທຸລະກຳ; (iv) ການຊ່ວຍເຫຼືອໃນການພັດທະນາໂຄງການ, ໂຄງສ້າງ ແລະ ການກະກຽມໂຄງການ; ແລະ (v) ການສະຫນອງເງິນທຶນໃຫ້ແກ່ໂຄງການ

[37] ອາຊຽນ + 3 ປະກອບດ້ວຍ 10 ປະເທດສະມາຊິກອາຊຽນລວມທັງຍີ່ປຸ່ນ, ສປຈີນ ແລະ ສາທາລະນະລັດເກົາຫຼີ.

ຜ່ານການໃຫ້ເງິນກູ້ ແກ່ພາກລັດ ແລະ ພາກເອກະຊົນ. ໃນຖານະເປັນຜູ້ພັດທະນາໂຄງການ, ADB ຈະເພີ່ມການບໍລິການໃຫ້ຄຳແນະນຳກ່ຽວກັບການເຮັດທຸລະກຳ ເພື່ອຊ່ວຍເຫຼືອລູກຄ້າສ້າງໂຄງສ້າງຂອງການຮ່ວມມື ລະຫວ່າງ ພາກລັດ ແລະ ເອກະຊົນ ແລະ ພັດທະນາແຜນງານໂຄງການໃຫ້ເຂັ້ມແຂງ.

78. **ການນຳໃຊ້ວິທີການໜຶ່ງ ADB.** ການດຳເນີນງານກັບພາກເອກະຊົນຂອງ ADB ຈະນອນຢູ່ບົນພື້ນຖານການດຳເນີນງານກັບພາກລັດ ເພື່ອສະໜອງແນວທາງແກ້ໄຂບັນຫາທີ່ປະສົມປະສານ. ການດຳເນີນງານກັບພາກລັດ (ທັງການໃຫ້ກູ້ຢືມແກ່ໂຄງການ ແລະ ການປ່ອຍກູ້ທີ່ອີງໃສ່ນະໂຍບາຍ) ສາມາດພັກດັນການດຳເນີນງານກັບພາກເອກກະຊົນ ດ້ວຍການສ້າງເງື່ອນໄຂທາງດ້ານມະຫາພາກໃຫ້ແກ່ພາກເອກກະຊົນ ເພື່ອທີ່ຈະປະສົບຄວາມສຳເລັດ ຫລື ດ້ວຍການກຽມການຕັ້ງລັດວິສາຫະກິດເພື່ອການລົງທຶນທາງ ດ້ານການຄ້າ. ADB ຈະນຳເອົາທັງ ພາກລັດ, ພາກເອກະຊົນ ແລະ ຊັບພະຍາກອນທີ່ສຸມໃສ່ການຮ່ວມມື ລະຫວ່າງ ພາກລັດ ແລະ ເອກະຊົນເພື່ອມອບແນວທາງແກ້ໄຂແບບຄົບຊຸດ ໃຫ້ກັບບັນດາປະເທດສະມາຊິກທີ່ກຳລັງພັດທະນາ

79. **ການມີບົດບາດຂອງສຳນັກງານປະຈຳປະເທດເພີ່ມຂຶ້ນ.** ເມື່ອພິຈາລະນາເຖິງການກະຈາຍທາງພູມສາດຂອງການດຳເນີນງານກັບພາກເອກະຊົນຂອງຕົນທີ່ຂະຫຍາຍກ້ວາງອອກ, ADB ຈະບັນຈຸຈຳນວນພະນັກງານທີ່ເຮັດວຽກກ່ຽວກັບການດຳເນີນ ງານກັບພາກເອກຊົນ ເຂົ້າໃນບັນດາສຳນັກງານປະຈຳໃນແຕ່ລະປະເທດໃຫ້ຫຼາຍຂຶ້ນ ແລະ ຈະເພີ່ມທະວີການຝຶກອົບຮົມ ແລະ ການສະຫນັບສະຫນູນ ໃຫ້ແກ່ບັນດາຜູ້ຕາງໜ້າສຳນັກງານປະຈຳປະເທດ ແລະ ພ້ອມດ້ວຍ ພະນັກງານຂອງບັນດາສຳນັກງານປະຈຳປະເທດ.

ການປະຕິບັດງານກັບພາກເອກະຊົນຂອງ ADB ສາມາດຊ່ວຍປັບປຸງມາດຕະຖານດ້ານສິ່ງແວດລ້ອມ, ດ້ານສັງຄົມ ແລະ ດ້ານການປົກຄອງບໍລິຫານ; ໃຫ້ການສະໜອງທຶນທີ່ບໍ່ສາມາດຫາໄດ້ຈາກຕະຫຼາດ ດ້ວຍເງື່ອນໄຂທີ່ສົມເຫດສົມຜົນ; ປັບປຸງການອອກແບບໂຄງການ ແລະ ຜົນໄດ້ຮັບຂອງການພັດທະນາ; ແລະ ຫຼຸດຜ່ອນບັນດາຄວາມສ່ຽງທີ່ຮູ້ກັນດີ.

# VIII. ການກະຕຸກຊຸກຍູ້ ແລະ ການລະດົມ ແຫລ່ງທຶນເພື່ອການພັດທະນາ

80. **ການສ້າງຄວາມຮ່ວມມືທີ່ເຂັ້ມແຂງເພື່ອການລະດົມຊັບພະຍາກອນ.** ການສ້າງຄວາມຮ່ວມມືທີ່ເຂັ້ມແຂງກັບສະຖາບັນຕ່າງໆເຊັ່ນ: ສະຖາບັນການເງິນພາກລັດ ແລະ ພາກເອກະຊົນ ແລະ ບັນດາຄູ່ຮ່ວມພັດທະນາແບບທັງເກົ່າ ແລະ ໃຫມ່ ຈະເປັນຈຸດສຸມທີ່ສໍາຄັນຂອງຍຸດທະສາດ 2030 ເພື່ອລະດົມຊັບພະຍາກອນໃຫ້ໄດ້ຫຼາຍຂຶ້ນ ເພື່ອສະໜອງໃຫ່ແກ່ການດໍາເນີນງານຂອງ ADB ກັບພາກລັດ ແລະ ກັບພາກເອກະຊົນຕົວຊີ້ວັດທີ່ສໍາຄັນຂອງຄວາມສໍາເລັດຂອງ ADB ຈະແມ່ນປະລິມານ ແລະ ຄຸນນະພາບຂອງຊັບພະຍາກອນທີ່ເພີ່ມຂຶ້ນ ຊຶ່ງລະດົມທຶນໄດ້ເພີ່ມຂຶ້ນຈາກການສະໜອງເງິນທຶນຂອງຕົນເອງ.

ການສ້າງຄວາມຮ່ວມມືທີ່ເຂັ້ມແຂງກັບຫຼາກຫຼາຍສະຖາບັນເຊັ່ນ: ສະຖາບັນການເງິນພາກລັດ ແລະ ເອກະຊົນ ແລະ ກັບຄູ່ຮ່ວມພັດທະນາທັງແບບເກົ່າ ແລະ ແບບໃໝ່ ຈະເປັນຈຸດສຸມຫຼັກຂອງແຜນຍຸດທະສາດ 2030.

81. **ເປົ້າຫມາຍການສະໜອງທຶນສົມທົບໄລຍະຍາວສໍາລັບການດໍາເນີນງານກັບພາກເອກະຊົນ.** ADB ຈະຕັ້ງເປົ້າໃຫ້ມີການເພີ່ມຂຶ້ນໃນການສະໜອງທຶນສົມທົບໃນໄລຍະຍາວໃຫ້ປະກົດຜົນເປັນຈິງພາຍໃນປີ 2030, ໂດຍທຸກໆ $1 ຂອງການດໍາເນີນງານກັບພາກເອກະຊົນຂອງຕົນຈະຕ້ອງໄດ້ຮັບການສົມທົບຈາກການຮ່ວມທຶນໄລຍະຍາວ $2,50.[38]

82. **ການລະດົມທຶນຈາກແຫຼ່ງການຄ້າ.** ADB ຈະເພີ່ມຄວາມພະຍາຍາມຂອງຕົນຢ່າງຕັ້ງໜ້າ ເພື່ອຈະລະດົມເງິນທຶນຈາກຜູ້ຮ່ວມທຶນ ແລະ ນັກລົງທຶນຈາກພາກເອກະຊົນ ແລະ ເພື່ອເພີ່ມທະວີໃນການຈັດຫາເງິນທຶນຂອງຕົນເອງ. ADB ຈະຊອກຫາໂອກາດໃນການການສະໜອງທຶນສົມທົບ ໂດຍສະເພາະໃນການດໍາເນີນງານທາງດ້ານພື້ນຖານໂຄງລ່າງ ຊຶ່ງມີຄວາມຕ້ອງການດ້ານການເງິນສູງ. ADB ຈະນໍາໃຊ້ຜະລິດຕະພັນປັບປຸງສິນເຊື່ອຢ່າງຕັ້ງໜ້າ, ເຊິ່ງລວມທັງ ການກູ້ຢືມທຶນປະເພດ B, ການຮັບປະກັນຄວາມສ່ຽງບາງສ່ວນ, ການຮັບປະກັນການປ່ອຍສິນເຊື່ອບາງສ່ວນ, ການໂອນຄວາມສ່ຽງຂອງການເຂົ້າຮ່ວມຂອງ ADB ກັບບໍລິສັດປະກັນໄພ ແລະ ການຈັດການກັບການແບ່ງປັນຄວາມສ່ຽງໃນການສະໜອງທຶນເພື່ອການຄ້າ ເພື່ອທີ່ຈະລວບລວມທຶນ ຈາກພາກເອກະຊົນ. ADB ຍັງຈະນໍາໃຊ້ບົດຮຽນຄວາມຮູ້ທາງການເງິນໃຫ້ກັບພາກເອກກະຊົນ ແລະ ການພົວພັນກັບພາກລັດຢ່າງເລິກເຊິ່ງອັນເປັນເອກະລັກສະເພາະຂອງຕົນ ເພື່ອໃຫ້ແນວທາງແກ້ໄຂບັນຫາແບບທີ່ເປັນນະວັດຕະກໍາ.

83. **ການຮັບປະກັນ ແລະ ການໃຫ້ກູ້ຢືມຮ່ວມ.** ADB ຈະຮັບປະກັນ ແລະ ໃຫ້ກູ້ຢືມຮ່ວມແກ່ໂຄງການຂະໜາດໃຫຍ່ຢ່າງຕໍ່ເນື່ອງ, ເຊິ່ງລວມທັງການກູ້ຢືມເປັນສະກຸນເງິນທ້ອງຖິ່ນ, ເພື່ອຮັບປະກັນການສະຫນອງທຶນໃຫ້ຜູ້ສະຫນັບສະຫນູນໂຄງການ.

84. **ການເສີມຂະຫຍາຍການຮ່ວມມືກັບນັກລົງທຶນທີ່ເປັນສະຖາບັນ.** ເພື່ອເພີ່ມໂອກາດໃນການລະດົມທຶນໄລຍະຍາວໃຫ້ໄດ້ສູງສຸດ, ADB ຈະຂະຫຍາຍການພົວພັນກັບນັກລົງທຶນທີ່ເປັນສະຖາບັນເຊັ່ນ: ບໍລິສັດປະກັນໄພ ແລະ ບໍານານທັງພາຍໃນ ແລະ ນອກພາກພື້ນອາຊີ. ອີງໃສ່ຄວາມສໍາເລັດຂອງກອງທຶນພື້ນຖານໂຄງລ່າງພາກເອກກະຊົນ ຊຶ່ງເປັນກອງທຶນຊັ້ນນໍາຂອງອາຊີ (ປະຈຸບັນ ດ້ວຍການລົງທຶນໃນສ່ວນຫຸ້ນຈາກຍີ່ປຸ່ນ), ADB ຈະຂະຫຍາຍການດໍາເນີນການເພື່ອຄຸ້ມຄອງກອງທຶນຂອງບຸກຄົນທີ່ສາມ. ການດໍາເນີນການດັ່ງກ່າວຈະເປັນການຮ່ວມມືທາງການເງິນ ກັບການດໍາເນີນງານກັບພາກເອກະຊົນຂອງ ADB ໂດຍອີງໃສ່ການຄັດເລືອກເງື່ອນໄຂຂໍ້ຕົກລົງ ແລະ ການຄຸ້ມຄອງຂອງ ADB.

85. **ການກະຕຸກຊຸກຍູ້ການລົງທຶນຜ່ານການຮ່ວມມືລະຫວ່າງພາກລັດ ແລະ ພາກເອກະຊົນ.** ດ້ວຍຄວາມພະຍາຍາມໃນ

[38] ເປົ້າຫມາຍນີ້ ແມ່ນອີງໃສ່ອັດຕາປຽບທຽບຂອງການສະໜອງທຶນສົມທົບໄລຍະຍາວ ສໍາລັບການດໍາເນີນງານກັບພາກເອກກະຊົນ ກັບມູນຄ່າທັງໝົດຂອງແຫຼ່ງທຶນປົກກະຕິທີ່ໄດ້ຮັບການຈັດສັນໄວ້ແລ້ວ ສໍາລັບການດໍາເນີນງານກັບພາກເອກກະຊົນໃນ 3 ປີຜ່ານມາ. ການປະກອບທຶນສົມທົບໄລຍະຍາວ ລວມທັງ ເງິນກູ້ຢືມ ແລະ ການລົງທຶນໃນສ່ວນຫຸ້ນ ຄູ່ຂະໜານກັບການສະໜອງທຶນຂອງ ADB ຫຼື ກິດຈະກໍາການໃຫ້ຄໍາປຶກສາ, ທຶນກູ້ຢືມປະເພດ B ທີ່ບໍ່ກວມເອົາ ສ່ວນຂອງທຶນກູ້ຢືມທີ່ໄດ້ໃຊ້ຄໍ້າປະກັນໂດຍ ADB, ກອງທຶນຄູ່ຂະໜານ, ແລະ ກອງທຶນເພື່ອການຫຼຸດຜ່ອນຄວາມກົດດັນທີ່ບໍ່ໄດ້ເກີດຂຶ້ນຈາກການໂອນຖ່າຍຄວາມສ່ຽງ. ສິ່ງນີ້ຈະບໍ່ລວມເອົາ ການເງິນເພື່ອການຄ້າ ແລະ ການເງິນເພື່ອຕ່ອງໂສ້ການສະໜອງ. ມູນຄ່າທັງໝົດຂອງແຫຼ່ງທຶນປົກກະຕິທີ່ໄດ້ຮັບການຈັດສັນໄວ້ແລ້ວ ໂດຍບໍ່ລວມເອົາກອງທຶນເພື່ອການຫຼູດຜ່ອນຄວາມກົດດັນທີ່ບໍ່ໄດ້ເກີດຈາກການໂອນຖ່າຍຄວາມສ່ຽງ.

ການຂະຫຍາຍຂອບເຂດຂອງການສະໜັບສະໜູນແກ່ການຮ່ວມມືລະຫວ່າງ ພາກລັດ ແລະ ເອກະຊົນ (ວັກທີ 78), ADB ຈະຊ່ວຍບັນດາປະເທດຕ່າງໆລະດົມຊັບພະຍາກອນທາງດ້ານການເງິນໃຫ້ໄດ້ຢ່າງກ້ວາງຂວາງຫລາຍຂຶ້ນ. ການຊ່ວຍເຫຼືອຂອງ ADB ໃນການພັດທະນາ, ການສ້າງໂຄງສ້າງ ແລະ ການກະກຽມໂຄງການໃຫ້ແກ່ການຮ່ວມມື ລະຫວ່າງ ພາກລັດ ແລະ ເອກະຊົນ ທີ່ມີເງື່ອນໄຂທາງດ້ານການເງິນທີ່ຮັບໄດ້ສໍາລັບການສະໜອງ ທຶນ ຈະຊ່ວຍສ້າງໂອກາດເພີ່ມຂຶ້ນ ໃຫ້ແກ່ການລົງທຶນ ແລະ ການເຂົ້າຮ່ວມຂອງພາກເອກະຊົນ. ADB ຈະເພີ່ມທະວີການນໍາໃຊ້ສິ່ງອໍານວຍຄວາມສະດວກໃນການກະກຽມໂຄງການພາກພື້ນອາຊີປາຊີຟິກ (ຊຶ່ງປະຈຸບັນແມ່ນໄດ້ຮັບການສະຫນັບສະຫນູນໂດຍອົດສະຕາລີ, ການາດາ ແລະ ຍີ່ປຸ່ນ) ແລະ ສິ່ງອໍານວຍຄວາມສະດວກແກ່ການພັດທະນາໂຄງການອື່ນໆ ເພື່ອສະຫນັບສະຫນູນບັນດາກິດຈະກໍາໃນການກະກຽມໂຄງການຮ່ວມມື ລະຫວ່າງ ພາກລັດ ແລະ ເອກະຊົນ.

86. **ການລະດົມເງິນທຶນຈາກແຫຼ່ງທຶນທີ່ມີເງື່ອນໄຂແບບຜ່ອນຜັນ.** ການລະດົມທຶນທີ່ມີເງື່ອນໄຂແບບຜ່ອນຜັນຈາກຄູ່ຮ່ວມມືທັງແບບທະວິພາຄີ ແລະ ພະຫຸພາຄີ, ລວມທັງກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດ, ກອງທຶນເພື່ອການລົງທຶນດ້ານການປ່ຽນແປງດິນຟ້າອາກາດ, ແລະ ກອງທຶນສິ່ງແວດລ້ອມໂລກ, ຍັງຄົງເປັນສ່ວນຫນຶ່ງທີ່ສໍາຄັນຂອງຄວາມພະຍາຍາມໃນການລະດົມຊັບພະຍາກອນຂອງ ADB. ແຫຼ່ງທຶນທີ່ມີເງື່ອນໄຂແບບຜ່ອນຜັນ ແມ່ນເຄື່ອງມືທີ່ສໍາຄັນສໍາລັບສະມາຊິກທີ່ເປັນປະເທດ ກໍາລັງພັດທະນາ ເພື່ອເປັນເງິນທຶນສໍາລັບໂຄງການຕ່າງໆ ໃນຂະນະດຽວກັນກໍ່ຮັບປະກັນຄວາມຍືນຍົງທາງດ້ານຫນີ້ສິນ. ບົນພື້ນຖານການເກັບກໍາໄດ້ ຜົນສໍາເລັດໃນການຄຸ້ມຄອງຊັບພະຍາກອນທາງການເງິນທີ່ມີເງື່ອນໄຂແບບຜ່ອນຜັນທີ່ໄດ້ຮັບການປະສານສົມທົບຈາກກອງທຶນເຕັກໂນໂລຊີສະອາດ (Clean Technology Fund) ແລະ ກອງທຶນສິ່ງແວດລ້ອມການາດາເພື່ອພາກເອກະຊົນໃນອາຊີ,[39] ADB ຈະນໍາໃຊ້ທຶນທີ່ມີເງື່ອນໄຂແບບຜ່ອນຜັນຢ່າງເລືອກເຟັ້ນ ເພື່ອກະຕຸກຊຸກຍູ້ຊັບພະຍາກອນຈາກພາກເອກະຊົນ ເພື່ອສະຫນັບສະຫນູນໂຄງການທີ່ມີຜົນກະທົບສູງ, ມີສັກກາຍະພາບສູງ ສາມາດເປັນສ້າງເປັນແບບຢ່າງ, ນໍາມາໝູນໃຊ້, ຜັນຂະຫຍາຍຂຶ້ນຕື່ມ ແລະ ມີຄວາມຍືນຍົງໃນແງ່ຂອງການຄໍ້າບັນຫຼັກການທີ່ໄດ້ຕົກລົງກັນໄວ້.[40]

87. **ການເພີ່ມທະວີຂະຫຍາຍການຮ່ວມມືກັບຄູ່ຮ່ວມງານທັງໜ້າໃຫມ່ ແລະ ຄູ່ຮ່ວມງານທີ່ສ້າງຕັ້ງໃຫມ່.** ADB ຈະຂະຫຍາຍການພົວພັນການຮ່ວມມືກັບບັນດາອົງກອນ ແລະ ມູນິທິເພື່ອການກຸສົນ. ທາງອອກໃນການສະໜອງທຶນທີ່ເປັນນະວັດຕະກໍາຈະໄດ້ຮັບການສໍາຫຼວດ ເພື່ອເພີ່ມທະວີການມີຊັບພະຍາກອນຂອງຮັບໃຫ້ແກ່ໂຄງການ. ADB ຈະເພີ່ມທະວີຄວາມເຂັ້ມແຂງໃນການຮ່ວມມືກັບບັນດາຄູ່ຮ່ວມພັດທະນາພະຫຸພາຄີ (ຫລືຫຼາຍຝ່າຍ) ເຊັ່ນ: ທະນາຄານການລົງທຶນເພື່ອການພັດທະນາໂຄງລ່າງພື້ນຖານອາຊີ (AIIB) ແລະ ທະນາຄານພັດທະນາໃຫມ່ (New Development Bank).

88. **ການຊຸກຍູ້ຊັບພະຍາກອນເພີ່ມຕື່ມໃຫ້ແກ່ກອງທຶນຂອງ ADB (ADB trust funds).** ADB ຂົນຂວາຍຫາແຫຼ່ງທຶນຊ່ວຍເຫຼືອລ້າເພີ່ມຕື່ມໃຫ້ ທັງກອງທຶນທີ່ມີຜູ້ດຽວໃຫ້ທຶນ ຫຼື ກອງທຶນທີ່ມີຫຼາຍຄົນໃຫ້ທຶນ.[41] ADB ຈະຮັບປະກັນການນໍາໃຊ້ຊັບພະຍາກອນເຫຼົ່ານີ້ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສໍາລັບໂຄງການລົງທຶນທີ່ໄດ້ຮັບທຶນຊ່ວຍເຫຼືອລ້າ ແລະ ໂຄງການຊ່ວຍເຫຼືອທາງດ້ານວິຊາການໃນການພັດທະນາຄວາມອາດສາມາດ, ການກະກຽມໂຄງການ, ແລະ ວຽກດ້ານຄວາມຮູ້. ໃນການພົວພັນຢ່າງໃກ້ຊິດກັບຜູ້ສະຫນັບສະຫນູນກອງທຶນ, ADB ຈະນໍາໃຊ້ຊັບພະຍາກອນເຫຼົ່ານີ້ຢ່າງມີຍຸດທະວິທີ ເພື່ອສົ່ງເສີມນະວັດຕະກໍາ ເພີ່ມຄຸນນະພາບໂຄງການ ແລະ ໃຫ້ການສະຫນັບສະຫນູນທີ່ສໍາຄັນແກ່ການຈັດຕັ້ງປະຕິບັດການ.

89. **ການນໍາໃຊ້ເຄື່ອງມືນະວັດຕະກໍາ ສໍາລັບການສະໜອງທຶນຂອງ ADB ເອງ.** ສ່ວນຫນຶ່ງຂອງຄວາມພະຍາຍາມໃນການລະດົມທຶນຂອງຕົນ, ຜ່ານການດໍາເນີນງານຂອງຄັງເງິນ, ADB ຈະສືບຕໍ່ນໍາໃຊ້ ເຄື່ອງມືນະວັດຕະກໍາເຊັ່ນ: ພັນທະບັດສີຂຽວ (green bonds), ພັນທະບັດນໍ້າ (water bonds) ແລະ ພັນທະບັດພະລັງງານທີ່ສະອາດ (clean energy bonds). ADB ຈະສືບຕໍ່ຂົນຂວາຍຊອກຫາພັນທະບັດ ເພື່ອເປົ້າຫມາຍການພັດທະນາແບບຍືນຍົງ (SDG bonds) ແລະ ການສະໜອງທຶນອິດສະລາມ (Islamic financing) ເພື່ອການລະດົມທຶນສໍາລັບການດໍາເນີນງານຂອງຕົນ.

90. **ການປັບປຸງສະພາບແວດລ້ອມໃນການດໍາເນີນທຸລະກິດເພື່ອກະຕຸກຊຸກຍູ້ການລົງທຶນຂອງເອກະຊົນ.** ADB ຈະຊ່ວຍສະມາຊິກທີ່ເປັນປະເທດກໍາລັງພັດທະນາ ປັບປຸງສະພາບແວດລ້ອມທາງດ້ານນະໂຍບາຍທີ່ເອື້ອອໍານວຍ ແລະ ພ້ອມທັງພື້ນຖານໂຄງລ່າງ ທີ່ມີຄຸນນະພາບອັນຈໍາເປັນ ເພື່ອດຶງດູດການລົງທຶນຂອງເອກະຊົນຜ່ານການໃຫ້ຄໍາແນະນໍາທາງດ້ານນະໂຍບາຍ, ທຶນຊ່ວຍເຫຼືອທາງດ້ານວິຊາການ, ການປ່ອຍກູ້ທີ່ອີງໃສ່ນະໂຍບາຍ ແລະ ການໃຫ້ກູ້ຢືມສໍາລັບໂຄງການ. ການວິເຄາະຂໍ້ຈໍາກັດທາງການຕະຫຼາດທີ່ສໍາຄັນຫຼ້າສຸດ ທີ່ໄດ້ຮັບ

---

[39] ນີ້ແມ່ນລວມເຖິງ ກອງທຶນສິ່ງແວດລ້ອມການາດາສໍາລັບພາກເອກະຊົນໃນອາຊີ ແລະ ກອງທຶນສິ່ງແວດລ້ອມການາດາສໍາລັບພາກເອກະຊົນໃນອາຊີ II.

[40] *ບົດລາຍງານສະຫຼຸບຂອງຄະນະເຮັດວຽກຂອງສະຖາບັນການເງິນເພື່ອການພັດທະນາກ່ຽວກັບ ການສະໜອງທຶນທີ່ມີດອກເບ້ຍແບບຜ່ອນຜັນໃຫ້ແກ່ໂຄງການພາກເອກະຊົນໃນເດືອນ ຕຸລາ ປີ 2017* ຊຶ່ງໄດ້ຮັບການກະກຽມໂດຍກຸ່ມສະຖາບັນການເງິນທີ່ປະກອບດ້ວຍ ທະນາຄານພັດທະນາອາຟຣິກາ, ທະນາຄານພັດທະນາອາຊີ, ທະນາຄານການລົງທຶນໂຄງລ່າງພື້ນຖານອາຊີ, ທະນາຄານເອີຣົບເພື່ອການກໍ່ສ້າງແລະພັດທະນາ, ສະຖາບັນການເງິນເພື່ອການພັດທະນາເອີຣົບ, ທະນາຄານການລົງທຶນເອີຣົບ, ກຸ່ມທະນາຄານພັດທະນາລະຫວ່າງອາເມຣິກາ, ບໍລິສັດອິດສະລາມເພື່ອການພັດທະນາພາກເອກະຊົນ, ແລະ ອົງການການເງິນສາກົນ.

[41] ເດືອນ ມີນາ ປີ 2017, ADB ຄຸ້ມຄອງ 49 ກອງທຶນທຶນຊ່ວຍເຫຼືອ, ເຊິ່ງໃນນັ້ນມີ 28 ກອງທຶນ ແມ່ນໄດ້ຮັບກທຶນຈາກຜູ້ໃຫ້ທຶນຜູ້ດຽວ ແລະ 21 ກອງທຶນແມ່ນໄດ້ຮັບທຶນຈາກຫຼາຍຄົນໃຫ້ທຶນ. ປະມານ 6% ຂອງເງິນທຶນສົມທົບທາງການ ແມ່ນໄຫຼເຂົ້າທີ່ຜ່ານກອງທຶນຊ່ວຍເຫຼືອຂອງ ADB.

ຈາກການດຳເນີນງານກັບພາກເອກະຊົນ ຈະໃຫ້ຂໍ້ມູນແກ່ການລົງທຶນຂະແໜງການພາກລັດໃນຂົງເຂດການຊ່ວຍເຫຼືອເຫຼົ່ານີ້.

91. **ການເພີ່ມທະວີການລະດົມຊັບພະຍາກອນພາຍໃນປະເທດ.** ການລົງທຶນຂອງພາກລັດທີ່ໄດ້ຮັບງົບປະມານຂອງລັດຖະບານ ແມ່ນມີຄວາມຄວາມສຳຄັນຕໍ່ການສະໜອງທຶນເພື່ອພັດທະນາພື້ນຖານໂຄງລ່າງ ແລະ ການບໍລິການຂອງພາກລັດ. ເພື່ອລະດົມຊັບພະຍາກອນພາຍໃນປະເທດໃຫ້ໄດ້ຫລາຍຂຶ້ນ, ADB ຈະສືບຕໍ່ສະຫນັບສະຫນູນລັດຖະບານຂອງບັນດາປະເທດສະມາຊິກທີ່ກຳລັງພັດທະນາ ໃນການປັບປຸງລະບົບການການເກັບລາຍຮັບ ແລະ ລະບົບຄຸ້ມຄອງລາຍຈ່າຍຂອງພວກເຂົາໃຫ້ເຂັ້ມແຂງ. ADB ຍັງຈະຊ່ວຍສ້າງຄວາມເຂັ້ມແຂງໃນດ້ານຄວາມໂປ່ງໃສ ແລະ ການຄຸ້ມຄອງຫນີ້ສິນຂອງພວກເຂົາ ເພື່ອຮັບປະກັນຄວາມຍືນຍົງດ້ານຫນີ້ສິນ ດ້ວຍການປະສານງານກັບຄູ່ຮ່ວມພັດທະນາອື່ນໆ.ການສະຫນັບສະຫນູນຂອງ ADB ສຳລັບສະມາຊິກທີ່ເປັນປະເທດກຳລັງພັດທະນາໃນການພັດທະນາສະຖາບັນການເງິນ ແລະ ຕະຫລາດທຶນຈະຊ່ວຍໃນການອອມຊັບຂອງພາກພື້ນ ຊຶ່ງມີຜົນກະທົບຕໍ່ການລົງທຶນ ທີ່ກໍ່ໃຫ້ເກີດຜົນຢ່າງມີປະສິດທິພາບຫຼາຍຂຶ້ນ. ການຂະຫຍາຍການດຳເນີນງານເປັນສະກຸນເງິນທ້ອງຖິ່ນຂອງ ADB ຈະຊ່ວຍພັດທະນາຕະຫຼາດສະກຸນເງິນທ້ອງຖິ່ນ ແລະ ຫຼຸດຜ່ອນຄວາມສ່ຽງ.

ADB ຕັ້ງເປົ້າໃຫ້ມີການສະໜອງທຶນໄລຍະຍາວເພີ່ມຂຶ້ນຫຼາຍພາຍໃນປີ 2030 ໂດຍທຸກໆ $1 ຂອງການດຳເນີນງານກັບພາກເອກະຊົນຂອງຕົນ ຈະຕ້ອງໄດ້ຮັບທຶນສົມທົບ $2,50 ຈາກການສະໜອງທຶນສົມທົບໄລຍະຍາວ.

# IX. ການສ້າງຄວາມເຂັ້ມແຂງໃຫ້ແກ່ການບໍລິການດ້ານຄວາມຮູ້

92. **ພາລະບົດບາດຂອງ ADB ໃນຖານະທີ່ເປັນສະຖາບັນຄວາມຮູ້.** ເນື່ອງຈາກມີການປ່ຽນແປງຢ່າງໄວວາໃນອາຊີ ແລະ ປາຊີຟິກ ແລະ ຄວາມຈິງທີ່ວ່າ ບັນດາປະເທດສະມາຊິກທີ່ເປັນປະເທດກຳລັງພັດທະນາສ່ວນໃຫຍ່ ໄດ້ບັນລຸສະຖານະພາບເປັນປະເທດມີລາຍຮັບປານກາງ, ຄວາມກ່ຽວຂ້ອງຕໍ່ເນື່ອງຂອງ ADB ຈະຂຶ້ນຢູ່ກັບພາລະບົດບາດຂອງຕົນສູງຂຶ້ນ ໃນຖານະທີ່ເປັນສະຖາບັນຄວາມຮູ້. ຄວາມຮູ້ຂອງ ADB ແມ່ນຝັງຢູ່ໃນໂຄງການ ແລະ ໂຄງການແຜນງານຕ່າງໆຂອງ ADB. ຄວາມຮູ້ທີ່ສາມາດລວບລວມແລະຖ່າຍທອດອອກມາໄດ້ ແມ່ນຈະສະຫນອງໃຫ້ຜ່ານບັນດາຜະລິດຕະພັນ ແລະ ການບໍລິການຕ່າງໆ ເຊັ່ນ: ບັນດາສິ່ງພິມ, ກອງປະຊຸມ ແລະ ການຊ່ວຍເຫຼືອທາງດ້ານວິຊາການ. ເຖິງແມ່ນວ່າ ສະມາຊິກທີ່ເປັນປະເທດກຳລັງພັດທະນາ ສາມາດຫາທຶນຈາກແຫຼ່ງທຶນອື່ນໄດ້ເອງ, ແຕ່ລູກຄ້າມັກມາຫາ ADB ເພື່ອໃຫ້ໄດ້ຮັບມາດຕະຖານສູງໃນການອອກແບບ ແລະ ການຈັດຕັ້ງປະຕິບັດໂຄງການ; ການຖ່າຍທອດເຕັກໂນໂລຊີ ແລະ ວິທີການປະຕິບັດທີ່ດີ; ແລະ ໂດຍທົ່ວໄປແລ້ວ, ການແລກປ່ຽນຄວາມຮູ້, ທັກສະ ແລະ ຄວາມຊຳນານງານ ທີ່ສະສົມມາໄດ້ຫຼາຍກວ່າ 50 ປີ ຂອງ ADB ໂດຍຜ່ານການເຮັດວຽກຮ່ວມກັບບັນດາປະເທດສະມາຊິກທີ່ກຳລັງພັດທະນາຕ່າງໆ.

93. **ການເສີມຂະຫຍາຍບົດບາດຂອງ ADB ໃຫ້ເປັນຜູ້ສະໜອງຄວາມຮູ້ທີ່ເຂັ້ມແຂງ.** ADB ຈະເຮັດວຽກຢ່າງໃກ້ຊິດກັບບັນດາປະເທດສະມາຊິກ ທີ່ກຳລັງພັດທະນາ ເພື່ອຮູ້ໄດ້ເຖິງຄວາມຕ້ອງການຂອງພວກເຂົາ ແລະ ສ້າງຜະລິດຕະພັນຄວາມຮູ້ ແລະ ການບໍລິການດ້ານຄວາມຮູ້ທີ່ແທດເໝາະທີ່ສຸດ. ADB ຍັງຈະໄດ້ສືບຕໍ່ຫາທາງເພື່ອສ້າງເກັບກຳ ແລະ ແລກປ່ຽນຄວາມຮູ້ ເພື່ອຕອບສະໜອງໄດ້ ຕາມຕ້ອງການທີ່ມີຄວາມຄາດຫວັງແນວໃໝ່ແລະໃນອະນາຄົດຂອງບັນດາປະເທດສະມາຊິກທີ່ກຳລັງພັດທະນາ. ADB ຈະສ້າງແຮງຈູງໃຈໃຫ້ແກ່ພະນັກງານເພື່ອປະສົມປະສານອີງຄວາມຮູ້ທີ່ດີສຸດທີ່ມີຢູ່ ກັບການສະໜອງທຶນ ແລະ ການສ້າງຄວາມອາດສາມາດດ້ານສະຖາບັນຕະຫລອດເຖິງຮອບວຽນການດຳເນີນງານ. ADB ຈະປັບປຸງຄວາມຮູ້ອັນເລິກເຊິ່ງຂອງຕົນ, ລວມທັງບົດຮຽນທີ່ຖອດຖອນໄດ້ຕະຫລອດວົງຈອນຂອງໂຄງການ ແລະ ຈັດສັນທຶນຊ່ວຍເຫຼືອທາງດ້ານວິຊາການ ແລະ ຊັບພະຍາກອນຈາກແຫຼ່ງອື່ນໆຢ່າງມີຍຸດທະວິທີ ແລະ ໃຫ້ພຽງພໍທີ່ຈະສະຫນັບສະຫນູນໃຫ້ແກ່ການບໍລິການຄວາມຮູ້. ນອກຈາກນັ້ນ, ADB ຍັງຈະໄດ້ນຳໃຊ້ຂໍ້ມູນ ແລະ ຜົນຈາກການປະເມີນຜົນອິດສະຫຼະ ແລະ ຈາກການປະເມີນຜົນຕົນເອງ ໃນເວລາອອກແບບໂຄງການ ແລະ ໂຄງການແຜນງານໃຫມ່. ການນຳໃຊ້ແຫຼ່ງທຶນຊ່ວຍເຫຼືອທາງດ້ານວິຊາການເພື່ອສະຫນັບສະຫນູນການສ້າງຄວາມຮູ້ຈະໄດ້ຮັບການທົບທວນຄືນເປັນປະຈຳທຸກປີ. ກຸ່ມເຮັດວຽກຂະແໜງການ ແລະ ວິຊາການສະເພາະ ຈະໄດ້ຮັບການປຸກລະດົມເພື່ອສູ້ຊົນໃຫ້ໄດ້ຮັບທຶນສະໜັບສະໜູນເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານດ້ານຄວາມຮູ້ຂອງພວກເຂົາເຈົ້າ.

94. **ການຮັບປະກັນບົດບາດໃຫ້ມີຄວາມສຳຄັນຫຼາຍຍິ່ງຂຶ້ນຕໍ່ການຄົ້ນຄວ້າ.** ຄວາມຮູ້ແລະການຄົ້ນຄ້ວາວິໄຈ ໂດຍອີງໃສ່ຫຼັກຖານຂອງ ADB ຈະຊ່ວຍສົ່ງເສີມການປູກຈິດສຳນຶກ ແລະ ຄວາມເຂົ້າໃຈກ່ຽວກັບບັນດາຂະແຫນງການ ແລະ ດ້ານທີ່ສຳຄັນ ເພື່ອການປະຕິບັດ ແລະ ສະຫນັບສະຫນູນນະໂຍບາຍ ແລະ ການປະຕິຮູບ ທີ່ດີ ໂດຍບັນດາປະເທດສະມາຊິກທີ່ກຳລັງພັດທະນາ. ADB ຈະສືບຕໍ່ສ້າງຄວາມອາດສາມາດໃນການຄົ້ນຄວ້າຂອງຕົນ ໃຫ້ເຂັ້ມແຂງ ແລະ ໃຫ້ຄຳປຶກສາດ້ານນະໂຍບາຍທີ່ມີຄຸນນະພາບສູງຕໍ່ບັນດາປະເທດສະມາຊິກທີ່ກຳລັງພັດທະນາ. ຜະລິດຕະພັນຈາກການຄົ້ນຄວ້າຂອງ ADB ຈະປະກອບສ່ວນໃຫ້ແກ່ການສົນທະນາກ່ຽວກັບການພັດທະນາໂລກ ໂດຍໃຫ້ມູມມອງຈາກອາຊີ ແລະ ປາຊີຟິກ.

95. **ການສ້າງຄວາມອາດສາມາດທາງດ້ານສະຖາບັນຂອງບັນດາປະເທດສະມາຊິກທີ່ກຳລັງພັດທະນາໃຫ້ເຂັ້ມແຂງ.** ADB ຈະສືບຕໍ່ເຮັດວຽກກັບເຈົ້າຫນ້າທີ່ລັດຖະບານຂອງບັນດາປະເທດສະມາຊິກທີ່ກຳລັງພັດທະນາ ເພື່ອເພີ່ມທະວີຄວາມສາມາດ

ເນື່ອງຈາກມີການປ່ຽນແປງຢ່າງໄວວາໃນອາຊີ ແລະ ປາຊີຟິກ ແລະ ຄວາມຈິງທີ່ວ່າ ບັນດາປະເທດສະມາຊິກທີ່ເປັນປະເທດກຳລັງພັດທະນາສ່ວນໃຫຍ່ ໄດ້ບັນລຸສະຖານະພາບເປັນປະເທດມີລາຍຮັບປານກາງ, ຄວາມກ່ຽວຂ້ອງຕໍ່ເນື່ອງຂອງ ADB ຈະຂຶ້ນຢູ່ກັບພາລະບົດບາດຂອງຕົນສູງຂຶ້ນ ໃນຖານະທີ່ເປັນສະຖາບັນຄວາມຮູ້.

ຂອງເຂົາເຈົ້າ ໃນການແກ້ໄຂບັນຫາການພັດທະນາ ແລະ ການດຳເນີນໂຄງການ. ADB ຈະເຊື່ອມຕໍ່ບັນດາເຈົ້າໜ້າທີ່ລັດຖະບານ ຂອງບັນດາປະເທດສະມາຊິກທີ່ກຳລັງພັດທະນາ, ພາກເອກະຊົນ, ບັນດາອົງການຈັດຕັ້ງທາງສັງຄົມ ລວມທັງອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ແລະ ສະຖາບັນການສຶກສາ ກັບສູນກາງຄວາມຮູ້ ແລະ ສູນການຮຽນຮູ້ໃນລະດັບພາກພື້ນ ແລະ ໂລກ; ແລະ ສ້າງຄວາມສະດວກໃຫ້ແກ່ການຮ່ວມມື ລະຫວ່າງບັນດາປະເທດຕ່າງໆດ້ວຍກັນພາຍໃນ ແລະ ນອກພາກພື້ນ. ນອກເໜືອຈາກການສະໜັບສະໜູນການສ້າງຄວາມອາດສາມາດ ແລະ ການປຶກສາຫາລືນະໂຍບາຍ ໃນບັນດາປະເທດສະມາຊິກທີ່ກຳລັງພັດທະນາແລ້ວ, ADB ຈະນຳໃຊ້ແຫຼ່ງທຶນຊ່ວຍເຫຼືອທາງດ້ານວິຊາການ ເພື່ອທົດສອບວິທີການນະວັດຕະກຳ ແລະ ທົນທາງແກ້ໄຂບັນຫາໃນຂົງເຂດຫລືຂະແໜງການ ໂດຍມີຈຸດປະສົງເພື່ອຜັນຂະຫຍາຍແລະໝູນໃຊ້ວິທີການທີ່ປະສົບຜົນສຳເລັດໃນຂົງເຂດແລະຂະແໜງການທີ່ມີຂະໜາດໃຫຍ່ຂຶ້ນ.

96. **ການສົ່ງເສີມຄວາມຮູ້ໃນທົ່ວສະຖາບັນ.** ໜົດທຸກກົມຈະໄດ້ຮັບການຊຸກຍູ້ໃຫ້ສ້າງຜະລິດຕະພັນ ແລະ ບໍລິການຄວາມຮູ້ ແລະ ປະກອບສ່ວນເຂົ້າໃນຄວາມພະຍາຍາມສ້າງຄວາມອາດສາມມາດໃນດ້ານທີ່ພວກເຂົາມີຄວາມຮູ້ຄວາມຊຳນານ. ບັນດາກຸ່ມຊ່ຽວຊານຂະແໜງການ ແລະ ສະເພາະດ້ານຕ່າງໆ ຈະສືບຕໍ່ນຳໜ້າພາທາງ ແລະ ປະສານງານກ່ຽວກັບກິດຈະກຳຄວາມຮູ້ຕ່າງໆຂອງ ADB. ການທຳໜ້າທີ່ໃນການຄົ້ນຄວ້າຂອງ ADB ແລະ ສະຖາບັນ ADB ຈະສືບຕໍ່ສະໜອງເປັນຖານວິເຄາະໃຫ້ແກ່ຄຳປຶກສາຫາລືທາງດ້ານນະໂຍບາຍ ແລະ ການປະຕິບັດງານຂອງ ADB. ຄວາມຮູ້ພາຍໃນ ໃນດ້ານຕ່າງໆເຊັ່ນ: ການປະເມີນຜົນ, ການຄຸ້ມຄອງຜົນໄດ້ຮັບ, ການຕ້ານການສໍ້ລາດບັງຫຼວງ ແລະ ຄວາມສັດຊື່, ກົດໝາຍ, ການຈັດຊື້-ຈັດຈ້າງ, ການກວດສອບ ແລະ ການຄວບຄຸມພາຍໃນ, ການບໍລິຫານຈັດການຄວາມສ່ຽງ, ການປະຕິບັດງານຂອງຄັງເງິນ, ແລະ ເຕັກໂນໂລຊີຂໍ້ມູນຂ່າວສານ ຍັງຈະສະໜັບສະໜູນ ບັນດາປະເທດສະມາຊິກທີ່ກຳລັງພັດທະນາ.

97. **ການເສີມຂະຫຍາຍຄວາມຮ່ວມມືດ້ານຄວາມຮູ້.** ADB ຈະພັດທະນາ ແລະ ບຳລຸງຮັກສາ ການຮ່ວມມືດ້ານຄວາມຮູ້ຢ່າງຕັ້ງໜ້າ ກັບຄູ່ຮ່ວມມືທັງແບບທະວິພາຄີ ແລະ ແບບພະຫຸພາຄີ, ກຸ່ມນັກຊ່ຽວຊານ, ມະຫາວິທະຍາໄລ, ອົງການຈັດຕັ້ງສັງຄົມ ລວມທັງອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ, ມູນິທິ ແລະ ພາກເອກະຊົນ. ການຮ່ວມມືດັ່ງກ່າວ ຈະສະໜອງຊ່ອງທາງສຳລັບການທົດສອບຄວາມຄິດ, ການຈັດຫາແນວທາງທີ່ແຕກຕ່າງກັນທາງດ້ານວິທີການຄິດກ່ຽວກັບບັນຫາການພັດທະນາທີ່ສຳຄັນ ແລະ ພ້ອມກັນພັດທະນາ ແລະ ແລກປ່ຽນເນື້ອຫາຄວາມຮູ້ນຳກັນ. ບັນດາຄູ່ຮ່ວມມືເຫຼົ່ານີ້ ຈະສະໜັບສະໜູນການເກັບກຳຕົວເລກຂໍ້ມູນໃນດ້ານຕ່າງໆທີ່ສຳຄັນເຊັ່ນ: ເປົ້າໝາຍການພັດທະນາແບບຍືນຍົງ, ການປ່ຽນແປງດິນຟ້າອາກາດ, ການພັດທະນາຕົວເມືອງ ແລະ ການຄົ້ນຄ້ວາເພື່ອສະໜອງຂໍ້ມູນໃຫ້ແກ່ການປະຕິບັດງານ.

98. **ການເຜີຍແຜ່ຄວາມຮູ້.** ADB ຈະສືບຕໍ່ປັບປຸງການເຂົ້າເຖິງຄວາມຮູ້ທີ່ໄດ້ຈາກກິດຈະກຳການດຳເນີນງານ, ການຄົ້ນຄວ້າ, ການປຶກສາຫາລືນະໂຍບາຍ ແລະ ຄວາມພະຍາຍາມໃນການພັດທະນາຄວາມອາດສາມາດ. ນອກຈາກນັ້ນ, ADB ກໍ່ຍັງຈະປັບປຸງການດຳເນີນງານດ້ານການສື່ສານຂອງຕົນ. ADB ຈະນຳໃຊ້ຊ່ອງທາງການສື່ສານ ແລະ ເຕັກໂນໂລຊີດີຈີຕ້ອນເພື່ອເຜີຍແຜ່ຄວາມຮູ້ແກ່ ພາຍໃນ ແລະ ພາຍນອກ.

ADB ຈະເຮັດວຽກຢ່າງໃກ້ຊິດ ກັບບັນດາປະເທດສະມາຊິກທີ່ກຳລັງພັດທະນາ ເພື່ອຮູ້ໄດ້ເຖິງຄວາມຕ້ອງການຂອງພວກເຂົາ ແລະ ສ້າງຜະລິດຕະພັນຄວາມຮູ້ ແລະ ການບໍລິການດ້ານຄວາມຮູ້ທີ່ແທດເໝາະທີ່ສຸດ.

# X. ການສົ່ງມອບຜົນການດຳເນີນງານຜ່ານADB ທີ່ມີຄວາມເຂັ້ມແຂງຂຶ້ນ ດີຂຶ້ນ ແລະ ໄວຂຶ້ນ

99. **ການຮັບປະກັນຖານຊັບພະຍາກອນໃຫ້ມີສະພາບເຂັ້ມແຂງ.** ພາຍຫຼັງການລວມເຂົ້າກັນ ລະຫວ່າງການປະຕິບັດງານການກູ້ຢືມຈາກກອງທຶນພັດທະນາອາຊີ (ADF) ກັບງົບດຸນຂອງແຫຼ່ງທຶນປົກກະຕິ (OCR), ADB ມີຖານການເງິນທີ່ແຂງແຮງ ເພື່ອສະຫນັບສະຫນູນການປະຕິບັດງານທີ່ໄດ້ວາງໄວ້ໃນຍຸດທະສາດ 2030. ເພື່ອຮັກສາສະຖານະພາບຂອງເງິນທຶນໃຫ້ເປັນທີ່ຕ້ອງການ, ADB ຈະສືບຕໍ່ປັບປຸງລາຍຈ່າຍໃນການບໍລິຫານ ແລະ ການດຳເນີນງານພາຍໃນ ແລະ ຂົນຂວາຍຫາຫຼາຍທາງເລືອກເພື່ອເຮັດໃຫ້ເງິນທຶນຂະຫຍາຍຕົວເພີ່ມຂຶ້ນ. ເພື່ອນຳໃຊ້ເງິນທຶນ ແລະ ສົ່ງເສີມຄວາມຍືນຍົງທາງດ້ານການເງິນຂອງຕົນໃຫ້ໄດ້ສູງສຸດ, ADB ຈະທົບທວນຄືນຂອບວຽກຄວາມພ້ອມຂອງທຶນ ແລະ ການກຳນົດລາຄາຂອງຕົນຢ່າງເປັນປົກກະຕິ; ການນຳໃຊ້ການຈັດການໂອນຄວາມສ່ຽງຕ່າງໆ ເຊັ່ນ: ການປະກັນໄພຊ້ຳ, ການຄ້ຳປະກັນ; ແລະ ການໃຫ້ເງິນກູ້ລ່ວງໜ້າຂອງ ADB; ແລະ ຈຳກັດການນຳໃຊ້ທຶນແບບເງື່ອນໄຂແບບຜ່ອນຜັນ ແລະ ທາງການຄ້າຂອງພາກສ່ວນທີສາມຂອງຕົນ ແລະ ພ້ອມທັງເປີດໂອກາດເພື່ອການປະກອບທຶນສົມທົບໃຫ້ໄດ້ສູງສຸດ. ການເພີ່ມທຶນແບບທົ່ວໄປ ຫຼື ແບບພິເສດອາດຈະໄດ້ຮັບການພິຈາລະນາຕາມເວລາທີ່ເຫມາະສົມ ໂດຍອີງຕາມຄວາມຕ້ອງການດ້ານການເງິນ ແລະ ຂຶ້ນກັບການສະຫນັບສະຫນູນຂອງຜູ້ຖືຫຸ້ນ.

100. **ການຍົກລະດັບຊັບພະຍາກອນມະນຸດ.**ADBຈະເພີ່ມຈຳນວນພະນັກງານທີ່ມີພອນສະຫວັນຂອງຕົນ, ຈ້າງຊ່ຽວຊານວິຊາສະເພາະດ້ານ ໃນຂົງເຂດທີ່ເປັນບຸລິມະສິດໃໝ່ ແລະ ປັບປຸງຂັ້ນຕອນການຄັດເລືອກແລະການຈ້າງງານໃຫ້ມີປະສິດທິພາບຂຶ້ນ ດ້ວຍສາມວັດຖຸປະສົງຄື: ວ່ອງໄວ, ມີຄຸນນະພາບ ແລະ ໂປ່ງໃສ. ADB ຈະລົງທຶນໃສ່ໃນການຝຶກອົບຮົມ ແລະ ການພັດທະນາພະນັກງານຂອງຕົນ (ລວມທັງການດຳເນີນງານ, ຄວາມເປັນຜູ້ນຳ, ເທກໂນໂລຊີດີຈີຕ້ອນ ແລະ ການປ່ຽນແປງການບໍລິຫານ). ໂຄງການຝຶກອົບຮົມຈະສ້າງຄວາມເຂົ້າໃຈ ແລະ ການປະສານຮ່ວມມືລະຫວ່າງ ພະນັກງານທີ່ເຮັດວຽກກ່ຽວກັບການດຳເນີນງານກັບພາກລັດ ແລະ ກັບພາກເອກະຊົນ. ລະບົບການຄຸ້ມຄອງການປະຕິບັດງານຂອງ ADB ຈະໄດ້ຮັບການປັບປຸງໃຫ້ເຂັ້ມແຂງຕໍ່ໄປ ເພື່ອປຸກລະດົມພະນັກງານ ແລະ ສ້າງໃຫ້ມີວັດທະນະທຳທີ່ສາມາດປະຕິບັດງານໄດ້ຢ່າງມີປະສິດທິພາບສູງ. ການໂຍກຍ້າຍພະນັກງານ ຊຶ່ງລວມທັງການມອບໝາຍວຽກໄລຍະສັ້ນ ແລະ ການເຮັດວຽກໝູນວຽນຂ້າມກົມ ແລະ ລະຫວ່າງ ສຳນັກງານປະຈຳປະເທດ ແລະ ສຳນັກງານໃຫຍ່ ຈະໄດ້ຮັບການເສີມຂະຫຍາຍ ເພື່ອເພີ່ມທັກສະໃຫ້ແກ່ພະນັກງານ,ສ້າງຄວາມສະດວກໃຫ້ແກ່ການແບ່ງປັນຄວາມຮູ້ ແລະ ພ້ອມທັງສົ່ງເສີມນະວັດຕະກຳໃໝ່. ADB ມຸ່ງຫມັ້ນທີ່ຈະສ້າງຄວາມຫຼາກຫຼາຍໃນກຳລັງແຮງງານ ລວມທັງການສົ່ງເສີມຄວາມດຸ່ນດ່ຽງກັນລະຫວ່າງ ຍິງກັບຊາຍ ແລະ ສະພາບແວດລ້ອມໃນສະຖານ ທີ່ເຮັດວຽກໃຫ້ມີຄວາມເຄົາລົບນັບຖືເຊິ່ງກັນແລະກັນສຳລັບທຸກຄົນ.

101. **ການຮັກສາການດຳເນີນງານຜ່ານສຳນັກງານປະຈຳປະເທດທີ່ເຂັ້ມແຂງ.** ສຳນັກງານປະຈຳປະເທດ ຈະໄດ້ຮັບການປັບປຸງໃຫ້ເຂັ້ມແຂງເພີ່ມຂຶ້ນ ເພື່ອໃຫ້ສາມາດທຳໜ້າທີ່ເປັນປະຕູດຽວ ໃຫ້ແກ່ບັນດາຄູ່ຮ່ວມງານພາຍໃນປະເທດ ສຳລັບຜະລິດຕະພັນ ແລະ ການບໍລິການທັງຫມົດຂອງ ADB. ADB ຈະເພີ່ມທະວີຄວາມອາດສາມາດທາງດ້ານເຕັກນິກວິຊາການຂອງສຳນັກງານປະຈຳປະເທດ ດ້ວຍການຮັບປະກັນວ່າ ພວກເຂົາມີທັກສະປະສົມກັນໃນຫຼາຍດ້ານຢ່າງລົງຕົວ ລະຫວ່າງຂະແໜງການ, ວິຊາສະເພາະ, ການດຳເນີນງານກັບພາກລັດ ແລະ ກັບພາກເອກະຊົນ ບົນຄວາມຕ້ອງການຂອງປະເທດ. ການມີໜ້າຂອງ ADB ໃນປະເທດທີ່ມີສະຖານະການອ່ອນໄຫວ ແລະ ໄດ້ຮັບຜົນກະທົບຈາກຄວາມຂັດແຍ່ງ ແລະ ບັນດາລັດທີ່ເປັນເກາະນ້ອຍທີ່ກຳລັງພັດທະນາ ຈະໄດ້ຮັບການສ້າງໃຫ້ມີຄວາມເຂັ້ມແຂງຂຶ້ນຕື່ມ. ສຳນັກງານປະຈຳປະເທດ ຈະໄດ້ເຮັດວຽກຢ່າງໃກ້ຊິດກັບກຸ່ມເຮັດວຽກຂະແຫນງການ ແລະ ວິຊາສະເພາະ ເພື່ອລົງເລິກເຖິງຄຸນນະພາບຂອງການສົນທະນາປຶກສາຫາລືກັບບັນດາຄູ່ຮ່ວມງານໃນປະເທດ, ເຮັດໃຫ້ສາມາດສະໜອງຄຳແນະນຳກ່ຽວກັບບັນຫາທາງດ້ານນະໂຍບາຍໄດ້ທັນເວລາ, ແລະ ສະດວກໃນການສະໜັບສະໜູນການຈັດຕັ້ງປະຕິບັດໂຄງການຢ່າງມີປະສິດທິພາບ.

102. **ການປັບປຸງຜະລິດຕະພັນແລະເຄື່ອງມືຂອງADB.**ADB ຈະສືບຕໍ່ປັບປຸງ ແລະ ຂະຫຍາຍຜະລິດຕະພັນ ແລະ ເຄື່ອງມືຂອງຕົນ ເພື່ອສະຫນອງການສະຫນັບສະຫນູນ ທີ່ແທດເໝາະຕໍ່ກັບລູກຄ້າພາກລັດ ແລະ ພາກເອກະຊົນ. ໃນການດຳເນີນງານກັບພາກລັດ, ADB ຈະສືບຕໍ່ນຳສະເຫນີລາຍການເຄື່ອງມືກູ້ຢືມ ເພື່ອໃຫ້ບັນດາປະເທດສະມາຊິກທີ່ກຳລັງພັດທະນາ ມີຄວາມຍືດຫຍຸ່ນໃນການກຳນົດວິທີການ ເພື່ອເຮັດແນວໃດໃຫ້ພວກເຂົາສາມາດບັນລຸຜົນໄດ້ຮັບຈາກການພັດທະນາ. ໃນຂະນະທີ່ໂຄງການທຶນກູ້ຢືມຊຶ່ງແມ່ນວິທີການແບບດັ້ງເດີມແບບທົ່ວໄປທີ່ສຸດຂອງການສະໜອງທຶນ ແລະ ມີປະສິດທິພາບໃນການແລກປ່ຽນວິທີປະຕິບັດ ແລະ ຄວາມຮູ້ຄວາມຊຳນານໃນການອອກແບບ ແລະ ຈັດຕັ້ງປະຕິບັດໂຄງການ, ການນຳ

ໃຊ້ທຶນກູ້ຢືມທີ່ອີງໃສ່ນະໂຍບາຍ ແລະ ການໃຫ້ກູ້ຢືມໂດຍອີງໃສ່ຜົນໄດ້ຮັບ ແມ່ນມີເພີ່ມຂຶ້ນໃນບາງປະເທດສະມາຊິກທີ່ກໍາລັງພັດທະນາ. ເນື່ອງຈາກຄວາມຕ້ອງການຂອງລູກຄ້າມີຫລາກຫລາຍ ແລະ ສັບຊ້ອນຫລາຍຂຶ້ນ, ADB ຈະນໍາໃຊ້ເຄື່ອງມືທັງສອງນີ້ຢ່າງມີປະສິດທິພາບ. ໃນການດໍາເນີນງານກັບພາກເອກະຊົນ, ADB ຈະສືບຕໍ່ປັບປຸງ ແລະ ຂະຫຍາຍຜະລິດຕະພັນ ແລະ ວິທີການຂອງຕົນ ລວມທັງການລົງທຶນໃນສ່ວນຫຸ້ນ ແລະ ຜະລິດຕະພັນປັບປຸງສິນເຊື່ອ. ADB ຈະສະຫນອງທາງອອກກັບການສະໜອງທຶນເປັນສະກຸນເງິນທ້ອງຖິ່ນໃຫ້ແກ່ທັງການປະຕິບັດງານກັບພາກລັດ ແລະ ກັບບໍ່ແມ່ນພາກລັດ.

103. **ການປັບປຸງຂັ້ນຕອນການດໍາເນີນກິດຈະການໃຫ້ທັນສະໄໝ ແລະ ການປັບປຸງປະສິດທິຜົນຂອງການດໍາເນີນງານ.** ADB ຈະສູ້ຊົນເຮັດໃຫ້ຂັ້ນຕອນການດໍາເນີນກິດຈະການຂອງຕົນມີຄວາມທັນສະໄໝວ່ອງໄວ ດ້ວຍການນໍາໃຊ້ເຕັກໂນໂລຊີທີ່ມີຢູ່. ADB ຈະສືບຕໍ່ເພີ່ມປະສິດທິຜົນຂອງການດໍາເນີນງານຂອງຕົນ ແລະ ຫຼຸດຜ່ອນເວລາໃນການກະກຽມ ແລະ ບໍລິຫານທຶນກູ້ຢືມ, ທຶນຊ່ວຍເຫຼືອລ້າ, ແລະ ທຶນຊ່ວຍເຫຼືອທາງດ້ານວິຊາການ ໂດຍບໍ່ມີການປະນີປະນອມເຖິງຄຸນນະພາບ ແລະ ການຍຶດຖືຫຼັກຄຸນນະທໍາ. ADB ຈະປັບປຸງຂັ້ນຕອນການດໍາເນີນກິດຈະການໃຫ້ມີປະສິດທິພາບຂຶ້ນສໍາລັບການບໍລິການຂອງທີ່ປຶກສາ, ການທົດລອງນໍາໃຊ້, ແລະ ການຈັດຊື້ອຸປະກອນ ແລະ ການບໍລິການສໍາລັບ ການດໍາເນີນງານ ແລະ ການບໍາລຸງຮັກສາ. ADB ຈະຈັດຕັ້ງປະຕິບັດແຜນງານຄວາມພ້ອມຮັບການປ່ຽນແປງ ເພື່ອເສີມສ້າງຄວາມຕໍ່ເນື່ອງຂອງກິດຈະກໍາ ແລະ ຄວາມອາດສາມາດໂຕ້ຕອບຕໍ່ວິກິດການຂອງຕົນໃຫ້ເຂັ້ມແຂງ.

104. **ການສົ່ງເສີມການຫັນໄປສູ່ດີຈີຕ້ອນ.** ເພື່ອເພີ່ມທະວີເຮັດໃຫ້ຂັ້ນຕອນການດໍາເນີນກິດຈະການໃຫ້ມີຄວາມທັນສະໄໝ, ADB ຈະນໍາໃຊ້ລະບົບເຕັກໂນໂລຊີຂໍ້ມູນຂ່າວສານທີ່ມີຄວາມປອດໄພ, ທັນສະໄຫມ ແລະ ຂະບວນການດີຈີຕອນຢ່າງເໝາະສົມ ເພື່ອເພີ່ມປະສິດທິພາບ, ປະສິດທິຜົນ ແລະ ຄວາມພ້ອມຮັບການປ່ຽນແປງຂອງຕົນ. ການຫັນປ່ຽນດີຈີຕອນຂອງ ADB ຈະຊ່ວຍໃຫ້ເຂົ້າເຖິງຂໍ້ມູນກ່ຽວກັບໝົດທຸກດ້ານຂອງການດໍາ ເນີນງານ ແລະ ການບໍລິຫານຂອງ ADB ໄດ້ທັນທີ. ADB ຈະສ້າງຫຼາຍຊ່ອງທາງດີຈີຕ້ອນທີ່ຈະສະຫນັບສະຫນູນໃຫ້ແກ່ການສ້າງຜະລິດຕະພັນແລະການບໍລິການຄວາມຮູ້ໃຫ້ມີຫຼາກຫຼາຍຊະນິດແລະຫຼາຍແບບ ແລະ ເຮັດໃຫ້ບັນດາຜະລິດຕະພັນຄວາມຮູ້ ພ້ອມທັງການບໍລິການສະໜອງຄວາມຮູ້ເຫຼົ່ານັ້ນ ມີພ້ອມທີ່ຈະໃຫ້ບັນດາຄູ່ຮ່ວມມື ແລະ ຜູ້ມີສ່ວນກ່ຽວຂ້ອງຕ່າງໆ ສາມາດເຂົ້າເຖິງໄດ້ເລີຍ. ADB ຍັງຈະສະຫນັບສະຫນູນຜະລິດຕະພັນທາງດ້ານການເງິນທີ່ເປັນນະວັດຕະກໍາ ແລະ ໃຫ້ຄວາມສະດວກໃຫ້ແກ່ການເປັນວັດທະນະທໍານະວັດກໍາ ແລະ ການຕອບສະຫນອງຕໍ່ຄວາມຕ້ອງການທີ່ມີການປ່ຽນແປງຂອງລູກຄ້າ.

105. **ການບັນລຸເປົ້າໝາຍໃນການຈັດຊື້-ຈັດຈ້າງໃຫ້ໄດ້ທັນເວລາແລະ ຄຸ້ມຄ່າ.** ADB ຈະສືບຕໍ່ສົ່ງເສີມລະບົບການຈັດຊື້-ຈັດຈ້າງທີ່ດີກວ່າ ໂດຍນໍາໃຊ້ວິທີການບົນຫຼັກການພື້ນຖານ ແລະ ຄວາມສ່ຽງ.[42] ADB ຈະສືບຕໍ່ສະຫນັບສະຫນູນບັນດາສະມາຊິກທີ່ເປັນປະເທດກໍາລັງພັດທະນາ ເພື່ອສ້າງຄວາມອາດສາມາດໃນການຈັດຊື້-ຈັດຈ້າງຂອງພວກເຂົາໃຫ້ເຂັ້ມແຂງ. ADB ຍັງຈະສົ່ງເສີມການຈັດຊື້ເຕັກໂນໂລຊີຂັ້ນສູງ ແລະ ການນໍາໃຊ້ລະບົບການຈັດຊື້-ຈັດຈ້າງຂອງບັນດາຜູ້ສົມທົບທຶນໃຫ້ຫຼາຍຂຶ້ນ. ຮູບແບບການຈັດຊື້-ຈັດຈ້າງທີ່ເຫມາະສົມກັບວັດຖຸປະສົງ ຈະພັກດັນໂຄງການທີ່ເປັນນະວັດຕະກໍານໍາໃຊ້ເຕັກໂນໂລຊີທີ່ທັນ ສະໄຫມ ພ້ອມທັງຜະລິດຕະພັນແລະການບໍລິການຄວາມຮູ້ທີ່ຫຼາກຫຼາຍຊະນິດແລະຮູບຫຼາຍແບບຂອງ ADB.

106. **ການເພີ່ມການນໍາໃຊ້ລະບົບຂອງປະເທດໃຫ້ຫຼາຍຂຶ້ນ.** ADB ຈະຫາທາງທີ່ຈະເພີ່ມການໃຊ້ນໍາໃຊ້ລະບົບຂອງປະເທດໃຫ້ຫຼາຍຂຶ້ນໃນການປະຕິບັດງານກັບພາກລັດຂອງຕົນເພື່ອຊ່ວຍຫຼຸດຜ່ອນຄວາມຫຼ້າຊ້າ ໃນການຈັດຕັ້ງປະຕິບັດໂຄງການ, ຕັດຕົ້ນທຶນທີ່ເປັນຄ່າໃຊ້ຈ່າຍໃນການດໍາເນີນກິດຈະກໍາຕ່າງໆ, ຍົກລະດັບຄວາມເປັນເຈົ້າການຂອງປະເທດ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນ ແລະ ລະບົບຂອງບັນດາປະເທດສະມາຊິກທີ່ກໍາລັງພັດທະນາ. ADB ຈະສົ່ງເສີມການນໍາໃຊ້ລະບົບຂອງປະເທດໃຫ້ຫຼາຍຂຶ້ນໃນການຈັດຊື້-ຈັດຈ້າງ, ການຄຸ້ມຄອງການເງິນພາກລັດ ແລະ ການປົກປ້ອງສິ່ງແວດລ້ອມ ແລະ ສັງຄົມ. ເນື່ອງຈາກຄວາມເຂັ້ມແຂງຂອງລະບົບປະເທດມີຄວາມແຕກຕ່າງກັນໃນລະຫວ່າງ ບັນດາປະເທດສະມາຊິກທີ່ກໍາລັງພັດທະນາດ້ວຍກັນ, ວິທີການ ສະເພາະ ແລະ ເໝາະສົມກັບສະພາບການໃດຫນຶ່ງ ຈະໄດ້ນໍາເອົາມາໃຊ້ ເພື່ອຮັບປະກັນໃຫ້ສອດຄ່ອງກັບມາດຕະຖານຂອງ ADB.

107. **ການເພີ່ມທະວີການຮ່ວມມືກັບອົງການຈັດຕັ້ງສັງຄົມລວມທັງອົງການຈັດ ຕັ້ງທີ່ບໍ່ສັງກັດລັດຖະບານ.** ADB ຈະເຮັດວຽກຮ່ວມກັບອົງການຈັດຕັ້ງສັງຄົມ ລວມທັງອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ເພື່ອຊຸດຄົ້ນ ແລະ ນໍາໃຊ້ ທ່າແຮງທີ່ເປັນເອກະລັກຂອງອົງການຈັດຕັ້ງເຫຼົ່ານັ້ນເຊັ່ນ: ການເປັນຕົວແທນນໍາພາໃຫ້ແກ່ທ້ອງຖິ່ນ ແລະ ການມີຄວາມຮູ້ສະເພາະດ້ານຂອງພວກເຂົາ. ADB ຈະຊອກຫາໂອກາດ ເພື່ອໃຫ້ພວກເຂົາມີສ່ວນຮ່ວມເພີ່ມຂຶ້ນໃນ ການອອກແບບ ແລະ ການຈັດຕັ້ງປະຕິບັດໂຄງການທີ່ໄດ້ຮັບການສະໜັບສະໜູນຈາກADB. ຈຸດສຸມສະເພາະແມ່ນຈະມຸ່ງເນັ້ນໃສ່ການປະຕິບັດງານທີ່ນໍາໃຊ້ວິທີການແບບມີ ສ່ວນຮ່ວມຈາກຂັ້ນຮາກຫຍ້າ ເພື່ອແນ່ໃສ່ກຸ່ມຄົນເປົ້າຫມາຍຜູ້ທີ່ທຸກຍາກ ແລະ ດ້ອຍໂອກາດ, ປຸກລະດົມການເຄື່ອນໄຫວຂອງແມ່ຍິງ ແລະ ຊາວຫນຸ່ມ ແລະ ຕິດຕາມກວດກາກິດຈະກໍາ ແລະ ຜົນໄດ້ຮັບຂອງໂຄງການ. ADB ຍັງຈະຫາວິທີເພື່ອໃຫ້ໄດ້ການປະກອບສ່ວນທັງຄໍາຄິດຄໍາເຫັນ ພ້ອມທັງຄໍາແນະນໍາຂອງພວກເຂົາໃນການທົບທວນຄືນບັນດານະໂຍບາຍສໍາຄັນຕ່າງໆຂອງ ADB.

---

[42] ADB. 2017. *ການປັບປຸງການປະຕິບັດງານໂຄງການຂອງ ADB ຜ່ານການປະຕິຮູບການຈັດຊື້-ຈັດຈ້າງ.* ມະນິລາ.

108. **ການດຳເນີນງານຕາມຍຸດທະສາດ.** ຄະນະບໍລິຫານຈະເລີ່ມການຈັດຕັ້ງປະຕິບັດຍຸດທະສາດ2030ທັນທີພາຍຫຼັງທີ່ຍຸດທະສາດ ດັ່ງກ່າວໄດ້ຮັບອະນຸມັດ ຈາກສະພາບໍລິຫານ.[43] ເນື່ອງຈາກຍຸດທະສາດມີຂອບເຂດໄລຍະທີ່ຍາວນານ ແລະ ບັນດາປະເທດສະມາຊິກທີ່ກໍາລັງພັດທະນາ ມີຄວາມຕ້ອງການໃຫ້ການພັດທະນາຄືບໜ້າຢ່າງວ່ອງໄວ, ADB ຈໍາເປັນຕ້ອງຍືດຫຍຸ່ນ ແລະ ຕອບສະໜອງໃນລະຫວ່າງການຈັດຕັ້ງປະຕິບັດແຜນຍຸດ ທະສາດໃຫມ່ດັ່ງກ່າວ. ADB ຈະວາງແຜນ, ປະຕິບັດ ແລະ ຕິດຕາມກວດກາການດໍາເນີນງານຢ່າງເປັນລະບົບຜ່ານຫຼາຍຊ່ອງທາງ. ຊ່ອງທາງທີ່ໜຶ່ງ, ຈຸດສຸມຍຸດທະສາດ, ຂົງເຂດສະເພາະດ້ານສໍາລັບການພົວພັນ, ວິທີການ ແລະ ຄວາມຕ້ອງການທັກສະຢ່າງຮອບດ້ານໃນແຕ່ລະບຸລິມະສິດຂອງການປະຕິບັດງານ ຈະໄດ້ຮັບການຈັດເຂົ້າລະອຽດໃນແຜນການດໍາເນີນງານແຍກຕ່າງຫາກ. ຊ່ອງທາງທີ່ສອງ, ຍຸດທະສາດເພື່ອການຮ່ວມມືກັບປະເທດ ຈະສືບຕໍ່ກັ່ນຕອງບັນດາບຸລິມະສິດ ແລະ ເລືອກເຟັ້ນການດໍາເນີນງານຂອງ ADB ໂດຍອີງໃສ່ສະຖານະການ, ສິ່ງທ້າທາຍ ແລະ ຄວາມຕ້ອງການທີ່ເປັນເອກະລັກສະເພາະຂອງແຕ່ລະປະເທດສະມາຊິກທີ່ກໍາລັງພັດທະນາ; ແລະ ທ່າແຮງສໍາລັບການເພີ່ມຄຸນຄ່າທີ່ບົ່ມຊ້ອນຢູ່ໃນຄວາມອາດສາມາດ ແລະ ຊັບພະຍາກອນຂອງ ADB. ຊ່ອງທາງທີ່ສາມ, ແຜນວຽກ ແລະ ຂັ້ນຕອນຂອບວຽກງົບປະມານຈະໄດ້ຮັບການເພີ່ມທະວີເຮັດໃຫ້ມີປະສິດທິພາບຂຶ້ນ ແລະ ໄດ້ຮັບການນໍາໃຊ້ ເພື່ອໃຫ້ແຜນວຽກ ແລະ ແຜນການນໍາໃຊ້ຊັບພະຍາກອນປະຈໍາປີ ສອດຄ່ອງກັບບັນດາບຸລິມະສິດໃນການດໍາເນີນງານ.

109. **ການຕິດຕາມກວດກາຜົນໄດ້ຮັບ.** ຂອບວຽກຜົນໄດ້ຮັບໂດຍລວມຂອງອົງກອນ ຈະໄດ້ຮັບການພັດທະນາເພື່ອຕິດຕາມກວດກາ ແລະ ປະເມີນຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ. ຂອບວຽກນີ້ ຈະປະກອບດ້ວຍຕົວຊີ້ວັດຜົນໄດ້ຮັບ ແລະ ຄາດໝາຍຜົນໄດ້ຮັບສໍາລັບເປົ້າໝາຍຍຸດທະສາດ 2030. ຂອບວຽກຜົນໄດ້ຮັບອັນທໍາອິດທີ່ສອດຄ່ອງກັບຍຸດທະສາດ 2030 ຈະກວມເອົາໄລຍະເວລາ 6 ປີ ນັບແຕ່ປີ 2019 ຫາ 2024. ADB ຈະປັບປຸງຂອບວຽກຜົນໄດ້ຮັບ ໂດຍລວມຂອງອົງກອນ ພາຍຫຼັງ ສິ້ນສຸດຊ່ວງໄລຍະ 6 ປີດັ່ງກ່າວ. ADB ຈະສືບຕໍ່ລາຍງານຜົນການດໍາເນີນງານຂອງສະຖາບັນເປັນປະຈໍາທຸກປີດ້ວຍການນໍາໃຊ້ຂອບວຽກຜົນໄດ້ຮັບຜ່ານການທົບທວນປະສິດທິພາບຂອງການພັດທະນາ.

[43] ຍຸດທະສາດ 2030 ຈະປ່ຽນແທນຍຸດທະສາດ 2020 ແລະ ການທົບທວນຍຸດທະສາດ 2020 ກາງສະໄໝ.

# XI. ໜຶ່ງ ADB

110. ໜູນອງຕໍ່ບັນດາທິດທາງທີ່ກຳນົດໄວ້ໃນຍຸດທະສາດ 2030, ADB ຈະຜັນຂະຫຍາຍວິທີການ ໜຶ່ງ ADB ໃຫ້ແຂງແກ່ນ, ດ້ວຍການນຳເອົາທັງຄວາມຊຳນານ ແລະ ຄວາມຮູ້ໃນຫຼາຍໆດ້ານທົ່ວທັງສະຖາບັນເຂົ້າດ້ວຍກັນ. ພະນັກງານທີ່ເຮັດວຽກກ່ຽວກັບການດຳເນີນງານກັບພາກລັດ ແລະ ກັບພາກເອກະຊົນ ຈະເຮັດວຽກຮ່ວມກັນຢ່າງໃກ້ຊິດ ໃນການວາງແຜນການດຳເນີນງານ,ການກຳນົດແລະເຮັດວຽກຮ່ວມກັນເພື່ອແກ້ໄຂສິ່ງອຸດຕັນຕໍ່ຜົນໄດ້ຮັບຂອງການພັດທະນາ ແລະ ພ້ອມທັງ ການດຳເນີນງານໂຄງການຕ່າງໆ. ADB ຈະພັດທະນາວິທີແກ້ໄຂແບບປະສົມປະສານ ໂດຍການນຳເອົາທັງເຕັກໂນໂລຊີທີ່ທັນສະໄໝ ກັບແຮງສະໜັບສະໜູນຈາກກຸ່ມເຮັດວຽກຂະແໜງການ ແລະ ສະເພາະດ້ານການປະຕິບັດໜ້າທີ່ທຳຄົ້ນຄວ້າ ຈະຊ່ວຍຍົກລະດັບຖານການວິເຄາະຂອງການດຳເນີນງານ ແລະ ການປຶກສາຫາລືທາງດ້ານນະໂຍບາຍກັບລູກຄ້າ. ວິທີການ ໜຶ່ງ ADB ຈະໄດ້ຮັບການຂັບເຄື່ອນດ້ວຍການໂຍກຍ້າຍພະນັກງານ ແລະ ການໃຫ້ລາງວັນແກ່ພະນັກງານຜ່ານການບໍລິຫານຄຸ້ມຄອງຜົນການປະຕິບັດງານ.

**ເພື່ອສະໜອງຕໍ່ບັນດາທິດທາງທີ່ກຳນົດໄວ້ໃນຍຸດທະສາດ 2030, ADB ຈະຜັນຂະຫຍາຍວິທີການ ໜຶ່ງ ADB ໃຫ້ແຂງແກ່ນ, ດ້ວຍການນຳເອົາທັງຄວາມຊຳນານ ແລະ ຄວາມຮູ້ໃນຫຼາຍໆດ້ານທົ່ວທັງສະຖາບັນເຂົ້າດ້ວຍກັນ.**

# ເອກະສານຊ້ອນທ້າຍ: ການເກັບຂໍ້ມູນການດຳເນີນງານຂອງ ADB ແລະ ບົດສະຫຼຸບການປຶກສາຫາລື

1. ທະນາຄານພັດທະນາອາຊີ (ADB) ໄດ້ຕິດຕາມກວດກາຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນຍຸດທະສາດ 2020.[1] ໃນປີ 2014, ADB ໄດ້ດຳເນີນການທົບທວນຍຸດທະສາດ 2020 ກາງສະໄໝ ແລະ ໄດ້ສ້າງແຜນການປະຕິບັດງານເພື່ອແກ້ໄຂສິ່ງທ້າທາຍທີ່ໄດ້ລະບຸຂຶ້ນມາ.[2] ໃນແຕ່ລະປີ, ການທົບທວນປະສິດທິພາບຂອງການພັດທະນາ ໄດ້ເກັບກຳເອົາບັນດາການປະຕິບັດງານຂອງ ADB ຕໍ່ກັບຂອບວຽກຜົນໄດ້ຮັບໂດຍລວມຂອງອົງກອນຂອງຕົນກົມປະເມີນຜົນອິດສະລະ (IED) ໄດ້ປະເມີນຜົນຂອງການປະຕິບັດງານຂອງ ADB ໃນຫຼາຍລະດັບຕ່າງກັນ (ເຊັ່ນ: ລະດັບໂຄງການ, ຂະແໜງການ, ຫົວຂໍ້ສະເພາະດ້ານ, ແຜນງານປະເທດ ແລະ ນະໂຍບາຍຂອງອົງກອນ). ໃນການກະກຽມແຜນຍຸດທະສາດ 2030, ADB ຍັງໄດ້ເກັບກຳຄຳຄິດຄຳເຫັນ ແລະ ທັດສະນະຈາກຫຼາຍພາກສ່ວນທີ່ມີສ່ວນຜ່ຽວຂ້ອງ ໃນບັນດາປະເທດປະເທດສະມາຊິກຂອງຕົນ, ທັງໃນພາກພື້ນ ແລະ ນອກພາກພື້ນ ເຊັ່ນດຽວກັນ ທັງກັບບັນດາສະມາຊິກສະພາບໍລິຫານ ແລະ ພະນັກງານຂອງ ADB.

## A. ການທົບທວນແຜນຍຸດທະສາດ 2020 ກາງສະໄໝ

2. ການທົບທວນກາງສະໄໝຄັ້ງນີ້ ໄດ້ວິເຄາະບົດຮຽນທີ່ຖອດຖອນໄດ້ຈາກການຈັດຕັ້ງປະຕິບັດຍຸດທະສາດ2020 ແລະການປະເມີນບັນດາສິ່ງທ້າທາຍດ້ານການພັດທະນາທີ່ມີໃນປະຈຸບັນ ແລະ ທີ່ປະກົດຕົວຂຶ້ນໃໝ່ຂອງ ບັນດາປະເທດສະມາຊິກທີ່ກຳລັງພັດທະນາ. ການທົບທວນກາງສະໄໝໄດ້ໃຫ້ເຫັນວ່າ ADB ໄດ້ດັດປັບແບບແຜນວິທີການດຳເນີນງານຂອງຕົນ ສອດຄ່ອງກັບສາມວາລະຍຸດທະສາດຂອງຍຸດທະສາດ 2020 ຄື: ການເຕີບໂຕທາງດ້ານເສດຖະກິດທີ່ທົ່ວເຖິງ,ການເຕີບໂຕແບບຍືນຍົງທາງດ້ານສິ່ງແວດລ້ອມ ແລະ ການເຊື່ອມໂຍງພາກພື້ນ. ໃນໄລຍະ 2008-2012, ຫຼາຍກວ່າ 80% ຂອງການດຳເນີນງານຂອງ ADB ແມ່ນຢູ່ໃນຂົງເຂດຂະແໜງການຕົ້ນຕໍຂອງຍຸດທະສາດ 2020, ເຊິ່ງໄດ້ສຸມໃສ່ເປັນພິເສດໃນຂະແໜງພື້ນຖານໂຄງລ່າງ. ການທົບທວນດັ່ງກ່າວຍັງໃຫ້ເຫັນວ່າປະສິດທິພາບດ້ານສະຖາບັນຂອງ ADB ຈຳເປັນຕ້ອງໄດ້ຮັບການປັບປຸງໃຫ້ເຂັ້ມແຂງຫຼາຍຂຶ້ນກວ່າເກົ່າ ເປັນຕົ້ນແມ່ນທັກສະຂອງພະນັກງານ ແລະ ຂັ້ນຕອນແບບແຜນວິທີການເຮັດວຽກ. ການທົບທວນກາງສະໄໝໄດ້ສະຫຼຸບວ່າ ຍຸດທະສາດ 2020 ຍັງຄົງຄວາມສອດຄ່ອງ ແລະ ນຳໃຊ້ໄດ້ຕາມທິດທາງຍຸດທະສາດທົ່ວໄປ. ເຖິງຢ່າງໃດກໍ່ດີ, ພາກພື້ນກຳລັງປ່ຽນແປງຢ່າງໄວວາ ແລະ ADB ກໍ່ມີການປ່ຽນແປງຕາມນັ້ນເຊັ່ນດຽວກັນ. ໂດຍອີງໃສ່ການວິເຄາະ ແລະ ການປະເມີນຜົນ, ການທົບທວນກາງສະໄໝ ໄດ້ເນັ້ນໃຫ້ເຫັນແຜນງານປະກອບມີ 10 ຈຸດສຸມ ເພື່ອປັບປຸງທິດທາງຍຸດທະສາດຂອງ ADB ຮອດປີ 2020 ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ການຕອບສະໜອງຂອງ ADB.

i. **ການຫຼຸດຜ່ອນຄວາມທຸກຍາກ ແລະ ການເຕີບໂຕທາງດ້ານເສດຖະກິດຢ່າງທົ່ວເຖິງ.** ADB ຄວນຈະສືບຕໍ່ຄົງໄວ້ວິໄສທັດຂອງຕົນຄື ພາກພື້ນປະສະຈາກຄວາມທຸກຍາກ ໝາຍວ່າ ລົບລ້າງຄວາມຄວາມທຸກຍາກ ແລະ ຫຼຸດຜ່ອນຄວາມດ້ອຍໂອກາດ ແລະ ຄວາມບໍ່ສະເໝີພາບ ໂດຍຂະຫຍາຍການສະໜັບສະໜູນຂອງຕົນໃຫ້ບັນລຸການເຕີບໂຕທາງດ້ານເສດຖະກິດຢ່າງທົ່ວເຖິງ ແລະ ໂດຍໄວ. ADB ຈະເພີ່ມການສະຫນັບສະຫນູນໃສ່ດ້ານ ສາທາ ແລະ ສຶກສາ ແລະ ສະໜອງຊັບພະຍາກອນເພີ່ມເຕີ່ມໃຫ້ແກ່ສະມາຊິກທີ່ເປັນປະເທດກຳລັງພັດທະນາທີ່ມີລາຍຮັບຕ່ຳ ແລະ ມີຄວາມອ່ອນແອ ແລະ ໄດ້ຮັບຜົນກະທົບຈາກຄວາມຂັດແຍ່ງ.

ii. **ສິ່ງແວດລ້ອມ ແລະ ການປ່ຽນແປງດິນຟ້າອາກາດ.** ເນື່ອງຈາກພາກພື້ນກຳລັງປະເຊີນກັບສິ່ງທ້າທາຍທາງດ້ານສິ່ງແວດລ້ອມຢ່າງຮ້າຍແຮງ, ADB ຈະຍົກລະດັບການຊ່ວຍເຫຼືອຂອງຕົນສຳລັບການປັບຕົວຕໍ່ການປ່ຽນແປງດິນຟ້າອາກາດ ໄປພ້ອມກັບການຄົງໄວ້ຂອງການຊ່ວຍເຫຼືອຂອງຕົນ ສຳລັບວຽກຫຼຸດຜ່ອນຜ່ານໂຄງການປະ ຫຍັດພະລັງງານແລະພະລັງງານສະອາດ ແລະ ການຂົນສົ່ງແບບຍືນຍົງ.

iii. **ການຮ່ວມມື ແລະ ການເຊື່ອມໂຍງພາກພື້ນ.** ADB ຈະຂະຫຍາຍການເຊື່ອມໂຍງພາກພື້ນ ແລະ ເພີ່ມຕ່ອງໂສ້ມູນຄ່າໂດຍການສະໜັບສະໜູນການລົງທຶນໃສ່ພື້ນຖານໂຄງ

[1] ADB. 2008. *ຍຸດທະສາດ 2020: ຂອບວຽກຍຸດທະສາດໄລຍະຍາວຂອງທະນາຄານພັດທະນາອາຊີ 2008-2020* ມະນີລາ.

[2] ADB. 2014. *ບົດທົບທວນກາງສະໄໝຍຸດທະສາດ 2020: ການທົບທວນຍຸດທະສາດ 2020 ກາງສະໄໝຂອງ: ການປະເຊີນກັບສິ່ງທ້າທາຍ ໃນການປ່ຽນແປງຂອງພາກພື້ນອາຊີ ແລະ ປາຊີຟິກ.* ມະນີລາ; ແລະ ເອດີບີ. 2014. *ການທົບທວນຍຸດທະສາດ 2020 ກາງສະໄໝ: ແຜນປະຕິບັດງານ.* ມະນີລາ.

ລ່າງຂ້າມຊາຍແດນ ແລະ ເຊື່ອມຈອດກັບສູນກາງເສດຖະກິດຕ່າງໆ ເພື່ອເພີ່ມໂອກາດໃຫ້ແກ່ການຄ້າ ແລະ ການລົງທຶນ.

iv. **ການພັດທະນາພື້ນຖານໂຄງລ່າງ.** ຂະແໜງພື້ນຖານໂຄງລ່າງຍັງຄົງເປັນຈຸດສຸມຫຼັກຂອງການດຳເນີນງານຂອງ ADB. ADB ຈະຫາທາງເພື່ອເພີ່ມຜົນໄດ້ຮັບຂອງໂຄງການພື້ນຖານໂຄງລ່າງໃຫ້ສູງຂຶ້ນ ດ້ວຍການປັບປຸງຂອດການພົວພັນກັບຂະແໜງການ, ການອອກແບບດ້ານເຕັກນິກ ແລະ ການຈັດຕັ້ງປະຕິບັດໂຄງການ. ADB ຈະຍົກລະດັບຄວາມຍືນຍົງຂອງພື້ນຖານໂຄງລ່າງ ດ້ວຍການສຸມໃສ່ການນຳໃຊ້ແລະການບຳລຸງຮັກສາ.

v. **ປະເທດທີ່ມີລາຍຮັບປານກາງ.** ເນື່ອງຈາກປະເທດສະມາຊິກກຳລັງພັດທະນາສ່ວນໃຫຍ່ຈະໄດ້ຮັບສະຖານະເປັນປະເທດທີ່ມີລາຍຮັບປານກາງ ພາຍໃນປີ 2020, ADB ຈະຕ້ອງໄດ້ດັດເກົາວິທີການຂອງຕົນໃຫ້ຄົງໄວ້ຊຶ່ງຄວາມສອດຄ່ອງ ແລະ ຕອບສະໜອງຕໍ່ຄວາມຕ້ອງການດ້ານການພັດທະນາຂອງປະເທດສະມາຊິກເຫຼົ່ານັ້ນ.

vi. **ການພັດທະນາແລະການນຳເນີນງານກັບພາກເອກະຊົນ.** ADB ຈະຂະຫຍາຍການຊ່ວຍເຫຼືອແກ່ການພັດທະນາ ແລະ ການດຳເນີນງານກັບພາກເອກະຊົນຢ່າງເປັນລະບົບໃຫ້ບັນລຸ 50% ຂອງການດຳເນີນງານປະຈຳປີພາຍໃນປີ 2020, ລວມທັງ ການດຳເນີນງານກັບພາກເອກະຊົນໃຫ້ເພີ່ມຂຶ້ນເຖິງ 25% ຂອງການດຳເນີນງານທີ່ນຳໃຊ້ແຫຼ່ງທຶນປົກກະຕິປະຈຳປີ. ADB ຈະປັບປຸງສະພາບແວດລ້ອມໃນການດຳເນີນທຸລະກິດພາຍໃນປະເທດສະມາຊິກກຳລັງພັດທະນາໃຫ້ເອື້ອອຳນວຍ ເພື່ອສົ່ງເສີມການລົງທຶນຂອງພາກເອກະຊົນ. ນອກຈາກພາລະບົດບາດເປັນຜູ້ສະໜອງທຶນໃຫ້ແກ່ໂຄງການແລ້ວ, ADB ຈະເປັນນັກພັດທະນາໂຄງການທີ່ຫ້າວຫັນຫຼາຍຂຶ້ນ.

vii. **ການແກ້ບັນຫາດ້ວຍຄວາມຮູ້.** ວິທີການໜຶ່ງ ADB ຈະໄດ້ຮັບການນຳໃຊ້ເພື່ອໃຫ້ໝົດທຸກກົມ ໃນ ADB ເຮັດວຽກຮ່ວມກັນ ເພື່ອກຽມສະຫນອງການແກ້ບັນຫາດ້ວຍຄວາມຮູ້. ສຳນັກງານປະຈຳປະເທດຂອງ ADB ຈະຫາທາງໃນການຮ່ວມມືດ້ານຄວາມຮູ້ ແລະ ຫາໂອກາດປຶກສາຫາລືກັບປະເທດສະມາຊິກກຳລັງພັດທະນາ ແລະ ປະສານງານກ່ຽວກັບການຊ່ວຍເຫຼືອຂອງ ADB. ເພື່ອຮັບປະກັນໃຫ້ວຽກງານດ້ານຄວາມຮູ້ຂອງ ADB ມີຄວາມສອດຄ່ອງໃນແງ່ປະຕິບັດ, ທີມງານວິຊາການໃນແຕ່ລະດ້ານຂອງ ADB ຈະເພີ່ມທະວີການເຂົ້າຮ່ວມຢ່າງຕັ້ງໜ້າຫຼາຍຂຶ້ນກ່ຽວກັບການປະຕິບັດ ໂຄງການ ແລະ ຜະລິດຕະພັນຄວາມຮູ້ທີ່ກ່ຽວຂ້ອງ.[3]

viii. **ຊັບພະຍາກອນທາງການເງິນ ແລະ ການຮ່ວມມື.** ພາກພື້ນນີ້ ຍັງຄົງສືບຕໍ່ມີຄວາມຕ້ອງການທາງດ້ານການເງິນເພື່ອສະໜັບສະໜູນການພັດທະນາຂະໜາດໃຫຍ່. ADB ຈະບໍ່ສາມາດຕອບສະໜອງໄດ້ຕໍ່ກັບຄວາມຮຽກຮ້ອງຕ້ອງການດັ່ງກ່າວ ໂດຍປະສະຈາກ ການດຳເນີນງານ ໃນລະດັບໃດໜຶ່ງທີ່ເໝາະສົມບົນພື້ນຖານການມີຊັບພະຍາກອນທາງການ ເງິນທີ່ພຽງພໍ. ADB ຈະຍົກລະດັບຂີດຄວາມສາມາດຂອງຕົນໃນການສະໜອງເງິນກູ້ຢືມ ໃນນັ້ນລວມທັງ ຜ່ານການສະໜອງທຶນຈາກກອງທຶນ ທີ່ໄດ້ຈາກກອງທຶນດຽວທີ່ໄດ້ໂຮມເອົາທຶນກູ້ຢືມຈາກກອງທຶນພັດທະນາອາຊີ ກັບແຫຼ່ງທຶນປົກກະຕິເຂົ້າກັນ.

ix. **ການສະໜອງໃຫ້ຄຸ້ມຄ່າກັບທຶນ.** ADB ຈະຫາທາງເພີ່ມປະສິດທິພາບແລະປະສິດທິຜົນຂອງຕົນ. ເພື່ອສະຫນັບສະຫນູນການຈັດຕັ້ງປະຕິບັດໂຄງການໃຫ້ໄດ້ດີຍິ່ງຂຶ້ນ, ADB ຈະປະຕິຮູບ ແລະ ປັບປຸງຂັ້ນຕອນການດຳເນີນກິດຈະການຂອງຕົນໃຫ້ເປັນຮູບປະທຳ, ໂດຍສະເພາະໃນລະບົບການຈັດຊື້-ຈັດຈ້າງ. ADB ຈະນຳໃຊ້ຂອບວຽກຜົນໄດ້ຮັບຢ່າງເປັນລະບົບໃນຂັ້ນອົງກອນ, ຂັ້ນປະເທດ ແລະ ຂັ້ນໂຄງການ ເພື່ອປະເມີນວັດແທກ ແລະ ຕິດຕາມກວດກາຜົນການປະຕິບັດງານຂອງຕົນ.

x. **ການກຽມການເພື່ອປະເຊີນໜ້າ ກັບສິ່ງທ້າທາຍໃໝ່.** ADB ຈະສ້າງທັກສະຂອງພະນັກງານຂອງຕົນໃຫ້ເຂັ້ມແຂງຢ່າງຮອບດ້ານ, ສ້າງແຮງຈູງໃຈ ແລະ ການຈັດວາງກົງຈັກການຈັດຕັ້ງຂອງສະຖາບັນ ເພື່ອສ້າງໃຫ້ອົງກອນກາຍເປັນສະຖາບັນທີ່ມີຄວາມຫ້າວຫັນ ວ່ອງໄວ ແລະ ມີນະວັດຕະກຳໃໝ່. ສຳນັກງານປະຈຳປະເທດ ຈະໄດ້ຮັບການມອບໝາຍອຳນາດ ດ້ວຍການໃຫ້ສິດແລະອຳນາດໃນໜ້າຮັບຜິດຊອບທີ່ສູງຂຶ້ນ.

## B. ການທົບທວນປະສິດທິຜົນຂອງການພັດທະນາ

3. ການທົບທວນປະສິດທິຜົນຂອງການພັດທະນາທີ່ຜ່ານມາມໍ່ໆນີ້ໄດ້ໃຫ້ເຫັນວ່າ ADB ໄດ້ມີຫຼາຍບາດກ້າວອັນສຳຄັນທີ່ເຮັດໃຫ້ຕົນເອງເຂັ້ມແຂງຂຶ້ນ, ດີຂຶ້ນ ແລະ ໄວຂຶ້ນກວ່າເກົ່າ. ໂດຍຍຶດຖືຕາມອຸດົມການເປັນອົງກອນທີ່ມີຄວາມເຂັ້ມແຂງຂຶ້ນ ແລະ ຮັບປະກັນແນວທາງສອດຄ່ອງຂອງຍຸດທະສາດ, ADB ໄດ້ດຳເນີນໄປຕາມທິດທາງທີ່ຈະບັນລຸເປົ້າຫມາຍວິໄສທັດ 2020 ຂອງຕົນສ່ວນໃຫຍ່ຕາມທີ່ໄດ້ກຳນົດໄວ້ໃນຍຸດທະສາດ 2020 ແລະ ໃນບົດທົບທວນຍຸດທະສາດກາງສະໄໝຂອງຕົນ. ການດຳເນີນງານເພື່ອສະຫນັບສະຫນູນຄວາມຍືນຍົງດ້ານສິ່ງແວດລ້ອມ ໄດ້ເພີ່ມຂຶ້ນຢ່າງຕໍ່ເນື່ອງ ໄປພ້ອມກັນກັບການສະຫນັບສະຫນູນການຫຼຸດຜ່ອນ ແລະການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ, ການພັດທະນາພາກເອກະຊົນ ແລະ ການປົກຄອງບໍລິຫານ ພ້ອມທັງການພັດທະນາຂີດ

[3] ທີມງານວິຊາການໃນແຕ່ລະດ້ານນັບແຕ່ນັ້ນໄດ້ເຂົ້າຮ່ວມໃນກຸ່ມເຮັດວຽກຂະແໜງການແລະຊ່ຽວຊານສະເພາະດ້ານ.

ຄວາມສາມາດ. ADB ພວມດຳເນີນການໄປຕາມທິດທາງການບັນລຸເປົ້າໝາຍຂອງ ການຮ່ວມມື ແລະ ການເຊື່ອມໂຍງພາກພື້ນ ແລະ ການເຊື່ອມສານຄວາມສະເຫມີພາບລະຫວ່າງ ຍິງ-ຊາຍ, ແຕ່ວ່າ ADB ຍັງບໍ່ທັນບັນລຸໄດ້ເປົ້າຫມາຍຂອງຕົນໃນການສະໜອງທຶນສົມທົບ ເນື່ອງຈາກ ມີຫຼາຍພາລະກິດເພີ່ມຂຶ້ນ.[4] ຜົນການປະຕິບັດງານດ້ານ ການສຶກສາ, ສາທາ ແລະ ການປົກປ້ອງສັງຄົມ ໄດ້ຮັບການປະສົມປະສານ. ຜົນກະທົບຕໍ່ເປົ້າໝາຍທີ່ນຳສະເໜີໃນຂະແຫນງສາທາ ແລະ ຂະແໜງສຶກສາໃນບົດທົບທວນຍຸດທະສາດກາງສະໄໝ ໄດ້ສົ່ງຜົນໃຫ້ຂະແຫນງການເຫລົ່ານີ້ ໄດ້ຮັບຄວາມເອົາໃຈໃສ່ເພີ່ມຂຶ້ນ.[5] ເຖິງຢ່າງໃດກໍ່ຕາມ, ຂໍ້ມູນໄດ້ສະແດງໃຫ້ເຫັນເຖິງການເພີ່ມນ້ຳໜັກທີ່ຈະຕ້ອງສຸມໃສ່ ການສະໜອງທຶນທາງດ້ານການເງິນໃສ່ການປະຕິບັດງານໃນຂະແໜງສາທາ ເພື່ອໃຫ້ບັນລຸໄດ້ຕາມເປົ້າຫມາຍ 2020.

4. ການເປັນອົງກອນທີ່ດີຂຶ້ນ, ຄຸນນະພາບເບື້ອງຕົ້ນເປັນປັດໃຈ ທີ່ສົ່ງຜົນໃຫ້ໄດ້ຄຸນນະພາບແຕ່ຕົ້ນຈົນຈົບ. ສຳລັບບັນດາໂຄງການທີ່ເຮັດສຳເລັດແລ້ວ, ຜົນການປະຕິບັດງານ ໂດຍສະເພາະຜົນລັບມີຄວາມເຂັ້ມແຂງໃນດ້ານຄວາມສະເຫມີພາບລະຫວ່າງຍິງ-ຊາຍ ແລະ ໂຄງການຊ່ວຍເຫລືອທາງດ້ານວິຊາການ. ແນວໂນ້ມຜົນສຳເລັດໂດຍລວມຂອງໂຄງການພາກລັດ ລວມທັງໂຄງການກູ້ຢືມທີ່ອີງໃສ່ນະໂຍບາຍທີ່ໄດ້ເຮັດສຳເລັດແລ້ວ ໄດ້ອຽງໄປໃນທິດທາງບວກ, ແຕ່ມັນກໍ່ຍັງມີຫຼາຍຂໍ້ຫຍຸ້ງຍາກທີ່ຈະເຮັດໃຫ້ມີຄວາມຍືນຍົງ ແລະ ອັດຕາຄວາມສຳເລັດຂອງການດຳເນີນງານທີ່ບໍ່ແມ່ນກັບພາກລັດ ເພີ່ມຂຶ້ນ. ADB ຍັງປະເຊີນກັບສິ່ງທ້າທາຍໃນການທີ່ເປັນອົງກອນທີ່ໄວຂຶ້ນ. ໃນຂະນະທີ່ໄລຍະເວລາຂອງການອະນຸມັດ ແລະ ການອອກສັນຍາຂອງສັນຍາຄັ້ງທຳອິດ ໄດ້ຫຼຸດລົງ, ຕົວຊີ້ວັດທີ່ສຳຄັນເຊັ່ນ: ຄວາມຫຼ້າຊ້າຂອງໂຄງການ, ເວລາທີ່ໃຊ້ໃນການດຳເນີນການພາຍໃນ ແລະ ການດຳເນີນການຈັດຊື້-ຈັດຈ້າງໄດ້ສືບຕໍ່ ໃຫ້ເຫັນວ່າ ຍັງມີພາລະທີ່ຈະຕ້ອງໄດ້ເຮັດເພີ່ມເຕີມ.

## C. ການທົບທວນຂອງກົມປະເມີນຜົນອິດສະຫຼະ

5. ກົມປະເມີນຜົນອິດສະຫຼະແມ່ນຮັບຜິດຊອບໃນການປະເມີນຕີລາຄາຜົນຂອງການຈັດຕັ້ງປະຕິບັດສາມວາລະຍຸດທະສາດຂອງຍຸດທະສາດ 2020 (ການຈະເລີນເຕີບໂຕທາງດ້ານເສດຖະກິດທີ່ທົ່ວເຖິງ, ການຈະເລີນເຕີບໂຕແບບຍືນຍົງທາງດ້ານສິ່ງແວດລ້ອມ ແລະ ການຮ່ວມມື ແລະ ການເຊື່ອມໂຍງພາກພື້ນ) ແລະ ຫ້າແຮງຂັບເຄື່ອນໃຫ້ເກີດການປ່ຽນແປງ (ການພັດທະນາພາກເອກະຊົນ ແລະ ການດຳເນີນງານກັບພາກເອກະຊົນ, ການປົກຄອງບໍລິຫານທີ່ດີ ແລະ ການພັດທະນາຄວາມອາດສາມາດ, ຄວາມສະເໝີພາບລະຫວ່າງຍິງ-ຊາຍ, ການແກ້ໄຂບັນຫາດ້ວຍຄວາມຮູ້ ແລະ ການຮ່ວມມື).

6. ໃນດ້ານວາລະຍຸດທະສາດ, ກົມປະເມີນຜົນອິດສະຫຼະເຫັນວ່າ ຂະແໜງການທີ່ສຳຄັນຕໍ່ກັບການຈະເລີນເຕີບໂຕທາງດ້ານເສດຖະກິດທີ່ທົ່ວເຖິງ ບໍ່ໄດ້ຖືກກຳນົດໃຫ້ເປັນຂະແໜງການຕົ້ນຕໍຂອງການປະຕິບັດງານພາຍໃຕ້ຍຸດທະສາດ 2020 ເຊັ່ນ: ສາທາ, ກະສິກຳ ແລະ ການປົກປ້ອງສັງຄົມທີ່ໄດ້ຖືກລະເລີຍ. ກົມປະເມີນຜົນອິດສະຫຼະໄດ້ຕັ້ງຄຳຖາມກ່ຽວກັບເຫດຜົນໃນການກຳນົດຂົງເຂດການດຳເນີນງານທີ່ສຳຄັນ ແລະ ບໍ່ສຳຄັນ ແລະ ໄດ້ຊີ້ແນະ ວ່າ ການປະຕິບັດນີ້ບໍ່ໄດ້ຮັບການສືບຕໍ່. ສືບຕໍ່. ໃນຂະນະທີ່ການເລືອກເຟັ້ນໃນການດຳເນີນງານຂອງ ADB ແມ່ນມີຄວາມຈຳເປັນ, ADB ຄວນຈະດັດປັບໃຫ້ເຂົ້າກັບສະຖານະການຂອງປະເທດຫຼືສະພາບທາງພູມສາດ ແລະ ບໍ່ຄວນຈະຖືກກຳນົດໂດຍເປົ້າຫມາຍຂະແໜງການແບບຈາກສູງລົງຫາຕ່ຳ. ການສະຫນັບສະຫນູນເພີ່ມຂຶ້ນໃນຂະແຫນງການສັງຄົມ ເຊັ່ນດຽວກັນກັບ ຂະແໜງກະສິກຳ, ຄວາມສະເຫມີພາບລະຫວ່າງຍິງ-ຊາຍ ແລະ ການຮັບປະການດ້ານສະບຽງອາຫານ ຈະເຮັດໃຫ້ການປະກອບສ່ວນໂດຍລວມຂອງ ADB ໃຫ້ແກ່ການຈະເລີນເຕີບໂຕທາງດ້ານເສດຖະທີ່ທົ່ວເຖິງໄດ້ດີຍິ່ງຂຶ້ນ. ການຂະຫຍາຍຕົວທີ່ຍືນຍົງທາງດ້ານສິ່ງແວດລ້ອມ, ໃນຂະນະທີ່ອັດຕາສ່ວນຂອງບັນດາໂຄງການຂອງ ADB ທີ່ຖືວ່າເປັນໂຄງການທີ່ສະຫນັບສະຫນູນການຂະຫຍາຍຕົວທີ່ມີຄວາມຍືນຍົງທາງດ້ານສິ່ງແວດລ້ອມໄດ້ເພີ່ມຂຶ້ນໃນໄລຍະ 2013-2015, ເກືອບຫນຶ່ງໃນສາມຂອງໂຄງການເຫຼົ່ານີ້ເຫັນໄດ້ວ່າ ມີຜົນປະໂຫຍດທາງດ້ານສິ່ງແວດລ້ອມພຽງເລັກໜ້ອຍ. ການສະຫນັບສະຫນູນຂອງ ADB ຕໍ່ການປ່ຽນແປງດິນຟ້າອາກາດ ແລະ ການຈະເລີນເຕີບໂຕແບບຍືນຍົງທາງດ້ານສິ່ງແວດລ້ອມ ຄວນໄດ້ຮັບການເພີ່ມທະວີ. ການຮ່ວມມື ແລະ ການເຊື່ອມໂຍງພາກພື້ນ. ກົມປະເມີນຜົນອິດສະຫຼະ ໄດ້ປະເມີນຕີລາຄາການສະຫນັບສະຫນູນຂອງ ADB ໃຫ້ເປັນທີ່ຍົກຍ້ອງ. ADB ໄດ້ສຸມໃສ່ການເຊື່ອມຕໍ່ທາງພື້ນຖານໂຄງລ່າງຜ່ານພື້ນຖານໂຄງລ່າງຂ້າມຊາຍແດນ ແລະ ADB ຄວນເພີ່ມຄວາມພະຍາຍາມຕໍ່ໄປໃນການສະຫນັບສະຫນູນທາງດ້ານສາທາລະນຸປະໂພກພາກພື້ນ, ການສົ່ງເສີມຜະລິດຕະພາບໃຫ້ສູງຂຶ້ນ, ການເພີ່ມທະວີການແຂ່ງຂັນຂອງບັນດາປະເທດເສດຖະກິດທີ່ເຂົ້າຮ່ວມ, ການຫຼຸດຜ່ອນຄວາມອ່ອນແອໃນພາກພື້ນ ແລະ ການແກ້ໄຂຄວາມບໍ່ສະເຫມີພາບໃນອະນຸພາກພື້ນ.

7. ໃນດ້ານແຮງຂັບເຄື່ອນຂອງການປ່ຽນແປງ, ກົມປະເມີນຜົນອິດສະຫຼະໄດ້ເຫັນວ່າ ກົນໄກການປະສານງານ ແລະ ການສະຫນັບສະຫນູນພາຍໃນຂອງ ADB ໃນການພັດທະນາພາກເອກະຊົນ ແມ່ນອ່ອນແອ. ຕ້ອງມີຄວາມພະຍາຍາມເພີ່ມຂຶ້ນ

[4] ADB ມຸ່ງຫມັ້ນທີ່ຈະເພີ່ມທະວີການສະຫນັບສະຫນູນຂອງຕົນຕໍ່ການຮ່ວມມືແລະການເຊື່ອມໂຍງພາກພື້ນ ເພື່ອໃຫ້ບັນລຸຢ່າງຫນ້ອຍ 30% ຂອງການດຳເນີນງານໂດຍລວມພາຍໃນປີ 2020. ຈຳນວນການປະຕິບັດງານກັບພາກລັດຕາມທີ່ໄດ້ຈັດສັນອະນຸມັດໄວ້ແລ້ວທີ່ຈະສະຫນັບສະຫນູນການເຊື່ອມສານບົດບາດຍິງ-ຊາຍຕາມອັດຕາສ່ວນຮ້ອຍຂອງຈຳນວນການປະຕິບັດງານກັບພາກລັດທັງໝົດ ໃຫ້ໄດ້ 50%. ຍອດລວມການເຮັດທຸລະກຳທາງການເງິນປະຈຳປີ ແມ່ນເກີນມູນຄ່າຂອງການສະໜອງທຶນໃຫ້ແກ່ໂຄງການຂອງ ADB.

[5] ການສະໜອງທຶນໃຫ້ແກ່ຂະແໜງສຶກສາ ແລະ ສາທາແມ່ນບັນລຸໄດ້ 6%-10% ແລະ 3%-5% ຂອງການສະໜອງເງິນທຶນທັງຫມົດຂອງ ADB.

ເພື່ອທຳໜ້າທີ່ໃຫ້ບັນລຸເປົ້າໝາຍ ຫນຶ່ງ ADB. ການເຊື່ອມຕໍ່ລະຫວ່າງວຽກກິດຈະກຳຂອງການດຳເນີນງານກັບພາກລັດ ແລະ ການດຳເນີນງານທີ່ບໍ່ແມ່ນກັບພາກລັດ ໃນບັນດາຍຸດທະສາດຂະແຫນງການ, ຍຸດທະສາດເພື່ອການຮ່ວມມືກັບປະເທດ ແລະ ຂອບວຽກຜົນໄດ້ຮັບທີ່ກ່ຽວຂ້ອງອື່ນໆ ຈະຕ້ອງໄດ້ຮັບການເພີ່ມທະວີຄວາມເຂັ້ມແຂງ. ADB ຄວນສຸມໃສ່ ການຫຼຸດຜ່ອນອັດຕາການຍົກເລີກໂຄງການ, ການເພີ່ມປະລິມານ ແລະ ຄຸນນະພາບຂອງການລົງທຶນໃນສ່ວນຫຸ້ນ, ແລະ ການເພີ່ມການສະໜອງທຶນສົມທົບ ແລະ ການຄ້ຳປະກັນ. ການສະຫນັບສະຫນູນເພີ່ມຕື່ມສຳລັບໂຄງການອຸດສາຫະກຳ, ການຄ້າ, ການຜະລິດ ແລະ ການຜະລິດກະສິກຳເປັນສິນຄ້າ ຈະຊ່ວຍເພີ່ມຄຸນຄ່າຂອງ ADB. ໃນດ້ານການປົກຄອງບໍລິຫານ, ກົມປະເມີນຜົນອິດສະຫຼະ ໄດ້ເນັ້ນໃຫ້ເຫັນເຖິງຜົນສະທ້ອນຈາກການປະຕິຮູບຢ່າງມີທ່າແຮງຕໍ່ກັບການປົກຄອງບໍລິຫານທີ່ຄ່ອງຕົວດີ ເພື່ອໃຫ້ໄດ້ຮັບໝາກຜົນໃນການພັດທະນາ ແລະ ໄດ້ແນະນຳໃຫ້ ADB ສືບຕໍ່ການສະຫນັບສະຫນູນຂອງຕົນໃນຂົງເຂດນີ້ ເຖິງແມ່ນວ່າອັດຕາຜົນສຳເລັດຂອງໂຄງການທີ່ເຮັດສຳເລັດແລ້ວແມ່ນຍັງຕ່ຳກໍ່ຕາມ.

8. ການສະຫນັບສະຫນູນຄວາມສະເຫມີພາບ ລະຫວ່າງຍິງການສະຫນັບສະຫນູນຄວາມສະເຫມີພາບ ລະຫວ່າງ ຍິງ-ຊາຍ ໄດ້ເພີ່ມຂຶ້ນຫລາຍພາຍໃຕ້ ການປະຕິບັດຍຸດທະສາດ 2020. ເພື່ອສືບຕໍ່ຈາກຜົນງານດັ່ງກ່າວ, ADB ຄວນຈະປັບປຸງລະບົບການຈັດຫມວດເພດ ແລະ ການເກັບກຳຂໍ້ມູນເບື້ອງຕົ້ນໂດຍແຍກເພດ. ກົມປະເມີລນຜົນອິດສະຫລະ ຍັງເນັ້ນຫນັກເຖິງຄວາມຈຳເປັນ ໃນການເກັບກຳເອກະສານຢ່າງເປັນລະບົບໃຫ້ຫຼາຍຂຶ້ນກ່ຽວກັບຂໍ້ມູນຜົນງານດ້ານຄວາມສະເຫມີພາບລະຫວ່າງຍິງ-ຊາຍ ນັບຕັ້ງແຕ່ຂັ້ນປະເທດຮອດຂັ້ນໂຄງການ. ໃນດ້ານຄວາມຮູ້ ແລະ ການຮ່ວມມື, ADB ຄວນຈະຖືເອົາວິທີການແບບປະສົມປະສານແລະວິຊາສະເພາະດ້ານໃຫ້ຫຼາຍຂຶ້ນຕໍ່ ກັບການດຳເນີນງານ, ຍູ້ໝູນດ້ວຍຮູບແບບທຸລະກິດ ທີ່ເພີ່ມຜົນທາງການເງິນແລະຄວາມຮູ້ໃຫ້ເປັນແກນກາງຂອງວິທີການ. ກົມປະມີນຜົນອິດສະຫລະ ຍັງໄດ້ຮຽກຮ້ອງເຖິງຄວາມຮູ້ຄວາມຊຳນານ ແລະ ການຮ່ວມມືທີ່ເຂັ້ມແຂງໃນທົ່ວທຸກກົມພາກພື້ນ ແລະ ລະຫວ່າງ ວຽກຂະແໜງການລັດ ແລະ ຂະແໜງການເອກະຊົນ. ປະສົບການຂອງ ADB ກັບການເປັນຄູ່ຮ່ວມມືໃນດ້ານຄວາມຮູ້ກ່ຽວກັບຂະແໜງການ ແລະ ວຽກວິຊາສະເພາະ ແມ່ນໄດ້ຮັບການລວມເຂົ້າກັນ. ໂຄງການທີ່ມີການສະໜອງທຶນສົມທົບ ແມ່ນໄດ້ຮັບຜົນສຳເລັດຫຼາຍກວ່າໂຄງການທີ່ບໍ່ມີການສະໜອງທຶນສົມທົບ. ການປ່ຽນແປງຂອງຄວາມຮັບຜິດຊອບ, ລະບົບ ແລະ ກົດລະບຽບ ຂອງອົງກອນເພື່ອສ້າງຄວາມສະດວກໃນການບໍລິຫານຈັດການກັບການຮ່ວມມືໃຫ້ໄດ້ດີຂຶ້ນ ກໍ່ໄດ້ຮັບການຊີ້ແນະ.

9. ສຳລັບແຜນຍຸດທະສາດ 2030, ກົມປະເມີນຜົນອິດສະຫລະ ໄດ້ແນະນຳໃຫ້ ADB ເລືອກໃຊ້ແນວທາງການໄປສູ່ການເຕີບໂຕທີ່ມີຄຸນນະພາບ ທີ່ດີກວ່າ (ແທນທີ່ຈະມຸ່ງໃສ່ແຕ່ປະລິມານ/ອັດຕາຂອງການເຕີບໂຕ), ຊຶ່ງລວມທັງສາມວາລະພັກດັນທີ່ປະກອບມີ ຄວາມທົ່ວເຖິງທາງດ້ານສັງຄົມ ແລະ ພູມສັນຖານ, ຄວາມຍືນຍົງດ້ານສິ່ງແວດລ້ອມ ແລະ ການຮ່ວມມື ແລະ ການເຊື່ອມໂຍງພາກພື້ນ ໃຫ້ເປັນຍຸດທະສາດພື້ນຖານທີ່ຄວນໃຫ້ຄວາມເອົາໃຈໃສ່ ແລະ ເປັນຂໍ້ສະເໜີແນະເຖິງຄຸນຄ່າໃຈກາງຂອງ ADB. ເຖິງແມ່ນວ່າ ປະເທດສະມາຊິກທີ່ກຳລັງພັດທະນາສ່ວນໃຫຍ່ໄດ້ກາຍເປັນ ຫຼື ຈະກາຍເປັນປະເທດທີ່ມີລາຍຮັບປານກາງກໍ່ຕາມ ແຕ່ປະເທດເຫຼົ່ານັ້ນເປັນກຸ່ມປະເທດທີ່ມີຄວາມແຕກຕ່າງກັນຫຼາຍໃນດ້ານ ລະດັບຂອງລາຍຮັບ, ອົງປະກອບຂອງລວມຍອດມູນຄ່າຜະລິດຕະພັນພາຍໃນ, ປະຫວັດຂອງຄວາມທຸກຍາກ, ຄວາມຫມັ້ນຄົງດ້ານສະບຽງອາຫານ ແລະ ຄວາມອາດສາມາດດ້ານສະຖາບັນ. ເປັນເວລາເກືອບ 2 ທົດສະວັດທີ່ຜ່ານມາ, ອາຊີ ແລະ ປາຊີຟິກໄດ້ມີຫລາຍປັດໄຈທີ່ເອື້ອໃຫ້ເກີດການເຕີບໂຕ ແລະ ການຫຼຸດຜ່ອນຄວາມທຸກຍາກຢ່າງທີ່ບໍ່ເຄີຍປະກົດມີມາກ່ອນແຕ່ມາຮອດປະຈຸບັນພວມຕົກຢູ່ໃນພາວະຖົດຖອຍ. ຍິ່ງໄປກວ່ານັ້ນ, ແນວໂນ້ມສ່ວນໃຫຍ່ຂອງການປ່ຽນແປງດິນຟ້າອາກາດ, ຄວາມກົດດັນດ້ານສິ່ງແວດລ້ອມ, ການຂະຫຍາຍຕົວຂອງຕົວເມືອງ,ປະຊາກອນສູງອາຍຸແລະຄວາມກ້າວຫນ້າທາງດ້ານເຕັກໂນໂລຊີຢ່າງໄວວາ ຈະພາໃຫ້ເກີດມີສິ່ງທ້າທາຍເພີ່ມຫຼາຍຂຶ້ນ. ດັ່ງນັ້ນ, ADB ຄວນຈະສະຫນອງທຶນທາງການແກ້ໄຂທີ່ພິເສດດ້ວຍການເພີ່ມຜົນທາງດ້ານຄວາມຮູ້ ແລະ ທາງດ້ານການເງິນ ແລະ ດ້ວຍການນຳໃຊ້ວິທີການແບບມີວິຊາສະເພາະທີ່ປະສົມປະສານໃນການດຳເນີນງານ.[6]

## D. ການປຶກສາຫາລືກັບຜູ້ທີ່ມີສ່ວນກ່ຽວຂ້ອງ

10. ນັບຕັ້ງແຕ່ເດືອນຕຸລາປີ 2015, ADB ໄດ້ດຳເນີນການປຶກສາຫາລືຢ່າງກວ້າງຂວາງທັງພາຍໃນ ແລະ ພາຍນອກພາກພື້ນເຊັ່ນດຽວກັນກັບ ພາຍໃນອົງກອນຂອງຕົນ ເພື່ອໃຫ້ໄດ້ຄຳຄິດຄຳເຫັນ ແລະ ທັດສະນະຂອງຫຼາຍພາກສ່ວນທີ່ມີສ່ວນກ່ຽວຂ້ອງກ່ຽວກັບຍຸດທະສາດ 2030. ຜູ້ຕາງຫນ້າຈາກຫຼາກຫຼາຍຂະແຫນງການໄດ້ເຂົ້າຮ່ວມໃນການປຶກສາຫາລື, ຊຶ່ງໃນນັ້ນລວມທັງລັດຖະບານຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ, ອົງການຈັດຕັ້ງທາງສັງຄົມລວມທັງອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ, ກຸ່ມຊ່ຽວຊານ, ສະຖາບັນການສຶກສາ ແລະ ພາກເອກະຊົນ.

11. **ການປຶກສາຫາລືໃນບັນດາສະມາຊິກທີ່ເປັນປະເທດກຳລັງພັດທະນາ.** ຜູ້ທີ່ມີສ່ວນກ່ຽວຂ້ອງໃນບັນດາສະມາຊິກ ທີ່ເປັນປະເທດກຳລັງພັດທະນາໄດ້ໃຫ້ທັດສະນະວ່າ ວິໄສທັດຂອງ ADB ໄດ້ຮັບການແຜ່ຂະຫຍາຍກວມເອົາສິ່ງຢືນຢັນຕໍ່ກັບການຈະເລີນເຕີບໂຕແບບທົ່ວເຖິງ, ການພັດທະນາແບບຍືນຍົງ ແລະ ຄວາມຍືດຫຍຸ່ນຕໍ່ໄພຂົ່ມຂູ່ທາງດ້ານເສດຖະກິດ ແລະ ສິ່ງແວດລ້ອມ. ຫລາຍໂດຍສະເພາະທີ່ເປັນສິ່ງຂົ່ມຂູ່ຕໍ່ພື້ນຖານໂຄງລ່າງ ແລະ ການຮ່ວມມືແລະການເຊື່ອມໂຍງພາກພື້ນ ຊຶ່ງ

6 ADB. 2017. *ຄວາມຮູ້, ການເງິນ ແລະ ຄຸນນະພາບຂອງການຈະເລີນເຕີບໂຕ: ທັດສະນະທີ່ປະເມີນໜຶ່ງຕໍ່ກັບຍຸດທະສາດ 2030.* ມະນີລາ.

ເປັນດ້ານທີ່ສຳຄັນຂອງຄວາມເຂັ້ມແຂງ ແລະ ເຫັນໄດ້ເຖິງຄວາມຈຳເປັນໃນການສ້າງຄວາມອາດສາມາດໃນຂະແໜງສັງຄົມໃຫ້ເຂັ້ມແຂງ. ການສະໜັບສະໜູນການຮ່ວມມືລະຫວ່າງ ພາກລັດ-ເອກະຊົນ ຄວນໄດ້ຮັບການເພີ່ມທະວີໃຫ້ຫຼາຍຂຶ້ນ. ການໃຫ້ກູ້ຢືມຂອງ ADB ຕ້ອງເຮັດໃຫ້ໄດ້ຫຼາຍຂຶ້ນຕື່ມອີກ ເນື່ອງຈາກຍັງມີຫຼາຍສິ່ງທ້າທາຍໃນການພັດທະນາ ແລະ ຄວາມຫຍຸ້ງຍາກທາງດ້ານການເງິນທີ່ຍັງເຫັນໄດ້ຂອງບັນດາປະເທດສະມາຊິກທີ່ກຳລັງພັດທະນາ ລວມທັງບັນດາປະເທດທີ່ມີລາຍໄດ້ປານກາງ. ບັນດາຜູ້ມີສ່ວນກ່ຽວຂ້ອງຂອງປະເທດສະມາຊິກທີ່ກຳລັງພັດທະນາ ໄດ້ເນັ້ນໜັກເຖິງຄວາມຈຳເປັນສຳລັບ ADB ເພື່ອຮັກສາຈຸດສຸມຂອງປະເທດ ແລະ ນຳໃຊ້ວິທີການແບບປະສົມປະສານທີ່ມີຄວາມຍືດຫຍຸ່ນ. ພວກເຂົາໄດ້ຮ້ອງຂໍການຊ່ວຍເຫຼືອຈາກ ADB ເພື່ອໃຫ້ບັນລຸໄດ້ເປົ້າໝາຍຂອງການປະກອບສ່ວນຕາມທີ່ໄດ້ກຳນົດໄວ້ໃນລະດັບຊາດ ແລະ ສະໜັບສະໜູນການຈັດການກັບຄວາມສ່ຽງຈາກໄພພິບັດ ແລະ ສະພາບອາກາດ ລວມທັງຜ່ານກົນໄກທາງການເງິນທີ່ມີນະວັດຕະກຳ. ກຳ. ພວກເຂົາເຈົ້າໄດ້ຮຽກຮ້ອງໃຫ້ ADB ປັບປຸງຂັ້ນຕອນ ການດຳເນີນກິດຈະການໃຫ້ມີປະສິດທິພາບຂຶ້ນ ເພື່ອຫຼຸດຄ່າໃຊ້ຈ່າຍໃນການເຮັດທຸລະກຳ ແລະ ຍົກລະດັບຄວາມມີປະສິດທິພາບ ແລະ ພ້ອມທັງ ໄດ້ເນັ້ນເຖິງຄວາມຈຳເປັນໃນການສ້າງຄວາມສະດວກໃຫ້ແກ່ ການແລກປ່ຽນປະສົບການແລະຄວາມຮູ້ໃນດ້ານການພັດທະນາໃຫ້ໄດ້ໃນທົ່ວປະເທດ.

12. **ການປຶກສາຫາລືໃນບັນດາປະເທດທີ່ພັດທະນາແລ້ວ.** ຜູ້ທີ່ມີສ່ວນກ່ຽວຂ້ອງໃນບັນດາປະເທດທີ່ພັດທະນາແລ້ວ ໄດ້ຮັບຮູ້ເຖິງຄວາມຕ້ອງການສຳລັບ ADB ເພື່ອແກ້ໄຂບັນຫາທ້າທາຍໃໝ່ໃນດ້ານການພັດທະນາຂອງພາກພື້ນ ແລະ ດັດປັບໃຫ້ເຂົ້າກັບຄວາມຕ້ອງການຂອງລູກຄ້າທີ່ມີຄວາມແຕກຕ່າງກັນ. ບັນດາຜູ້ທີ່ມີສ່ວນກ່ຽວຂ້ອງ ໄດ້ຍອມຮັບເຖິງຄວາມສາມາດຂອງ ADB ທີ່ໃຫ້ການກະຕຸກຊຸກຍູ້ທາງດ້ານການເງິນ, ກະຕຸ້ນການປຶກສາຫາລືທາງດ້ານນະໂຍບາຍ ແລະ ສະໜອງຫົນທາງແກ້ໄຂບັນຫາດ້ວຍການນຳໃຊ້ຄວາມຮູ້. ພວກເຂົາໄດ້ແນະນຳໃຫ້ ADB ຂະຫຍາຍການດຳເນີນງານຂອງຕົນ, ລວມທັງ ການເຮັດວຽກກັບພາກເອກະຊົນ ແລະ ພ້ອມທັງການຮ່ວມມື ລະຫວ່າງ ພາກລັດ - ເອກະຊົນ ແລະ ການກະຈາຍອຳນາດ ໂດຍມອບໝາຍໃຫ້ພະນັກງານໄປປະຈຳຢູ່ສຳນັກງານປະຈຳປະເທດໃຫ້ຫຼາຍຂຶ້ນ. ພວກເຂົາຍັງໄດ້ແນະນຳໃຫ້ ADB ສືບຕໍ່ປົກປ້ອງກຸ່ມຄົນທີ່ດ້ອຍໂອກາດ, ລວມທັງເດັກນ້ອຍ, ຄົນພິການ ແລະ ຜູ້ທຸກຍາກໃນຕົວເມືອງ ແລະ ເນັ້ນໃຫ້ ADB ຄວນທຳໜ້າທີ່ບົດບາດທີ່ຫ້າວຫັນຂຶ້ນ ໃນການສ້າງຄວາມສະດວກໃຫ້ແກ່ການໄຫຼວຽນດ້ານຄວາມຮູ້ລະຫວ່າງບັນດາປະເທດສະມາຊິກທີ່ມີການພັດທະນາໜ້ອຍ ແລະ ປະເທດທີ່ມີເສດຖະກິດທີ່ກ້າວໜ້າ ໃນພາກພື້ນ.ການມີສ່ວນຮ່ວມຂອງ ADB ໃນບັນດາປະເທດທີ່ມີລາຍຮັບປານກາງລະດັບສູງ (UMICs) ຄວນມີການເລືອກເຟັ້ນ, ໂດຍສຸມໃສ່ບ່ອນທີ່ ADB ສາມາດເພີ່ມຄຸນຄ່າໄດ້ຫຼາຍທີ່ສຸດ.

13. **ກຸ່ມອື່ນໆ.** ຜູ້ໃຫ້ທຶນແກ່ກອງທຶນພັດທະນາອາຊີ ໄດ້ເນັ້ນໜັກໃຫ້ ADB ຄວນຮັກສາຈຸດສຸມອັນຕົ້ນຕໍຂອງຕົນໃນການຫຼຸດຜ່ອນຄວາມທຸກຍາກ ແລະ ການຈະເລີນເຕີບໂຕແບບທົ່ວເຖິງ. ພວກເຂົາຢາກຈະເຫັນການສະໜັບສະໜູນທີ່ຫຼາຍຂຶ້ນຕໍ່ກັບ ການພັດທະນາພາກເອກະຊົນ, ການຄຸ້ມຄອງພາກລັດ ແລະ ການຮ່ວມມືໃນພາກພື້ນ. ໃນຍຸດທະສາດ, ພວກເຂົາເຫັນດີຕໍ່ຄວາມແຕກຕ່າງ ທີ່ມີເພີ່ມຂຶ້ນຂອງລູກຄ້າລວມທັງການວາງຍຸດທະສາດ ທີ່ຊັດເຈນສຳລັບບັນດາປະເທດທີ່ມີລາຍຮັບປານກາງລະດັບສູງ. ມີສ່ວນກ່ຽວຂ້ອງໃນບັນດາປະເທດສະມາຊິກທີ່ຫຼຸດພົ້ນຈາກສະຖານະພາບດັ່ງກ່າວແລ້ວ ໄດ້ຮັບຮູ້ເຖິງພາລະບົດບາດຂອງ ADB ທີ່ເປັນຕົວກະຕຸກຊຸກຍູ້ ແລະ ຜູ້ລະດົມທຶນຈາກພາກເອກະຊົນ ເພື່ອການພັດທະນາ ແລະ ເຫັນໄດ້ເຖິງຄວາມສາມາດຂອງ ADB ໃນການສ້າງຄວາມສະດວກໃຫ້ແກ່ການແລກປ່ຽນຄວາມຮູ້ ແລະ ການຮ່ວມມືພາກພື້ນ ແລະພ້ອມທັງການຖ່າຍທອດເຕັກໂນໂລຊີ. ພວກເຂົາເຈົ້າຍັງເນັ້ນຢ້ຳວ່າ ບົດບາດເປັນຕົວພັກດັນຂອງ ADB ແມ່ນມີຄວາມສຳຄັນໃນການແກ້ໄຂບັນຫາຊ່ອງຫວ່າງດ້ານພື້ນຖານໂຄງລ່າງໃນພາກພື້ນ. ພະນັກງານຂອງADB ໄດ້ເນັ້ນໃຫ້ເຫັນເຖິງຄວາມຈຳເປັນທີ່ຈະມຸ່ງເນັ້ນໃສ່ວິທີ "ເຮັດແນວໃດ" ໃຫ້ເປັນສ່ວນໜຶ່ງຂອງຍຸດທະສາດ 2030 ເພື່ອແກ້ໄຂ "ແມ່ນຫຍັງ" ໃຫ້ເກີດປະສິດທິຜົນ. ພະນັກງານ ໄດ້ສະແດງຄວາມສະໜັບສະໜູນຕໍ່ການຮ່ວມມືປະສານສົມທົບລະຫວ່າງຂະແໜງການ, ເນື່ອງຈາກວ່າ ບັນດາປະເທດລູກຄ້າກຳລັງປະເຊີນກັບບັນຫາທີ່ສັບຊ້ອນຫລາຍຂຶ້ນ ຊຶ່ງຈຳເປັນຕ້ອງມີການຍື່ນມືເຂົ້າຮ່ວມປະກອບສ່ວນຂອງຫຼາຍຂະແໜງການ. ພວກເຂົາຍັງໄດ້ຮັບຮູ້ເຖິງຄວາມຈຳເປັນທີ່ ADB ຈະຕ້ອງໄດ້ປັບປຸງທັກສະ ແລະ ເພີ່ມຂີດຄວາມສາມາດຂອງພະນັກງານຂອງຕົນຄືນອີກ ເນື່ອງຈາກ ການດຳເນີນງານທີ່ເນັ້ນໃສ່ດ້ານການມີສ່ວນຮ່ວມປະກອບສ່ວນຂອງຫຼາຍຂະແໜງການ ແລະ ຫຼາຍດ້ານ.

14. **ກອງປະຊຸມໂຕະມົນປຶກສາຫາລືກັບບັນດາຊ່ຽວຊານຜູ້ທີ່ສຳຄັນໃນດ້ານການພັດທະນາ.** ໃນປີ 2017, ກອງປະຊຸມໂຕະມົນປຶກສາຫາລືກັບບັນດາຊ່ຽວຊານຜູ້ທີ່ສຳຄັນໃນດ້ານການພັດທະນາໄດ້ຈັດຂຶ້ນສີ່ຄັ້ງໃນ ນະຄອນຫຼວງ ລອນດອນ, ມະນິລາ, ໂຕກຽວ ແລະ ວໍຊິງຕັນດີຊີ. ບັນດາ ຊ່ຽວຊານໄດ້ແລກປ່ຽນຄວາມເຂົ້າໃຈຂອງພວກເຂົາ ກ່ຽວກັບພາລະບົດບາດຂອງ ADB ໃນອາຊີ ແລະ ປາຊີຟິກໃນຫຼາຍປີຕໍ່ໜ້າຈົນຮອດປີ 2030. ພວກເຂົາໄດ້ເນັ້ນເຖິງຄວາມຈຳເປັນທີ່ຈະຕ້ອງໄດ້ແກ້ໄຂຄວາມທຸກຍາກ ແລະ ຄວາມບໍ່ສະເໝີພາບ, ຕໍ່ສູ້ກັບການປ່ຽນແປງດິນຟ້າອາກາດ, ເພີ່ມທະວີການຮ່ວມມືໃນພາກພື້ນໃຫ້ເຂັ້ມແຂງ, ປະສົມປະສານການນຳໃຊ້ເຕັກໂນໂລຊີ ແລະ ການຫາທາງອອກຕໍ່ບັນຫາດ້ວຍການນຳໃຊ້ຄວາມຮູ້ໃນການດຳເນີນໂຄງການ, ເຂົ້າຮ່ວມປະກອບສ່ວນກັບບັນດາປະເທດທີ່ມີລາຍຮັບປານກາງລະດັບສູງ ແລະ ກະຕຸກຊຸກຍູ້ການເງິນຈາກພາກເອກະຊົນ. ມີຫຼາຍຊ່ຽວຊານໄດ້ແນະນຳໃຫ້ ADB ຄວນດຳເນີນການພັດທະນາໃຫ້ເໜືອກ່ວາການພັດທະນາພື້ນຖານໂຄງລ່າງ ແລະ ສຸມໃສ່ການພັດທະນາຂະແໜງສັງຄົມໃຫ້ຫຼາຍຂຶ້ນຕື່ມ.

# ບັນດາຊ່ຽວຊານທີ່ຮ່ວມປຶກສາຫາລືໃນລະຫວ່າງກອງປະຊຸມໂຕະມົນປຶກສາຫາລືກ່ຽວກັບຍຸດທະສາດ 2030

| ຊື່ຂອງຊ່ຽວຊານ | ໜ້າທີ່ຮັບຜິດຊອບຈາກພາກສ່ວນ |
|---|---|
| Masood Ahmed | ປະທານ, ສູນການພັດທະນາໂລກ, ວໍຊິງຕັນດີຊີ, ສະຫະລັດອາເມລິກາ |
| Baroness Valerie Amos | ຜູ້ອຳນວຍການ, ມະຫາໄລ SOAS ຂອງລອນດອນ, ລອນດອນ, ສະຫະລາຊະອານາຈັກອັງກິດ |
| Shinji Asanuma | ອາຈານຮັບເຊີນສອນພິເສດ, ໂຄງການນະໂຍບາຍາທາລະນະແຫ່ງອາຊຽນ,ຄະນະນະໂຍບາຍລະຫວ່າງປະເທດ ແລະ ສາທາລະນະ, ມະຫາວິທະຍາໄລຮິດສືບາຊິ, ໂຕກຽວ,ປະເທດຍີ່ປຸ່ນ |
| Kaushik Basu | ສາດສະດາຈານພາກວິຊາເສດຖະສາດ ແລະ C. Marks ສາດສະດາຈານພາກວິຊາການສຶກສາສາກົນ, ມະຫາວິທະຍາໄລ Cornell, ນິວຢອກ, ສະຫະລັດອາເມລິກາ |
| Rasheda Choudhury | ກຳມະການບໍລິຫານ, Campaign for Popular Education, Bangladesh |
| Lord Meghnad Desai | ປະທານ, ຄະນະກຳມະການ, ທີ່ປຶກສາດ້ານການເງິນ, ແລະ ສະຖາບັນການເງິນຍ່າງ, ລອນດອນສະຫະລາຊະອານາຈັກ |
| Cinnamon Dornsife | ທີ່ປຶກສາອາວຸໂສ, ສະຖາບັນການຕ່າງປະເທດ, ສະຖາບັນການຕ່າງປະເທດ, ສະຖາບັນການຕ່າງປະເທດ, ມະຫາວິທະຍາໄລ Johns Hopkins, ວໍຊິງຕັນດີຊີ, ສະຫະລັດອາເມລິກາ |
| Nick Dyer | ຜູ້ອຳນວຍການໃຫຍ່ສຳລັບໂຄງການນະໂຍບາຍ ແລະ ສາກົນ, ກົມພັດທະນາສາກົນ, ລອນດອນ, ສະຫະລາຊະອານາຈັກ |
| Gang Fan | ກຳມະການ, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ແລະ ເປັນປະທານ, ກອງທຶນປະຕິຮູບຈີນ, ປັກກິ່ງ, ສາທາລະນະລັດປະຊາຊົນຈີນ |
| Nobuhiko Fuwa | ສາດສະດາຈານ, ບັນດິນວິທະຍາໄລສາຂາວິຊາ ນະໂຍບາຍສາທາລະນະ, ມະຫາວິທະຍາໄລໂຕກຽວ, ໂຕກຽວ, ຍີ່ປຸ່ນ |
| Haihong Gao | ສາດສະດາຈານ ແລະ ຜູ້ອຳນວຍການ, ສູນຄົ້ນຄວ້າດ້ານການເງິນສາກົນ, ສະຖາບັນເສດຖະສາດ ແລະ ການເມືອງໂລກ, ສະຖາບັນວິທະຍາສາດສັງຄົມຈີນ, ປັກກິ່ງ, ສາທາລະນະລັດປະຊາຊົນຈີນ |
| Nika Gilauri | ຮ່ວມກໍ່ຕັ້ງ ແລະ ຜູ້ຈັດການ, Reformatics LLC; ແລະ ອະດີດນາຍົກລັດຖະມົນຕີ, ຈໍເຈຍ |
| Maggie Gorman Vélez | ຜູ້ອຳນວຍການ, ນະໂຍບາຍ ແລະ ການປະເມີນຜົນ, ສູນຄົ້ນຄວ້າການພັດທະນາສາກົນ, Ottawa, ການາດາ |
| C. Lawrence Greenwood, Jr. | ປະທານປະເທດ, ສະມາຄົມຍີ່ປຸ່ນ ຂອງພາກເໜືອຂອງຄາລີຟໍເນຍ, ສະຫະລັດ |
| Margaret Huber | ປະທານ, ສະພາສາກົນການາດາ, ສາຂານະຄອນຫຼວງແຫ່ງຊາດ, Ottawa, ການາດາ |
| Yiping Huang | Jin Guang ສາດສະດາຈານພາກວິຊາເສດຖະສາດ ແລະ ຮອງຄະນະບໍດີໂຮງຮຽນພັດທະນາແຫ່ງຊາດ; ແລະ ຜູ້ອຳນວຍການສະຖາບັນການເງິນດິຈິດຕ້ອນ, ມະຫາວິທະຍາໄລ Peking, ປັກກິ່ງ, ສາທາລະນະລັດປະຊາຊົນຈີນ |
| Jung Taik Hyun | ປະທານ, ສະຖາບັນຄົ້ນຄ້ວາເສດຖະກິດສາກົນ, Sejong-Si, ສາທາລະນະລັດເກົາຫຼີ |
| Shada Islam | ຜູ້ອຳນວຍການຂອງເອີຣົບ ແລະ ພູມສາດການເມືອງ, ເພື່ອນຂອງເອີຣົບ, ນະຄອນ Brussels, ເບກຊິກ |
| Shigeo Katsu | ປະທານ, ມະຫາວິທະຍາໄລ Nazarbayev, Astana, Kazakhstan |
| Homi Kharas | ຮອງຜູ້ອຳນວຍການ ແລະ ຮອງກຳມະການ, ໂຄງການເສດຖະກິດ ແລະ ການພັດທະນາໂລກ, ສະຖາບັນ Brookings, Washington, DC, ສະຫະລັດອາເມລິກາ |
| Carol Anne Kidu | ອະດີດລັດມົນຕີວ່າການກະຊວງການພັດທະນາຊຸມຊົນ ແລະ ຜູ້ບັນຍັດກົດໝາຍ, Papua New Guinea |
| Hisaki Kono | ຮອງສາດສະດາຈານ, ບັນດິດວິທະຍາໄລເສດຖະສາດ, ມະຫາວິທະຍາໄລກຽວໂຕ, ເມືອງກຽວໂຕ, ປະເທດຍີ່ປຸ່ນ |
| Rajiv Kumar | ສະມາຊິກອາວຸໂສ, ສູນຄົ້ນຄວ້ານະໂຍບາຍ, ນິວເດລີ, ອິນເດຍ; ແລະ Chancellor, Gokhale ສະຖາບັນເສດຖະກິດ ແລະ ການເມືອງ, Maharashtra, ອິນເດຍ |
| Tae-Shin Kwon | ຮອງປະທານ ແລະ ຫົວໜ້າບໍລິຫານ, ສະຫະພັນອຸດສາຫະກຳເກົາຫຼີ, ກຸງໂຊລ, ສາທາລະນະລັດເກົາຫຼີ |
| Johannes Linn | ຜູ້ອາວຸໂສທີ່ບໍ່ຂຶ້ນກັບສະຖາບັນການເງິນ, ສະຖາບັນການເງິນ ແລະ ການພັດທະນາທົ່ວໂລກ, ສະຖາບັນ Brookings, Washington, DC, United States |
| Marc Mealy | ຮອງປະທານດ້ານນະໂຍບາຍ, ສະພາທຸລະກິດອາເມລິກາ - ອາຊຽນ, ວໍຊິງຕັນ, DC, ສະຫະລັດອະເມລິກາ |
| Victor Murinde | ສາດສະດາຈານ, ໂຮງຮຽນການເງິນ ແລະ ການຄຸ້ມຄອງ, SOAS ມະຫາວິທະຍາໄລລອນດອນ, ລອນດອນ, ສະຫະລາຊະອານາຈັກ |

| ຊື່ຂອງຊ່ຽວຊານ | ໜ້າທີ່ຮັບຜິດຊອບຈາກພາກສ່ວນ |
|---|---|
| Adoracion Navarro | ຮອງເລຂາທິການ ແລະ ຫົວໜ້າການພັດທະນາພາກພື້ນ, ອົງການເສດຖະກິດ ແລະ ການພັດທະນາແຫ່ງຊາດ, Pasig, ຟີລິບປິນ |
| Carol Newman | ປະທານ, ຝ່າຍລິເລີ່ມການພັດທະນາລະຫວ່າງປະເທດ, Trinity College Dublin, Dublin, ໄອແລນ |
| Yumiko Noda | ຄູ່ຮ່ວມງານ, ຫົວໜ້າໂຄງລ່າງພື້ນຖານ ແລະ ການຮ່ວມມືພາກລັດ - ເອກະຊົນ, PwC Advisory LLC, ໂຕກຽວ, ຍີ່ປຸ່ນ |
| Annmaree O'Keeffe | ສະຖາບັນວິທະຍາໄລ Lowy, ຊິດນີ, ອົດສະຕາລີ |
| Izumi Ohno | ສາດສະດາຈານ, ສະຖາບັນຄົ້ນຄວ້ານະໂຍບາຍແຫ່ງຊາດ, ໂຕກຽວ, ຍີ່ປຸ່ນ |
| Maaike Okano-Heijmans | ນັກວິໃຈຂັ້ນອາວຸໂສ, ຈົບຈາກສະຖາບັນ Clingendael, The Hague, ເນເທີແລນ |
| Zaw Oo | ກຳມະການຜູ້ບໍລິຫານ ສູນພັດທະນາເສດຖະກິດ ແລະ ສັງຄົມ, Yangon, ມຽນມາ |
| Junko Otani | ສາດສະດາຈານ, ບັນດິດມະຫາວິທະຍາໄລມະນຸດສາດ, ມະຫາວິທະຍາໄລ ໂອຊາກ້າ, ໂອຊາກ້າ, ຍີ່ປຸ່ນ |
| Keijiro Otsuka | ສາດສະດາຈານ, ບັນດິດມະຫາວິທະຍາໄລມະນຸດສາດ, ມະຫາວິທະຍາໄລ ໂອຊາກ້າ, ໂອຊາກ້າ, ຍີ່ປຸ່ນ |
| Mari Elka Pangestu | ສາດສະດາຈານ ພາກວິຊາເສດຖະສາດສາກົນ, ມະຫາວິທະຍາໄລອິນໂດນີເຊຍ, ຈາກາຕານ, ອິນໂດເນເຊຍ |
| Matt Reed | ຜູ້ບໍລິຫານ, Aga Khan Foundation UK, London, United Kingdom |
| Dan Runde | William A. Schreyer ປະທານ ແລະ ຜູ້ອຳນວຍການໂຄງການດ້ານຄວາມຈະເລີນ ແລະ ພັດທະນາ, ສູນການສຶກສາດ້ານຍຸດທະສາດ ແລະ ສາກົນ, Washington, DC, ສະຫະລັດອາເມລິກາ |
| Yuri Sato | ຮອງຜູ້ບໍລິຫານ, ສະຖາບັນເສດຖະກິດພັດທະນາ, ອົງການການຄ້າພາຍນອກຍີ່ປຸ່ນ, Chiba, ຍີ່ປຸ່ນ |
| Martin Seeger | ຜູ້ບໍລິຫານ ແລະ ປະທານໃຫຍ່, Lahmeyer International GmbH, Hesse, ເຢຍລະມັນ |
| Yutaro Shintaku | ຜູ້ອຳນວຍການ ແລະ ທີ່ປຶກສາຂອງອົງກອນ, Terumo Corporation, ໂຕກຽວ, ຍີ່ປຸ່ນ |
| Suzanne Siskel | ຮອງປະທານຝ່າຍບໍລິຫານ ແລະ ຫົວໜ້າຝ່າຍປະຕິບັດການ, The Asia Foundation, San Francisco, ສະຫະລັດອາເມລິກາ |
| Tetsushi Sonobe | ຮອງປະທານ; ປະທານຄະນະກຳມະການຫຼັກສູດປະລິນຍາເອກ; ຜູ້ອຳນວຍການຂອງ GRIPS Global Governance Program (G-cube); ສາດສະດາຈານ, ສະຖາບັນຄົ້ນຄວ້ານະໂຍບາຍແຫ່ງຊາດ, ໂຕກຽວ, ຍີ່ປຸ່ນ |
| Paola Subacchi | ຜູ້ອຳນວຍການຄົ້ນຄ້ວາວິໃຈເສດຖະສາດສາກົນ, Chatham House, ລອນດອນ, ສະຫະລາຊະອານາຈັກ |
| Akira Suehiro | ຫົວໜ້າພາກວິຊາ ແລະ ສາດສະດາຈານ, ຄະນະວິທະຍາສາດສັງຄົມສາກົນ, ມະຫາວິທະຍາໄລ Gakushuin, ໂຕກຽວ, ຍີ່ປຸ່ນ |
| Aya Suzuki | ຮອງສາດສະດາຈານ, ພະແນກການສຶກສາລະດັບສາກົນ, ບັນດິດວິທະຍາໄລວິທະຍາສາດຊາຍແດນ, ມະຫາວິທະຍາໄລໂຕກຽວ, ຊິບະ, ປະເທດຍີ່ປຸ່ນ |
| Richard Teuten | ຫົວໜ້າ, ພະແນກສະຖາບັນການເງິນສາກົນ, ພະແນກພັດທະນາສາກົນ, ລອນດອນ, ສະຫະລາຊະອານາຈັກ |
| Yasuyuki Todo | ສາດສະດາຈານ, ວິທະຍາໄລເສດຖະກິດ, ພາກວິຊາວິທະຍາສາດ ແລະ ເສດຖະສາດການເມືອງ, ມະຫາວິທະຍາໄລ Waseda, ໂຕກຽວ, ຍີ່ປຸ່ນ |
| Anote Tong | ອະດີດປະທານາທິບໍດີ, Kiribati |
| Kenichi Ueda | ຮອງສາດສະດາຈານ, ພາກວິຊາເສດຖະສາດ, ມະຫາວິທະຍາໄລ ໂຕກຽວ, ໂຕກຽວ, ຍີ່ປຸ່ນ |
| Kolone Vaai | ຜູ້ອຳນວຍການຜູ້ຈັດການ ແລະ ທີ່ປຶກສາທາງດ້ານຫຼັກຊັບ, KVAConsult Ltd, Apia, Samoa |
| Chris Vermont | ຫົວໜ້າບໍລິຫານອົງກອນ GuarantCo Management Company, London, ສະຫະລາຊະອານາຈັກ |
| Ulrich Volz | ຫົວໜ້າດ້ານເສດຖະກິດ, ມະຫາວິທະຍາໄລ SOAS ລອນດອນ, ລອນດອນ, ສະຫະພັນ Kingdom |
| Yoshihiro Watanabe | ສາດສະດາຈານ, ສະຖາບັນການສຶກສາສຳລັບນັກທຸລະກິດ, Niigata, ປະເທດຍີ່ປຸ່ນ |
| Beatrice Weder di Mauro | ສາດສະດາຈານພາກວິຊາເສດຖະສາດ ແລະ ປະທານຂອງນະໂຍບາຍເສດຖະກິດ ແລະ ເສດຖະສາດສາກົນ, ມະຫາວິທະຍາໄລ Mainz, Mainz, ເຢຍລະມັນ |
| Olin Wethington | Nonresident Fellow, Atlantic Council, Washington, DC, ສະຫະລັດອາເມລິກາ |
| Gerald Wright | Senior Fellow, ໂຮງຮຽນນານາຊາດ Norman Paterson, ມະຫາວິທະຍາໄລ Carleton, Ottawa, ແຄນາດາ |

| ຊື່ຂອງຊ່ຽວຊານ | ໜ້າທີ່ຮັບຜິດຊອບຈາກພາກສ່ວນ |
|---|---|
| Daniel Zelikow | ຫົວໜ້າ, ກຸ່ມສາທາລະນະສາກົນ, JP Morgan, Washington, DC, ສະຫະລັດອາເມລິກາ |
| Weiying Zhang | Sinar Mas ປະທານສາດສະດາຈານ ພາກວິຊາເສດຖະສາດ, ໂຮງຮຽນພັດທະນາແຫ່ງຊາດ, ມະຫາວິທະຍາໄລ ເປກິງ, ປັກກິ່ງ, ສາທາລະນະລັດປະຊາຊົນຈີນ |

ອາຊຽນ = ສະມາຄົມປະຊາຊາດແຫ່ງອາຊີຕາເວັນອອກສ່ຽງໃຕ້, ສະຫະລັດ = ສະຫະລັດ.
ແຫຼ່ງຂໍ້ມູນ: ທະນາຄານພັດທະນາອາຊີ.

www.adb.org/strategy2030



## ຍຸດທະສາດ 2030
***ບັນລຸເປົ້າໝາຍໃຫ້ພາກພື້ນອາຊີ ແລະ ປາຊີຟິກ ມີຄວາມຈະເລີນຮຸ່ງເຮືອງ ທົ່ວເຖິງ ພ້ອມຮັບກັບການປ່ຽນແປງ ແລະ ຍືນຍົງ***

ໃນໄລຍະ 50 ປີທີ່ຜ່ານມາ, ພາກພື້ນອາຊີ ແລະ ປາຊີຟິກ ໄດ້ກ້າວກະໂດດຢ່າງໃຫຍ່ຫລວງ ໃນການຫຼຸດຜ່ອນຄວາມທຸກຍາກ ແລະ ການຂະຫຍາຍຕົວທາງດ້ານເສດຖະກິດ. ທະນາຄານພັດທະນາອາຊີ (ADB) ໄດເປັນຄູ່ຮ່ວມພັດທະນາໜຶ່ງທີ່ສຳຄັນ ຕໍ່ການປ່ຽນແປງພາກພື້ນ ແລະ ມີຄວາມມຸ່ງໝັ້ນທີ່ຈະສືບຕໍ່ຮັບໃຊ້ພາກພື້ນດັ່ງກ່າວ ໃນການພັດທະນາຂອງພາກພື້ນນີ້ໄລຍະຕໍ່ໄປ. ຍຸດທະສາດ 2030 ໄດ້ກຳນົດແນວທາງການດຳເນີນງານໃຫ້ແກ່ຄວາມພະຍາຍາມຂອງ ADB ທີ່ຈະສາມາດຕອບສະໜອງໄດ້ຢ່າງມີປະສິດທິພາບຕໍ່ກັບຄວາມຕ້ອງການທີ່ມີການປ່ຽນແປງຂອງພາກພື້ນ. ພາຍໃຕ້ຍຸດທະສາດ 2030, ADB ຜັນຂະຫຍາຍວິໄສທັດຂອງຕົນ ເພື່ອໃຫ້ບັນລຸເປົ້າໝາຍໃຫ້ພາກພື້ນອາຊີ ແລະ ປາຊີຟິກ ມີຄວາມຈະເລີນຮຸ່ງເຮືອງ ທົ່ວເຖິງ ພ້ອມຮັບກັບການປ່ຽນແປງ ແລະ ຍືນຍົງ ໃນຂະນະດຽວກັນນັ້ນ ກໍ່ຄົງໄວ້ເຖິງຄວາມພະຍາຍາມຂອງຕົນໃນການລົບລ້າງຄວາມທຸກຍາກ.

## ກ່ຽວກັບທະນາຄານພັດທະນາອາຊີ

ADB ມີຄວາມມຸ່ງໝັ້ນທີ່ຈະໃຫ້ ພາກພື້ນອາຊີ ແລະ ປາຊີຟິກມີ ຄວາມຈະເລີນຮຸ່ງເຮືອງ ທົ່ວເຖິງ ພ້ອມຮັບກັບການປ່ຽນແປງ ແລະ ຍືນຍົງ ໃນຂະນະດຽວກັນ ກໍ່ຍັງຄົງໄວ້ເຖິງຄວາມພະຍາຍາມຂອງຕົນໃນການລົບລ້າງຄວາມທຸກຍາກ. ADB ໄດ້ຮັບການສ້າງຕັ້ງຂຶ້ນໃນປີ 1966, ມີ 67 ປະເທດສະມາຊິກ, ເປັນເຈົ້າຂອງ ໃນນັ້ນມີ 48 ປະເທດມາຈາກພາກພື້ນດັ່ງກ່າວ. ເຄື່ອງມືຫຼັກໃນການຊ່ວຍເຫຼືອບັນດາປະເທດສະມາຊິກ ທີ່ກຳລັງພັດທະນາຂອງ ADB ແມ່ນ ການປຶກສາຫາລືທາງດ້ານນະໂຍບາຍ, ທຶນກູ້ຢືມ, ການລົງທຶນໃນສ່ວນຫຸ້ນ, ການຄໍ້າປະກັນ, ທຶນຊ່ວຍເຫຼືອລ້າ ແລະ ທຶນຊ່ວຍເຫຼືອທາງດ້ານວິຊາການ.

**ທະນາຄານພັດທະນາອາຊີ**
ຖະໜົນ 6 ADB, ເມືອງ ມັນດາລູຢົງ
1550 ກຸງມະນີລາ, ປະເທດຟີລິບປິນ
www.adb.org